# ແຕ່ນັ້ນ...



# ແຕ່ນັ້ນ...

ໂຮມເລື່ອງສັ້ນ "ວັນນະສິນ"

ສຳນັກພິມ "ວັນນະສິນ"

1990

# ແຕ່ນັ້ນ...

## ໂຮມເລື່ອງສັ້ນ ຂອງ ເພື່ອນຮ່ວມງານ "ວັນນະສິນ"


ຈັດພິມໂດຍ : ວາລະສານ " ວັນນະສິນ "

• ທະບຽນພິມຈຳໜ່າຍ ເລກທີ 161/ພຈ. ລົງວັນທີ 27/6/90

ພິມຄັ້ງທີໜຶ່ງ ຈຳນວນ 3000 ຫົວ

ເດືອນ ກໍລະກົດ 1990



ສະຫງວນລິຂະສິດ



• ບັນນາທິການຜູ້ພິມຜູ້ໂຄສະນາ : ດາລາ ກັນລະຍາ

• ຄະນະຈັດທຳ : ເນື່ງ ໄຊຫວ່າງ
: ໂອທອງ ຄຳອິນຊູ
: ອຳພອນ ອັນທະວິໄລ

• ພິມດີດ : ສົມພອນ ທຸມມາວົງ
: ນາລີ ທອງທຸມມາ

• ພາບປະກອບ : ຈັນສະໝອນ ສິງສະຫວັດດີ
: ທອງໃສ ພູວົງຄຳຈັນ

ພິມທີ່ໂຮງພິມແຫ່ງລັດ ສ.ປ.ປ.ລ.

# ສາລະບານ


● ຈາກສຳນັກພິມ ໜ້າ 1

1. ຮັກທີ່ຕ້ອງລືມຫວັງ " 5
2. ຈົດໝາຍນີ້ ຂໍຝາກເຖິງອ້າຍ " 13
3. ໄຟເຜົາຫົວໃຈ " 33
4. ຂອງຂວັນຈາກໃຈ " 45
5. ຈົ່ງພະຍາຍາມເຂົ້າໃຈ " 55
6. ປະກອບສ່ວນ " 66
7. ຄວັນໝື້ ແລະ ປາດເຫື່ອ " 74
8. ນາງລືມນັ້ນ " 85
9. ຮັກເໜືອຊີວິດ " 94
10. ກຸຫລາບແດງທີ່ແກ່ວນອນ " 106
11. ສຽງປືນງຽບ " 119
12. ຮອຍແປ້ວສັນຍາລັກ " 133
13. ຊາຕາກຳ ຂອງຜູ້ກ້າຫານ " 152

# ຈາກສຳນັກພິມ

ໂຮມເລື່ອງສັ້ນ ທີ່ທ່ານພວມຖືຢູ່ນີ້ ເປັນຄວາມພະຍາຍາມ ອີກເທື່ອຫນຶ່ງ ທີ່ທາງສຳນັກພິມ " ວັນນະສິນ " ນຳເອົາອາຫານ (ທາງໃຈ) ອີກພາຫນຶ່ງ ມາມອບໃຫ້ທ່ານໄດ້ສຳພັດກັບລົດຊາດຂອງວັນນະກຳປະເພດນີ້.

ເລື່ອງສັ້ນ ທີ່ໂຮມຢູ່ໃນປຶ້ມຫົວນີ້ ແມ່ນຜົນງານເລືອກເຟັ້ນ ຂອງເພື່ອນຮ່ວມງານ ຜູ້ຫາວຫັນຂອງ "ວັນນະສິນ" ເຊິ່ງມີທັງເລື່ອງທີ່ແຕ່ງຂຶ້ນໃຫມ່ແລະທີ່ເຄີຍຜ່ານສາຍຕາຜູ້ອ່ານໃນຫນ້າວັນນະສິນມາແລ້ວ.

ນັບວ່າເປັນນິມິດຫມາຍອັນດີ ສິບປີມີເທື່ອຫນຶ່ງທີ່ພວກເຮົາໄດ້ມີ ໂອກາດຮິບໂຮມເອົາຜົນງານຂອງບັນດານັກຂຽນເລື່ອງສັ້ນ ທີ່ກະແຈກກະຈາຍ ຢູ່ຕາມຫນ້າຫນັງສືພິມ ສະບັບຕ່າງໆ ມາໂຮມໄວ້ໃນເຫລັ້ມດຽວກັນ.

ວັນນະສິນຂໍມອບໃຫ້ເປັນຫນ້າທີ່ຂອງທ່ານຜູ້ອ່ານຊ່ວຍກັນຕີລາຄາເລື່ອງສັ້ນເຫລົ່ານີ້. ຄຳຕິຊົມຂອງທ່ານຜູ້ອ່ານນັ້ນ ປຽບຄືດັ່ງຫີນເພັດທີ່ຝົນປາຍປາກກາຂອງນັກຂຽນໃຫ້ແຫລມຄົມຍິ່ງໆຂຶ້ນ.

ດ້ວຍຄວາມຮັກແພງ

ສຳນັກພິມ " ວັນນະສິນ "



ຮຸ່ງອະລຸນ ແດນວີໄລ

ຮຽງອະລຸນ ແດນວິໄລ ແມ່ນນາມປາກກາ ຂອງອ້າຍບ່າວຜູ້ໜຶ່ງວ່າ: ໂອທອງ ຄຳອິນຊູ.

ເກີດເມື່ອປີ ໑໙໕໕ ທີ່ບ້ານນາຄູນນ້ອຍ ຕາແສງນາກ້ຽງ ເມືອງນາຊາຍທອງ ແຂວງກຳແພງນະຄອນວຽງຈັນ.

ຕິດນິດໄສມັກອ່ານ ແລະ ເລີ່ມຫັດຂຽນມາແຕ່ຕອນຍັງຮຽນຢູ່ໂຮງຮຽນຊັ້ນຕົ້ນ.

ປີ ໑໙໘໔ ເລື່ອງສັ້ນ "ປາກເປັນອ້າຍຊູ" ຂອງເຂົາ ໄດ້ຮັບຮາງວັນຊະນະເລີດ ໃນຂັ້ນກວດສອບ ເລື່ອງສັ້ນ ແລະ ນິທານສຳລັບເດັກ ທີ່ຈັດຂຶ້ນໂດຍ ໜັງສືພິມ ສຶກສາໃໝ່, ເຊິ່ງໄດ້ກາຍເປັນແຮງຊຸກຍູ້ໃຫ້ເຂົາ ມີກຳລັງໃຈໃນການຂີດຂຽນ ຈຶ່ງເລີ່ມມີຜົນງານອອກໃນໜ້າໜັງສືພິມຕ່າງໆ ນັບແຕ່ນັ້ນມາ ມີທັງເລື່ອງສັ້ນ, ນິທານ ແລະ ກາບກອນອີກດ້ວຍ.

ໃນຂັ້ນກວດສອບ ນິທານພື້ນເມືອງປາກເປົ່າທົ່ວປະເທດ ຄັ້ງທີໜຶ່ງ ເຊິ່ງຈັດຂຶ້ນໂດຍສະຖາບັນຄົ້ນຄວ້າສິລະປະວັນນະຄະດີ ຮ່ວມກັບ ວາລະສານວັນນະສິນ ນິທານທີ່ເຂົາຂຽນເຂົ້າກວດສອບ ກໍໄດ້ຮັບຮາງວັນທີ ໕ ແລະ ທີ ໓.

ເລື່ອງສັ້ນ "ຮັກທີ່ຕ້ອງສິ້ນຫວັງ" ເຂົາຂຽນຂຶ້ນໃນປີ ໑໙໘໔ ແລະ ເຂົາໄດ້ຂຸດເກົາຄືນໃໝ່ກ່ອນຈະລົງພິມໃນຄັ້ງນີ້.



# ຮັກ
# ທີ່ຕ້ອງສົມຫວັງ

● ຮຸ່ງອະລຸນ ແດນວິໄລ

**ເຮົາ** ຄົ້ນພົບຈົດໝາຍສະບັບເກົ່າໆ ຢູ່ຫລືບປື້ມຂອງນາງ... ນາງຟ້າວຢາດຄືນ ແຕ່ເຮົາ ກໍ່ຈັບແໜ້ນສົມຄວນ ເຮັດໃຫ້ຈົດໝາຍຂາດໄປຝ່າຍນາງບ້ວງໜຶ່ງ.

ຕໍ່ໄປນີ້ແມ່ນ ເນື້ອໃນບາງຕອນຂອງຈົດໝາຍ.

... ຂ້ອຍຮູ້ສຶກ ບໍ່ສະບາຍໃຈ ເມື່ອບໍ່ເຫັນເຈົ້າມາໂຮງຮຽນ ຕັ້ງອາທິດໜຶ່ງແລ້ວ ຕໍ່ມາຂ້ອຍຈຶ່ງໄດ້ພົບກັບເຈົ້າຢູ່ຕໍ່ໜ້າໂຮງການໄປສະນີ ພໍຂ້ອຍອ້າປາກບອກເຈົ້າວ່າ ຢາກລົມກັບເຈົ້າ ເຈົ້າກໍບອກວ່າ ບໍ່ມີເວລາ ຕໍ່ມາຂ້ອຍກໍບໍ່ໄດ້ພົບເຈົ້າອີກ ແຮ່ງໄດ້ຍິນຂ່າວວ່າເຈົ້າຈະອອກໂຮງຮຽນ ຂ້ອຍກໍແຮ່ງ ບໍ່ສະບາຍໃຈ...

ບໍ່ດົນຂ່າວໃໝ່ກໍ່ຕິດຕາມມາອີກ ມັນແມ່ນຂ່າວການສູນເສຍ ຄັ້ງສຸດທ້າຍຂອງຂ້ອຍ ນັ້ນຄືຂ່າວວ່າເຈົ້າຈະແຕ່ງງານ ເຈົ້າຈະອອກໂຮງຮຽນ ໄປເອົາຜົວ ໃຈຂ້ອຍແທ້ຢາກໃຫ້ເຈົ້າຮຽນຈົບສາກ່ອນ ຈຶ່ງແຕ່ງງານ ແຕ່ຂ້ອຍກໍ່ເຮັດຫຍັງບໍ່ໄດ້ ໃນເມື່ອຂ້ອຍເປັນພຽງເພື່ອນຄົນໜຶ່ງເທົ່ານັ້ນ ຂ້ອຍຂໍອວຍພອນໃຫ້ເຈົ້າຈົ່ງສຸກສົມຫວັງເຖີດ ສ່ວນຂ້ອຍຂໍອຳລາເຈົ້າຕະຫລອດການ...

× ×

×

- ໃຜຂຽນມາ ? ເຂົາຖາມນາງ .
- ອ້າຍຮູ້ໄປ ກໍ່ບໍ່ມີປະໂຫຍດຫຍັງດອກ !
- ເປັນຫຍັງ ?
- ເລື່ອງມັນຜ່ານມານານແລ້ວ ໃນໂລກນີ້ຄົງບໍ່ມີເຂົາແລ້ວ.
- ເຂົາໄປໃສ? ເຂົາຟ້າວຖາມຈັ້ນຈີ້.
- ນ້ອງບໍ່ຮູ້ ຮູ້ແຕ່ວ່ານັບຕັ້ງແຕ່ນັ້ນນ້ອງກໍ່ບໍ່ພົບເຂົາອີກ.

ໃບໜ້າຂອງນາງເສົ້າໝອງລົງ ນາງໄດ້ເລົ່າກ່ຽວກັບ ເຈົ້າຂອງຈົດໝາຍດັ່ງນີ້ :

... ຕອນນັ້ນ ນ້ອງຮຽນຢູ່ວິທະຍາໄລວຽງຈັນ ເຂົາກໍ່ຮຽນຢູ່ຫັ້ນ ຄືກັນ... ນ້ອງກັບເຂົາຮັກແພງສະໜິດສະໜົມກັນ. ນ້ອງເຄີຍໃຫ້ຄຳໝັ້ນສັນຍາວ່າ ຈະແຕ່ງງານກັບເຂົາ... ພໍຍິນຂ່າວວ່ານ້ອງຈະແຕ່ງງານ ເຂົາກໍ່ສົ່ງຈົດໝາຍສະບັບນີ້ໃຫ້ນ້ອງ ພ້ອມກັບການຫາຍສາບສູນໄປຂອງເຂົາ ແລະ ຈົນປານນີ້ ນ້ອງກໍ່ບໍ່ຮູ້ວ່າເຂົາຢູ່ໃສ ຕາຍຫລືຍັງ ?

- ຄັນຊັ້ນຜົວຂອງນ້ອງຢູ່ໃສ ?
- ນ້ອງບໍ່ໄດ້ແຕ່ງງານເທື່ອ.

ນ້ຳຕາຂອງນາງເລີ່ມຊຶມເປົ້າ ຕໍ່ມານາງປ່ອຍສຽງສະອື້ນ ແບບຄົນໄດ້ຮັບຄວາມຂົມຂື່ນ ແຕ່ກໍ່ຍັງເລົ່າຕໍ່ໄປວ່າ.

... ຜູ້ທີ່ນ້ອງຈະແຕ່ງງານນຳນັ້ນ ເຂົາເປັນຜູ້ມີຕະກູນສູງ ມີອຳນາດ ພໍ່ບອກວ່າ ຖ້ານ້ອງບໍ່ຍອມແຕ່ງງານກັບເຂົາພໍ່ກໍ່ຈະບໍ່ສາມາດຫາເງິນມາໃຊ້ໜີ້ ທີ່ພໍ່ຢືມມາສົ່ງເສຍໃຫ້ນ້ອງໄດ້ຮ່ຳຮຽນຜ່ານມານັ້ນ ດັ່ງນັ້ນຖ້າຮຽນຈົບ ແລ້ວ ນ້ອງຕ້ອງແຕ່ງງານກັບຊາຍຄົນນີ້ ໄດ້ຍິນແນວນີ້ ນ້ອງກໍ່ເສຍໃຈ ບໍ່ຍອມໄປຮຽນອີກ.

ເຫັນນ້ອງເຊົາຮຽນ ພໍ່ຊ້ຳແຮ່ງບັງຄັບໃຫ້ນ້ອງແຕ່ງງານໃຫ້ມັນແລ້ວໄປສາ ຊາຍຄົນນັ້ນຈຶ່ງໄດ້ໃຫ້ພໍ່ແມ່ ເຖົ້າແກ່ມາສູ່ຂໍຕາມຮີດຄອງ ມື້ສູ່ຂໍເຂົາກໍ່ບອກໃຫ້ພໍ່ຈັດຫາງົວນ້ອຍໂຕໜຶ່ງເພື່ອຊຸມແຊວກັນ ເຂົາບອກວ່າ ເຂົາຈະເປັນ ຜູ້ຈ່າຍທັງໝົດ.

ເຖົ້າແກ່ຕົກລົງເຫັນດີກັນຮຽບຮ້ອຍ ແລະ ນັດກັນໄວ້ວ່າອີກສອງມື້ ຈະມາເວົ້າກັນອີກ ເລື່ອງຫາລຶກງາມຍາມດີ ແຕ່ຄອຍແລ້ວຄອຍອີກ ກໍ່ມິດຈັດ ບໍ່ເຫັນ ພວກເພິ່ນມາເວົ້າຫຍັງ... ເດືອນຕໍ່ມາ ນ້ອງຈຶ່ງຮູ້ຂ່າວວ່າ ເຂົາເອົາເມຍແລ້ວ ພາກັນໜີໄປຢູ່ຕ່າງປະເທດ ນ້ອງກັບພໍ່ຈຳເປັນໄດ້ເປັນໜີ້ເງິນຄ່າງົວນ້ອຍໂຕນັ້ນອີກຕື່ມ.

ເພື່ອຫາເງິນມາໃຊ້ໜີ້ ນ້ອງຈຶ່ງສະໝັກເປັນຄູສອນຢູ່ບ້ານ ເມື່ອປະເທດຊາດໄດ້ຮັບການປົດປ່ອຍ ນ້ອງຈຶ່ງຖືກສັບຊ້ອນມາຮຽນຕໍ່ຢູ່ນີ້...ນາງປ່ອຍສຽງສະອື້ນບາດແຮງ.

- ດວງເພັດ! ນ້ອງຈົ່ງເຂັ້ມແຂງຕັ້ງອົກຕັ້ງໃຈໃສ່ການຮຽນ ວັນໜຶ່ງຂ້າງໜ້ານ້ອງຈະຕ້ອງພົບກັບຄວາມສົມຫວັງໃນຊີວິດ.

ວັນເວລາຜ່ານໄປ ສາຍສຳພັນຂອງເຂົາ ແລະ ດວງເພັດຍິ່ງແຕກໜໍ່ກໍ່ຈາວ ສົດຊື່ນ ແລະ ບານງາມດັ່ງດວງດອກໄມ້.

ມື້ຫນຶ່ງ ເຂົາໄປຫາເພັດທີ່ເຮືອນ ເຂົາເຫັນນາງພວມນັ່ງລົມກັບຊາຍຄົນຫນຶ່ງທີ່ຢູ່ໃນຊຸດທະຫານປົດປ່ອຍ... ເຂົາຄຶດວ່າຈະຍ່າງກັບເມືອ ແຕ່ກໍ່ໄດ້ຍິນສຽງໃສໆຂອງນາງເອີ້ນມາໃສ່ກ່ອນ.

- ອາຍສັກດາ ມາພໍດີ! ເຂົ້າມາແນ່ ປານບໍ່ເຄີຍມາຈັກເທື່ອຫລາຍ.

ນາງເຊີນໃຫ້ເຂົານັ່ງຕັ່ງທີ່ຢູ່ຂ້າງກັບຊາຍຄົນນັ້ນ ແລ້ວນາງກໍ່ເຫງັ້ນນ້ຳຊາຍື່ນໃຫ້ເຂົາ.

- ນີ້ຄືອາຍພຸດທະ ເພື່ອນຂອງນ້ອງແຕ່ຄາວຮຽນຢູ່ວິທະຍາໄລ ວຽງຈັນ- ດວງເພັດແນະນຳ.

- ແມ່ນແລ້ວ ເຂົາເຄີຍຮຽນນຳກັນ ແຕ່ສະພາບການນັ້ນໄດ້ບີບບັງຄັບໃຫ້ເຂົາສະລະການຮ່ຳຮຽນໄປສູ່ເຂດປົດປ່ອຍໂດຍບໍ່ໄດ້ບອກໃຫ້ໃຜຮູ້. ພຸດທະເວົ້າ.

ເຂົາງຶກຫົວ.

- ອາຍສັກດາ ເປັນເພື່ອນນັກຮຽນຫ້ອງດຽວກັບນ້ອງ. ນາງແນະນຳເຂົາໃຫ້ພຸດທະ ແລະ ເຂົາກໍ່ຍື່ນມືມາສຳພັດກັບເຂົາ.

- ຫວັງວ່າເພື່ອນຄົງສະບາຍດີ...

ບໍ່ດົນປານໃດ ພຸດທະກໍ່ອຳລາກັບໄປ.

- ດວງເພັດ !

- ທີ ?

- ເຂົາແມ່ນເຈົ້າຂອງຈົດໝາຍສະບັບນັ້ນແມ່ນບໍ່ ?

- ແມ່ນແລ້ວ ! ນາງຕອບສັ້ນໆ

- ບັດນີ້ນ້ອງຄົງດີໃຈແລ້ວຕີ ?

- ອາຍສັກດາ ຢ່າເວົ້າແນວນັ້ນເລີຍ ເລື່ອງມັນຜ່ານມາ ດົນແລ້ວ ລາວມາແວ່ຢາມນ້ອງຊື່ໆ ລາວບໍ່ໄດ້ເວົ້າຮອດເລື່ອງເກົ່າດອກ.

ນາງໃຊ້ແສງຕາ ຈ້ອງມອງເບິ່ງເຮົາດັ່ງຈະຊອກຫາຄຳຕອບ ແນວໃດແນວໜຶ່ງ.

- ດວງເພັດ! ເມື່ອກ່ອນນ້ອງ ແລະ ພູດທະຮັກກັນ ແຕ່ມີອຸປະສັກກີດຂວາງ ມາຮອດມື້ນີ້ ນ້ອງ ແລະ ເຮົາໄດ້ຕໍ່ສູ້ກັບອຸປະສັກທັບມ້າງກຳແພງ ຮັກນັ້ນໄດ້ແລ້ວ ອ້າຍເຊື່ອວ່າພູດທະເຮົາຍັງຮັກນ້ອງຢູ່ ນ້ອງຍັງມີໂອກາດ ທີ່ຈະເປັນຍິງຍຶດໝັ້ນໃນຮັກດຽວໃຈດຽວ ຫຼືວ່ານ້ອງເຫັນພູດທະເປັນແນວໃດ ສຳລັບອ້າຍເຫັນວ່າສົມຄວນແລ້ວ ທີ່ທັງສອງຄົນພວກນ້ອງ ຈະຕ້ອງພົບກັບ ຄວາມສົມຫວັງໃນຄວາມຮັກ.

ຫຼັງຈາກມື້ນັ້ນແລ້ວ ເຮົາບໍ່ສູ້ໄປເຮືອນດວງເພັດອີກ ຜູ້ຊາຍຍ່ອມເຂົ້າໃຈຜູ້ຊາຍດ້ວຍກັນ ເຮົາບໍ່ຢາກໃຫ້ນາງທຳລາຍຫົວໃຈຂອງຊາຍຊາດທະຫານຜູ້ອົງອາດກ້າຫານ ແລະ ມີຄວາມຮັກອັນບໍລິສຸດ.



ດອກເກດ

ດອກເກດ ແມ່ນນາມປາກກາໜຶ່ງຂອງ ດວງເດືອນ ບຸນຍາວົງ ຜູ້ມັກການຂຽນຄົນໜຶ່ງ ແລະ ມີຜົນງານປາກົດສູ່ສາຍຕານັກອ່ານ ວັນນະສິນ ມາເກືອບທ່ຽງ ກັບອາຍຸຂອງວັນນະສິນເອງ.

ດອກເກດໃຊ້ຊີວິດໄວໜຸ່ມສຶກສາ ຢູ່ ມ.ສ.ດ. ວຽງຈັນ ແລ້ວ ໄປຮຽນຕໍ່ປະລິນຍາຕີແລະໂທສາຂາວິທະຍາສາດ ທີ່ປະເທດຝະລັ່ງມີເວລາກໍ່ຂຽນໜັງສືຊ່ອຍສ້າງຊຸທິຍານອັກສອນຂອງລາວໃຫ້ມີສີສັນ ສົດໃສຕື່ມ ນັບແຕ່ ອາຍຸ ໑໘ ປີ ເປັນຕົ້ນມາ.

ຈາກບົດຄວາມ ສາລະຄະດີ ວິທະຍາສາດ ແກມບັນເທີງ ( ຕົ້ນພ້າວ ຕົ້ນໄມ້ເສດຖະກິດ, ເຜິ້ງ ແລະ ຊີວິດ ) ບົດກະວີ ເພື່ອຊີວິດ ປົກປັກຮັກສາທຳມະຊາດ ແລະ ສັດ ... ສາມາດເວົ້າໄດ້ວ່າ ດອກເກດ ຄ່ອຍໆ ຫັນປ່ຽນຄອງປາກກາຂອງຕົນເບື້ອງນາມີລັກສະນະສັດຈະທັດ ສັງຄົມນິຍົມຫຼາຍຂຶ້ນ.

ການເລືອກເຟັ້ນເອົາບົດວັນນະຄະດີ ຕ່າງປະເທດມາແປໃຫ້ວັນນະສິນ ( ລູກກຸນແຈແຫ່ງຊີວິດ, ຄົນທໍລະຍົດ, ທໍລະນີປິດສະໜາ, ນີຊາແຕ່ງກັນ..) ກໍມີ ລັກສະນະສະເພາະ.

ເລື່ອງຍາວໃນຮູບບົດລະຄອນທີ່ສະເໜີໃນວັນນະສິນ ແຕ່ສະບັບ ໑໖ ... ແມ່ນວັນນະຄະດີຍາວ ເລື່ອງທຳອິດທີ່ຂຽນຂຶ້ນເພື່ອສ່ອງແສງ ຄວາມເປັນຈິງຂອງຊີວິດໃໝ່.

ຕົວລະຄອນຂອງດອກເກດ ເປັນຜູ້ຄົນທຳມະດາ ສາມັນ ທີ່ມີຊີວິດ ຢູ່ໃນ ປະຈຸບັນ ເປັນຄົນເຮັດວຽກ ເປັນຄົນດີມີຄຸນສົມບັດສົມທຳ ຄົນໃໝ່ ທີ່ສູ້ຄືນພວກເຂົາຕ້ອງການ ແລະ ຜູ້ບໍ່ດີ ເປັນໜ້າ ຕຳນິວິຈານ ດອກເກດກໍ່ໄດ້ຍົກມາເພື່ອສົມທຽບໃຫ້ເຫັນເຊັ່ນກັນ.

ດອກເກດ ມີຜົນງານເລື່ອງສັ້ນຮ່ວມກັບນັກຂຽນອື່ນໆຈັດພິມ ມາແລ້ວ ໔-໕ ເຫຼັ້ມ ມີອຸດົມການວ່າ ຈະຂໍອຸທິດຄວາມສາມາດ ເພື່ອປະເທດຊາດ ໂດຍປາຍປາກກາສ້າງຄົນຕາມອຸດົມຄະຕິຂອງຕົນ ດ້ວຍຕົວອັກສອນຕະຫຼອດໄປ.



# ຈົດໝາຍນີ້ ຂໍຝາກເຖິງເຈົ້າ

◉ ດອກເກດ

ຂ້າ 'ພະເຈົ້າແຍງເບິ່ງຊອງຈົດໝາຍ ອ່ານໜັກທີ່ຮັບຝາກຈາກມືຂອງວຽງສະຫວັນ ນັກສຶກສາຍິງຄົນໜຶ່ງຢູ່ນະຄອນຫລວງມົດສະກູ ດ້ວຍຄວາມຮູ້ສຶກສົງໄສຫລາຍອັນ ຈຶ່ງໄດ້ຄິດວ່າ ສີໜ້າຂອງນາງ ເວລາເອົາຈົດໝາຍການນີ້ມາຝາກນັ້ນ ມີວາດແວວຕ່າງແທ້ງ ບອກຕາມຊື່ວ່າ ຕະຫລອດສາມເດືອນທີ່ນາງມາຮັບໜ້າທີ່ເປັນລ່າມ ຢູ່ໃກ້ຊິດກັບພວກເຮົາ ທີ່ມາເຝິກວຽກຢູ່ສະຫະພາບສາທາລະນະລັດ ສັງຄົມນິຍົມໂຊວຽດນັ້ນ' ຂ້າພະເຈົ້າສົນໃຈນາງຫລາຍ ແລະ ກໍບໍ່ໄດ້ປິດບັງຄວາມຮູ້ສຶກດັ່ງກ່າວນີ້ໄວ້ເລີຍ. ຂ້າພະເຈົ້າເຊື່ອວ່າ ນາງເອງກໍພໍໃຈມີໄມຕີຕອບສະໜອງຂ້າພະເຈົ້າ ບໍ່ຫລາຍກໍໜ້ອຍ. ເອື້ອຍວົງນາດ, ຫົວໜ້າຄະນະຂອງພວກເຮົາສັງເກດເຫັນ ເຫດການທັງໝົດ, ເພິ່ນເວົ້າກັບຂ້າພະເຈົ້າແບບກົງໄປກົງມາວ່າ:

- ຖ້າເຈົ້າສົນໃຈ ຈິງໃຈກັບວຽງສະຫວັນແທ້ໆ ເອື້ອຍກໍບໍ່ຫ້າມດອກ ແຕ່ຄວນ...

- ຄວນຫຍັງລະເອື້ອຍ? ຂ້າພະເຈົ້າຖາມຄືນແບບຄົນໃຈຮ້ອນ.

- ກໍຄວນຮັກສາທ່າທີສຸຂຸມສົມເປັນພະນັກງານຂັ້ນນຳ, ເຮັດໃຫ້ ພໍເໝາະພໍດີຂັ້ນຕີ, ຕາມເອື້ອຍເບິ່ງ ນາງນີ້ຄົງຈະບໍ່ຫລົ້ມກັບໃຜງ່າຍໆດອກເດີ້ ລາວບໍ່...ເອີ້...

- ບໍ່ຫຍັງອີກລະ ເອື້ອຍມາດ, ນາຄິວ່າ ມີແຕ່ບໍ່ກັບບໍ່ແທ້. ຂ້າພະເຈົ້າ ສະແດງອາລົມ, ເອື້ອຍວົງມາດຍິ້ມໜ້ອຍໜຶ່ງກ່ອນຈຶ່ງຕອບວ່າ:

- ໂອ້ຍນ້ອງກະດາຍ, ເອື້ອຍຄິດວ່າລາວຊິບໍ່ເຊື່ອຄົນງ່າຍໆໜັ້ນນ່າ , ເບິ່ງເລື່ອງວຽກເລື່ອງງານລາວກໍເປັນແບບເປັນຢ່າງດີ, ກັບໝູ່ລາວກໍດີສະເໝີກັນໝົດ ທັງຍິງຊາຍ ຄົນແນວນີ້ເຂົ້າຍາກ ແຮງອາຍຸອານາມກໍ ສົມຄວນແລ້ວແນວນີ້.

ແມ່ນຄວາມເອື້ອຍວົງມາດຫລາຍຢ່າງ ແຕ່ບໍ່ໝົດທຸກຢ່າງດອກ...ວຽງສະຫວັນ ຊິງເປັນຜູ້ໃຫຍ່ກວ່າພວກໝູ່ທີ່ມາເປັນລ່າມນຳກັນ, ອາຍຸຂອງ ນາງອາດຈະແມ່ນ 24-25 ປີແລ້ວ, ແຕ່ຄວາມແຈ່ມໃສໃນໃບໜ້ານັ້ນ ຊ້ຳອັດຄວາມເຊື່ອຂັ້ນນີ້. ຂ້າພະເຈົ້າຢາກຖຽງເອື້ອຍວົງມາດຫລາຍຂໍ້ຢູ່ ໂດຍສະເພາະຂໍ້ທີ່ວ່າ "ນາງຊິບໍ່ສົນໃຈໃຜຈິງຈັງ" ນັ້ນແຫລ້ວ.

ຂ້າພະເຈົ້າເປັນບ່າວໂສດ ໜ້າຕາພໍໄປສະໝັກເປັນພະເອກຮູບເງົາ ບໍລິສັດຕັ້ງໃໝ່ໄດ້ສະບາຍ, ຄວາມຮູ້ວິທະຍະຖານະບໍ່ຕ່ຳແຕ້ນເລີຍ, ຖານະຕຳແໜ່ງວຽກງານ ຖ້າຫາກບຸກບືນສ້າງຜົນງານຕື່ມອີກເລື້ອຍໆ ກໍຄົງໄດ້ຢູ່ໃນສາຍຕາຂອງຂັ້ນເທິງຢູ່, ໃນຄະນະທີ່ມານຳກັນນີ້ ພວກໝູ່ເຊື່ອໃຈຂ້າພະເຈົ້າດີທຸກຄົນ, ພວກເອື້ອຍນ້ອງແມ່ຍິງເວົ້າຢອກວ່າ ຈະເອົາເປັນຫລານເຂີຍແດ່

ນ້ອງເຂີຍແດ່ ກະທັ້ງຮອດລູກເຂີຍກໍມີ ສາລະພັດແຕ່ຜູ້ຈະວ່າ ທັງນີ້ກໍຄືງ ຍ້ອນກິລິຍາສຸພາບ ຊ່າງເອົາໃຈແມ່ຍິງ ຮູ້ຊ່ວຍເຂົາເຈົ້າໃນເວລາລຳບາກ ເຊັ່ນຫິ້ວເຄື່ອງ, ສະຫລະບ່ອນນັ່ງ ແລະ ອື່ນໆອີກຫລາຍແນວ ເຊິ່ງຂ້າພະເຈົ້າຄຶດພາກພູມໃຈຢູ່ເລື້ອຍໆວ່າ ນີ້ແມ່ນຄຸນສົມບັດຂອງສຸພາບບຸລຸດຍຸກໃໝ່ຢ່າງໜຶ່ງ, ບໍ່ແມ່ນວ່າຂ້າພະເຈົ້າຈະເຊື່ອຈິງຈັງໄປນຳຄຳເວົ້າຍ້ອງຍໃຍໝູ່ນັ້ນດອກ ແຕ່ກໍຍອມຮັບວ່າມັນເຮັດໃຫ້ມີບັນຍາກາດດີສົມຄວນ ແລະ ບົ່ງບອກວ່າ ໃນຕົວເຮົານີ້ ມີອັນພິເສດລື່ນໝູ່ຢູ່ໜ້ອຍໜຶ່ງ.

ເພື່ອໃຫ້ມິດຕະພາບຍືນຍາວ ຂ້າພະເຈົ້າຈຶ່ງຕັ້ງສະມາທິເຮັດໃຈ ເປັນຄົນສຸຂຸມຫລາຍຂຶ້ນ ວາງທ່າທີເປັນຜູ້ໃຫຍ່ຄືເອື້ອຍວົງນາດແນະທາງໃຫ້, ຫວັງວ່າຈະອາໄສເອົາວັນເວລາເປັນສິ່ງພິສູດຄວາມຮູ້ສຶກເລິກເຊິ່ງ ທີ່ບົ່ມຊ້ອນຢູ່ໜີ້ໃຫ້ນາງຮູ້, ແຕ່ຈົດໝາຍຊອງໃຫຍ່ໜັກຕື້ງ ຊອງນີ້ເປັນຄືລາງຮ້າຍ ບອກຄວາມຜິດຫວັງສາແລ້ວ, ມັນຈ່າໜ້າຊອງເປັນຕົວລາວຈະແຈ້ງວ່າ:

ສົ່ງເຖິງ " ອ້າຍກຽດກ້ອງ ບຸນສູງ "

ທີ່ກົມ.............

ກະຊວງ..........

ຫ້າມຈຳໜ່າຍ

- ຂໍຝາກອ້າຍ ສົ່ງກັບມືຜູ້ກ່ຽວແທ້ໆເດີ! ນາງສົ່ງພ້ອມດ້ວຍຮອຍຍິ້ມ, ແວວຕາເປັ່ງປະກາຍເລີກລັບ.

- ຖ້າບໍ່ພົບເດັ້ຊັ່ນ ? ສຽງຂອງຂ້າພະເຈົ້າແຫບຝ່າວໄປຍ້ອນ ອາລົມກົດດັນພາຍໃນ, ມັນເຮັດໃຫ້ນາງຍິ້ມຫລາຍຂຶ້ນ ຈົນແກ້ມບ່ອງທັງສອງເບື້ອງຫລຸບເລິກ ໜ້າຮັກຕື່ມຂຶ້ນ.

- ຊິຂໍຝາກໄວ້ນຳອ້າຍຕໍ່, ປີໜ້ານ້ອງກັບເມືອຊິໄປເອົາຄືນ ດີບໍ ? ນາງເວົ້າຕໍ່ຫົວໆ.

- ອື...ຕັ້ງປີພຸ້ນ, ຂໍອ່ານກ່ອນໄດ້ບໍ່ ? ຖາມປອກແກມແຫ້.

- ຖ້າອ້າຍຖືສິດເປັນຜູ້ຮັກສາເຖິງຂະໜາດນັ້ນ, ນ້ອງກໍບໍ່ວ່າ, ອ້າຍຕັດສິນເອງ ! ນ້ຳສຽງຂອງນາງເນັ້ນຍ້ຳໃນບາງຕອນຂັດກັບຮອຍຍິ້ມແຈ່ມໃສນັ້ນເອົາແທ້.

- ຊັ້ນອ້າຍຈະພະຍາຍາມເອົາໄປສົ່ງເຖິງມືຜູ້ກ່ຽວ...ແຕ່ວ່າຖ້າ...

- ຖ້າຫຍັງ ?

- ຖ້າໄປຮອດ 5 ເທື່ອແລ້ວບໍ່ພົບ ອ້າຍຈະຖືສິດປິດອ່ານ, ຕົກລົງບໍ່? ຂ້າພະເຈົ້າເວົ້າສຽງຂຶງຂັງແບບໂພດເຫລືອ ເພື່ອສະແດງວ່າເປັນການ ເວົ້າປອກ ແຕ່ໃນໃຈແລ້ວ ຂ້າພະເຈົ້າມີແນວຄິດເລິກແລບກວ່ານີ້ ແຕ່ນາງຊ້ຳຜັດຄືວ່າບໍ່ເຂົ້າໃຈໃນຄວາມໝາຍນີ້.

ບັດນີ້ ນັບເປັນເວລາເກືອບສອງອາທິດແລ້ວທີ່ຂ້າພະເຈົ້າກັບມາຮອດວຽງຈັນ ແລະວົນວຽນໄປສົ່ງຈົດໝາຍປະຫລາດສະບັບນີ້ ຕາມບ່ອນຢູ່ທີ່ຂຽນໄວ້ເທິງໜ້າຊອງ ແຕ່ຂ້າພະເຈົ້າຖືກປະຕິເສດ ສະເໝີ ຜູ້ຄົນໃນກົມກອງຫລຽວເບິ່ງຂ້າພະເຈົ້າດ້ວຍແສງຕາສົງໄສ ເມື່ອຕອບຢ່າງໜັກແໜ້ນວ່າ :

- ບໍ່ເຄີຍມີຄົນ ຊື່ແນວນີ້ ຢູ່ກົມກອງພວກເຮົາ ! ແລະ ເມື່ອວົນວຽນໄປຮອດເທື່ອທີສາມ, ຂ້າພະເຈົ້າຈຶ່ງຮູ້ສຶກທໍ້ຖອຍ ຄືດລະອາຍຕໍ່ແສງຕາ ຂອງພວກນາງເລຂາ ຄິດໆໄປວ່າ ວຽງສະຫວັນສາວໃຈຫຸ້ມຫົ້ມະຄົນນີ້ ຄົງເຮັດພາໂລແລ້ວ !

- ເປັນໄປໄດ້ບໍ່ວ່າ ນາງຊິກາເຮັດແບບນີ້ ? ຂ້າພະເຈົ້າຄິດຖາມໂຕເອງດ້ວຍຄວາມບໍ່ແນ່ໃຈ "ເບິ່ງຊິງຄືວ່າເຄິ່ງຂືນຈິງຈັງພໍແລ້ວ ແຕ່ເອ... ນິໄສຊ່າງປອກຊ່າງເຍີ້ຍໝູ່ ເຊິ່ງບາງຄັ້ງກໍ່ອາວໜັກງູແດ່ຂອງນາງນັ້ນ ກໍຫາກພໍເປັນສິ່ງຢືນຢັນໄດ້ວ່າ ເຫດການທີ່ພວມເກີດຂຶ້ນກັບຂ້າພະເຈົ້ານີ້ບໍ່ແມ່ນເລື່ອງເກີນວິໄສສາແລ້ວ ໃນເມື່ອວ່າຂ້າພະເຈົ້າໄດ້ພະຍາຍາມສະແດງໃຫ້ນາງຮູ້ຕັ້ງຫລາຍໆເທື່ອແລ້ວວ່າ ຂ້າພະເຈົ້າມີຄວາມຮູ້ສຶກຕໍ່ນາງແບບໃດ ນາງກໍ່ອາດ ຖືຂ້າພະເຈົ້າເປັນກັນເອງ ສາມາດເຮັດລອງໃຈປອກລໍ້ໄດ້ຄືນໜຶ່ງ ! "

ຂ້າພະເຈົ້າເສຍເວລາຄົ້ນຫາຄຳຕອບແກ່ໂຕເອງ ນີ້ລະຫລາຍຊົ່ວໂມງ ໃນສາຍຕາຂອງໝູ່ຄູ່ຫລາຍຄົນແລ້ວ ຂ້າພະເຈົ້າມີອາການ "ໜັກ"ສົມຄວນ.

"ໜໍ້ຖົມຫົວໃຈໄວ້ມິດສະກູແລ້ວ" ໝູ່ບາງຄົນເວົ້າປອກ ເມື່ອ ຂ້າພະເຈົ້າປະຕິເສດບໍ່ໄປຮ່ວມຊຸມແຊວຫລິ້ນທ່ຽວກັບພວກເຂົາ ຄືແຕ່ເກົ່າມາຫລັງ.

- ວຽງສະຫວັນ! ເຈົ້າຄືມາເຮັດໃຫ້ຂ້ອຍໜັກຫົວນຳແທ້ ! ຂ້າພະເຈົ້າຄິດເຈັບໃຈ ແຕ່ໃນສ່ວນເລິກຂອງຫົວໃຈແລ້ວ ຂ້າພະເຈົ້າຊ້ຳອິດຄິດພາກພູມໃຈບໍ່ໄດ້ ບາງທີ ! ໃຜຊິຮູ້ ? ແຕ່ໃນເວລາດຽວກັນ ຂ້າພະເຈົ້າ ກໍຢາກຮ້າຍໃຫ້ໂຕເອງ ທີ່ຮູ້ສຶກຫວັ່ນໄຫວພໍປານອ້າຍບ່າວນ້ອຍຂຶ້ນໃໝ່ ບໍ່ເຄີຍຕິດສາວຈັ່ງຊັ້ນລະ ເວລາສັ້ນໆໜຶ່ງ ເຮັດໃດວ່າຮູ້ສຶກ ຖືກໃຈ ກະດັດກະດໍ້... ນີ້ບໍ່ ເພິ່ນວ່າບຸບເພສັນນິວາດ ? ຫລືວ່າບາງທີ ອາດຊິແມ່ນຍ້ອນວ່າ ຂ້າພະເຈົ້າເອງລັງເລີຍແຕ່ກັບແມ່ຍິງປະເພດຮຽບຮ້ອຍນອບນ້ອມຖ່ອມຕົນລູກພໍ່ລູກແມ່ພ້ອມແຕ່ຈະເຮັດຕາມຄຳສັ່ງຂອງຜູ້ຊາຍ ຫລືວ່າກົງກັນຂ້າມຄື; ງາມແບບໂລດໂພນ ບໍ່ມີມາລະຍາດແຕ່ໃຈກ້າ ໂສໄດ້ໂສເສຍແບບວ່າຫັ້ນ. ວຽງສະຫວັນ ມີລັກສະນະກົງກັນຂ້າມຫລາຍຢ່າງຢູ່ໃນຕົວ ບາງເວລາ ນາງຮຽບຮ້ອຍ ຂີ້ຫລິ້ນຊົ່ງອົ່ງ ບາງເວລາວ່ອງໄວແຈ່ມໃສຄືເດັກນ້ອຍຂີ້ດື້ ກາປາກກ້າເວົ້າສາມາດໂອ້ລົມໄດ້ເກືອບທຸກເລື່ອງ ນັບແຕ່ກິລາ ສິລະປະ ການເມືອງ ແລະ ວຽກ

ງານເຮືອນຄື ການປຸງແຕ່ງອາຫານ ສະເພາະເລື່ອງກິນ ນາງມັກ ໃຫ້ຂໍ້ສັງເກດວ່າ :

" ພວກຜູ້ຊາຍມັກກິນເຫຼົ້າຈົນລີ້ນແຂງ ແລ້ວກໍຕິວ່າ ເມຍເຮັດກິນ ບໍ່ແຊບ "

ເມື່ອມີຜູ້ເວົ້າເຍີ້ຍໆວ່າ ຄວາມຈິງແລ້ວ ຜູ້ຊ່າງເຮັດກິນແທ້ໆແມ່ນ "ຜູ້ຊາຍ" ເພາະເຫັນໄດ້ວ່າ ໃນຮ້ານອາຫານໃຫຍ່ໆ ສ່ວນຫລາຍ ມີແຕ່ຜູ້ຊາຍເປັນພໍ່ຄົວ, ວຽງສະຫວັນ ເຮັດໜ້າຍິ້ມໆ ແລ້ວຖາມຄືນວ່າ :

" ໜ້າເສຍດາຍ ຢູ່ໜີ້ມີແຕ່ພວກນ້ອງແມ່ຍິງທີ່ເຮັດກິນ...ຄືຊິບໍ່ແຊບຖືກໃຈທີ່ຢູ່ຮ້ານອາຫານເນາະ ! "

ສົມນ້ຳໜ້າຜູ້ເວົ້າຢູ່ ເພາະເວລານັ້ນ ພວກເຮົາພວມໄປຮ່ວມພາເຂົ້າແລງຢູ່ບ້ານພະນັກງານຄົນໜຶ່ງ ແລະ ກໍແມ່ນພວກເອື້ອຍນ້ອງແມ່ຍິງເປັນຜູ້ຄົວກິນທັງໝົດ.

ຂ້າພະເຈົ້າຕັດສິນໃຈບໍ່ໄປຫາຊາຍເລິກລັບ ຊື່ພິລຶກພິລ້ຳວ່າ " ກຽດກ້ອງ ບຸນສູງ " ນັ້ນອີກ. ດ້ານໜຶ່ງ ຄິດກະດຽມຄິງ ຍ້ອນແສງຕາ ພວກເລຂາ ເຊິ່ງເບິ່ງຂ້າພະເຈົ້າຄືວ່າ ຂ້າພະເຈົ້າເປັນຄົນສະຕິບໍ່ເຕັມ.

- ເປັນແນວໃດກໍເປັນລະ ວຽງສະຫວັນເອີຍ ! ຂໍລ່ວງລ້ຳຄວາມລັບຂອງເຈົ້າກ່ອນ, ບາດແລ້ວຈຶ່ງວ່າກັນເນາະ ! ຂ້າພະເຈົ້າບອກນາງທາງໂທລະຈິດ.

ເມື່ອຈີກຊອງຈົດໝາຍປຶກໃຫຍ່ນັ້ນ ຂ້າພະເຈົ້າເຊື່ອຢ່າງຕາຍໃຈ ວ່າຕົນຈະຕ້ອງພົບກັບຄາຕະກອນຫົວໃຈ ຫລື ຄວາມລັບພິເສດຂອງນາງ, ດັ່ງນັ້ນຈຶ່ງຮູ້ສຶກຕື່ນເຕັ້ນແດ່ ໄຄແດ່ວ່າເວລານັ້ນ ຂ້າພະເຈົ້າຂັງໂຕເອງ ຢູ່ໃນຫ້ອງ

ນອນພຽງຜູ້ດຽວ ສະນັ້ນຈຶ່ງບໍ່ມີໃຜຮູ້ເຫັນເຫດການຕື່ນເຕັ້ນອັນນີ້ນຳ.

ລາຍມືເທິງເຈ້ຍບາງສີຂາວຂະໜາດ 22x28 ຊມ ນັ້ນ ມີນຳກັນ ຮອດ 4 ໃບ, ມັນຮຽບຮ້ອຍສະອາດ ຕົວໜັງສືສະໝ່ຳສະເໝີ ບົ່ງບອກວ່າ ຜູ້ຂຽນໄດ້ພຽນພະຍາຍາມພໍສົມຄວນ, ມັນແມ່ນລາຍມືຂອງວຽງສະຫວັນ ແທ້ໆ ( ຂ້າພະເຈົ້າຈື່ໄດ້ດີ ເພາະນາງເຄີຍຊ່ອຍຂຽນລາຍງານສັ້ນໆຫລາຍເທື່ອ ) ຂ້າພະເຈົ້າຂັບໄລ່ຄວາມຮູ້ສຶກກະດຽມໃຈຄືກັບຄົນບໍ່ເຄີຍລັກຈັກເທື່ອ ແລ້ວພວມ ລົງມືລັກເປັນເທື່ອທຳອິດອອກໄປ, ແຕ່ເມື່ອຟາດແສງຕາໄປເບິ່ງແຖວ ທຳອິດ ກໍຕ້ອງອ່ານຊ້ຳຄືນ, ມັນຂຶ້ນຕົ້ນງ່າຍໆວ່າ :

ເຖິງອ້າຍ "......." ທີ່ນ້ອງຢາກຄິດເຖິງຫລາຍກວ່າໝູ່ ( ບໍ່ມີຊື່ຢູ່ບ່ອນຈ້ຳເມັດຫວ່າງເລີຍ )

- ອ້າວແມ່ນຂຽນຫາໃຜຊັ້ນ ? ຂ້າພະເຈົ້າເພີຍກມືເກົາຫົວ ດ້ວຍ ຄວາມສົງໄສ ແລ້ວຈຶ່ງອ່ານຕໍ່ດ້ວຍອາລົມສັບສົນວ່າ :

"ອ້າຍອາດຈະຄິດບໍ່ເຖິງເລີຍເນາະ ທີ່ໄດ້ຮັບຈົດໝາຍສະບັບນີ້ ຈາກ ນ້ອງ ເຖິງຢ່າງໃດກໍຕາມ ເມື່ອອ້າຍໄດ້ອ່ານມັນແລ້ວກໍຈົ່ງອ່ານຕໍ່ໄປ ໃຫ້ສູດ ທ້ອນ ບາງທີມັນອາດຈະມີປະໂຫຍດ "

ເອີ ແລ້ວແມ່ນໃຜລະເປັນ "ອ້າຍ" ? ທ້າວກຽດກ້ອງຜູ້ນັ້ນຫວະ ? ຂ້າພະເຈົ້າຢຸດ ແລະ ຖາມຕົນເອງບໍ່ເລີກບໍ່ແລ້ວ.

" ເວົ້າແທ້ແລ້ວ ນ້ອງຢາກຂຽນ ຈົດໝາຍແບບນີ້ເຖິງ "ອ້າຍ" ທຸກໆ ຄືນທີ່ນ້ອງໄດ້ຮູ້ຈັກຮັກແພງ ລົ້ງແກ່ວນ ແຕ່ມັນເປັນໄປບໍ່ໄດ້ ເພາະນ້ອງທັງບໍ່ມີ ເວລາ ທັງບໍ່ຖືໝັ້ນຂັ້ນນັ້ນ ສະເພາະແລ້ວ ໃນເມື່ອວ່າສິ່ງທີ່ນ້ອງຢາກເວົ້ານັ້ນ ຊ້ຳແມ່ນເລື່ອງດຽວກັນໝົດ "

ຈົດໝາຍນີ້ ຂໍຝາກເຖິງອ້າຍ

ອ່ານມາຮອດແຖວນີ້ ຂ້າພະເຈົ້າຂໍຍອມຮັບວ່າ ຕົນເອງຍັງບໍ່ເຂົ້າໃຈຫຍັງໝົດ, ເທິງໜ້າເຈ້ຍບັນຈຸຕົວອັກສອນງາມເປັນລະບຽບນັ້ນ ປາກົດວ່າມີຮອຍຍິ້ມຢູ່ລະຫວ່າງແກ້ມຂອງເລີກໆ ໂປໂລອອກເປັນບາງໂອກາດ ຄືກັບວ່າຍິວະເຍົ້າໃຫ້ອ່ານຕໍ່.

" ອ້າຍທີ່ນ້ອງຄິດເປັນຫ່ວງ, ເມື່ອບໍ່ດົນມານີ້ ນ້ອງໄດ້ອ່ານ ວາລະສານ ວິທະຍາສາດຂອງສະຖາບັນການແພດໂຊວຽດ, ສະບັບໜຶ່ງ ເພີ່ມຂຽນເຖິງນັກດູດຢາ ແລະ ນັກດື່ມເຫລົ້າ ໂດຍສະເພາະ. ເມື່ອນ້ອງອ່ານແລ້ວຈຶ່ງຮູ້ສຶກເປັນຫ່ວງ "ພວກອ້າຍ, ພວກນ້ອງ" ຫລາຍຄົນທີ່ພວມ ເອົາຮ່າງກາຍເຂົ້າທົດລອງກັບມັດຈຸລາດໄຮ້ອານາຈັກໝູ່ນີ້.

ຕະຫລອດເວລາ 3 ເດືອນທີ່ພວກອ້າຍໄດ້ມາທັດສະນະສຶກສາ ທ່ອງທ່ຽວ ຢູ່ສະຫະພາບໂຊວຽດ, "ອ້າຍ" ເອງກໍຄົງໄດ້ຮູ້ໄດ້ເຫັນກັບຕາແລ້ວວ່າອຳນາດການປົກຄອງແຕ່ລະຂັ້ນ ຂະເຈົ້າໄດ້ວາງມາດຕະການເດັດຂາດ ເຫົາໃດກັບຜູ້ດື່ມເຫລົ້າເມົາມາຍໃນທີ່ສາທາລະນະ ແລະ ຕໍ່ກະໂຕພະນັກງານທີ່ດື່ມເຫລົ້າຈົນຕິດ. ອັນເວລາຜ່ານມາໄດ້ຊີ້ໃຫ້ເຫັນໂທດໄພ ພົນຮ້າຍຂອງການດື່ມເຫລົ້າຢ່າງຈະແຈ້ງແລ້ວ ນັ້ນຄື ຜະລິດຕະພາບແຮງງານຕ່ຳ, ຄຸນນະພາບຂອງສິນຄ້າ ຜະລິດພັນບໍ່ຮັບປະກັນ, ຄອບຄົວແຕກຫັກ ( ໃນນັ້ນ 60% ແມ່ນສາເຫດຂອງການຕິດເຫລົ້າຂອງຜູ້ເປັນພໍ່ແມ່ ) ແລະ ອັນຮ້າຍແຮງກໍແມ່ນພົນກະທົບໃສ່ກະໂຕຜູ້ດື່ມເອງ ແລະ ລູກໆ ທີ່ຈະເກີດມາ. ບົດຄວາມນີ້ ໃຫ້ຕົວເລກຈະແຈ້ງກ່ຽວກັບລຶດທຳລາຍຈຸລິນຊີໃນສະໝອງຂອງເດັກ ເຊິ່ງມີ ພໍ່ຕິດເຫລົ້າ ຄືມັນຈະເຮັດໃຫ້ເດັກເກີດໃໝ່ມີສະມັດຖະພາບ ທາງດ້ານສະໝອງຕ່ຳກວ່າທຳມະດາຮອດ 20% , ອາການສະແດງອອກພາຍນອກກໍຄື ພິການເສຍອົງຄະ ມາແຕ່ກຳເນີດເຊັ່ນ: ຕາບອດ, ຫູໜວກ, ສົບແຫວງ,ແສງຕາ

ເມື່ອຍ, ເປັນບ້າລົມປ່ວງ (ຕອນອື່ນບ່າວອື່ນສາວ) ເປັນໂລກປະສາດ ອື່ນອື່ນ...

ນີ້ລະເຫດຜົນໜຶ່ງທີ່ພາໃຫ້ນ້ອງຂຽນຈົດໝາຍສະບັບນີ້ເຖິງ "ອ້າຍ".

ນ້ອງເອງ ຮູ້ສຶກເຈັບຊ້ຳໃຈເປັນທີ່ສຸດ, ນັບແຕ່ນເຄືອງ ຈົນຫົວໃຈເກືອບແຕກສະຫລາຍ ເມື່ອໄດ້ຮູ້ຂ່າວວ່າ "ນ້ອງຊາຍ", "ນ້ອງສາວ" ທີ່ຮຽນຢູ່ "ມັດທະຍົມ" "ອຸດົມ" ແລະ ອື່ນ "ມະຫາວິທະຍາໄລ" ວ່າ ພວກເຂົາ "ມັກ" ເອົາເຫລົ້າເປັນເພື່ອນຮ່ວມມ່ວນຊື່ນ, ເອົາເຫລົ້າເປັນຜູ້ ສ້າງ "ບັນຍາກາດຟົດຟື້ນ ມີຊີວິດຊີວາ" ແລະ ເອົາເຫລົ້າເປັນ "ສື່ສຳພັນ" ໃນທຸກຄັ້ງທີ່ມີການເຮັດບຸນ ສະຫລຸບພາກຮຽນຫລືອື່ນໆ.

"ນ້ອງຊາຍ" ຄົນໜຶ່ງເລົ່າສູ່ຟັງວ່າ "ອ້າຍຄູປະຈຳຊັ້ນ" ຜູ້ຍັງໂສດ ແລະ ຍັງໜຸ່ມຢູ່ ຂອງເຂົາເມົາອາລະວາດ ດຶງແກ່ຄູລຳວົງ ( ຊຶ່ງເປັນນັກຮຽນຍິງຄົນໜຶ່ງຂອງເຂົາເອງ ) ເຮັດໃຫ້ເກີດຄວາມໂກລາຫົນຂຶ້ນໃນວັນບຸນປີໃໝ່ລາວ ທີ່ນັກຮຽນ ອ້າຍຄູ ຮ່ວມກັນຈັດຢູ່ໃນຫ້ອງຮຽນເອງ! "ນ້ອງສາວ" ທີ່ຮຽນຢູ່ມະຫາວິທະຍາໄລ ແຫ່ງໜຶ່ງຢູ່ວຽງຈັນກໍຂຽນມາເລົ່າໃຫ້ຟັງດ້ວຍຄວາມພາກພູມໃຈ (?) ວ່າພວກໝູ່ໃນຫ້ອງຈັດບຸນປີໃໝ່ສາກົນໃຫ້ຄູອາຈານຕ່າງປະເທດ ຫລັງຈາກຄູອາຈານເລີກເມືອແລ້ວ, ພວກນັກສຶກສາ ເອົາເຫລົ້າລາວມາເບືອກັນໝົດ 30 ລິດຕໍ່ນັກສຶກສາ 60 ຄົນ !

ເລື່ອງແນວນີ້ ນ້ອງຫລືຈະຫານນຳໄປເລົ່າສູ່ໝູ່ຄູເພື່ອນມິດ ຕ່າງປະເທດໄດ້ ?

ໄດ້ຮັບຈົດໝາຍແນວນີ້ແລ້ວ ນ້ອງຈຶ່ງເສົ້າໃຈ ຫງ່ວມເຫງົາຈົນໃຜໆກໍແປກໃຈວ່າ ໄດ້ຮັບ " ຂ່າວຈາກບ້ານ " ແລ້ວ ຊໍ້າບໍ່ດີໃຈ, ມີຫຍັງເປັນ

ຕາດີໃຈ – ພາກພູມໃຈ ຢູ່ໃນຂ່າວເຫຼົ່ານີ້ ? ເປັນຫຍັງພວກນ້ອງໆ ທັງຫຼາຍ ຈຶ່ງບໍ່ເລົ່າເລື່ອງການປະດິດສ້າງອັນເປັນສາລະປະໂຫຍດ, ການອອກແຮງງານຣວມໝູ່ ໃຫ້ໂຮງຮຽນ, ການຮັດສວນເພີ່ມພູນ, ການແຂ່ງຂັນກິລາ ການອ່ານໜັງສື...ແນວສ້າງສັນ ແທນທີ່ຈະເວົ້າເຖິງການໄປຊຸມແຊວນັ່ງຊຸມເບຍສົດ ຕາມຮ້ານຕ່າງໆໃນທຸກຈອກທຸກແຈເມືອງ, ເບິ່ງຄືວ່າສິ່ງນີ້ກາຍເປັນຄວາມທະນົງໃຈຂອງຊາວໜຸ່ມເຮົາໄປແລ້ວ ! ອະນິຈາ ພວກເຂົາເຫັນວ່າ ການໃຊ້ຈ່າຍເງິນ (ທີ່ຕົນເອງຍັງຫາບໍ່ເປັນ, ບໍ່ຮູ້ຈັກຫາ) ຊື້ເຫຼົ້າຊື້ເບຍລ້ຽງກັນ ຊຸມແຊວກັນຢ່າງເປັນປະຈຳນັ້ນ ກາຍເປັນ ອຸດົມຄະຕິໃໝ່ແຫ່ງຍຸກສະໄໝໄປແລ້ວຫວະ ? ຈຶ່ງແມ່ນເປັນຂ່າວ ທີ່ສ້າງຄວາມທໍ້ແທ້ໝົດຫວັງໃຫ້ແກ່ນ້ອງແທ້ໆ ! ນ້ອງທໍ້ຖອຍເສົ້າໃຈຄືກັບພວມແນມເຫັນ "ນ້ອງຊາຍ" ຜູ້ໜຸ່ມແໜ້ນ ເຕັ້ນໄປດ້ວຍພະລັງຊີວິດຄົນໜຶ່ງພວມເອົາເຊືອກຍັກຄໍຕົນເອງຢູ່ເທິງງ່າໄມ້ສູງໆ ເກີນທີ່ນ້ອງເອງຈະສາມາດຊ່ວຍແກ້ໄຂໄດ້. ໃນຄວາມຮູ້ສຶກສ່ວນໜຶ່ງ ນ້ອງຊໍ້າກຽດຊັງ "ເຂົາ". ດີແລ້ວລະ, ໃນເມື່ອບໍ່ ຮັກສາກຽດສັກສີ ສົມກັບຄວາມເປັນຜູ້ໜຸ່ມທີ່ເຄີຍປ່າວປະກາດວ່າ "ຈະເປັນ ສົມໄຊແຫ່ງຍຸກສະໄໝ" ຕາມຄຳຂວັນທີ່ຊ່ອຍກັນຂຽນຕິດປະກາດໃນມື້ໄຂກອງປະຊຸມໃຫຍ່ ຊາວໜຸ່ມຂອງໂຮງຮຽນ, "ນ້ອງຊາຍ" ຄົນນີ້ ກໍຄືກັບຊາວໜຸ່ມ ສະໝອງໜ້ອຍອີກຫຼາຍຄົນ, ເຂົາບໍ່ຮູ້ຈັກຄິດຫາອະນາຄົດ ບໍ່ຮູ້ຈັກຄິດເຖິງ ຜົນສະທ້ອນອັນຮ້າຍແຮງຂອງສິ່ງເຫຼົ່ານີ້, ເຂົາຍັງຂາດຄວາມຮູ້ຮອບຕົວ ຂາດປະສົບການ ຂາດຜູ້ຊີ້ແນະທີ່ໃກ້ຊິດ. ແຕ່ຄິດອີກຢ່າງໜຶ່ງ. ໂອ ! ພວກເຂົາຍັງໜຸ່ມນ້ອຍໂພດເບາະ ? ຊັ້ນພວກ "ອ້າຍ" ເດ ? ພວກ "ອ້າຍ" ຮຸ່ນໃຫຍ່ຜູ້ມີໜ້າທີ່ຮັບຜິດຊອບໂດຍກົງຕໍ່ວຽກງານສັງຄົມ ການຈັດຕັ້ງເດ້ " ພວກອ້າຍ " ຮູ້ສຶກແນວໃດ ? ນ້ອງມີສິດທີ່ຈະຖາມແນວນີ້ບໍ່ ? "

ຂ້າພະເຈົ້າຮູ້ສຶກຮ້ອນກົກຫູວາບໆ ແລະໜ້າກໍດຶງແດງຂຶ້ນ ຍ້ອນອາລົມ

ຕໍ່ສູ້ພາຍໃນ. "ອ້າຍ", "ພວກອ້າຍ" ຂອງນາງໝາຍເຖິງໃຜ ? ກັ້ນໃຈອ່ານຕໍ່ໄປອີກວ່າ :

"ນ້ອງເອງຄິດວ່າການລ້າງຄວາມມ່ວນຊື່ນຄຶກຄື້ນດ້ວຍນ້ຳເຫຼົ້າ ນັ້ນແມ່ນວິທີການຂອງຄົນໂງ່ຈ້າປັນຍາໜ້ອຍຈຳພວກໜຶ່ງ ຊຶ່ງອາດຈະບໍ່ຮວມ ທັງ "ອ້າຍ" ນຳ. ແຕ່ອະນິຈາ ໂລກນີ້ຊ່າງເຕັມໄປດ້ວຍຄວາມຫລອກລວງ ປິ້ນປອກ ພິດຫວັງໜ້າເບື່ອໜ່າຍ, ນ້ອງເກືອບໝົດສັດທາແລ້ວ (ແຕ່ຄົງຈະ ບໍ່ໃຫ້ມັນໝົດງ່າຍໆດອກ !) ເມື່ອພົບຄວາມຈິງອັນແສນໂຫດຫ້ຽມວ່າ "ອ້າຍ" ຜູ້ຊຶ່ງນ້ອງ "ລັກ" ຄິດພາກພູມໃຈ, ຂອນຊອນບູຊານັ້ນ ກໍພວມກ້າວເຂົ້າ ສູ່ເສັ້ນທາງອັດຕະວິນິບາດຕະກຳແບບຍາວນານ - ມັນຫລາຍຊ້າເກີນໄປບໍ່ສຳລັບອ້າຍທີ່ຈະຖອຍຫ່າງອອກຈາກເສັ້ນທາງນີ້ ?"

ຫົວໃຈຂອງຂ້າພະເຈົ້າເຕັ້ນພໍປານວ່າຈະຫລຸດອອກຈາກຂັ້ວນ ມັນໝາຍຄວາມວ່າແນວໃດ ?

"ທຳອິດ ນ້ອງຄິດວ່າອ້າຍເປັນຕົວແທນຂອງຄົນຮຸ່ນໜຸ່ມ ທີ່ກ້າວໜ້າຂອງສັງຄົມ, ເປັນຜູ້ອຸທິດຕົນ ເພື່ອວຽກງານສ່ວນໂຮມ, ເປັນຜູ້ຮັກເພື່ອນມະນຸດ ເຊິ່ງມີຄວາມໝາຍວ່າ ອ້າຍເຫັນຊີວິດເປັນສິ່ງປະເສີດເລີດລ້ຳ ກວ່າສິ່ງໃດ...ເພາະເມື່ອໝົດລົມຫາຍໃຈ ມະນຸດກໍອາດໝົດຄຸນຄ່າຕໍ່ສັງຄົມໂດຍກົງ ຄົງເຫລືອໄວ້ແຕ່ຜົນງານຂອງເຂົາແມ່ນບໍ່ ? ແລະ ຍ້ອນແນວນີ້ ອ້າຍຄົງຈະບໍ່ເຫັນຊີວິດຂອງຕົນເອງເປັນເຄື່ອງຫລິ້ນລາຄາຖືກ ເປັນຫ້ອງທົດລອງທີ່ ປ່ອຍໃຫ້ຢາກເອົານ້ຳເບື່ອຢາພິດຊະນິດໃດຖອກຣາຍລົງກໍໄດ້. ທີ່ເວົ້າຢ່າງນີ້ ນ້ອງກໍບໍ່ຄິດ ບໍ່ຮຽກຮ້ອງເຖິງຂັ້ນວ່າ " <u>ບໍ່ດູດຢາ ບໍ່ກິນເຫຼົ້າຈັກເມັດເລີຍ</u> " ບໍ່ດອກ, ນ້ອງຮູ້ວ່າການຮຽກຮ້ອງແບບນີ້ ຍັງຢູ່ຫ່າງໄກກັບຄວາມເປັນຈິງຫລາຍ

ຮ້ອຍໂຍດ ຈຶ່ງຊຸ້ມມັນຈຶ່ງເປັນພຽງຄວາມຝັນລອຍເມກເທົ່ານັ້ນ. ນ້ອງຢາກຈະຝາກຄຳຖາມໄປຫາພວກ "ນ້ອງໆ" ທີ່ພວມຮຽນໃນໂຮງຮຽນມັດທະຍົມ, ຊຸດົມ, ມະຫາວິທະຍາໄລ ສະຖາບັນການສຶກສາຊັ້ນສູງ, ຢາກຂໍຝາກຄຳຮ້ອງຂໍປ່າວເຕືອນອັນນີ້ໄປຫາພວກເຂົາ. ສົມຄວນເບາະທີ່ພວກເຂົາຈະອາໄສ ເອົາເຫລົ້າເປັນພາຫະນະສ້າງຄວາມເບີກບານແຈ່ມໃສໃຫ້ຊີວິດໄວໜຸ່ມ ເຊິ່ງຕາມທຳມະຊາດ ທາດແທ້ຂອງມັນເອງແລ້ວ ກໍສົດຊື່ນແຈ່ມໃສຍິ່ງກວ່າສິ່ງໃດໆ ຢູ່ແລ້ວ. ນ້ອງເອງຄິດວ່າ ກົງກັນຂ້າມ ນ້ຳເຫລົ້າຈະເປັນຢາພິດດັບມອດຄວາມງາມສົດໃສ ຄວາມເບີກບານຫັນສາແຫ່ງໄວໜຸ່ມ ແລະ ຄວາມງາມອີຈິດ ທຸກຢ່າງໃນຕົວຂອງເຂົາໄປ, ມັນຈະເປັນຕົວການທຳລາຍມິດຕະພາບ ສາຍສຳພັນ ຄວາມຮັກແພງ ຄວາມເຂົ້າໃຈ. ຄິດເບິ່ງຈະມີນັກຮຽນຍິງຄົນໃດ ທີ່ເຄົາລົບນັບຖື "ອ້າຍຄູ" ຜູ້ທີ່ເທື່ອໜຶ່ງເມົາ ຈົນກ້າດຶງຈ່ອງນາງຢູ່ກາງເວທີ ເວົ້າຈາດ້ອຍຖ້ອຍຄຳລາມົກ, ເຊື່ອແນ່ວ່າ ບໍ່ມີນັກຮຽນທີ່ມີສະຕິດີຄົນໃດ ຮັກ ນັບຖືຄູຄົນນັ້ນຢ່າງຈິງໃຈດອກ. ສ່ວນວ່າ ຜູ້ເປັນພະນັກງານຂັ້ນນຳແລ້ວ ເຊັ່ນ "ອ້າຍ" ເດ້ ຈະເປັນແນວໃດ ? ແນ່ນອນວ່າ ອ້າຍຕ້ອງມີໝູ່ຄູ່"ອ້າຍເອື້ອຍນ້ອງ" ຜູ້ຢູ່ໃຕ້ການບັນຊາຈຳນວນໜຶ່ງ, ມີຜູ້ຢູ່ໃກ້ຊິດພົວພັນວຽກງານຈຳນວນໜຶ່ງ, "ອ້າຍ" ເປັນ "ຕົວໜ້າ" , ເປັນ "ແບບຢ່າງ" ໃນດ້ານການປະພຶດ, ເມື່ອອ້າຍຫາກ "ມັກ" ເມົາຢ່າງບໍ່ເລືອກກາລະເທສະແລ້ວ ແນ່ນອນວ່າ ຄວາມສັດທາເຊື່ອໝັ້ນໃດໆ ກໍຄົງບໍ່ເຫລືອຄ້າງຢູ່ໃນຈິດໃຈຂອງຜູ້ຄົນເຫຼົ່ານີ້. ນ້ອງເຄີຍໄດ້ຍິນຜູ້ບໍ່ເມົາເວົ້າໃຫ້ຄົນເມົາວ່າ

" ເມົາແລ້ວຈັ່ງແມ່ນຄື ໝ...ຄານສີ່ຂາ...ເທົ່າຫອນບໍ່ເລືອກ.."

– ຂໍໂທດ ! ນ້ອງເອົາຄວາມຈິງມາເວົ້າ ຖ້າມັນບໍ່ແມ່ນກໍລະນີ "ອ້າຍ" ກໍຈະດີຫລາຍ (ນ້ອງຈະດີໃຈເປັນທີ່ສຸດ !)"

ຂ້າພະເຈົ້າຢຸດຫາຍໃຈເອົາອາກາດບາດແຮງໆ, ຮູ້ສຶກວ່າ ພາຍໃນ

ຫ້ອງອຶດອັດໜັກໜ່ວງທັບເຕັງເອິກ ຮູ້ສຶກແໜ້ນໆຂຶ້ນມາຈົນຕ້ອງລຸກໄປໄຂຝາປ່ອງຢ້ຽມ ທີ່ຖືກລົມຕີເຂົ້າຫວ່າງໜຶ່ງ. ຂ້າພະເຈົ້າຄຶດເສຍໃຈບໍ່ເລີກແລ້ວ ທີ່ໄດ້ເລີຍເຖືອດໄປແດ່ໃນບັ້ນນີ້. ຕາມທຳມະດາແລ້ວ ຂ້າພະເຈົ້າເອງ ບໍ່ມັກ "ກິນເຫລົ້າ" ເຖິງກັບເມົາຟູບຂາດມາລະຍາດດອກ ແຕ່ມື້ນັ້ນ, ນີ້ ນັກສຶກສາ "ກະຊວງ" ທີ່ໄປຮຽນຕໍ່ຢູ່ພຸ້ນພາກັນຈັດລ້ຽງຕ້ອນຮັບພັ້ນຕີ, ໄດ້ພົບພໍ້ໝູ່ຄູ່ເກົ່າແກ່ຫລາຍຄົນ ແລະ ຖືກ "ເກືອ" ເຫລົ້າປົນແດ່, ເພາະອ້າຍນ້ອງແຕ່ລະຄົນຂົນຂວາຍຊື້ເຫລົ້າມາໄດ້ແບບຕ່າງໆກັນ (ເພາະການຂາຍຢູ່ມືດສະກູຈຳກັດທັງຊະນິດ ທັງເວລາ !) ຈຶ່ງຊັ້ນບໍ່ດົນ ຂ້າພະເຈົ້າກໍເລີຍມີອາການສະແດງອອກຊະນິດບໍ່ງາມຫູງາມຕາປານໃດ ຈຶ່ງໄດ້ເປັນລາງໆວ່າ ແສງຕາຄູ່ຄົມ ວາວວັບຂອງວຽງສະຫວັນ ເສືອດມາເບິ່ງເລື້ອຍໆ ! ໂປ້ວນີ້ມັນໝາຍຄວາມວ່າແນວໃດ ? ມັນແມ່ນຂ້າພະເຈົ້າເອງເບາະ ທີ່ນາງເອີ້ນວ່າ "ອ້າຍ" ? ເຫດການຕໍ່ຈາກນັ້ນ ປາກົດເປັນພາຍຫລອນຂຶ້ນທັນທີ.

ວຽງສະຫວັນກັບໝູ່ສອງຄົນທີ່ມາເປັນລ່າມນຳກັນມາເຄາະພັກຕູ ຫ້ອງຢູ່ບ່ອນພັກ ໃນເວລາແປດໂມງເຄິ່ງ ເພື່ອບອກເຕືອນໃຫ້ກຽມຕົວໄປຕາມ ເວລານັດໝາຍ, ເມື່ອຂ້າພະເຈົ້າຍາງໂຊເຊຫົວຫຍຸ້ງ ໜ້າບວມໃຄ່ (ຄົງຈະບໍ່ຄືພະເອກເລີຍຕອນນີ້ !) ອອກມາໄຂພັກຕູໃຫ້ນັ້ນ ສີໜ້າຂອງວຽງສະຫວັນບອກວ່າ "ເບື່ອໜ່າຍ" "ຂີ້ດຽດ" "ອິ່ມເອົາໂລດ" ລ້ວນແຕ່ແມ່ນຄວາມຮູ້ສຶກທີ່ເຮັດໃຫ້ຂ້າພະເຈົ້າຟ້າວຫລຸບຫົວເຂົ້າປະຕູຄືນ ສະສາງລຸບລາງຕົນເອງ ໃຫ້ເປັນຕາເບິ່ງ.

- ແຟນຂອງນ້ອງ ຄືຊິບໍ່ກິນເຫລົ້າເມົາຢາຈັກເທື່ອເນາະ ? ຂ້າພະເຈົ້າຈື່ວ່າໄດ້ຖາມຢອກ ເມື່ອມານັ່ງກິນເຂົ້າເຊົ້າຢູ່ໂຕະ, ແສງຕາຂອງ ນາງຮຸ່ງວັບຂຶ້ນຢ່າງມີຄວາມໝາຍ.

- ອີ! "ຫົວສຽງຂຶ້ນດັງບາດໜຶ່ງກ່ອນ ແລ້ວຈຶ່ງຍິ້ມຫວານໆວ່າ: ກິນ

ແທ້ ແຕ່ກິນແບບມີສະຕິ, ບໍ່ໃຫ້ສະເທືອນວຽກງານຄອບຄົວ ແລະ ສັງຄົມ,ແຕ່ໂອະ ອ້າຍຄືຊິບໍ່ເຂົ້າໃຈດອກ !" ຄິດຮອດຕອນນີ້ແລ້ວ ຂ້າພະເຈົ້າ ຮູ້ສຶກວ່າໂລກນີ້ຄື ສະຫວ່າງສະໄຫວຂຶ້ນແດ່...ຍັງມີຄວາມຫວັງ ! ຍັງບໍ່ຫລ້າ ສວາຍເກີນໄປ, ຂ້າພະເຈົ້າຕັ້ງໃຈອ່ານຈົດໝາຍຕໍ່ :

"ອ້າຍຖາມວ່າ ຢາກເປັນເພື່ອນກັບນ້ອງໄດ້ບໍ່ ? ເປັນຫຍັງຊິບໍ່ໄດ້ລະ! ຂໍບອກອ້າຍຕາມກົງວ່າ ສຳລັບສ່ວນຕົວນ້ອງແລ້ວ ບໍ່ມີບັນຫາ, ນ້ອງເອງເຝົ້າພຽນບອກຕົນເອງສະເໝີວ່າ ພວກເຮົາ (ຄົນລາວ) ຕ້ອງເປັນເພື່ອນມິດທີ່ດີຕໍ່ກັນ ຕ້ອງຮູ້ຈັກກໍ່ສ້າງຊ່ວຍເຫລືອຊຶ່ງກັນແລະກັນ ແບບຈິງໃຈຕາມວິທີການສາກົນ, ບໍ່ໃສ່ຮ້າຍປ້າຍສີກັນໃນຍາມລັບຫລັງ ນ້ອງເອງຄິດ ແລະ ກໍ່ເຊື່ອ ສະເໝີວ່າ ບໍ່ມີພະລັງໃດຈະຍິ່ງໃຫຍ່ໜັກແໜ້ນ ແລະ ມີຄວາມໝາຍ ເທົ່າກັບພະລັງຄວາມສາມັກຄີຮັກແພງກັນຢ່າງຈິງໃຈ.

"ຜ່ານມານ້ອງຍັງບໍ່ເຄີຍເຫັນໃຜ ແລະ ເຊື່ອແນ່ວ່າ ຈະບໍ່ໄດ້ເຫັນໃຜກ້າວເຂົ້າສູ່ຖານະໜ້າທີ່ວຽກງານອັນມີກຽດ ມີຄວາມຮັບຜິດຊອບສູງ ດ້ວຍຄຸນສົມບັດຂອງຄົນຕິດເຫລົ້າ - ອ້າຍຄົງເຄີຍໄດ້ຍິນເລື່ອງຂອງລຸງພະນັກງານຂັ້ນສູງຄົນໜຶ່ງ ຢູ່ກະຊວງ...ຫວ່າງຫລາຍປີຫລັງພຸ້ນ ເວລາມີການສັບຊ້ອນ ພະນັກງານພາຍໃນຂອງແຕ່ລະກົມກອງ ໃຜໆກໍ່ຄາດໝາຍວ່າ ລຸງຜູ້ນີ້ຈະໄດ້ເລື່ອນຕຳແໜ່ງຢ່າງແນ່ນອນ ເພາະລາວມີລະດັບວິຊາສະເພາະດີສົມຄວນ ແລະຄຸນສົມບັດກໍ່ຢູ່ໃນຂັ້ນພໍໄປພໍມາ ແຕ່ບາດແລ້ວ ເປັນແນວໃດ ? ອ້າຍຮູ້ບໍ່ວ່າ ຍ້ອນຫຍັງລາວຈຶ່ງຍັງຢູ່ໃນຕຳແໜ່ງເກົ່າ ຊ້ຳບໍ່ພໍຄຸນສົມບັດຫລາຍຢ່າງກໍ່ມີທ່າວ່າຈະກາຍເປັນ ທຸສົມບັດຫລາຍກວ່າ ? ຜູ້ໃກ້ຊິດກັບລາວຄົນໜຶ່ງເລົ່າສູ່ພວກ ນ້ອງຟັງ ໃນໂອກາດທີ່ເພິ່ນເປັນຄະນະຜູ້ແທນມາຢ້ຽມຢາມໂຊວຽດນີ້ແລ້ວ, ຄວາມຈິງອັນສະຫລັບສັບຊ້ອນຫລາຍອັນ ເຊິ່ງພວກນ້ອງອາດບໍ່ຈຳເປັນຕ້ອງຮູ້ເທື່ອນັ້ນ

ຖືກລະລາຍລົ່ງໄຫລປົນອອກມາກັບລົມຫາຍໃຈປະສົມກິ່ນອາຍແອນກໍຮໍ ວ່າ : ເທື່ອໜຶ່ງມີການລົບງັນເຮືອນດີ ຢູ່ບ້ານພະນັກງານໃນກະຊວງເອງ, ລຸງຜູ້ວ່ານີ້ເປັນຂາປະຈຳວົງສຸລາເຮຮາ ໃນຂະນະທີ່ພວມມ່ວນຫຍັ້ນເຫລົ້າໃຫ້ກັນ ແລະ ກັນຢູ່ນັ້ນກໍ ປະກົດວ່າມີມືມາຄວັກໆຂ້າງ ແລະ ສຽງເວົ້າຢ່າງສຸພາບວ່າ " ຂໍທາງແດ່ ", ຜູ້ກ່ຽວບໍ່ສຳລີລຳໄລຮ້ອງຮ້າຍ ທັງປັດມືທີ່ຄວັກຢູ່ນັ້ນວ່າ "ບັກ.. ຮ່າຊິໄປກໍໄປແມ້, ມາຄວັກຕາຍສັງ ! ". ເມື່ອບໍ່ມີສຽງຕອບຄືນລາວກໍແປກໃຈ ແລະ ເມື່ອຜູ້ຂໍທາງຍ່າງຜ່ານໄປ ລາວກໍເກືອບເປັນລົມ ເຊົາເມົາ , ເພາະວ່າຜູ້ເອົາມືຄວັກຂ້າງລາວ ແມ່ນກະໂຕທ່ານລັດຖະມົນຕີທີ່ມາຮ່ວມລົບງັນເຮືອນດີຕາມອັດທະຍາໄສຂອງເພິ່ນ ".

" ນ້ອງເອງຈຶ່ງແມ່ນບໍ່ຢາກໄດ້ຍິນ ບໍ່ຢາກເຫັນ ແລະ ບໍ່ຢາກໃຫ້ເຫດການທຳນອງນີ້ ເກີດຂຶ້ນກັບ "ອ້າຍ", ນ້ອງຄົງຈະຍອມໃຫ້ຄອບຄົວ ທີ່ ໜຸ່ມນ້ອຍແຕກຫັກຫລາຍກວ່າທີ່ຈະທົນທໍລະມານຢູ່ກັບ "ຄົນຕິດເຫລົ້າ", "ເອົາເຫລົ້າເປັນພາຫະນະຊ່ວຍແກ້ບັນຫາ", "ຜູ້ເຫັນເຫລົ້າເປັນເພື່ອນ" ທັງໆ ທີ່ມັນເປັນສັດຕູຕົວຮ້າຍຂາດ, ເປັນຄາດຕະກອນໃຈເຢັນທີ່ຄອຍທໍລະມານເຫຍື່ອຂອງມັນຢ່າງຫລຽມໂຫດ.

ນັ້ນມັນກໍ່ປາກົດວ່າອ້າຍໄດ້ສ່ຽວເທີເກີຮັກຫລາຍຄົນເຕີບເນາະ, ບໍ່ວ່າໜ້າໃດ ອາຍຸຮຸ່ນໃດ ມີຄວາມປະພຶດແບບໃດ, ຈັ່ງຊັ້ນມັນຈຶ່ງພາໃຫ້ນ້ອງ ຄຶດເອົາເອງວ່າ ຢູ່ວຽງຈັນພຸ້ນ ອ້າຍກໍຄົງມີ "ສ່ຽວເກີ" ຢູ່ທົ່ວທິບ ແລະ ຫລາຍປະເພດ.

ຈົດໝາຍນີ້ ຂໍຝາກເຖິງອ້າຍ

ຈົດໝາຍຂອງນ້ອງ ອາດຈະຍາວເກີນຈົດໝາຍອື່ນໆ ແຕ່ຂໍໃຫ້ ອ້າຍໄດ້ຮັບຮູ້ດ້ວຍວ່າ ນ້ອງຂຽນມັນຂຶ້ນມາ ຫລັງຈາກຄິດກັ່ນກອງດີແລ້ວ ແລະ ຄິດວ່າ ຄົງຈະຂຽນອີກຖ້າຈຳເປັນ, ຫລືອ້າຍວ່າແນວໃດ ?

ດ້ວຍຄວາມລະລຶກເຖິງສະເໝີ

ຈາກ

ວຽງສະຫວັນ

ຂ້າພະເຈົ້າຫັນໃຈໂລ່ງຄືສວ່າງໃຈ, ທັນໃດນັ້ນ ກໍຮູ້ສຶກວ່າມີ ແສງສະຫວ່າງເລືອ່ອນໆກະຈາຍໃສ່ໃບໜ້າ ຈຶ່ງລຸກຂຶ້ນໄປສ່ອງປ່ອງຢ້ຽມ, ລົດໂອໂຕຄັນໜຶ່ງແລ່ນຜ່ານເຂົ້າມາໃນເຂດຮົ້ວບ້ານ ແສງໄຟຈາກຕາລົດເຍືອງ ພາດຂຶ້ນມາຜ່ານແພກັ້ງປ່ອງຢ້ຽມ ຂ້າພະເຈົ້າຈຶ່ງຮູ້ເນື້ອຄືງວ່າ ຕົນເອງໄດ້ຈົມຢູ່ກັບຈົດໝາຍສະບັບນີ້ ຈົນມືດຄ່ຳ.

- ເຮີຍ... ເພັດເວີຍ ຢູ່ບໍ່ ? ສຽງບາດຕີນດັງກຶກໆ ຫຍັບເຂົ້າມາ, ຂ້າພະເຈົ້າຈື່ວ່າ ແມ່ນສຽງຂອງສະຫາຍເຊິ່ງເປັນ "ສ່ຽວເກີ" ໃນວົງເຫລົ້າກົນຄືນໜຶ່ງ ເພິ່ນຜູ້ນີ້ມັກຂຸມແຊວ ແລະ ດື່ມອາວຫລາຍຈົກໜ່ອຍ ຈົນຜູ້ ເປັນເມຍໄດ້ຈົ່ມອ່າ ແລະ ລາຍງານການຈັດຕັ້ງໃນບາງຄັ້ງ ທີ່ມີການລົງຕົນ ລົງມືກັນ. ຂ້າພະເຈົ້າຕັດສິນໃຈໃນວິນາທີນັ້ນເອງວ່າ ການຕໍ່ສູ້ "ຕ້ານ" ພະຍາດ "ຂຸມເຫລົ້າ" ຂອງວຽງສະຫວັນ ໂດຍຜ່ານຂ້າພະເຈົ້າຄົງຈະເລີ່ມສະແດງຕົວໄດ້ແລ້ວນະບັດນີ້. ອານິສົງເຫດຜົນ ແລະ ຄວາມເປັນຈິງທີ່ໜັກແໜ້ນ ຄື ດັ່ງວຽງສະຫວັນຍົກມາໜີ້ ຂ້າພະເຈົ້າຄົງຈະພໍມີແນວເວົ້າ ຈັກຂວນອວນໝູ່ ໃຫ້

ຫລຸດຜ່ອນການ "ກິນເຫລົ້າຊຸມແຊວ ຈີບເມັຽນາຍ" ແລະ ການເຫັນດີ ເຫັນງາມອະນຸຍາດໃຫ້ຊາວໜຸ່ມ ນັກຮຽນເອົາເຫລົ້າໄປກິນສະຫລອງໂອກາດ ປິດສະຫລຸບມື້ວັນບຸນຕ່າງໆນັ້ນ ຂ້າພະເຈົ້າກໍ່ຈະຂັດຄ້ານ ແລະ ໂຈມຕີຄືກັນ. ຂ້າພະເຈົ້າຈະຂຽນຈົດໝາຍຫາວຽງສະຫວັນ ແລກປ່ຽນກັບນາງຕື່ມວ່າ ຄວນຈະເຮັດແນວໃດແດ່ (ສວຍໂອກາດເວົ້າເລື່ອງອື່ນໆແດ່ຊຸ້ມນ່າ) ແຕ່ສະເພາະໃນຂັ້ນຕົ້ນນີ້ ຂ້າພະເຈົ້າຈະສົ່ງສຳເນົາຈົດໝາຍນີ້ໄປຫາບັນນາທິການໜັງສືພິມສະບັບໃດໜຶ່ງ - ເບິ່ງວ່າຈະໄດ້ພິມແດ່ບໍ່ - ແລ້ວຕໍ່ໄປ....

●●



ຍອດບົວ

ຍອດໜຶ່ງ ມີຊື່ແທ້ວ່າ ສົມພົງ ສັກດີ, ນາມປາກກາອື່ນທີ່ໃຊ້ກໍມີ ຫຼານແມ່ເຖົ້າ ແລະ ສົມພົງ ສັກດີ ປະເພດບົດທີ່ຂຽນກໍມີ: ເລື່ອງສັ້ນ, ກະວີ , ບົດບັນທຶກ ແລະ ຍັງມີຜົນງານແປອີກດ້ວຍ.

ມີນຕາເບິ່ງໂລກວັນທີ ໒໕ ເມສາ ໑໙໓໓ ເປັນ "ສັກດີ" ຄົນທີ ໓ ໃນຈຳນວນ ໕ ຄົນ ຂອງຄອບຄົວທິດເພັງ ແລະ ສາວຈັນສຸກ ພົວເມຄູ ຊາວນາທຸກຍາກ ແຕ່ມີສາຍຍາມາມ "ສັກດີ" ຈຶ່ງກາຍເປັນນາມສະກຸນ ແຫ່ງບ້ານວຽງໄຊ ແຂວງຫລວງພະບາງ.

ໃຊ້ຊີວິດແຕ່ນ້ອຍ ຢູ່ນຳແມ່ເຖົ້າ ຢູ່ວັດປ່າໂພນເພົາ ເພາະສະນັ້ນບົດຂຽນຂອງເຂົາໃນເວລາຕໍ່ມາຈຶ່ງເປັນເນື້ອໃນໃຫ້ຄົນມີຄວາມເຫັນອົກເຫັນໃຈ ແລະ ເຂົ້າໃຈເຊິ່ງກັນ ແລະ ກັນຢ່າງນຸ້ມນວນຕາມອິດທິພົນຂອງພຸດທະສາສະໜາ ແລະ ຍອມຢູ່ທ່າມກາງຊາວບ້ານຮ້ານຊ່ອງສາມັນຊົນ ມາແຕ່ນ້ອຍບົດຂຽນຂອງເຂົາຈຶ່ງຖ່າຍທອດເອົາຄວາມເປັນທຳມະຊາດຂອງສາມັນຊົນອອກມາໃນຮູບຄຳສັບ, ສຳນວນ ແລະ ເນື້ອໃນ.

ເລີ່ມຂຽນມາແຕ່ປີ ໑໙໕໒ ຜົນງານທີ່ເດັ່ນກໍມີ: ເລື່ອງສັ້ນ " ສາວນ້ອຍຂີ້ໄຫ້ " ຮາງວັນຊະນະເລີດ ໑໙໕໔ ຂອງໜັງສືພິມແມ່ຍິງ, ກອນ "ແພພັນຄໍແດງ" ຮາງວັນທີສອງ ໑໙໕໓ ຂອງວາລະສານ ວັນນະສິນ ແລະ ອື່ນໆ.

ຈົບການສຶກສາລະດັບປະລິນຍາຕີ ສາຂາວິຊາ ວັນນະຄະດີ ພາສາສາດປີ ໑໙໕໔ ປັດຈຸບັນ ເຮັດວຽກຢູ່ກົມວັນນະຄະດີ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.

ເຂົາມີຄະຕິວ່າ "ລົມເຕົວ ຫລົງຕົວ ແມ່ນອິດຂັ້ນຄວາມຈະເລີນ ຂອງມະນຸດ" ເພາະສະນັ້ນ ເຂົາຈຶ່ງມັກກົ້ມໜ້າຟັງຄຳເຫັນຂອງຜູ້ອື່ນສະເໝີ.



# ໄຟເຜົາຫົວໃຈ

● ຍອດໜຶ່ງ

ຕາເວັນຄ້ອຍແລງແລ້ວ ແຕ່ສຸກສະຫວັນຍັງອື້ລົດຈັກໄປຊ່າໆ ຢ່າງບໍ່ຟ້າວບໍ່ຟັ່ງ ໄປຕາມສາຍທາງຜ່າຕະຫລາດທາດຫລວງ. ຝູງຊົນຢູ່ຕະຫລາດບາງຕາລົງຫລາຍແລ້ວ. ຈຳນວນໜຶ່ງພວມທະຍອຍກັນກັບອອກຈາກຕະຫລາດຢ່າງຟ້າວຟັ່ງ ໃນມືເຂົາເຈົ້າຖືຖົງຢາງ ຫລືກະຕ່າໃສ່ ອາຫານດິບ ປະເພດຜັກນື່ສີໃບ ແລະ ອື່ນໆ. ບາງຄົນ ນອກຈາກຖົງຢາງ ຫລື ກະຕ່າໃສ່ອາຫານແລ້ວ ອີກເບື້ອງໜຶ່ງຍັງຖືກະເປົາເອກະສານ ຫລືພາຍກະເປົານ້ອຍພາດບ່າ. ຜົວເມຍບາງຄູ່ກໍຊ້ອນລົດຖີບ ຫລື ລົດຈັກນຳກັນ ແຕ່ ບາງຄູ່ບາງຄົນກໍ່ຍ່າງອອກຈາກຕະຫລາດວັບໆ ຢ່າງຟ້າວຟັ່ງ.

ສັງເກດງ່າຍໆ ກໍ່ຮູ້ວ່າ ຄົນທັງຫລາຍລ້ວນແຕ່ມີໃບໜ້າຟ້າວຟັ່ງ ແລະ ທ່າທາງຮີບຮ້ອນ ກົງກັນຂ້າມກັບສຸກສະຫວັນ.

ລົດເມສອງຄັນຍັງຈອດຖ້າຄົນຢູ່ຄຽງຂ້າງກັບເຮືອນຫລັງນ້ອຍໆ ເຊິ່ງເປັນສູນບັນຊາຂອງສະຖານີລົດເມນັ້ນເອງ. ຢູ່ໃນສູນນັ້ນ ຄົນຈໍານວນ ສີ່ຄົນພວມເຮັດວຽກຄຸກນຸກຄຸນນຸນ. ຜູ້ໂດຍສານຈໍານວນບໍ່ຫນ້ອຍ ພວມນັ່ງຈົດຈໍ່ ລໍຖ້າການອອກເດີນທາງຢູ່ເທິງລົດ. ສຸກສະຫວັນຂີ່ລົດຜ່ານໄປຂ້າງຄີເກົ່າ ສາຍຕາຂອງເຂົາຍັງວາດຜ່ານລົດເມທັງສອງໄປຊາໆ ຢ່າງບໍ່ເອົາໃຈໃສ່. ຫນ້ອຍບໍ່ນານລົດເມທັງສອງຄັນກໍ່ທະຍອຍກັນເຄື່ອນຕົວອອກຈາກສະຖານີໄປ.

ແລ້ວ ... ສາຍຕາຂອງເຂົາກໍວາດໄປພາບກັບທາດຫລວງອັນໃຫຍ່ສີຄໍາ ຈາກນັ້ນກໍຫັນໄປພາບກັບຫນ່ວຍຕາເວັນສີແດງຊ້ຳ ເຊິ່ງຢູ່ຕໍ່າກວ່າ ປາຍທາດຫລວງ ແລະ ພວມລັບພຸ່ມຍອດໄມ້ທີ່ຕຶບຫນາລົງແລ້ວ. ນົກກາບິນໄປ ມາເປັນຫມູ່ ທັງສົ່ງສຽງຮ້ອງ ເຕືອນກັນກັບຮັງດັ່ງແອວໆ ຍອນຄວາມມືດ ທີ່ລົ້ມເຄື່ອນຕົວມາຄຸມບັນຍາກາດຈຶ່ງພາໃຫ້ບໍ່ສາມາດເບິ່ງສີຂອງນົກອອກໄດ້. ທາງຮ້ານບ້ານຊ່ອງຫລາຍແຫ່ງກໍໄດ້ເລີ່ມໄຕ້ໄຟແລ້ວ.

ສຸກສະຫວັນ ຂີ່ລົດກາຍບໍລິເວນນັ້ນ, ເກືອບຮອດທາງສີ່ແຍກ ເຂົາກໍເຫັນຊາຍຫນຸ່ມຄົນຫນຶ່ງ ພາຍກະເປົາຫນັງສີແດງຂະຫນາດໃຫຍ່ ທີ່ມີເຄື່ອງເຕັມຈົນສວດຊຸງປຸ່ງ. ບ່າເບື້ອງນັ້ນເຕື່ອຍລົງຈົນເຫັນໄດ້ຄັກ ສ່ວນມືເບື້ອງກົງກັນຂ້າມກໍຫົວຖົງຢາງ ທີ່ບັນຈຸເຄື່ອງອັນໃດອັນຫນຶ່ງຈົນເຕັມ ແລະເຄັ່ງຕຶງພອນດ້ວຍກ້ວຍນ້ຳວ້າສຸກຫນ່ວຍຕຶງສາມສີ່ຫວີ. ເສື້ອເບື້ອງຫລັງຂອງຊາຍຫນຸ່ມ ຄົນນັ້ນ ປຽກຍອມນ້ຳເຫື່ອ, ບາດຢ່າງຂອງເຂົາຫນັກ ເຊື່ອງຊາ ແລະອິດເພຍອາການຢ່າງເປັນປົກກະເດັກໆ ບາດຢ່າງຈະແຮງຂຶ້ນ ເມື່ອເຂົ້າ ຢັ້ນພື້ນດິນດ້ວຍຂາຊ້າຍ ແລະ ຖົກຂາຂວາຂຶ້ນ. ເຂົາຫົວຢ່າງໄປເບື້ອງຫນ້າ ທັງຫລຽວຫລັງດ້ວຍທ່າທາງລັ້ງໆ ລໍ ໆ .

" ຫມໍ່ຄືຊິຢາກຢຸດລົດ, ເບິ່ງຊົງຫມໍ່ຄືຊິເມື່ອຍຫລາຍ ..."ສຸກສະຫວັນ

ຍອດໜຶ່ງ

ຄິດ ເມື່ອລົດໃກ້ຈະເຄື່ອນໄປໃກ້ຈະຮອດຊາຍໜຸ່ມຄົນນັ້ນ ແລ້ວກໍວາດສາຍຕາ ກາຍໄປ ເຮັດຄືບໍ່ເຫັນ.

ແລະ ກ່ອນທີ່ລົດຈະໄປຮອດ ຊາຍໜຸ່ມຄົນນັ້ນກໍກ້າວໜຶ່ງ ແລ້ວຍົກມື ສັນຍານໃຫ້ສຸກສະຫວັນຢຸດລົດ.

ສຸກສະຫວັນຫັນໃຈໃຫຍ່ຢ່າງເບື່ອໜ່າຍແລ້ວກໍຢຸດລົດ ໂດຍບໍ່ຍອມມອດ ຈັກ.

ຊາຍໜຸ່ມຄົນນັ້ນຍິ້ມອອກມາຢ່າງອິດອ່ອນແລ້ວເວົ້າກັບສຸກສະຫວັນວ່າ:

" ຂໍໂທດ, ອ້າຍຈະໄປທາງໃດນໍ້ ?"

" ໄປບ້ານຊ້າງຄູ້ "

" ໂອ, ໂຊກນ້ອງດີແທ້ໆ " ຊາຍໜຸ່ມຄົນນັ້ນອຸທານຂຶ້ນຢ່າງດີໃຈ , ນ້ອງຂໍໄປນຳແດ່ໄດ້ບໍ່ອ້າຍ? ນ້ອງຈະໄປຄົງໂຄກຮອດບ້ານອ້າຍແລ້ວ ນ້ອງຈະ ຍ່າງຕໍ່ "

" ເອີ... " ສຸກສະຫວັນກຽມພ້ອມຈະຕອບແນວໃດແນວໜຶ່ງ ອອກ ມາ ແຕ່ແລ້ວກໍຢຸດສະງັກ.

" ເຫັນໃຈນ້ອງແດ່ອ້າຍ, ນ້ອງມາແຕ່ໄກ, ສີໄຄພຸ້ນ.

" ນ້ອງຊາຍຖີບລົດມາສົ່ງ ແຕ່ລົດເມກໍພັດໝົດແລ້ວ" ຊາຍໜຸ່ມ ຄົນ ນັ້ນອ່ອນສຽງລົງແບບອິ້ງວອນ.

" ຊັ້ນ ເປັນຫຍັງບໍ່ຖ້າລົດຄົງໂຄກ? "

" ລົດຄົງໂຄກໝົດແລ້ວ "

" ຊັ້ນ ລົດສອງຄັນຫວ້າງຢ່ານີ້ເດ ? "

" ໄປສາຍອື່ນ... ນ້ອງວ່າຊິມາໃຫ້ພັ້ນ ແຕ່ບໍ່ເປັນຈັ່ງນຸມ. ວຽກກໍ ຫລາຍແທ້ໆ ມື້ນີ້ທັງດຳນາ ທັງຄາດ ທັງໄຖ ພ້ອມກັນ ຄັນບໍ່ໄປໂຮງຮຽນ ມື້ນີ້ ມື້ອື່ນຊ້ຳພັດເສັງ ໄປເຊົ້າມື້ອື່ນຢ້ານບໍ່ທັນ ແລະ ຢ້ານກະກຽມເສັງບໍ່ໄດ້ດີນ້ອງ ຈຶ່ງຟ້າວກັບມື້ນີ້ "

ສຸກສະຫວັນສົ່ງສາຍຕາ ເບິ່ງໄປໄກໆ ໂດຍບໍ່ເອົາຫູຊາຕາໂຕ່ງ ນຳຄຳເວົ້າຂອງຊາຍໜຸ່ມຄົນນັ້ນ.

" ຖາລົດຄັນອື່ນກໍໄດ້ຢູ່ຕີ້? " ສຸກສະຫວັນ ແນະນຳສຽງອ່ອນໆ.

" ດຽວນີ້ມັນກໍໃກ້ຄ່ຳແລ້ວອ້າຍ ລົດຫຼວງທາງກໍ່ຫນ້ອຍ ເພາະທາງ ນີ້ສາຍປ່ຽວ, ມືດ ແລະ ໄກ ດຽວນີ້ຍາມຝົນດີແນວນີ້ຜັດຄ່ຳໄວ ແລະ ບໍ່ມັກ ມີຄົນທຽວທາງ. ອີກອັນຫນຶ່ງຄ່ຳມືດຈືດຕາແລ້ວອັດລົດກໍບໍ່ສະດວກ ເພິ່ນກໍບໍ່ຢາກຢຸດ ເພາະບໍ່ຮູ້ຄົນຮ້າຍຄົນດີ "

ສຸກສະຫວັນງຶກຫົວນຳ ແຕ່ໃນໃຈເຂົາພວມຄຸ້ນຄິດ.

" ຄັນຊິໄປສົ່ງຫນໍນີ້ ກໍຕ້ອງເຄີກຊູ້ແຊວຕາມບັດຫນູ, ພວມຂີ່ລົດ ຂ້າວເລົາຖ້າຢູ່ນີ້ ເວົ້ານຳປານນີ້ ກໍນັບວ່າດີແລ້ວ ຄັນຊິວ່າເຮົາບໍ່ມີນ້ຳໃຈກໍດາຍ!"

" ເຈົ້າ ຖ້າລົດຄັນອື່ນເນີ, ຂ້ອຍຟ້າວ "

ສຸກສະຫວັນເວົ້າ ເພື່ອຫາທາງອອກທັງຂຽວເຂົ້າເກຍລົດເກີກກັກ.ລົດແລ່ນອອກໄປວູດໆ ຄາວຫນຶ່ງເຂົາກໍຫລຽວຄືນເບິ່ງຊາຍຫນຸ່ມຄົນນັ້ນ ທີ່ພວມສົ່ງສາຍຕາຈືດຈອງນຳຫລັງ ດ້ວຍແວວເສຍຫວັງ. ເຂົາສະທ້ອນໃຈເມື່ອ ເຫັນແວວຕານັ້ນ.

" ໄປສົ່ງຫນໍເຫວະ ?! ຢ່າແຫລະ! ເຮົາບໍ່ໂພດດອກ ຂອງວ່າ ເຮົານິສິດຕັດສິນ, ລົດເຮົາເອງນີ້ນ່າ ! "

ເຂົາຄິດ, ລົດຂອງເຂົາຍັງແລ່ນໄວໆ ໃຫ້ມັນຈາກຊາຍຫນຸ່ມຄົນນັ້ນໄປໄກເຕີບແລວ ກໍຜ່ອນຄວາມໄວໄປແບບເພີນໆ ຄືເກົ່າ .

× × ×

ເປັນເວລາສອງຊົ່ວໂມງກວ່າ ທີ່ສຸກສະຫວັນຮ່ວມຊຸມແຊວກັບໝູ່ ຢູ່ເຮືອນໝູ່ຄົນໜຶ່ງ ຢູ່ຊຸມໂພນເຄັງ ແລ້ວລົດຂອງເຂົາ ຈຶ່ງໄດ້ເລີ່ມແລ່ນມາຕາມສາຍທາງຫລວງ ທີ່ທອດໄປຫາບ້ານເຂົາ. ເຂົາຮູ້ສຶກມ່ວນຫລາຍ

ທີ່ໄດ້ພົບໜູ່ ແລະ ນິອາກາບ ນິນເນົາເລັກນ້ອຍ. ຄົນໄປສົ່ງໜໍກໍເຄີກລ້າງ.

" ຄືນເອົາໜໍນັ້ນມານາ ກໍກິດລ້າງ ບໍ່ວ່າຈະໄດ້ນອນປານນີ້ໄດ້! ນິແຕ່ໜູ່ນ້ຳກັນເຖິງໃຈຄືໜຍັງນີ້".

ເຂົາເພີ່ມຄວາມໄວລົດຂຶ້ນ. ຖະໜົນຫີນທາງທີ່ເຄີຍມີຜູ້ຄົນທຽວໄປມາເປັນລະຍະໃນຫວ່າງແລງນັ້ນ ບັດນີ້ກາຍເປັນຖະໜົນປ່ຽວ ດົນໆ ຈຶ່ງມີລົດຫລືຄົນສວນທາງມາຄັ້ງໜຶ່ງ. ເນື່ອງຈາກວ່າລົດລາງຄັນບໍ່ໄດ້ໄຟ ເຂົາຈຶ່ງບໍ່ອາດຮູ້ໄດ້ໃນໄລຍະໄກວ່າມີຄົນ ຫລືລົດຢູ່ເບື້ອງໜ້າ ດັ່ງນັ້ນຫລາຍເທື່ອເຂົາຈຶ່ງຕົກໃຈ ເມື່ອສວນທາງ ຫລືແລ່ນກາຍລົດ ແລະ ຄົນເຫລົ່ານັ້ນ. ຫລາຍຄັ້ງກໍ ມີແສງໄຟຈາກລົດໃຫຍ່ມາຈາກເບື້ອງໜ້າ ຕອງຕອບຕາ ຈົນເຂົາວິ່ງວອງທີບ. ຫລາຍເທື່ອກໍມີລົດໃຫຍ່ສົ່ງແສງໄຟ ແລະ ແລ່ນໄລ່ຫລັງມາດ້ວຍຄວາມໄວ ສູງຈົນເຂົາຕອງພະຍາຍາມຫລົບເຂົ້າແຄມທາງ ຫວິດຈາກຂອບທາງປູຢາງ ໄປຮອດສາຍທາງແຄມຄອງເໝືອງທີ່ທອດຕາມແຄມທົ່ງນາ.

ຍາມກາງຄືນເດືອນມືດໃນລະດູຝົນ ມືດປານກຳຕາແຫ້ງ. ນອກຈາກແສງໄຟລົດທີ່ທອດໄປເບື້ອງໜ້າແລ້ວ ເຂົາບໍ່ໄດ້ສັງເກດເຫັນແສງອື່ນໆ ເລີຍບໍ່ວ່າແສງໄຟເຮືອນທີ່ໄຕ່ຮຽງຢູ່ເປັນຍ່ານໆ ໄກໆ ກັນ ຫລືແສງມີບໆມາບໆຂອງແມງທີ່ງຫອຍ ແລະ ນອກຈາກສຽງລົດ ທີ່ດັງກອງຫູແລ້ວ ເຂົາກໍບໍ່ໄດ້ຍິນສຽງອື່ນໆ ເລີຍບໍ່ວ່າຈະແມ່ນສຽງກົບຂຽດຮ້ອງຢູ່ທົ່ງນາ ຫລືສຽງນ້ຳເໝືອງ ໄຫລຕ້ອງແຄມຄອງດັງຫາດໆ.

ເຂົາຈ້ອງຕາຕູ້ຕັ້ງຕຶງ, ກຳເອົາລົດແໜ້ນ ແລະ ບັນຊາເຂົາ ວັນຊາຄັນເລັ່ງຢ່າງຕັ້ງໜ້າ ເພື່ອຫລົບຫລີກຂຸມຄອງຕາມສາຍທາງ ເຊິ່ງລາງຂຸມທີ່ໃຫຍ່ຍັງມີນ້ຳຂີ້ຕົມທັງຢູ່ ເຮັດໃຫ້ສາມາດມອງເຫັນໄດ້ມົວໆ ໃນຄວາມມືດເຂົາເກີດຄວາມຮູ້ສຶກເປົ່າປ່ຽວ.

" ຂຶ້ນມາຜູ້ດຽວຈັ່ງຊີ້, ເຫງົາກໍພໍສະບາຍໃຈ, ຫາກມີຄົນຮ້າຍມາລັດກໍ

ພໍຫລົບຫລີກງ່າຍ, ຫາກໂຊກບໍ່ດີຜູ້ຊອນທ້າຍເປັນຄົນຮ້າຍຂອງແຮງຊິເອົາຕົວບໍ່ລອດຊ້ຳ "

ຄວາມຄິດຂອງເຂົາຟັ່ງຊະໄປຕ່າງໆ ນາໆ ຕະຫລອດທາງແຕ່ກໍ່ນັກຕຳນັກຫົ່ງໃສ່ຊາຍຫນຸ່ມທີ່ຂໍ່ຂື້ນລົດນຳເຂົາຫວ່າງແລງຢ່າງຫງຳເງືອດ ຄືເຄີຍ ພົດກັນມາແຕ່ຊາດກ່ອນ...

ຈົນຮອດທາງລ້ຽວເຂົ້າທາງຮ່ອມນ້ອຍເຂົ້າບ້ານເຂົາຈຶ່ງເຫັນ ຄົນຈຳນວນຫລາຍ ຈັບກັນເປັນກຸ່ມສາມ ກຸ່ມສີ່. ນຳຫນ້າເງາແມ່ນ ກຸ່ມຫນຸ່ມສາວນ້ອຍກຸ່ມໃຫຍ່ ສິບກວ່າຄົນຍ່າງຊາໆ ໂສກັນມາຕາມຮ່ອມດ້ວຍສຽງທີ່ແຮງ ແລະ ບໍ່ສົນໃຈຜູ້ໃດເລີຍ. ເຂົາຕອງໄດ້ລົງຈູງລົດຍ່າງເອົາ ເພາະຫລີກຄົນຍາກຍອນທາງຮ່ອມແຄບ.

" ຜົວລາວບໍ່ທັນມາຮອດເຮືອນເທື່ອ ມີແຕ່ເມັຽກັບລູກຢູ່ເຮືອນ. ເມື່ອໄຟໄຫມ້ລາມຂື້ນເອື້ອຍນັ້ນກໍ່ບໍ່ຊ່າງເຮັດແນວໃດ ໄດ້ແຕ່ອຸ້ມລູກໄຫ້ຫຼືໄຫ້ຫລີດ ຊິຂື້ນໄປຂົນເຄື່ອງຢູ່ເຮືອນໃຫຍ່ກໍ່ບໍ່ກ້າ... ຊິເອີ້ນໃສ່ຊາວບ້ານກໍ່ບໍ່ທັນ... "

" ... ກະຂອງວ່າ ເຮືອນຢູ່ປ່ຽວໄກຫມູ່, ຊ້ຳພັດເປັນຍາມ ຊາວບ້ານ ຊາວຊອງເຕົ້າຕອນກັນຢູ່ໃນເຮືອນ, ພັກຜ່ອນ..."

" ... ຈື່ວ່າຊາວບ້ານຈະຮູ້ ໄຟກໍ່ໄຫມ້ຂື້ນຫລັງຄາເຮືອນຄົວ ຮອດເຄິ່ງແລ້ວ, ດູ້ແຕ່ມັນບໍ່ທັນລາມຮອດເຮືອນໃຫຍ່... "

" ແຫ... ນີ້ຄົນມານອດກ່ອນ "

" ໃຜ... " ສຽງຫນື່ງຖາມຂື້ນ.

" ຈັກ, ເຮົາກໍ່ບໍ່ຮູ້ແຈ້ງ. ຕາມເອື້ອຍເຈົ້າຂອງເຮືອນວ່າ ອ້າຍນັ້ນແລ່ນມາແຕ່ທາງຫລວງພຸ້ນ, ວ່າຊັ້ນ! ແຫ້, ຂອງວ່າເບິ່ງນາແຕ່ ທາງຫລວງເຫັນທັນເດ ! ລາວແລ່ນມາຮອດແລ້ວກໍ່ຫລຸບຖາມຫາພາ ແລ້ວກໍ່ໄນສາວປີນຂື້ນແປເຮືອນຄົວ ຕັດຫົ່ງຫຍ້າຄາໄຟໄຫມ້ລົງ, ມັນຈຶ່ງບໍ່ທັນລາມ" ນາງຫນື່ງຕອບ.

ຍອດຫນຶ່ງ

" ໂອ໋ຍ... ຄັນບໍ່ໄວ ບໍ່ສ່ຽງແຫ້ບໍ່ທັນມັນດີ ໄຟໄຫມ້ຫຍ້າຄາ!... ແມ່ນຢູ່ມັນຍັງປຽກ, ແຕ່ຟືນຕົກຫວ່າງສວາຍພຸ້ນໄດ໋! ເບິ່ງໄຟໄຫມ້ລາມນິລາມ ຫນາອາຍມັ້ນບໍ່ແມ່ນງ່າຍ ຈຶ່ງວ່າ ເອື້ອຍເຈົ້າຂອງເຮືອນຮອງໃຫ້ລົງ ບໍ່ເອົາເຮືອນກໍໄດ້ ຢ້ານເປັນອັນຕະລາຍ... ລາວກໍບໍ່ລົງ, ລາວເຮັດຈົນໄຟມອດ" ນາງຫນຶ່ງເວົ້າຕໍ່.

ແລະ ກ່ອນຜູ້ອື່ນຈະເວົ້າຕໍ່ ກໍມີສຽງຜູ້ຊາຍສອດຂຶ້ນວ່າ:

" ເວົ້າປານໂຕເອງເຫັນ... "

" ເອື້ອຍນັ້ນເວົ້າ... " ສຽງຂອງຜູ້ຊາຍທີ່ດັດເປັນສຽງຍິງ ຕອບ ຢູ່ອກລັ້ແລ້ວເຂົາເຈົ້າກໍພາກັນໂຮແຊວຂຶ້ນ. ຈາກນັ້ນຫນຸ່ມນ້ອຍຄົນຫນຶ່ງເວົ້າຂຶ້ນ ດ້ວຍອາການແກມຫົວວ່າ :

" ອີດູລາວແຫ້ເນີ, ອ້າຍອັນນັ້ນ! ພໍໄຟມອດລາວກໍສະຫລົບ, ຕົກມາ ແຕ່ແປເຮືອນຄົວ "

" ເວົ້າປານເຫັນລາວຕົກ " ສຽງຫນຶ່ງສອດຂຶ້ນອີກ ເທື່ອນີ້ເປັນສຽງ ແມ່ຍິງ.

" ອັນນີ້ ກໍແມ່ນເອື້ອຍນັ້ນເວົ້າຄືກັນ " ຫນຸ່ມນ້ອຍຄົນເກົ່າຕອບ ແບບ ລົ້ລຽນ ແລ້ວເຂົາເຈົ້າກໍພາກັນໂຮແຊວຂຶ້ນຢ່າງມ່ວນຊື່ນອີກ.

" ແທ້ໄດ໋ ! ລາວຟື້ນແລ້ວເອື້ອຍນັ້ນ ເອົາເຂົ້າໃຫ້ກິນ, ເບິ່ງ ລາວ ວັບເອົາ! ວັບເອົາ! " ຫນຸ່ມນ້ອຍຜູ້ເລົ່າເລື່ອງເລົ່າຍັງຢືນຢ່າງເອົາຈິງເອົາຈັງ.

ແລ້ວ... ຄຳເວົ້າ ຄຳສົນທະນາຂອງຫນຸ່ມສາວນ້ອຍກຸ່ມນີ້ ກໍສ້າງ ຄວາມສົນໃຈໃຫ້ສູກສະຫວັນ ເຂົາຈຶ່ງຢຸດຖາມວ່າ :

" ພວກນ້ອງຮູ້ບໍ່ ວ່າໄຟໄຫມ້ເຮືອນໃຜ ? "

ຫນຸ່ມນ້ອຍກຸ່ມນັ້ນຫັນຫນາສົນທະນາກັນແລ້ວຕອບວ່າ :

" ເຮືອນໃຜບໍ່ຮູ້, ໄດ້ຍິນແຕ່ໄທບ້ານເອີ້ນເອື້ອຍເຈົ້າຂອງເຮືອນ ວ່າ ເອື້ອຍພອນ "

" ຕາຍ! ... ເຮືອນເຮົາຊໍ້າ" ໄດ້ຮັບຄຳຕອບເທົ່ານັ້ນ ເຂົາກໍ ເກືອບທັນໃຈບໍ່ອອກ. ເຂົາຂຽວຕິດຈັກລົດ, ຂີ່ມຸ່ງຮອນມາຍັງທີ່ເກີດເຫດ ທີ່ວບໍ ລິເວນເດີ່ນບ້ານຂອງເຂົາ ເພິ່ນໄດ້ກໍ່ດອກໄຟມາຕື່ມຫລາຍດອກຈົນຮຸ່ງແຈ້ງສະ ຫວ່າງ ພໍແຕ່ມາບເຫັນເຂົາຍິງເຈົ້າຂອງເຮືອນກໍແລ່ນມາບອກຂ່າວ.

" ໂອ... ອາຍມາແລວ! ອາຍເອີຍ, ເກືອບວອດວາຍເຮົານະ ! ດີແຕ່ອາວຄົນນັ້ນມາຊ່ອຍທັນ.

ນາງທັງເວົ້າ ທັງຊີ້ມືໄປໃສ່ຊາຍໜຸ່ມຄົນໜຶ່ງ ທີ່ພວມສ້ອມແປງເຮືອນ ຄືວພ້ອມກັບຊາວບ້ານຄົນອື່ນໆ ສຸກສະຫວັນຮອດບໍ່ສົນໃຈນຳຄຳເວົ້າ ຂອງເມຍ ແລະ ຄົນທີ່ເມຍເວົ້າເຖິງ ເຂົາຂຽວຈູງລົດເຂົ້ານຽນໄວກອງຕະລາງ ເຮືອນ ຢ່າງບໍ່ປາກບໍ່ຕິງ ເພື່ອຂຽວໄປຊ່ອຍໜູແປງເຮືອນຕົນເອງ. ເມຍຂອງ ເຂົາ ຍ່າງນຳ ແລະ ເວົ້າອີກວ່າ:

" ຕອນນັ້ນ ລາວທັງເມື່ອຍທັງຫິວໄດ໋, ອ້າຍ! ປານນັ້ນ ລາວ ກໍ່ຍັງ ປີນຂຶ້ນໄປແປງເຮືອນມອດໄຟໃຫ້ເຮົາ ຈົນວ່າໄຟໄໝ້ລາວຈົນສະຫລົບ, ເປັນ ຕາອີດູລາວອີຫລີ !"

ໄດ້ຍິນເມຍເວົ້າລຳໄລຫລາຍ ສຸກສະຫວັນຈຶ່ງຈຳໃຈວຽນໜ້າ ເບິ່ງ ຊາຍໜຸ່ມຄົນນັ້ນ. ໃນຂະນະນັ້ນສຽງເວົ້າຂອງເມຍກໍດັງແວ່ວເຂົ້າຫູວ່າ:

" ລາວວ່າ ລາວກໍໄດ້ອັດລົດໄຖບ້ານເຮົາຄືນໜຶ່ງ ແຕ່ຖືກປະຕິເສດ ໃພນຸ, ໃຈດູ້ເອົາແທ້ເອົາວ່າ! ໂຊກລາວບໍ່ດີ, ຄັນພໍ້ອາຍໄດແດ່ "

ເຂົາຈອງມອງຊາຍໜຸ່ມຄົນນັ້ນຢ່າງຈິງຈັງ. ໃນຂະນະທີ່ຊາຍໜຸ່ມຄົນ ພວມຮັບເອົາໄພຫຍາຈາກມືຄົນຢູ່ຂ້າງນາ ແລວຍໍໄພຫຍາຂຶ້ນເລັກນ້ອຍ ເພື່ອ ກຽມວາງໃຫ້ຖືກທີ່ ເມຍເຂົາກໍ່ເວົ້າຕໍ່ຢ່າງຊື່ນຊົມວ່າ:

" ໄຟມອດແລ້ວ... ລາວເປັນຜູ້ມີບຸນຄຸນຂອງເຮົາແທ້ໄດ໋ ! "

ແລະ ແລ້ວ... ໃນຕອນນັ້ນ ຊາຍໜຸ່ມຄົນນັ້ນກໍເງີຍໜ້າຂຶ້ນຈົນເຫັນໄດ້ຄັກ.

ມັນເໝືອນໄຟເຜົາຫົວໃຈສຸກສະຫວັນ ເຂົາຂ້ຽວກົ້ມໜ້າລົງຕ່ຳ ຫລົບສາຍຕາຊາຍໜຸ່ມຄົນນັ້ນ ເຊິ່ງເຂົາກໍບໍ່ຮູ້ວ່າຊາຍໜຸ່ມຄົນນັ້ນເຫັນ ຫລື ສົນໃຈເຂົາຫລືບໍ່.

ໄຟໄໝ້ເຮືອນມອດແລ້ວ ແຕ່ໄຟເຜົາຫົວໃຈເຂົາພັດ ຫາກໍ ເລີ່ມລຸກໄໝ້ ຮຸນແຮງຂຶ້ນ ເຂົາບໍ່ຮູ້ວ່າມັນຈະມອດຍາມໃດ ແລະ ຈະໄໝ້ ລາມແຮງຊ່ຳໃດ.

ເພາະ... ຊາຍໜຸ່ມຄົນນັ້ນຄືຄົນທີ່ຂໍລອບລັກເຂົາມາຫວ່າງແລງ ນັ້ນເອງ.

●●



ດວງໄຊ ຫລວງພາສີ

ດວງໄຊ ຫລວງພະສີ ຖືໄດ້ວ່າເປັນປະເພດນັກຂຽນ ທີ່ມີລີລາຄອງຄົນປາຍປາກກາ ເຊີງບົດບູ້ທາງສົງຄາມ ເພາະບົດປະພັນຂອງເຂົາ ຈະເນັ້ນໜັກໄປທາງມູນເຊື້ອຕໍ່ສູ້ປະຕິວັດທີ່ດຸເດືອດເຜັດມັນ.

ເຂົາເກີດວັນພຸດ ປີວອກ 1944 ທີ່ບ້ານຫາດຫລວງ ວຽງຈັນ, ເຂົ້າການປະຕິວັດ 7.10.1960, ຈັບປາກກາຂຽນ 5.11.1961. ຈຶ່ງຖືໄດ້ວ່າເຂົາເປັນນັກຂຽນອາວຸໂສຄົນໜຶ່ງ.

ເຂົາມີຊີວິດໂຊກໂຊນ ດຸເດືອດຢູ່ກັບສົງຄາມ ແລະ ຄວາມຕາຍ .ທັງເຄີຍໄດ້ຕາຍມາແລ້ວ 54 ຊົ່ວໂມງ ຢູ່ສະໜາມຮົບ.

ເຂົາເຮັດເກືອບທຸກວຽກ ແຕ່ເຂົາດີທາງການຂຽນ ເບິ່ງຄືວ່າ ເຂົາຂຽນດ້ວຍການເນົານົວຂອງຫົວໃຈ ແລະ ປອດເລືອດ ຢ່າງໝົດຊີວິດຈິດໃຈເຂົາແທ້ເຂົາວ່າ. ເກືອບທຸກບົດທີ່ເຂົາປະພັນມັນຂຶ້ນມາ ສາມາດເວົ້າໄດ້ວ່າມີເຄິ່ງໜຶ່ງ ເປັນຊີວິດຂອງເຂົາທີ່ສອດແຊກເຂົ້ານຳ.

ເບິ່ງຮູບນອກຄືວ່າຂຶມໆ, ໜ້າເກງຂາມ. ແຕ່ເນື້ອແທ້ແລ້ວເຂົາເປັນປະເພດຄົນມັກມ່ວນຊື່ນ ບໍ່ຖືເນື້ອບໍ່ຖືຕົວ.

" <u>ເມື່ອເກີດມາເປັນລູກຄົນຊາຍ ຕ້ອງເປັນຊາຍແທ້ບໍ່ແກ່ນຕົນ, ກ້າເຮັດກ້າທຳ, ກ້າເວົ້າຄວາມຈິງ, ມີຫົວໃຈເປັນທຳ, ສິ່ງສຳຄັນຄືຮັກປະເທດຊາດບ້ານເມືອງ</u> "

ເປັນຄຳເວົ້າຂອງເຂົາ ເຂົາທີ່ພວກເຮົາເຫັນວ່າເປັນໜ້າຕິດຕາມທັງຊີວິດສ່ວນຕົວ ແລະ ຜົນງານປະພັນຂອງເຂົາ.

ເບິ່ງຄືວ່າ, ຕົກມາປີ 1990 ນີ້, ເຂົາຫັນປາຍປາກກາຈາກບົດບູ້ມາທາງລີລາເນື້ອຫາປະເພດບົດຊີວິດ ແລະ ຄວາມຮັກເປັນສ່ວນໃຫຍ່.

ຈຶ່ງຂໍຝາກເຂົາໄວ້ເປັນຂວັນໃຈກັບທຸກທ່ານຕະຫລອດໄປ.



# ຂອງຂວັນຈາກໃຈ

● ດວງໃຈ ຫຼວງພະສີ

ຖ້ານັບເປັນມື້ ກໍແມ່ນຕະຫລອດ 24 ຊົ່ວໂມງ ຖ້ານັບເປັນເດືອນກໍແມ່ນຕະຫລອດ 30 ວັນ ແລະ ຖ້ານັບເປັນປີກໍແມ່ນ 365 ວັນ ທີ່ຂ້ອຍ ແລະ ພວກເພື່ອນສະຫາຍມີຊີວິດຢູ່ກັບຊຸມຄອງສູ້ຮົບ.

ຈຶ່ງບໍ່ຮູ້ຮອດວ່າ ມື້ນີ້ແມ່ນວັນຫຍັງ? ແມ່ນວັນທີເທົ່າໃດ? ນອກຈາກ ຫນາວເນື່ອງເຫນື່ອຫນື່ບຮັດຮາງກາຍຈົນວ່າສູ້ປັ້ນ ເວົ້າອອກມາຄູ່ໃດ ມີແຕ່ສຽງເວົ້າຂອງຄວາມຫນາວທີ່ອອກມາຈາກທ້ອງ ອອກມາຈາກໄສ້ ຈົນເປັນອາຍຫ່ວນໆ.

ແລ້ວຈາກນັ້ນກໍລ້າງຫນ້າດ້ວຍການສູ້ຮົບຢ່າງເອົາເປັນເອົາຕາຍ ຊະນິດຫູດັບຕັບໄຫມ້ພິລຶກ.

ບາງມື້ກໍເລີ່ມຕົ້ນແຕ່ນອນບໍ່ທັນຕື່ນແກ່ຍາວໄປຮອດ 10 ໂມງເຊົ້າ ບາງມື້ກໍແກ່ຍາວໄປຮອດ ໑໒ ໂມງທ່ຽງ ເພາະພວກສັດຕູຖອກເທ ກຳລັງພົນທາງຫນ້າດິນນັບເປັນພັນໆ ແຕ່ກັບຍິດໆ ປານໂຕປອກໂຕນົດຂຶ້ນມາຕາມ ເປັນມູ່ ຫລັງຈາກຍິງທຸກຊະນິດຖິ້ມບົມຖະຫລົ່ມພ້ອມກັບປືນໃຫຍ່ມາກ່ອນແລ້ວ.

ສົງຄາມທຳລາຍເຜົາຜານ! ການຕໍ່ສູ້ເຮັດການປະຕິວັດຊາດ ປະຊາທິປະໄຕ ພາຍໃຕ້ການຊີ້ນຳນຳພາຂອງພັກປະຊາຊົນປະຕິວັດລາວແຫ່ງລັດທິມາກ-ເລນິນທີ່ແທ້ຈິງຂອງການປະຕິວັດລາວ ແມ່ນດຸເດືອດຂຽວຂາດແທ້ໆ !

ຂ້ອຍຈຶ່ງຕັ້ງໃຈບັນທຶກທຸກເຫດການ ທຸກການເຄື່ອນໄຫວທີ່ຂ້ອຍໄດ້ ພະສົບພົບພໍ້ດ້ວຍຕົວຂອງຂ້ອຍເອງ ດ້ວຍສາຍຕາຂອງຂ້ອຍເອງ ແລະ ດ້ວຍມືມືຂອງຂ້ອຍເອງທີ່ຫັງນ່ຽວໄກປືນຍິງສູ້ຮົບກັບສັດຕູ ທັງຈັບປາກກາບັນທຶກ ຢູ່ກະໂຕຊຸມຄອງສູ້ຮົບປັ້ນໂລດ. ເພື່ອຈະໄດ້ເອົາໄວ້ຂຽນບອກໃຫ້ລູກຫລານຮູ້ ເຖິງຄວາມໂຫດຮ້າຍຂຽວຂາດຢ່າງແທ້ຈິງ ສະໄຫມເຮັດການປະຕິວັດຊາດປະຊາທິປະໄຕວ່າໂຫດຮ້າຍເອົາເປັນເອົາຕາຍພຽງໃດ ?

ໃນປຶ້ມບັນທຶກປະຈຳວັນຂອງຂ້ອຍ.

" ປີ ໑໙໗໐ ຢູ່ທົ່ວແຜ່ນດິນແຂວງຊຽງຂວາງບໍ່ມີເຮືອນ ພຽງແຕ່ຫລັງດຽວ ເພາະໂຈນອາກາດອາເມລິກາເອົາບົມ ໕໘໐ ກິໂລ ເອົາບົມ ໕໐໐ ກິໂລ ເອົາບົມນາປານໄຟເຄມີທາດຟົດຟໍ້ຖິ້ມລົງຈູດລາງເຜົາຜານກ້ຽງເອີດເຕີດ"

" ງົວຄວາຍຕາຍເປັນກອງສົບກອງຊາວເຫມົ່າເຫມັນສະເອືອນໄປທົ່ວແຜ່ນດິນ ເພາະຍົນສັດຕູຖິ້ມບົມບີ້ລົງມາຂ້າ "

" ປະຊາຊົນສ່ວນຫນຶ່ງຖືກພວກສັດຕູຈັບກວາດເອົາໄປເຂດ ຊົ່ວຄາວຂອງພວກເຂົາ ສ່ວນຫນຶ່ງອົບພະຍົບໄປຢູ່ຕາມຊາຍແດນລາວ-ຫວຽດນາມແລະອີກສ່ວນຫນຶ່ງລີ້ຍອນພ່ອນຕົວຢູ່ຕາມຖ້ຳຕາມເຫວ "

ນີ້ຄືຄວາມຈິງ ນີ້ຄືຄວາມໂຫດຮ້າຍປ່າເຖື່ອນທີ່ບໍ່ອາດຈະຫລົງລືມ ຈາກໜ້າປະຫວັດສາດຂອງຊາດລາວໄດ້.

ສົງຄາມຄືການຕໍ່ສູ້! ການຕໍ່ສູ້ກັນຢູ່ສະໜາມຮົບຄືຄວາມຕາຍ !

ແຕ່ພວກຂ້ອຍກໍ່ພູມໃຈທີ່ໄດ້ເອົາຮ່າງກາຍໃນໄວໜຸ່ມແໜ້ນມາຫລໍ່ຫລອມຢູ່ກັບແປວໄຟປະຕິວັດ ເອົາຮ່າງກາຍແທ່ງໄວໜຸ່ມມາທົດສອບກັບຄວາມຮຸນແຮງຂັ້ນສຸດຍອດ ເພື່ອຊຸບຫລໍ່ຫົວໃຈຂອງຕົນເອງໃຫ້ເຂັ້ມແຂງ ສົມກັບວ່າ ໄດ້ຮັບນາມມະຍົດຈາກພັກ "ຊາວໜຸ່ມເປັນແຂນຂວາຂອງພັກ! "ທີ່ແທ້ຈິງແທ້!

ທົ່ວທົ່ວພູ ເຖິງຈະຖືກຖະຫລົ່ມບໍ່ມີວັນເວັ້ນວ່າງ ແຕ່ທີ່ສັນພູທາງກໍ້ ທົ່ງໄຫຫີນກໍ່ຍັງມີດອກຫຍ້າຈູມຈໍ່ບານເບ່ງສີຊອນແຊມຢູ່ຕາມຂວາຍຂອງລະເບີດລູກປືນຢູ່ເປັນບອນ.

ຂ້ອຍນັ່ງຢ່ອງຢື້ລົງເດັດເອົາດອກໄມ້ຫລ້ຳນັ້ນດ້ວຍຫົວໃຈພວມມີຄວາມສຸກ ເມື່ອເອົາມືເດັດດອກໄມ້ດອກຫຍ້າ ສ່ວນສາຍຕາ ເນິ່ນມອງ ໄປຍັງທ້ອງຟ້າໄກໆ ເປັນທ້ອງຟ້າຂອງປິຕຸພູມທີ່ກວ້າງໃຫຍ່ໄພສານ ທັງສວຍງາມ " ອີກສອງວັນຂ້າງໜ້ານີ້ກໍ່ຈະແມ່ນວັນສ້າງຕັ້ງພັກແລ້ວ " ສະເພາະມື້ນີ້ຂ້ອຍຈື່ບໍ່ລືມ ພ້ອມເກັບທ້ອນເອົາດອກໄມ້ທີ່ຖືວ່າງາມທີ່ສຸດຢູ່ບໍລິເວນນີ້ ທັງໆ ທີ່ມື້ນັ້ນລູກປືນໃຫຍ່ ມີບົນໃຫຍ່ນ້ອຍທັງບົນໄຟຟິດພັງເພົາຜານທຳລາຍຕະຫລອດທັງວັນທັງຄືນ ແຕ່ດອກໄມ້ຊູມນີ້ກໍ່ຍັງຈູມຈໍ່ເບ່ງບານຂຶ້ນມາໄດ້ "ເມື່ອມື້ນັ້ນ ມາເຖິງຂ້ອຍຈະເອົາດອກໄມ້ນີ້ເປັນຂອງຂວັນມອບໃຫ້ແດ່ພັກ !" ຂ້ອຍຄິດຫຸ່ນໆ ຢູ່ໃນໃຈ.

ສາຍລົມໂຊຍພັດມາລູບເລຍໄປຕາມພູຜາປ່າດົງທີ່ຈອມພູ ສະໜາມຮົບບ່ອນທີ່ຂ້ອຍພວມຢືນຢູ່ ເມື່ອທີ່ມື້ນີ້ຄືປິຕຸພູມຂອງຂ້ອຍ ແລະ ດຽວນີ້ ທີ່ນີ້ມີທັງຄວາມດຸເດືອດ ມີທັງຊີວິດ ແລະ ດອກໄມ້ຢ່າງໜ້າປະຫລາດໃຈ.

ແນມໄປເຫັນຂອບຟ້າທາງເບື້ອງຕາເວັນຕົກມີສີແດງອ່ອນໆ ກະຈາຍສີແຊກຊອນຢູ່ກັບກຸ່ມເມກເຜື້ອ ອົດນຶກເຖິງຄຳເວົ້າຂອງພໍ່ລຸງທອງດີບໍ່ໄດ້.

" ຫລານຈົ່ງຈື່ເອົາໄວ້ ເມື່ອແນມໄປທາງທິດຕາເວັນຕົກຕອນຄ່ອຍຄ່ຳເຫັນຂອບຟ້າມີສີແດງອ່ອນໆ ເປັນການບອກໃຫ້ຮູ້ວ່າ ມື້ອື່ນເຊົ້າ ອາກາດຈະ

ໜາວເຢັນຂຶ້ນຕື່ມ "

ພໍຂ້ອຍລຸກຂຶ້ນຢືນ ໃນຮັ້ງມືຂອງຂ້ອຍມີຊຸມດອກໄມ້ທີ່ຂ້ອຍຖືວ່າ ພິເສດເຫລືອຫລາຍ ຈຶ່ງຫອບເອົາໄວ້ດ້ວຍໃຈຮັກແພງຖະໜອມ.

ກໍພໍດີມີສຽງປືນດັງຂຶ້ນສະນັ່ນຫວັ່ນໄຫວໄປທົ່ວທ້ອພູ.

ດ້ວຍສັນຊາດຕະຍານຂອງຄົນທີ່ຊິນເຄີຍກັບມັນມາຫລາຍປີແລ້ວ " ນັ້ນຄືສັດຕູໄດ້ເປີດສາກບຸກຂຶ້ນປ້ອມພູພວກເຮົາແລ້ວ "

ຂ້ອຍແລະບັນດາສະຫາຍນັກຮົບປະຕິວັດທີ່ໜຸ່ມນ້ອຍທຸກຄົນໂດດເຂົ້າຊຸມຄອງປະຈຳໜ້າທີ່ຂອງຄົນທີ່ເຮັດວຽກສັງຫານສັດຕູຂອງປະເທດຊາດ.

" ບັນດາສະຫາຍ ! ຈົ່ງດັບສູນສັດຕູໃຫ້ໄດ້ຫລາຍໆ ເພື່ອເອົາ ເປັນຂອງຂວັນຂໍານັບຮັບຕ້ອນວັນສ້າງຕັ້ງພັກທີ່ຈະມາເຖິງນີ້ ! "

ທຸກຄົນເຫັນດີເຫັນພ້ອມກັບຄຳປະກາດກ້ອງຂອງສະຫາຍຫົວໜ້າ ກອງຮ້ອຍ ແລ້ວແນບທ້າຍປືນໄວ້ກັບເອິກ ເພ່ງເລງສາຍຕາແຫ່ງຄວາມ ຄຽດແຄ້ນໄປໃສ່ສູນປືນທີ່ປາກກະບອກປືນເຊິ່ງພວມຄ່ອຍໆ ເລື່ອນໄປ ຕາມແຕ່ລະບາດການທີ່ກອາເລື້ອຍໆ ຄືບຄານຂຶ້ນມາຢ່າງໂຈນຈອບລອບກັດ ຫວັງລຸບກິນເຫຍື່ອ.

ຂ້ອຍເກືອບບໍ່ເຊື່ອສາຍຕາຂອງຕົນເອງວ່າ ສັດຕູໄດ້ບຸກຂຶ້ນມາຫລາຍແທ້ ທັງເປັນການບຸກຂຶ້ນມາແບບໃໝ່ທີ່ຫລາຍ ແລະ ແປກຕາມທຳມະດາກ່ອນການບຸກຂຶ້ນມາ ກອງປືນໃຫຍ່ຂອງສັດຕູຢູ່ເມືອງສຸຍຈະຍິງປືນ ໑໐໕ ມມ ໑໕໐ ມມ ມາຖະຫລົ່ມປ້ອມພູພວກຂ້ອຍຢ່າງນ້ອຍ ໑໕໐ ລູກ ແລ້ວຈາກນັ້ນກໍແມ່ນຍົນ AT 28 ຖະຫລົ່ມດ້ວຍບົມມາປານລວກລານລຸກໄໝ້ ເພື່ອໃຫ້ທຸກຊີວິດນັບທັງຄົນ ສັດໃຫຍ່ນ້ອຍ ນັບທັງຕົວປວກຕົວມົດຖືກເຜົາຜານ ແລ້ວກໍແມ່ນຍົນໄອພົ່ນ F-104 -F-105 ຖະຫລົ່ມອີກເພື່ອຄວາມແນ່ໃຈວ່າ ຊີວິດນັກຮົບປະຕິວັດຈະທົນທານພຽງໃດ ? ຈຶ່ງມ້ວນທ້າຍດ້ວຍຍົນຍຸດທະສາດ B 52 ຖະຫລົ່ມບິນລົງມາເປັນເວີງກວາງໜາກະດານປານວ່າໃຫ້ລຸ່ມຟ້າປັດຕະ

ພີ່ຢູ່ທີ່ນີ້ຈີໃຫ້ລຸລົ້ງເປັນທະເລ ແລ້ວຈາກນັ້ນທະຫານສັດຕູຈຶ່ງລຸລົ່ງທົ່ງເທ ກັນຂຶ້ນມາ.

ແຕ່ ເທື່ອນີ້ ພວກເຮົາພຽງແຕ່ຍິງປືນ ໑໐໕ ມມ ມາໃສ່ ມີ ລູກແລ້ວກໍລຸລົ່ງທົ່ງເທກັນຂຶ້ນມາ ເຫມືອນກັບວ່າ ມີ ລູກ ໑໐໕ ມມ ນັ້ນເປັນການຕີລັ້ງຄ້ອງເຕືອນໃຫ້ລຸຍົກທຸກໍອິດຂອງການຕໍ່ສູ້ຢູ່ເທິງສັ້ງວຽນປະຫານທີ່ມີດິນເພື່ອຝັງສົບເປັນກໍາມະການໃຫ້.

ຈຶ່ງຖືວ່າເປັນການບຸກຂຶ້ນມາຂອງພວກເຮົາແບບໃຫມ່ ແລະ ແປກກວ່າທຸກເທື່ອທີ່ເຄີຍມີກະຕິກາຢູ່ແດນປະຫານປະຕິບັດກັນມາຫລາຍປີແລ້ວນັ້ນ.

" ຍິງ !... "

ທ່າງຈາກປາກກະບອກປືນພຽງ ໑໕ ແມັດ ສຽງຮ້ອງອອກຄໍາສັ່ງ ດັ່ງສຽງຟ້າຮ້ອງທ່ານກາງຄວາມມືດມິດູໄດດັງກ້ອງກັງວານແທນໃຫສຽງຄອງສຽງກອງຕະລຸມບອນຂອງສະຫາຍທົວຫນາກອງຮ້ອຍ.

ປາກກະບອກປືນແຫ່ງຄວາມຄຽດແຄ້ນນັບເກືອບຮ້ອຍ . ຄາຍລູກກະສູນອອກໄປສັງຫານສັດຕູຂອງຊາດຕາຍລົ້ມທ່າວແຕກແຖວທັບ ລະນຶງລະນາດເຫມືອນກັບນັກມວຍຖືກນອັກຈົນຕັ້ງຕົວບໍ່ຕິດ ແລະ ບໍ່ມີທາງສູ້.

ດ້ວຍຄວາມຄຽດບວກລົບກັບຄວາມດີໃຈຈົນລືມຕົວ ຂອຍລູກຂຶ້ນ ປືນກໍປືນ AK ໄວ້ໃນມືແຫນ້ນ ສາດລູກກະສູນໃສ່ສັດຕູຢ່າງບໍ່ຮູ້ຈັກເຖິງຄວາມຢານກົວຕົວຈະຕາຍແຕ່ຢ່າງໃດ.

" ຕ້ອງຂ້າ! ຕ້ອງຂ້າສັດຕູໃຫ້ໄດ້ຫລາຍໆ ເພື່ອເປັນຂອງຂວັນແດ່ພັກ"

ການສູ້ຮົບແຕ່ວັນທີ ໕໐ ເດືອນ ມີ ແກ່ຍາວມາຮອດວັນທີ ໕໑ ເດືອນມີ ຫມົດມື້ຫມົດຄືນ ເຫມືອນກັບວ່າ ພວກສັດຕູຈົ່ງໃຈຢາກທໍາລາຍ ບັນຍາກາດອັນສໍາຄັນໃນວັນສຸດທີ່ມີຄວາມຫມາຍຂອງພວກເຮົາ ພວກເຮົາຈຶ່ງບຸກຕີ ພວກເຮົາຢູ່ພູກູດຕະຫລອດທັງສອງມື້ສອງຄືນ.

ເຊົ້າຕູ່ຂອງວັນທີ ໔໔ ເດືອນ ໓ ປະກົດມີຍົນ AT 28 ສາມລຳ ມາບິນຢູ່ເທິງປອມພູ.

ມັນສັກຫົວລົງຫລາຍເທື່ອ ແຕ່ກໍຖິ້ມບົມລົງບໍ່ໄດ້ ເພາະສະຫນາມຮົບໄດ້ກາຍເປັນຮູບແບບປະສານແຂວຫວີປະຊິດຕົວ ແລວກໍປະທັດປະທານກັນ ດວຍດາບກະບີ່ປາຍປືນ.

ພໍຮອດຕອນທ່ຽງເວລາ ໑໑ ໂມງກວ່າໆ ພວກສັດຕູຈຶ່ງແຕກພ່າຍ ປະຊາກສົບເດຍລະດາດເປັນຂອນໄຮ່ ເຫມືອນກັບຍອມຮັບຕໍ່ການປະລາໄຊ ແລະຮູເຖິງຄວາມເຂັ້ມແຂງແຮງກາຂອງນັກຮົບປະຕິວັດແລວ.

ພວກຂ້ອຍພາກັນຫລົບລົງຊຸມລີ້ໄພໃຈກາງຫນ່ວຍພູ ໂສ້ງເສື້ອ ຫນ້າຕາມອມແມມປຽກເປື້ອນ ມີທັງກິ່ນຄາວເລືອດທີ່ສຽບກະບີ່ໃສ່ສັດຕູແລວເລືອດ ຈີດອອກມາໃສ່ ມີທັງກິ່ນອາຍຂອງຫນໍ້ເກຍ.

ແຕ່ທຸກຄົນກໍສະຫງົບນິ້ງ ເຫມືອນກັບວ່າບໍ່ມີຫຍັງເກີດຂຶ້ນ ທັງໆ ທີ່ຫາກໍກັບມາຈາກສັງວຽນປະທານສົດໆ ຮອນໆ.

ຢູ່ຕໍ່ຫນາຕິດກັບບ່ອນສຸດຂອງຊຸມຫລົບໄພມີຮູບທ່ານກາກມາກ ມີຮູບຂອງວາລາດີເມຍອີລິດເລນິນຕັ້ງຢູ່ ເຫມືອນກັບວ່າພວກເພິ່ນມີວິນຍານ ພວມຈັບຈ້ອງສາຍຕາເບິ່ງພວກຂອຍທັງຍິ້ມໃຫ້ພວກຂອຍ ແລະ ຮັບຮູ້ຕໍ່ການກະທຳ ອັນຖືກຕອງເປັນທຳຂອງພວກຂອຍ.

" ລັດທິມາກ - ເລນິນ ທີ່ຊະນະເລີດຫມັ້ນຍືນ ! "

" ພັກປະຊາຊົນປະຕິວັດລາວ ຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະຂອງການປະຕິວັດລາວ ຫມັ້ນຍືນ ! "

ເປັນສອງຄຳຂວັນທີ່ພວກຂ້ອຍຂຽນ ຂຽນດ້ວຍນຶກສີແດງ ປະສົມກັບເລືອດສີແດງຂອງພວກຂອຍ ເພາະນ້ຳສີຫມຶດ ຈຶ່ງພາກັນເອົາເລືອດ ທີ່ໄຫລອອກມາຈາກຫມາກຫົວໃຈບໍລິສຸດຜຸດຜ່ອງຕໍ່ພັກຕໍ່ການປະຕິວັດອອກມາຂຽນ.

ທຸກສະຫາຍຈົດລົງເຈ້ຍຂາວບັນທຶກວ່າ:

- ເຮົາຂ້າສັດຕູຕາຍ ໕ ຄົນ
- ເຮົາຂ້າສັດຕູຕາຍ ໑໔ ຄົນ
- ເຮົາຂາສັດຕູຕາຍ ໗ ຄົນ.
- ...

ແລ້ວເອົາລວມກັນສົ່ງໃຫ້ຫົວໜ້າກອງຮ້ອຍເພື່ອປະກາດຢູ່ພິທີ ຂໍານັບຮັບຕ້ອນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວໃນມື້ນີ້.

ຢູ່ເທິງຈອມພູຍັງມີສຽງປືນໃຫຍ່ດັງສະນັ່ນຫວັ່ນໄຫວຢູ່.

ຢູ່ເທິງຫນ່ານຟ້າບ່ອນຈອມພູກູດຍັງມີການແຜດສຽງຂອງໂຈມ ອາກາດ ຢູ່.

ແຕ່ຢູ່ພາຍໃນຂຸມຫລົບໄພທີ່ໃຈກາງພູກູດໄດ້ມີພິທີລະນຶກວັນສ້າງຕັ້ງພັກ.

ທຸກຄືນທຸກສະຫາຍມີຮອຍຍິ້ມຢ່າງພາກພູມຢູ່ຕໍ່ຫນ້າຮູບທ່ານ ກາກມາກ ແລະ ຮູບທ່ານເລນິນ.

ຂອຍຫອບເອົາດອກໄມ້ທີ່ເກັບໄດ້ແຕ່ມື້ກ່ອນ ນຳເອົາມາແຊ່ນ້ຳໄວ້ ຢູ່ໃນຂຸມຫລົບໄພຈຶ່ງສົດຊື່ນຢູ່ຄືເກົ່າ ແຕ່ເບິ່ງຄືວ່າແຮງບານງາມກວ່າມື້ທີ່ ພວມເກັບພຸນອີກ.

ແລ້ວຂ້ອຍກັບຫລາຍສະຫາຍທີ່ຖືກຄັດເລືອກເປັນຕົວແທນໃຫ້ນັກຮົບ ທີ່ກ້າຫານທັງຫລາຍຂຶ້ນໄປຢືນຢູ່ຕໍ່ຫນ້າພິທີ.

ໃນມືຂອງຂອຍມີດອກໄມ້ ຢືນຢູ່ໃກ້ໆກັບຮູບທ່ານກາກມາກ-ເລນິນແລະ ພືນທຸງພັກສີແດງເດັ່ນສະຫງ່າ ຂອຍຈຶ່ງຊູທານອອກມາແຮງໆ ວ່າ:

" ຂໍມອບດອກໄມ້ນີ້ໃຫ້ແກ່ພັກ "



ທິວາກອນ

ທິວາກອນ ເກີດປີ ໑໙໕໘

ເລີ່ມສົນໃຈການຂີດຂຽນເລື່ອງສັ້ນ ແຕ່ອາຍຸ ໑໔ ປີ ເປັນຕົ້ນມາ ໂດຍໄດ້ຮັບແຮງຊຸກຍູ້ໃນເບື້ອງຕົ້ນຈາກ ຄວາມມັກພາສາລາວ ໃນຂັ້ນ ຕໍ່ມາ ຍອມມີຄວາມຮັກໃນອາຊີບຄູຢູ່ແລ້ວ ເມື່ອເຂົ້າໃຈເຖິງ ຄວາມສາມາດອັນແຫຼມ ຄົມ ຂອງວັນນະຄະດີ ໃນການສຶກສາອົບຮົມຄົນ ແລະ ສ່ອງແສງສັງຄົມ ກໍ່ຍິ່ງ ເພີ່ມຄວາມສົນໃຈຕື່ມອີກ.

ໃນປັ້ນກວດສອບ ທີ່ຈັດຂຶ້ນໂດຍ ວາລະສານ " ວັນນະສິນ" ເພື່ອ ຕ້ອນຮັບວັນສ້າງຕັ້ງພັກ ປະຊາຊົນປະຕິວັດລາວ ແລະ ວັນສະຖາປະນາ ສ.ປ ປ.ລ. ຄົບຮອບ ໑໐ ປີ ນາງໄດ້ສົ່ງເລື່ອງສັ້ນເຂົ້າຮ່ວມນຳສອງເລື່ອງ ຄື : ຮູບວັນແຕ່ງງານ ( ໄດ້ຮັບຮາງວັນທີ ໔ ) ແລະ ເລື່ອງຈິ່ງພະຍາຍາມເຂົ້າ ໃຈ (ໄດ້ຮັບຮາງວັນຊົມເຊີຍ ).

ທິວາກອນ ມີຊື່ຈິງວ່າ: ດາລາວັນ ພອນແກ້ວ ຮຽນຈົບວິຊາ ຟີຊິກ ສາດ ຈາກມະຫາວິທະຍາໄລ ທີ່ສະຫະພາບໂຊວຽດ ໃນປີ ໑໙໘໓ ປະຈຸບັນ ເປັນອາຈານສອນວິຊາດັ່ງກ່າວທີ່ ມະຫາວິທະຍາໄລສັບພະວິຊາສອງທັນວາ.



# ຈົ່ງພະຍາຍາມ ເຂົ້າໃຈ

● ທິວເກອນ

## ນ້ອຍ ເພື່ອນຮັກ

ນັ້ນ ເຮົາຮັບເອົາຫໍ່ເຄື່ອງອັນໃຫຍ່ດ້ວຍຈິດໃຈເລື່ອນລອຍ. ເຮົາຮູ້ດີວ່າ ສິ່ງສຳຄັນໃນຫໍ່ນັ້ນແມ່ນໂສ້ງເສື້ອສີຂຽວໃບໄມ້ຊຶ່ງໃຜໆເຫັນແລ້ວ ກໍເຂົ້າໃຈດີວ່າ ຊຸດຫຍັງ. ສະຫາຍຜູ້ມອບໃຫ້ເຮົາຈັບມືເຮົາແໜ້ນພ້ອມສະແດງ ຄຳຊົມເຊີຍຍົກຍອງນ້ຳໃຈຂອງເຮົາ ເຮົາຈື່ວ່າໄດ້ຕອບເພິ່ນຄືນສອງສາມຄຳ ແຕ່ແມ່ນຄຳໃດນັ້ນເຮົາຈື່ບໍ່ໄດ້... ສະຫາຍນັ້ນຫຍັບໄປຫາຊາຍໜຸ່ມ ຜູ້ຢືນຢູ່ຂ້າງຂວາ ຂອງເຮົາ ແລະ ມອບຫໍ່ເຄື່ອງແບບດຽວກັນຕໍ່ໄປ... ເຮົາຍອມຮັບວ່າເວລານັ້ນຈິດໃຈເຮົາບໍ່ຢູ່ນຳການມອບຮັບນັ້ນປານໃດ... ເຮົາບໍ່ໄດ້ຍິນ ຮອດສຽງຕົບມື ທັ້ງໆ ທີ່ໃນສະໂມສອນມີຜູ້ເຂົ້າຮ່ວມພິທີຕັ້ງຫລາຍຮອຍ. ສາຍຕາຂອງເຮົາໄດ້ລັງໄປຫາໃບໜ້າຂອງແຕ່ລະຄົນ. ສ່ວນຫລາຍແມ່ນ ໃບໜ້າທີ່ຄຸ້ນ ເພາະແມ່ນນັກຮຽນຂອງຊຸດົນພວກເຮົາເອງ ແລະ ພໍ່ແມ່ປະຊາຊົນຈຳນວນໜຶ່ງ. ແຕ່ຜູ້ທີ່ເຮົາ ຮັກແພງສຸດຫົວໃຈ ພັດບໍ່ປະກົດຕົວໃນຝູງຊົນນັ້ນ ...

ນ້ອຍ, ເພື່ອນຍິງຜູ້ໜ້າເອັນດູ. ເພື່ອນຄົງນ້ອຍເນື້ອຕ່ຳໃຈ, ບໍ່ເຂົ້າໃຈເຮົາຈຶ່ງບໍ່ມາຮ່ວມໃນງານອັນສຳຄັນຂອງຊີວິດ, ງານທີ່ລະນຶກ ເຖິງວັນຕັດສິນໃຈເລືອກທາງເດີນຂອງເຮົານີ້ ...

ຈາກນັ້ນ ກໍ່ຜ່ານມາເກືອບອາທິດໜຶ່ງແລ້ວ, ມື້ອື່ນນີ້ ເຮົາພ້ອມດ້ວຍສະຫາຍອີກຫລາຍຄົນ ຈະອອກເດີນທາງຈາກວຽງຈັນໄປສູ່ສະຖານທີ່ ກໍ່ສ້າງຮົ້ວຂອງຊາດແລ້ວ...ບໍ່ຮູ້ວ່າປານໃດ ພວກເຮົາຈະໄດ້ພົບກັນອີກ...

ໃນຄືນສຸດທ້າຍນີ້ ເຮົາບໍ່ສາມາດຈະພັບຕາໃຫ້ຫລັບລົງໄດ້, ເຮົາຄິດໄປຫລາຍອັນພັນແນວ, ຄິດເຫັນບ້ານເກີດ, ຄິດເຫັນພໍ່ແມ່ແລະ ນ້ອງໆ, ຄິດເຫັນໝູ່ເພື່ອນ ແລະ ກໍວົນວຽນມາຄິດຮອດນ້ອຍ. ອາດບໍ່ມີແຕ່ນ້ອຍ ທີ່ບໍ່ເຂົ້າໃຈເຮົາ, ຜູ້ອື່ນບໍ່ເຂົ້າໃຈກໍ່ບໍ່ສຳຄັນ ແຕ່ນ້ອຍຕ້ອງເຂົ້າໃຈ, ເຮົາຕ້ອງການໃຫ້ນ້ອຍເຂົ້າໃຈ...

ເຖິງຈະຈາກໄປໄກແສນໄກ ເຮົາຄົງລືມບໍ່ໄດ້ ບ້ານເກີດພວກເຮົາ, ບ່ອນຈາລຶກ ເຖິງຊີວິດເດັກຂອງພວກເຮົາ ...

ບ້ານພວກເຮົາຕັ້ງຢູ່ແຄມກຳແພງນະຄອນວຽງຈັນ. ເປັນບ້ານທີ່ບໍ່ໃຫຍ່ປານໃດ ແຕ່ມີເຮືອນໜາແໜ້ນສົມຄວນ ລະຫວ່າງແຕ່ລະເຮືອນ ຊຸດົມສົມບູນໄປດ້ວຍຕົ້ນໄມ້ກິນໝາກນາໆຊະນິດ. ສຳລັບເດັກນ້ອຍພວກເຮົາແລ້ວ ບໍ່ມີຍາມໃດພວກເຮົາຈະບໍ່ໄດ້ພາກັນໂຫແລ່ນໄປເກັບໝາກນັ້ນ, ໂຫແລ່ນໄປເກັບໝາກນີ້, ຕົ້ນໝາກໄມ້ໃນໝົດທົ່ວບ້ານແມ່ນຂອງລວມສຳລັບເດັກນ້ອຍ ພວກເຮົາ.

ຢູ່ຕີນບ້ານມີທົ່ງນາອັນກວ້າງຂວາງ. ຍາມຝົນມາ ພວກເຮົາມັກໄປຈັບກະປູ ຫລີ່ບໍ່ ກໍໄລ່ເປັດຫລົ້ນ. ການລົ້ນເກືອກຂີ້ຕົມນັ້ນແຮ່ງເປັນການມ່ວນຊື່ນຊ້ຳ ສຳລັບພວກເຮົາ...

ສິມວັດບ້ານເຮົາງາມຫລາຍ, ຖ້າຄົນທີ່ເດີນທາງຕາມທາງຫລວງຫຼຽວເຂົ້າມາທາງບ້ານເຮົາ ກໍຈະເຫັນຫລັງຄາສິມນີ້ກ່ອນສິ່ງອື່ນ ເພາະມັນຫັງຢູ່ສູງ ທັງມຸງດ້ວຍດິນຂໍສີແດງເຫລື້ອມ ເມື່ອສະທ້ອນກັບແສງແດດ. ແຕ່ສິ່ງທີ່ດຶງດູດໃຈເຮົາກວ່າໝູ່ແມ່ນຮູບປັ້ນ ຂອງນາກສອງໂຕທີ່ຍໍຫົວຢູ່ໃນຂັ້ນໄດຂຶ້ນສິມ. ທຸກໆເທື່ອທີ່ຫລິ້ນຫມາກລີ້ໃນວັດ ເຮົາມັກໄປລີ້ແປະຫົວນາກນັ້ນ ແລະ ແຕ່ລະເທື່ອກໍອົດບໍ່ໄດ້ທີ່ຈະບໍ່ລູບຄຳໄປຕາມຮູບປັ້ນນັ້ນ.

ໄກຈາກບ້ານໄປຫນ້ອຍຫນຶ່ງແມ່ນ ຫ້ວຍນ້ຳເຢັນ. ເວລາພວກເຮົາໄດ້ເຂົ້າເປັນສະມາຊິກເຍົາວະຊົນ ໔ ທັນວາແລ້ວ ພວກເຮົາມັກໄປຕັ້ງຄ້າຍ ຢູ່ແຄມຫ້ວຍນັ້ນ...ນ້ອຍຍັງຈື່ຕົ້ນໄມ້ຂອງພວກເຮົາບໍ່? ວັນປູກຕົ້ນໄມ້ ຕອນພວກເຮົາຢູ່ຫ້ອງ ມ.໑ ພວກເຮົາສອງຄົນ ກັບບັກພອນ ແລະ ບັກສີ ພາກັນຄິດສະຫລອກກອກເຮັດແນວບໍ່ຄືໝູ່. ບໍ່ແມ່ນນ້ອຍບໍ່ອອກຫົວຄິດກ່ອນວ່າ:

- ເຮັດແນວໃດ, ເວລາຕົ້ນໄມ້ ເຮົາໃຫຍ່ຂຶ້ນ ເຮົາຈະຈຳແນກ ຕົ້ນໄມ້ທີ່ເຮົາປູກໄດ້ ?

ບາດແລ້ວ, ພວກເຮົາຕົກລົງເລືອກເອົາເບ້ຍໄມ້ຈຳນວນແປດຕົ້ນ ໄປປູກຢູ່ເຊິ່ງບ່ອນທີ່ຫ້ວຍ ປ່ຽນທິດທາງໄປທິດຕາເວັນຕົກ. ເບ້ຍໄມ້ເຈັດຕົ້ນແມ່ນຕົ້ນໄມ້ຊະນິດບໍ່ສູງປານໃດ ຖ້າທຽບໃສ່ເບ້ຍຕົ້ນທີແປດ. ເອື້ອຍຄູບອກພວກເຮົາວ່າ ຊະນິດຕົ້ນທີ່ແປດນີ້ ຈະສູງຫລາຍ ແລະ ເປືອກຂອງມັນຢາກແດງແດ່ ພວກເຮົາປູກຕົ້ນທີແປດລົງກ່ອນ. ແລ້ວປູກເຈັດຕົ້ນທີ່ເຫລືອຕາມເສັ້ນວົງມົນຊຶ່ງຈຸດໃຈກາງຢູ່ຕົ້ນທີແປດ ແລະ ມີລັດສະຫມີປະມານສອງແມັດ. ນ້ອຍວ່າ ປູກແບບນີ້ ບາດມັນໃຫຍ່ຂຶ້ນ ຈະຄືຕູບອັນສູງມຸງດ້ວຍໃບໄມ້ຂຽວ ອີກຊາວປີຂ້າງຫນ້າ ຖ້າພວກເຮົາກັບມາເບິ່ງ ກໍຈະຈື່ໄດ້ວ່າ ຕົ້ນໄມ້ຊຸມນີ້ແມ່ນພວກເຮົາປູກ ບັກພອນສອຍຕື່ມວ່າ: ໃຜກາຍມາເຫັນກໍຊິງຶດງໍ້ແຫລະເນາະ, ແລະ ໃຜກໍຈະຢາກເຂົ້າມາພັກຜ່ອນກອງຕູບຂຽວນີ້, ມັນຄືຊິຮົ່ມເຢັນດີເນາະ ?

ນ້ອຍຄືຈື່ບໍ່ລືມເທື່ອດີ, ປີກາຍນີ້ ພວກເຮົາຍັງໄປຫລິ້ນຢູ່ແຄມຫ້ວຍ ໃກ້ຕົ້ນໄມ້ແປດຕົ້ນນັ້ນ. ພວກເຮົາພາກັນນັ່ງຕຶກເບັດ: ກໍ່ບໍ່ມີໄດ້ຫຍັງດອກ ເພາະເນົາລົມກັນ. ພວກເຮົາໂສກັນເລື່ອງອາຊີບໃນອະນາຄົດ.

ບັກສີນອນຢຽດລົງກັບຫຍ້າ, ຕາຫລຽວຂຶ້ນໄປຫາກ້ອນຂີ້ເຟື້ອສີຂາວ ທີ່ພວນໄຫລລ່ອງໄປຕາມທ້ອງຟ້າສີຟ້າອ່ອນໆ. ມັນເວົ້າຂຶ້ນວ່າ :

- ເຮົານີ້ຢາກເປັນນັກອຸຕຸນິຍົມ, ເຮົາຈິໄດ້ຮູ້ກ່ອນໝູ່ວ່າ ຝົນຈິຕົກຫລືແດດຈິອອກ.

ພວກໝູ່ພາກັນຫົວຂວັນແລ້ວເຍີ້ຍ :

- ແລ້ວໂຕຈິຮູ້ກ່ອນໝູ່ວ່າ ຄວນຈິຫອບຄັນຮົ່ມອອກນອກເຮືອນ ຫລືບໍ່ຈັ້ນເບາະ ?

ບັກສີເຮັດສີໜ້າບໍ່ພໍໃຈໜ້ອຍໜຶ່ງ ແລ້ວຕອບຄືນວ່າ :

- ບະ, ພວກໂຕບໍ່ຮູ້ຄຸນປະໂຫຍດຂອງພວກອຸຕຸນິຍົມ ອຸຕຸກະສາດເບາະ, ຈິເຮັດນາປູກເຂົ້າ, ຈິເຮັດເຂື່ອນນ້ຳຕົກ ກໍຕ້ອງຖາມອຸຕຸຕວ່າ.

ບັກພອນເວົ້າເສີມວ່າ :

- ດີລະ, ບາດເຮົາຈິສ້າງເຂື່ອນ ເຮົາຈິໄປຖາມໂຕເດີ້, ເຮົານີ້ຈິເປັນນັກກໍ່ສ້າງເຂື່ອນໄຟຟ້າ, ເຮົາຈິເຮັດໃຫ້ໝົດທຸກໆບ້ານ ບໍ່ວ່າຢູ່ທົ່ງພຽງຫລືພູດອຍໃນປະເທດລາວ ມີຮຸ່ງແຈ້ງໄປດ້ວຍໄຟຟ້າ.

- ເຮົາກໍ່ຈິໄດ້ປຶກສາຫາລືສືກັບໄດ້, ນ້ອຍເວົ້າຂຶ້ນ, ເຮົາຢາກເປັນນັກວິຊາການກະເສດ, ເຮົາຈິຄົ້ນຄວ້າໃຫ້ໄດ້ພັນເຂົ້າທີ່ໃຫ້ຜົນປູກຈັກສິບໂຕນຕໍ່ເຮັກຕາເບິ່ງ.

- ໂຫ! ໃຜໆ ກໍເຮັດຕາຕື່ ແລ້ວກໍພາກັນຫົວ.

ສ່ວນເຮົາເອງ ເຫັນໝູ່ເວົ້າໝົດແລ້ວກໍຟ້າວສະເຫນີຄວາມຝັນ ຂອງຕົນ :

- ເຮົາຢາກເປັນນັກແຕ້ມ, ນັກຄວັດ, ເຮົາຂີດວັດຮູບກວາງ ຮູບ ຟານ ໃຫ້ຄືໂຕຈິງແທ້ໆ ແລ້ວເອົາໄປຕັ້ງໃນສວນຫລິ້ນຂອງພວກນ້ອງອະນຸບານ.

- ຫນໍ່ນີ້ຈັ່ງແມ່ນບໍ່ໄປຕ່າງຫມູ່, ຫນໍ່ສິເວົ້າທັງແກວ່ງຫົວ.

- ກໍດີຕ່ວາ, ນ້ອຍສະຫນັບສະຫນູນ, ບ້ານເຮົາກໍຊິມີຊີວິດຊີວາ ວົດ ວານຂຶ້ນຕັ້ງຫລາຍເທົ່າ. ເວົ້າແທ້ ວຽກໃດເຮົາກໍເຫັນດີ ນອກຈາກເປັນທະ ຫານແນວດຽວ.

ຕອນນັ້ນ, ພວກເຮົາຜູ້ຊາຍ ກໍບໍ່ໄດ້ສົນໃຈນຳປະໂຫຍກສຸດທ້າຍ ຂອງ ນ້ອຍປານໃດ. ພວກເຮົາສືບຕໍ່ລົມກັນເລື່ອງອື່ນ.

ແຕ່ວ່າ ຕະຫລອດປີຮຽນຫ້ອງ ອ.ມ ແນວຄິດຂອງເຮົາ ກ່ຽວກັບອະ ນາຄົດ ຄ່ອຍປ່ຽນແປງໄປເທື່ອນ້ອຍ. ແລະ ກໍຍ້ອນປະໂຫຍກສຸດທ້າຍ ຂອງ ນ້ອຍນັ້ນເອງ ທີ່ເຮັດໃຫ້ເຮົາບໍ່ກ້າປຶກສາຫາລືດັ່ງເຄີຍເຮັດຜ່ານມາ. ວັນເດືອນ ຜ່ານໄປ ແຮງເຮັດໃຫ້ເຮົາຍຶດຫມັ້ນໃນແນວຄິດໃຫມ່ຂອງເຮົາ. ເຮົາບໍ່ຈື່ ຄັກ ວ່າ ມັນເລີ່ມຕົ້ນຈາກອັນໃດ. ຄົງຈະແມ່ນເລີ່ມຕົ້ນຈາກມື້ໄປຢ້ຽມຢາມຫໍວາງສະ ແດງ ມູນເຊື້ອ ເພາະວ່າຫລັງຈາກນັ້ນ ຮູບທີ່ສ້າງຄວາມສະເທືອນໃຈ ແກ່ເຮົາ ຫລາຍກວ່າຫມູ່ໄດ້ຕິດຕາມເຮົາໄປຕະຫລອດເວລາ ...

ຮູບດິນແດນຊຽງຂວາງ ທີ່ເຕັມແຕ່ຂຸມລະເບີດ ທີ່ສັບຫວ່າງກັບຕົ້ນໄມ້ທີ່ ດຳຄືຖ່ານບໍ່ມີກິ່ງໃບ - ຮູບວັດວາອາຮາມທີ່ບໍ່ມີຫລັງຄາ, ຖ້າບໍ່ເຫລືອ ຮູບປັ້ນ ຂອງພະແຂນຂາດນັ້ນ ຄົງບໍ່ມີໃຜຮູ້ວ່າ ນະທີ່ນັ້ນເຄີຍມີວັດ...

ນ້ອຍຄົງສັງເກດວ່າ ໄລຍະຫລັງນີ້ ເຮົາບໍ່ມັກປາກລົມ ນ້ອຍເຄີຍຖາມ ວ່າ :

- ໂຕເປັນຫຍັງ, ອ່ານຫນັງສືພິມບາດໃດ ຄືອ່າຖອນໃຈໃຫຍ່ ບາດ ນັ້ນ ?

ນ້ອຍ, ຕອນນັ້ນເຮົາບໍ່ກ້າຕອບ, ບໍກ້າເວົ້າຄວາມຈິງສູ່ນ້ອຍ, ເພາະເຮົາຮູ້ດີວ່າ ນ້ອຍຈະບໍ່ເຫັນພ້ອມນຳ ແລະ ເຮົາເອງກໍບໍ່ທັນຮູ້ຈະ ຍົກເຫດຜົນອັນໃດພໍໂນ້ມອຽງຈິດໃຈນ້ອຍໄດ.

ຈົນຈະຮອດມື້ສຳຄັນ ຍັງອີກມື້ດຽວ ເຮົາຈຶ່ງຕັດສິນໃຈບອກກັບນ້ອຍ ເຮົາສະໝັກໄປເປັນຮົ້ວຂອງຊາດ.

ນ້ອຍຕົກໃຈຫລາຍຈົນປາກບໍ່ອອກ ແລ້ວແລ່ນໜີຈາກເຮົາໄປ. ຈົນຮອດດຽວນີ້ເຮົາບໍ່ເຫັນນ້ອຍອີກ.

ນ້ອຍເອີ້ຍ, ເຮັດແນວໃດ ນ້ອຍຈະເຂົ້າໃຈເຮົາ. ຂ່າວຄາວກ່ຽວກັບໂທດກຳຂອງພວກບາສົງຄາມຕົ້ມອູ້ນຊົນຊາວໂລກ ແຕ່ລະມື້ລະວັນ ໄດ້ມາສຽບແທງຫົວອົກຂອງເຮົາ ເຮັດໃຫ້ແຄ້ນເຄືອງຢ່າງບໍ່ມີວັນຫາຍ. ແລ້ວຄວາມແຄ້ນເຄືອງນີ້ ໄດ້ກຳເລີບຂຶ້ນກະທັນຫັນ ກາຍເປັນຄວາມເຈັບປວດຈົນເຖິງ ຂັ້ນຈະລະເບີດ ເມື່ອຮູ້ຂ່າວວ່າ ໂທດກຳນັ້ນກຳລັງປະທຸຂຶ້ນຢູ່ກະໂຕເວີງບ້ານ ຂອງຕົນເອງ ຈາກສີມືຂອງພວກປະຕິການພັດຖິ່ນ ແລະ ຕາງດ້າວ.

ແຕ່ລະຄືນ ຮູບແຜ່ນນັ້ນ ຂອງດິນແດນຊຽງຂວາງຈະວົນວຽນ ໃນຫ້ວງນຶກຂອງເຮົາ... ຖ້າບ້ານເຮົາຕົກໃນສະພາບຄືຮູບນັ້ນ, ຮູບນາກສອງໂຕນັ້ນຈະກາຍເປັນເສດຫີນອັນດ່າງດຳ, ຕົ້ນໄມ້ແປດຕົ້ນຂອງພວກເຮົາຈະເຫລືອແຕ່ຕໍ ພວກນ້ອງພວກຫລານເຮົາຈະບໍ່ໄດ້ແລ່ນຫລິ້ນຫ່ອນຊື່ນຄືພວກເຮົາ...

ຖ້າພວກບ້າເລືອດ ບ້າສົງຄາມ ປຽບຢ່ຳເຂົ້າມາໃນດິນແດນລາວ , ບັກສີ ກໍຈະບໍ່ໄດ້ມີໂອກາດຄົ້ນຄວ້າເລື່ອງຟ້າຝົນ ເພາະຟ້າຈະມືດດຳໄປດ້ວຍຄວັນໄໝ້ຂອງສົງຄາມ... ບັກພອນ ກໍຈະບໍ່ໄດ້ສ້າງເຂື່ອນຂອງມັນ, ຄົງຈະ

ໄດ້ສ້າງແຕ່ຂຸມຫລົບໄພ... ທົ່ງນາ ບ່ອນນ້ອຍຈະເຮັດວຽກ ກໍຈະເຕັມແຕ່ຂຸມລະເບີດນ້ອຍຈະບໍ່ໄດ້ທົດລອງພັນເຂົ້າປູກສົບໂຕນຂອງນ້ອຍ ...

ນ້ອຍຈຶ່ງພະຍາຍາມເຂົ້າໃຈ, ເຮົາຕັດສິນໃຈໄປເປັນທະຫານ ບໍ່ແມ່ນຕັ້ງແກ້ງເຮັດຂັດໃຈນ້ອຍ, ບໍ່ແມ່ນວ່າ ບໍ່ຮັກນ້ອຍ, ແຕ່ກົງກັນຂ້າມ ... ເຮົາຮັກນ້ອຍສຸດຫົວໃຈ, ເຮົາຮັກບັກສີ, ຮັກບັກພອນ, ຮັກພໍ່ແມ່, ນ້ອງໆ ແລະ ຮັກຫມົດປະຊາຊົນລາວ... ເຮົາຮັກຫມົດທຸກຄົນ ສະນັ້ນ ເຮົາຈຶ່ງຢາກໃຫ້ຫມົດທຸກຄົນຢູ່ຫ່າງທຳນາຫາກິນຢ່າງມີຄວາມສຸກ, ເຮົາຈຶ່ງຢາກໃຫ້ນ້ອຍ, ບັກສີ, ບັກພອນ ໄດ້ປະກອບອາຊີບທີ່ແຕ່ລະຄົນ ໄຝ່ຝັນ, ຢາກໃຫ້ເດັກນ້ອຍ ທີ່ເກີດໃຫມ່ໃຫຍ່ລຸນ ບໍ່ໄດ້ຍິນຄຳວ່າສົງຄາມ ຕະຫລອດຊີວິດຂອງພວກເຂົາ.

ນ້ອຍ! ໂພດຈຶ່ງເຂົ້າໃຈເຮົາ. ຈົ່ງຄິດເສຽວ່າ ເຮົາຈາກເພື່ອນ ໄປພຽງຮ່າງກາຍ ຈິດໃຈເຮົາຍັງຄຽງຄູ່ກັບເພື່ອນຕະຫລອດເວລາ, ຍັງຢູ່ເປັນກຳລັງໃຈໃຫ້ນ້ອຍຮ່ຳຮຽນເອົາອາຊີບທີ່ໄຝ່ຝັນໄດ້ສຳເລັດ.

ເວລານ້ອຍຮຽນຈົບແລ້ວ ລົງສູ່ວຽກງານ ເວລານ້ອຍໄດ້ຍ່າງຕາມທົ່ງນາຮາບພຽງ, ເວລານ້ອຍໄດ້ຍ່າງໃຕ້ທ້ອງຟ້າທີ່ເສາະໃສ, ນ້ອຍຈົ່ງຄິດຮອດເພື່ອນຜູ້ຫນຶ່ງທີ່ປະຕິບັດຫນ້າທີ່ປ້ອງກັນຊາດຕາມຊາຍແດນດອຍ...

ບໍ່ຮູ້ວ່າ ມື້ໃດ ພວກເຮົາຈະໄດ້ພົບກັນອີກ ແຕ່ເຮົາເຊື່ອຫມັ້ນວ່າ ຖ້າເຮົາພ້ອມດ້ວຍເພື່ອນຮ່ວມຮົບທັງຫມົດຕັ້ງຫນ້າ ຕໍ່ຫນ້າທີ່ຂອງຕົນຢ່າງເຂັ້ມງວດ ຮັບປະກັນສັນຕິພາບໃຫ້ປະເທດໄດ້ຢ່າງສົມບູນ ແລະ ຖ້ານ້ອຍພ້ອມດ້ວຍເພື່ອນເພື່ອນ ທາງນີ້ ຕັ້ງຫນ້າໃສ່ວຽກງານຂອງຕົນຢ່າງເອົາຈິງເອົາຈັງ, ສຸມທຸກ

ຈົ່ງພະຍາຍາມເຂົ້າໃຈ

ກຳລັງເຮັດໃຫ້ເສດຖະກິດປະເທດເຮົາເຂັ້ມແຂງຂຶ້ນໂດຍໄວ...ແນ່ນອນ ມື້ນັ້ນ, ມື້ພວກເຮົາຈະພົບກັນ ແມ່ນຢູ່ບໍ່ໄກ.

ຫວັງຢ່າງຍິ່ງວ່າ ເພື່ອນຄົງເຂົ້າໃຈເຮົາ ແລະ ຈະເປັນກຳລັງໃຈໃຫ້ແກ່ເຮົາຕະຫລອດໄປ .

ດ້ວຍຄວາມຮັກ ແລະ ເປັນຫ່ວງ
ສີວັນ



ອຸທິນ ບຸນຍາວົງ

ອຸທິນ ບຸນຍາວົງ ເກີດເມື່ອປີ ໑໙໔໔ .

ຮຽນຈົບຊັ້ນມັດທະຍົມປາຍ (ຊຸດິນ) ຂອງວິທະຍາໄລວຽງຈັນ ແລ້ວ ກໍອອກ (໑໙໖໑) ເພື່ອຫາປະສົບການຊີວິດໂດຍການເຮັດວຽກຫລາຍ ຢ່າງ ເພື່ອລ້ຽງຊີບ, ຂະນະດຽວກັນ ກໍຂຽນເລື່ອງສັ້ນໄປນຳ.

ເລື່ອງສັ້ນຂອງເຂົາພິມລົງໃນວາລະສານຕ່າງໆ ແລະ ໃນປຶ້ມ ໂຮມເລື່ອງສັ້ນຮ່ວມກັບນັກຂຽນອື່ນໆ ຫລາຍຫົວ.

ເລື່ອງສັ້ນ <u>ຍິ້ມເປັ້ນ</u> ໄດ້ຮັບການແປເປັນພາສາລັດເຊຍ, ຫວຽດນາມ ແລະ ໄທ, ໂຮມເລື່ອງສັ້ນ <u>ປາຄໍໂລພາ</u> <u>ແລະ ສຽງຈາກທົ່ງໄຫຫີນ</u> ກໍໄດ້ ຮັບການແປເປັນພາສາໄທ.

ສຽງຈາກທົ່ງໄຫຫີນ ເປັນເລື່ອງສັ້ນ ທີ່ດຶງດູດຄວາມສົນໃຈຂອງຜູ້ອ່ານ ຢ່າງຫລວງຫລາຍ. ນິຊາວອາເມລິກາ ຂໍອະນຸຍາດນຳທາງການແລວໄປຊອກ ຫາ ໄມແດງ ທີ່ທົ່ງໄຫຫີນ. ເຂົາບໍ່ພົບໄມແດງ ຕົວລະຄອນໃນເລື່ອງ ແຕ່ໄດ້ ພົບໄມແດງຕົວຈິງຈຳນວນຫລາຍຄົນ ທີ່ພວມປະສົບເຄາະກຳແທ້ໆ ເນື່ອງຈາກ ບົມບີແຜງລິດ. ນີ້ແມ່ນຕົວຢ່າງຂອງການສ່ອງແສງຄວາມເປັນຈິງ ຂອງເລື່ອງ ສັ້ນ ຊຶ່ງຂຽນໂດຍອຸທິນ ບຸນຍາວົງ.

ເລື່ອງສັ້ນ <u>ປະກອບສ່ວນ</u> ສະທ້ອນເຫດການປະຈຸບັນໄດ້ຢ່າງທັນການ.



# ປະກອບສ່ວນ

● ຈຸທິມ ບຸນຍາວົງ

ເບິ່ງທ່າທາງແລ້ວ ກໍເຫັນວ່າ ເຂົາສະຫງົບງຽບດີ, ສຸຂຸມ ເຢືອກເຢັນ, ບາກບັ່ນພາກພູມ, ແຕ່ໃນຫົວໃຈເຂົານັ້ນ ກັບຮ້ອນຮົນຟົດເດືອດ, ເຂົານັ່ງຢູ່ແຈຖະໜົນ ກອງຮື່ມເຕັ້ນສຳສາ ທ່າມກາງສາຍລົມທີ່ປິວພັດມາເກືອບຕະຫລອດເວລາ, ແຕ່ສາຍລົມກໍ່ຊ່ວຍຫຍັງເຂົາບໍ່ໄດ້ . ດ້ວຍຄວາມຊຳນິຊຳນານ ເຂົາໃຊ້ເຂັມ, ໄມ້ຕອນ ແລະ ອຸປະກອນອື່ນໆ ອີກສອງສາມຊະນິດ ທຳການຫຍິບເກີບຂາດ ແລະ ເປ່ເພ. ພຽງເວລາ ບໍ່ດົນ ເກີບທີ່ເຈົ້າຂອງໃຊ້ການບໍ່ໄດ້ແລ້ວນັ້ນ ກໍກັບກາຍເປັນເກີບດີທີ່ໃຊ້ການໄດ້ອີກ, ແລ້ວເຂົາກໍຈັບເອົາເກີບໃໝ່ ຫລືຄູ່ໃໝ່ມາແປງຕໍ່ໄປເລື້ອຍໆ. ຢູ່ຕໍ່ໜ້າ ເຂົາ ມີແກັດໄມ້ຊຸງເຕັມໄປດ້ວຍເກີບ. ແກັດທີ່ວາງຢູ່ນີ້ສະແດງວ່າ ເຂົາປັກຫລັກທຳມາຫາກິນຢູ່ບ່ອນນີ້, ກີ່ໃດ ບໍ່ມີແກັດ ກໍບໍ່ເຫັນເຂົາ ຊຶ່ງກໍກັກເປັນກີ້ນຕົກ .

ໂດຍປົກກະຕິ ເຂົາຈະມາປະຈຳຢູ່ບ່ອນນີ້ທຸກຄືນ. ມັນເປັນຖະໜົນທີ່ຄົນ ທ່ອງທ່ຽວໄປມາຫລາຍ, ສະດວກສະບາຍສຳລັບຜູ້ທີ່ຈະເອົາເກີບເກົ່າມາແປງ. ບາງຄືນກໍຄອງຖ້າເອົາພອມເບາດໂລດ, ບາງຄືນກໍປະໄວ້ ແລ້ວນັດເວລາມາເອົາ ຕາມທີຫລັງ.

ເຂົານັ່ງແປງເກີບຢູ່ຢ່າງມິດໆ, ບາງຄັ້ງກໍເສືອດສາຍຕາໄປເບິ່ງເກີບຄູ່ໜຶ່ງ ຊຶ່ງເຈົ້າຂອງເອົາມາແປງ ເບື້ອງເດືອນກວ່າມາແລ້ວ. ຖ້າເຈົ້າຂອງເກີບມາເອົາ, ເຂົາກໍຈະໄດ້ເງິນຄ່າສ້ອມແປງເປັນເງິນຕັ້ງພັນຫາຮ້ອຍກີບ ! ມັນເປັນເກີບຊະນິດງາມ ໜັງດີ ທີ່ເຈົ້າຂອງເສັຍຄ່າຍຫລາຍສົມຄວນ ຈຶ່ງເອົາມາແປງ ໂດຍປ່ຽນພື້ນໃຫມ່ທັງສອງກີບ, ດັ່ງນັ້ນຄ່າແປງຈຶ່ງແພງສົມຄວນ. ເຂົາຈື່ໄດ້ວ່າ ເຈົ້າຂອງເກີບເປັນຊາຍໜຸ່ມ ໜ້າຕາດີ ທ່າທາງກາວກີ້ງ . ເຂົາຄິດໄລ່ຄ່າແປງ ແລະ ບອກວ່າ ພາຍໃນສາມວັນໃຫ້ເຈົ້າຂອງມາເອົາ , ແຕ່ເຣື່ອງອອກກຳນົດ ກໍປະກົດວ່າບໍ່ເຫັນເຈົ້າຂອງກັບຄືນມາເອົາເລີຍ. ເຂົາຄອງຄອຍ ມື້ນັ້ນມື້ນີ້, ຈາກວັນເປັນອາທິດ, ຈາກອາທິດເປັນເດືອນ, ເດືອນໜຶ່ງຜ່ານໄປ ເດືອນທີສອງເຂົ້າມາ ແຕ່ກໍບໍ່ເຫັນເຈົ້າຂອງເກີບມາເອົາ. ທີ່ເຂົາຄອງຄອຍດ້ວຍຄວາມກະວົນກະວາຍ ກໍເພາະເຂົາຢາກໄດ້ເງິນ, ເງິນທີ່ເຂົາຕ້ອງການທີ່ສຸດ ໃນຂະນະນີ້ ຈົນເຂົາຮູ້ສຶກເປັນຮ້ອນເປັນຮົນ.

ເຂົາເຮັດວຽກລຳພັງຄົນດຽວ ແຕ່ຫົວໃຈນັ້ນແສນອຶກກະທຶກ. ຢູ່ຂ້າງເຂົາ ມີວິທະຍຸນ້ອຍໜ່ວຍໜຶ່ງ ທີ່ພວມກະຈາຍຂ່າວ - ມັນເປັນຂ່າວທີ່ກະຕຸກເສັ້ນຂອງເຂົາທຸກສ່ວນໃນຮ່າງກາຍ:

...ຍົນໂອວີ - ໑໐ ຂອງສັດຕູ ຖືກທະຫານທ້ອງຖິ່ນບໍ່ແຕນ ຍິງຕົກ ໃນວັນທີ ໑໓/໔/໑໙໖໖, ນັກບິນ ສອງຄົນຖືກຈັບກັບທີ່. ທາງພາກພື້ນດິນທະ

ຫານເຂົາຢູ່ປ້ອມ ໑໔໕໘ ຕ້ານປັ້ນການບຸກຂອງພວກກະທິງແດງ ທະຫານ ກ້າ ຕາຍຂອງຝ່າຍກົງກັນຂ້າມໄວ້ໄດ້. ປ້ອມ ໑໓໗໐ ກໍຖືກບຸກຕີໜັກ ໂດຍສະເພາະຖືກຖະຫລົ່ມດ້ວຍປືນໃຫຍ່. ຫລັງຈາກສັດຕູໃຊ້ປືນໃຫຍ່ຍິງຖະຫລົ່ມ ເປັນເວລາສີ່ຊົ່ວໂມງແລ້ວ ພວກກະທິງແດງ ກໍບຸກຂຶ້ນມາເພື່ອຈະຍຶດປ້ອມ ທັງສອງ ແຕ່ພໍມາໃກ້ຊ່ອງຄອງ ປະມານ ໔໐ - ໕໐ ແມັດ ທະຫານເຂົາກໍເປີດສາກຍິງສຸ່ມໃສ່, ການສູ້ຮົບເປັນໄປຢ່າງດຸເດືອດທີ່ສຸດ, ພວກກະທິງແດງ ພະຍາຍາມບຸກຂຶ້ນມາເປັນຫລາຍຊຸດ ແຕ່ກໍບໍ່ສາມາດຢ່ວງຍາດຕີນເຂົ້າເຖິງຊ່ອງຄອງເລາະປ້ອມທັງສອງໄດ້. ປ້ອມ ໑໔໕໘, ປ້ອມ ໑໓໗໐ ແລະ ປ້ອມອື່ນໆ ຍັງເປັນຈຸດທີ່ໝັ້ນຂອງທະຫານເຂົາຢ່າງໝັ້ນຄົງ.

ຂ່າວຈາກວິທະຍຸດັງຕໍ່ໄປວ່າ: ປະຊາຊົນຈາກແຫ່ງຕ່າງໆ ຈັດສົ່ງຂອງຂວັນໄປໃຫ້ອ້າຍນ້ອງທະຫານຢູ່ແນວໜ້າຢ່າງເປັນຂະບວນຟົດຟື້ນ. ກໍພູບໍລິຈາກເງິນ, ເຄື່ອງໃຊ້, ເຄື່ອງກິນ, ຢາດູດ, ແລະ ອື່ນໆ, ພ້ອມທັງ ຂຽນຈົດໝາຍໄປອວຍໄຊໃຫ້ພອນ ແກ່ທະຫານຢູ່ແນວໜ້າທີ່ເຂດບໍ່ແຕນ...

ເມື່ອຟັງຂ່າວມາຮອດຕອນນີ້ແລ້ວ ເຂົາຮູ້ສຶກບໍ່ສະບາຍໃຈ ເພາະຕົນເອງຍັງບໍ່ໄດ້ບໍລິຈາກຫຍັງຈັກຢ່າງ, ແລ້ວເຂົາກໍໃຈຮ້າຍໃຫ້ເຈົ້າຂອງກິບຊູນີ້ ເຂົາຫວັງວ່າເມື່ອໄດ້ເງິນຈຳນວນພັນຫ້າຮ້ອຍກີບແລ້ວ ເຂົາຈຶ່ງຈະພໍແບ່ງສ່ວນ ຄືເຄິ່ງໜຶ່ງເອົາໃຫ້ຄອບຄົວ ແລະ ອີກເຄິ່ງໜຶ່ງເອົາປະກອບສ່ວນ ຮ່ວມກັບປະຊາຊົນຄຸ້ມບ້ານຂອງເຂົາ ເພື່ອໄປຊື້ຂອງຂວັນມອບໃຫ້ທະຫານແນວໜ້າ. ເຂົາໄດ້ເງິນຈາກລູກຄ້າລາຍອື່ນໆຢູ່ແຕ່ກໍພຽງເລັກໜ້ອຍ ເພາະເປັນການສ້ອມແປງພຽງເບົາບາງ ຊຶ່ງເຂົາໄດ້ຄ່າສ້ອມແປງພຽງ ໗໐ - ໑໐໐ ກີບ ເທົ່ານັ້ນ. ມື້ໜຶ່ງໆ ເຂົາໄດ້ເງິນປະມານ ໔໐໐ - ໕໐໐ ກີບ ຊຶ່ງນັບວ່າອັດຕະຄັດອັດສົນສຳລັບລ້ຽງຄອບຄົວ.

ອຸທິນ ບຸນຍາວົງ

ບາງຄັ້ງ ເຂົາກໍຄິດວ່າ ຈະຂາຍເກີບຄູ່ນີ້ ເພາະດົນເກີນຄວນແລ້ວ ແຕ່ເຈົ້າຂອງກໍບໍ່ມາທວງຖາມເອົາຄືນ. ເຂົາເອງໄດ້ລົງທຶນໄປຊື້ພື້ນເກີບໃຫມ່ມາໃສ່, ຖ້າເຈົ້າຂອງບໍ່ມາເອົາແທ້ໆ ເຂົາກໍມີສິດຂາຍເພື່ອຈະໄດ້ເງິນຄືນ, ແຕ່ເຂົາກໍໄດ້ແຕ່ຄິດເທົ່ານັ້ນ, ເນື່ອງຈາກວ່າ ບໍ່ມີຜູ້ໃດອອກປາກຂໍຖາມຊື້ ຈັກເທື່ອ. ໃຈໜຶ່ງ ເຂົາກໍຄິດວ່າ ເອົາໄວ້ຕໍ່ໄປສາກ່ອນ, ວັນໜຶ່ງ ຂ້າງໜ້າ ເຈົ້າຂອງຄົງກັບມາ. ບາງທີເຈົ້າຂອງອາດໄປຕ່າງແຂວງຢ່າງກະທັນຫັນ ຈຶ່ງບໍ່ມີເວລາມາເອົາເກີບ, ຫລື ອາດປະສົບບັນຫາທີ່ຄາດບໍ່ເຖິງກໍເປັນໄດ້. ເຂົາສົມມຸດເລື່ອງໄປເອງ ແຕ່ກໍບໍ່ໄດ້ຕັດສິນໃຈຢ່າງໃດ.

ເວລາຜ່ານໄປ, ຂ່າວການສູ້ຮົບຢູ່ແນວໜ້າ ທີ່ເຂດບໍ່ແຕນກໍດັງຊຸບໄປ ມີແຕ່ຂ່າວການປະຊຸມຂອງຄະນະກຳມະການປະສົມທະຫານ ລາວ - ໄທ ທີ່ບ້ານເໝືອງແມ່, ຂ່າວການສົ່ງຄືນນັກບິນໄທສອງຄົນນັ້ນ ເພື່ອເຫັນແກ່ມະນຸດສະທຳ ແລະ ຄວາມສຳພັນອັນດີຕໍ່ກັນ, ຕໍ່ມາ ແມ່ນຂ່າວການປະດັບຫລຽນໄຊ ໃຫ້ແກ່ທະຫານທີ່ທຳການປ້ອງກັນພື້ນແຜ່ນດິນລາວໃນຄັ້ງນີ້.

ພິທີປະດັບຫລຽນໄຊ ຜ່ານໄປອີກສາມເດືອນ ແຕ່ເຈົ້າຂອງເກີບ ກໍຍັງບໍ່ປະກົດຕົວ.

ເຂົາເຮັດວຽກສ້ອມແປງເກີບຕໍ່ໄປຕາມເດີມ, ກ້ອງຮົ່ມຕົ້ນສຳສາ ຕົ້ນເດີມ, ແກັດໄມ້ແກັດເດີມ. ແລ້ວວັນໜຶ່ງ ຊາຍໜຸ່ມເຈົ້າຂອງເກີບກໍກັບຄືນມາ ເຂົາກ້າວລົງຈາກລົດທະຫານ ໂດຍມີໄມ້ເທົ້າຄ້ຳທີ່ກົກແຂນ ຢ່າງດ້ວຍ ຄວາມລຳບາກ. ຊ່າງແປງເກີບ ຢຸດເຮັດວຽກໄປຂະນະໜຶ່ງ, ຈ້ອງເບິ່ງຊາຍໜຸ່ມຢ່າງຕັ້ງໃຈ ແລະ ຢ່າງຄັ້ນຄິດ, ຊາຍໜຸ່ມຂາກຸດຂ້າງໜຶ່ງ. ທຳອິດ ເຂົາບໍ່

ແນ່ໃຈວ່າ ແມ່ນເຈົ້າຂອງເກີບຫລືບໍ່, ແຕ່ເມື່ອຊາຍໜຸ່ມຄົນນັ້ນຍ່າງກົງມາຫາເຂົາ ແລ້ວອອກປາກຖາມຫາເກີບ ເຂົາຈຶ່ງໝົດສົງໄສ.

" ເກີບຂ້ອຍເອົາມາແປງ ໔ - ໕ ເດືອນກ່ອນແລ້ວຕີ້ "

" ເອີແລ້ວ, ຄູ່ນີ້ແມ່ນຕອ່າ " ເຂົາຈັບເກີບອອກມາຈາກແກັດໄວ້.

" ແມ່ນລະ, ເປັນເທົ່າໃດເກາະ ເຮົາຕົກລົງກັນຕອນນັ້ນ ? "

ເຂົາອຶດອັດໃຈທີ່ຈະບອກວ່າຄ່າແປງເປັນເງິນເທົ່າໃດ, ມັນຄືກໍ ຫຍັງມາຕັນຮູຄໍໄວ້ ເມື່ອເຫັນເຈົ້າຂອງເກີບຍັງແຕ່ຂາເບື້ອງດຽວ. ເຂົາອຶດ ບໍ່ໄດ ຈຶ່ງຖາມອອກໄປວ່າ :

" ຂໍໂທດ, ຂາເປັນຫຍັງ ? "

" ເອີ, ຂ້ອຍອາສາສະໝັກໄປແນວໜ້າຢູ່ບໍ່ແຕນ, ຖືກລູກລະເບີດຂອງສັດຕູ ເລີຍຕ້ອງຕັດຂາຂ້າງໜຶ່ງ... "

ຊ່າງແປງເກີບອ້າປາກຄ້າງ, ຄິດຢ່າງໜຶ່ງກໍພູມໃຈທີ່ໄດ້ພົບກັບນັກຮົບຕົວຈິງ ເພາະຜ່ານມາ ເຂົາໄດ້ຟັງແຕ່ຂ່າວຕາມວິທະຍຸ, ຄວາມເຫັນອົກເຫັນໃຈຕໍ່ຜູ້ທີ່ອຸທິດຕົນ ເພື່ອປະເທດຊາດ ກໍລົ້ນເຫລືອ ຈົນເຂົາເວົ້າຫຍັງອອກມາບໍ່ໄດ້ ດັ່ງໃຈຄິດຢາກເວົ້າ, ລົດທີ່ມາສົ່ງຊາຍໜຸ່ມກໍຍັງຕິດຈັກຄອຍຖ້າຢູ່, ດັ່ງນີ້ ເຂົາຈຶ່ງເວົ້າແບບສະຫລຸບເລີຍວ່າ :

" ໂອ໋ຊັ້ນຫວະ, ເອີ ບໍ່ເປັນຫຍັງ, ຂ້ອຍບໍ່ເອົາເງິນດອກ "

ເຈົ້າຂອງເກີບກ່າວຂອບໃຈ ແລ້ວຍ່າງກັບຄືນໄປຫາລົດ, ຊ່າງແປງເກີບແນມນຳຫລັງຈົນລົດຄັນນັ້ນລັບຫາຍໄປຈາກສາຍຕາ. ເຂົາຮູ້ສຶກ ໂລ່ງໃຈ ເພາະໄດ້ປະກອບສ່ວນແລ້ວ.

●●



ໄພທູນ ເມືອງພວນ

ໄຫທີນເມືອງພວນ ມີຊື່ຈິງວ່າ ໄຊສົມບູນ ເກີດໃນປີ ໑໙໔໙ ທີ່ບ້ານ ນ້ຳຈັດ ຕາແສງ ພາແວ່ນ ເມືອງໜອກ ແຂວງຊຽງຂວາງ.

ເຂົາເລີກແອບຂຽນມາແຕ່ຕອນຍັງຮຽນຢູ່ຊັ້ນປະຖົມເວລາ ອາຍຸ ໑໓ ປີ ໂດຍຂຽນບົດບັນທຶກ ແລະ ຄວາມຮູ້ສຶກສ່ວນຕົວປັນໝູ່ອ່ານ.

ພາຍຫລັງຮຽນຈົບອຸດົມ ໃນປີ ໑໙໗໐ ເຂົາໄດ້ຈາກບ້ານເກີດ ເມືອງ ນອນໄປສຶກສາ ວິຊາແພດຊັ້ນສູງຢູ່ ສ.ປ. ມົງໂກລີ, ປະຈຸບັນ ໄດ້ກັບຄືນມາ ເປັນທ່ານໝໍ ຢູ່ໂຮງໝໍແຂວງຊຽງຂວາງແລວ.

" ຄວັນໝີ້ ແລະ ປາດເຫື່ອ " ແມ່ນເລື່ອງສັ້ນຮາງວັນທີ 1 ໃນ ຂັ້ນກວດສອບ ເລື່ອງສັ້ນທີ່ຈັດໂດຍ ວາລະສານ " ວັນນະສິນ " ປີ ໑໙໗໔



# ຄວັນຫີ້ນ ແລະ ຢ່າເດເທົ່ອ

● ໄທທິນ ເມືອງພວນ

ລົດ ຂອງພວກຂ້ອຍແລ່ນໄປຮອດ ຕົວເມືອງ ເມືອງຄຳ ກໍລ້ຽວຂຶ້ນໄປ ທາງທິດເໜືອ ຕາມເສັ້ນທາງເລກ ໗ ແລ້ວແວ່ເຂົ້າໄປ ຈອດຢູ່ເດີ່ນຫຍ້າແຫ່ງໜຶ່ງ ກ້ອງສຳນັກເມືອງ ເຊິ່ງມີຕູບນ້ອຍ ໔-໕ ຫຼັງ ປຸກ ຕັ້ງເປັນແຖວໄວ້ກ່ອນແລ້ວ. ນີ້ແມ່ນທີ່ພັກເຊົາຂອງຂະບວນຊາວໜຸ່ມແຂວງລົງ ມາອອກແຮງງານສ້າງສາຍເໜືອງ ເມືອງຄຳ ຊ່ວຍພໍ່ແມ່ປະຊາຊົນ. ອອກ ມາຕ້ອນພວກຂ້ອຍ ແມ່ນອ້າຍຄົນໜຶ່ງ ໃນຊຸດທະຫານສີຂຽວເກົ່າໆ, ມີຮອຍ ຕາບຫລາຍບ່ອນ - ເບິ່ງບາດຍ່າງຂອງເພິ່ນກໍຮູ້ໂລດວ່າ ເພິ່ນໃສ່ຂາທຽມ. ເຫັນແນວນັ້ນ ແສງຄຳກົ້ນຊຸນໃສ່ຫູຂ້ອຍ.

- ອ້າຍຄຳ ! ອ້າຍເບິ່ງແມ້ ເພິ່ນຜູ້ຂາເຄນັ້ນ ກໍຍັງວ່າມາອອກແຮງ ງານ.

- ເພິ່ນເປັນຫົວໜ້າຕົນເອງ !

- ຫົວໜ້າກໍ່ບໍ່ຕ້ອງການດອກ ຄົນແນວນັ້ນ - ພວກເຮົາຕ້ອງການຄົນມາອອກແຮງງານ ບໍ່ແມ່ນຕ້ອງການຄົນມາຊົມພາບ ແລະ ມາໂຄສະນາ ການເມືອງ.

- ອ້າຍຢ້ານນ້ອງອອກແຮງງານບໍ່ສູ້ເພິ່ນຢູ່. ຂ້ອຍເວົ້າຢອກ ແສງຄຳເຮັດໃຫ້ນາງໜ້າແດງຂຶ້ນ - ນາງຈົ່ມຫຍັງ ພຶມພຳສອງສາມຄວາມ ແລ້ວຫິ້ວເຄື່ອງໂຕເນລົງຈາກລົດ. ພວກຂ້ອຍລົງຈາກລົດ ແລ້ວກໍ່ມຸ່ງໜ້າໄປຫາຕູບຂອງໃຜມັນ ຕາມການແບ່ງປັນຂອງທາງຄະນະ ເພື່ອສັບຊ້ອນເຂົ້ານຳບັນດາ ອ້າຍນ້ອງທີ່ມາກ່ອນ. ຂ້ອຍໄດ້ນອນຕູບດຽວກັນກັບອ້າຍຜູ້ອອກມາຕອນ ພວກຂ້ອຍຫວ່າງກີ້ນີ້ ສະນັ້ນ ຜ່ານຈາກວຽກງານຕົວຈິງ ແລະ ການດຳລົງຊີວິດ ແຕ່ລະມື້ ໄດ້ເຮັດໃຫ້ຂ້ອຍລຶ້ງເຄີຍ ແລະ ສະໜິດສະໜົມກັບອ້າຍພະນັກງານ ເສຍອົງຄະຜູ້ນັ້ນເປັນພິເສດ. ອ້າຍຊູອ້າ ບົວຈັນ ເຮັດວຽກຢູ່ ພະແນກກະສິກຳແຂວງ. ບໍ່ມີໃຜດອກບັງຄັບໃຫ້ອ້າຍມາເຮັດວຽກທີ່ໜັກໜ່ວງເກີນຄວາມ ສາມາດເຊັ່ນນີ້. ອ້າຍມີສິດພຽງພໍ ເພື່ອອອກກິນບຳນານ ຫລື ຮັບເອົາວຽກງານໃດໜຶ່ງ ທີ່ເບົາບາງຢູ່ຫ້ອງການແຕ່ບໍ່ເສຍກຽດສັກສີ ຂອງນັກປະຕິວັດ ບໍ່ມີໃຜດອກ ຈະຕິລາຄາວ່າ ອ້າຍຫລີກບ່ອນຍາກຊອກຫາບ່ອນງ່າຍ. ແຕ່ລະມື້ ພວກຂ້ອຍອອກໄປເຮັດວຽກແຕ່ ໗ ໂມງເຊົ້າ ຮອດ ໑໑ ໂມງ ແລະ ແຕ່ ໒ ໂມງແລງຮອດ ໗ ໂມງ ຊາວໜຸ່ມພວກຂ້ອຍ ພະຍາຍາມ ຊອກວຽກທີ່ເບົາບາງທີ່ສຸດໃຫ້ອ້າຍບົວຈັນເຮັດ. ແຕ່ວຽກຂອງພວກຂ້ອຍຢູ່ທີ່ນີ້ ແມ່ນຂຸດເໝືອງ ເຫດນັ້ນ ວຽກງານເບົາບາງແມ່ນຫາຍາກ: ຕ້ອງຂຸດດິນ ຂົນອອກຈາກ ພື້ນເໝືອງໄປຖິ້ມຂ້າງນອກ - ວຽກງານທີ່ພວກຂ້ອຍເຫັນວ່າເບົາກວ່າໝູ່ ໃນຍາມນີ້ ກໍ່ຄືວຽກຕົ້ມນ້ຳດື່ມໃຫ້ອ້າຍນ້ອງເທົ່ານັ້ນ ເບິ່ງຄືວ່າງ່າຍຢູ່ ແຕ່ແລ້ວກໍ່ລຳບາກ ບໍ່ຢອກ. ແຕ່ລະມື້ ອ້າຍບົວຈັນ ຕ້ອງແລ່ນຂຶ້ນແລ່ນລົງ ເພື່ອຕັກນ້ຳມາຄາງໃສ່ເຕົາໄຟ-ຫອບນ້ຳໄປສົ່ງໃຫ້ອ້າຍນ້ອງ ຫວ່າງມື້ນ້ອຍໜຶ່ງ ເພິ່ນກໍ່ລົງ

ຊຸດດິນນຳພວກຂ້ອຍ. ເພິ່ນເຮັດວຽກຈົນເຫື່ອໄຫລໄຄຍ້ອຍ ມີບາງຄັ້ງຄາວ ເພິ່ນຍັງນຳພາພວກຂ້ອຍຮອງເພງ ເພື່ອບັນເທົາຄວາມອິດເມື່ອຍອີກ. ຮອດໂມງພັກຜ່ອນ ພວກຂ້ອຍພາກັນນັ່ງອ້ອມອ້າຍບົວຈັນ ຟັງເພິ່ນເລົ່າເລື່ອງສູ້ຮົບ ນິທານ ແລະ ອື່ນໆ. ຂ້ອຍຫັນໄປຫາແສງຄຳ ແລວເວົ້າຄ່ອຍໆ :

- ນ້ອງເຫັນບໍ່ ? ຊາວໜຸ່ມເຮົາຫລາຍຄົນ ບໍ່ທໍ່ເພິ່ນໄດ໋ຫັ້ນ !
- ນອງຍອມເພິ່ນແລວລະ !

ແລວ ວັນໜຶ່ງ ເນື່ອງຈາກມີແສງຄຳ ແລະໝູ່ຂອງນາງ ມາຫລົ້ນນຳ ອ້າຍບົວຈັນ ຄິດ ນ່ອນ ກໍ່ເລີຍຊວນພວກຂ້ອຍໄປ ທ່ຽວຊົມພາບຫຳນະຊາດຍາມແລງ. ພວກຂ້ອຍທັງຍ່າງ ທັງຖາມເລື່ອງຕ່າງໆ ນາ ໆ ຈາກອ້າຍ ແລວໃນທີ່ສຸດ ເພິ່ນກໍເລີຍເລົ່າຊີວິດຂອງເພິ່ນສູ່ພວກຂ້ອຍຟັງ ຢ່າງບໍ່ຮູ້ສຶກຕົວ ເຊິ່ງເມື່ອກ່ອນນີ້ ເພິ່ນບໍ່ເຄີຍເລົ່າສູ່ໃຜຟັງຈັກເທື່ອ.

ອ້າຍບົວຈັນ ກຳເນີດໃນຄອບຄົວຊາວນາທຸກຍາກ ທີ່ບ້ານຊູ, ຕາແສງວຽງທອງ, ແຂວງຊຽງຂວາງນີ້ເອງ. ພໍອ້າຍອາຍຸ ໕ ປີ ພໍ່ຜູ້ບັງເກີດ ເກົ້າແສນເຄົາລົບຮັກ ກໍ່ຖືກພວກຈັກກະພັດຝະລັ່ງຂ້າຕາຍຍ້ອນພໍ່ບໍ່ຍອມໄປເປັນ ທະຫານໃຫ້ພວກມັນ ແລະ ເມື່ອອາຍຸຮອດ ໑໑ ປີ ແມ່ຜູ້ແສນສັກກາລະບູຊາເປັນ ຮົ່ມບັງແດດຍາມຮ້ອນ ເປັນກູ້ຳແພງບັງພາຍຸໃຫຍ່ ກໍ່ໄດ້ລາໄປອີກ ຍ້ອນພະຍາດໂລກຫາຍໃຈຝືດ ປະໃຫ້ອ້າຍເປັນເດັກກຳພ້ອຍ - ອາໄສ ເຂົ້າກົ້ນບາດ

ໃນວັດເພື່ອລ້ຽງຊີບແຕ່ລະມື້. ປີ ໑໙໖໑ ແຂວງຊຽງຂວາງໄດ້ຮັບການ ປົດປ່ອຍ ອ້າຍຈຶ່ງອຳລາຈາກວັດ, ສະໝັກເຂົ້າໃນກອງທັບປົດປ່ອຍ ປະຊາຊົນລາວ ເພື່ອປະກອບສ່ວນເຫື່ອແຮງຂອງຕົນເຂົ້າໃນຂະບວນການຕໍ່ສູ້ກູ້ຊາດ ຮອດປີ ໑໙໗໑ ອ້າຍໄດ້ຮັບບາດເຈັບສາຫັດທີ່ບັ້ນຮົບພູເກັງ. ພວກຈັກກະພັດອາເມລິກາ ແລະ ລູກນ້ຳທີ່ກະຫາຍສົງຄາມ ໄດ້ຕັດຂາອ້າຍໄປເບື້ອງໜຶ່ງ ແຕ່ໃນຮ່າງກາຍຂອງອ້າຍກໍ່ບໍ່ໄດ້ສູນເສຍເລືອດຂອງນັກປະຕິວັດ, ຂອງສະນາຊົນພັກຜູ້ຫ້າວຫັນ. ພໍອອກໂຮງໝໍ ອ້າຍກໍ່ຂໍກັບຄືນແນວໜ້າເພື່ອສູ້ຮົບ ຮ່ວມກັບບັນດາເພື່ອນສະຫາຍ ທາງຂັ້ນເທິງບໍ່ເຫັນດີ ເພິ່ນໄດ້ຍົກຍ້າຍອ້າຍໄປຮັດວຽກຢູ່ຫ້ອງການແນວ - ຊີວິດທະຫານຂອງອ້າຍໄດ້ສິ້ນສຸດລົງແຕ່ນັ້ນ. ເວລານັ້ນເກືອບທຸກຄືນ ອ້າຍມັກຂຶ້ນໄປນັ່ງຢູ່ເທິງໂນນພູນ້ອຍ ຫລັງຫ້ອງການ ສົ່ງສາຍຕາໄປໄກໆ ຫາບ່ອນມີສຽງປືນໃຫຍ່ດັງຄຶ້ນໆ ມາຕາມສາຍລົມ ວຽງຫູຟັງສຽງຮ້ອງຕະລຸມບອນຂອງຜູ້ບັນຊາການ ແລະ ສຽງຮ້ອງໂຮໄຊໂຍ ຂອງອ້າຍນ້ອງນັກຮົບ.

- ຊີວິດທະຫານສະໄໝນັ້ນ ຄືຈະທຸກຍາກຫລາຍເນາະອ້າຍ ?

ແສງຄຳຖາມ ພອນທັງແນມເບິ່ງອ້າຍບົວຈັນ ຢ່າງບໍ່ພັບຕາ ອ້າຍບໍ່ປາກສົ່ງແສງຕາໄປໄກໆ ນິດຄາວໜຶ່ງ ຈຶ່ງຫັນມາເບິ່ງພວກຂອຍ ແລ້ວເວົ້າຂຶ້ນຄ່ອຍ ໆ :

- ແມ່ນແລ້ວ ! ອ້າຍນ້ອງທະຫານປົດປ່ອຍສະໄໝນັ້ນທຸກຍາກຫລາຍມີບາງເທື່ອ ຕ້ອງກິນເຂົ້າປ່ຽກເປັນອາທິດ, ກິນເຜືອກມັນ ຕາງເຂົ້າ, ເຄື່ອງນຸ່ງມີຊຸດດຽວຄາຄີງ ເພາະດ້ານຫລັງ ອ້າຍນ້ອງກອງລຳລຽງ ມາຍັງບໍ່ທັນຮອດ ເບື້ອງໜ້າຕ້ອງຄືບໄປເລື້ອຍຕາມຄວາມຮຽກຮ້ອງ ຂອງປະເທດຊາດ. ແຕ່ອ້າຍນ້ອງ ກໍ່ບໍ່ມີໃຜຈົ່ມວ່າ ຫລືເສຍກຳລັງໃຈ, ທຸກຄົນກຽມພ້ອມພົ້ນລູກກະສູນ ແລະ ກະບູ່ປືນເຂົ້າໃສ່ຕັບອິກຂອງພວກຈັກກະພັດ ແລະ ລູກນ້ຳຂາຍຊາດ. ໃນຕອນໜຶ່ງ ອ້າຍໄດ້ເລົ່າເຖິງ ບັ້ນຮົບທີ່ອ້າຍບໍ່ສາມາດລືມໄດ ແລະ ກໍ່ແມ່ນ

ບັ້ນຣົບຄັ້ງສຸດທ້າຍໃນຊີວິດທະຫານຂອງອ້າຍ ນັ້ນແມ່ນບັ້ນຣົບຢູ່ຈຸດສູງ ດ້ານໃຕ້ຕີນພູເກົ້າ. ນັ້ນກອງຮ້ອຍຂອງພວກອ້າຍບົວຈັນ ໄດ້ຮັບຄຳສັ່ງໃຫ້ບຸກ ໂຈມຕີສັດຕູຢູ່ຈຸດສູງ ດ້ານໃຕ້ຕີນພູເກົ້າ ເພື່ອເປີດທາງເຂົ້າໄປຫາລອງແຈງ ເຊື່ອງແມ່ນສູນກາງຂອງພວກປຸ້ນວາງປາວ. ແນ່ນອນບໍ່ມີຫຍັງຍາກ ເພາະກອງຮ້ອຍຂອງພວກອ້າຍເຄີຍໄດ້ຮັບນາມມະຍົດ ເປັນກອງຮ້ອຍຊະນະເລີດມາຫລາຍຄັ້ງແລ້ວ. ການບຸກໂຈມຕີແກ່ຍາວພຽງເຄິ່ງຊົ່ວໂມງເທົ່ານັ້ນ ພວກສັດຕູ ກໍ່ແຕກຊະນະໂມ ປານໄມ້ຮ້ອຍຂາຂຽດຂາດ - ສຽງຮ້ອງໂຮໄຊໂຍຂອງພວກນັກຣົບດັ່ງຟົດສະໜັ່ນໄປທົ່ວຄາຍ. ລູກປືນໄຟສັນຍານໄຊຊະນະ ໄດ້ບິນຂຶ້ນສູ່ທ້ອງຟ້າສີຄາມຍາມຂອນແຈງ. ໂຫລະເລູກ ຊົມເຊີຍຈາກກອງບັນຊາການ ມາຫາກອງຮ້ອຍພວກອ້າຍຢ່າງບໍ່ຂາດ ພ້ອມກັບຄຳເຕືອນໃຫ້ທຸກຄົນຈົ່ງມີສະຕິ ລະວັງຕົວ ບາງທີ ພວກສັດຕູອາດຈະເຕົ້າໂຮມກຳລັງບຸກໂຈມຕີຄືນອີກ ເມື່ອຟ້າສະຫວ່າງແຈ້ງແລ້ວ. ກໍ່ແມ່ນຄວາມເພິ່ນອື່ທລີ ພໍດວງຕາເວັນພົ້ນຂຶ້ນ ຫວິດຂອບຟ້າທາງທິດບົວລະພາ ລູກປືນໃຫຍ່ ໑໐໕ ມມ ກໍ່ທະຍອຍກັນ ບິນມາຫາຄາຍພວກອ້າຍຢ່າງນັບບໍ່ຖ້ວນ ພ້ອມນັ້ນ ບັກແຮງຫລັກ ໖ ໂຕກໍ່ບິນມາ ແລ້ວຜັດປ່ຽນກັນສັກທິ້ວລົງຖິ້ມລະເບີດຢ່າງປ່ວງບາ. ພວກມັນຫວັງ ຈະດັບມອດທຸກສິ່ງທຸກຢ່າງ ທີ່ມີຊີວິດຢູ່ເທິງຄາຍແຫ່ງນັ້ນ ແຕ່ອ້າຍນ້ອງນັກຣົບ ກໍ່ບໍ່ໄດ້ຢ້ານກົວພົ່ນລູກກະສຸນຂຶ້ນເພື່ອສະກັດກັ້ນທິ້ວມັນໄວ້ຢ່າງພິລະອາດຫານ ເຮັດໃຫ້ແຮງຫລັກໂຕໜຶ່ງຕົກລົງຄາທີ່ ແລະ ອີກໂຕໜຶ່ງໃຫ້ກັ້ນບໍ່ຮູ້ວ່າຈະເມືອຮອດ ຜີປ່າຊ້າຂອງມັນຫລືບໍ່. ເຫັນແນວນັ້ນ ພວກທີ່ຍັງເຫລືອ ບໍ່ກ້າສັກທິ້ວລົງມາ ເທົ່າອີກພວກມັນເວີ່ນຢູ່ສູງໆ ຖິ້ມລະເບີດຢ່າງຊະຊາຍ. ພວກອ້າຍນ້ອງນັກຣົບຍົກແຂນເສື້ອຂຶ້ນເຊັດເຫື່ອຍິ້ມຫົວແນມເບິ່ງຫນ້າກັນດ້ວຍຄວາມພໍໃຈ.

- ແຕ່ເວລານັ້ນ ປະກົດມີສຽງຄົນອົ້ນແຊວ ແລະ ສຽງປ້ອຍດ່າດັງມາແຕ່ຕີນຄ້າຍ ໂອ ! ແມ່ນແລ້ວ ພວກສັດຕູ ພວມເຕົ້າໂຮມກຳລັງເພື່ອບຸກໂຈມຕີພວກເຮົາຄືນ.

ອ້າຍບົວຈັນເລົ່າດ້ວຍນ້ຳສຽງ ທີ່ມີຊີວິດຊີວາ ພໍປານວ່າພວມບຸກ ຢູ່ໃນສະໜາມຮົບອື່ຫລີ.

- ໄດ້ແລ້ວ ໃຫ້ສູຂຶ້ນມາຮັບເອົາລູກທອງຂອງພວກກູໄປເປັນຂອງຂວັນ ໃຫ້ປູ່ສັງກະສາ ຍ່າສັງກະສີ ຢູ່ເມືອງໄກ່ບໍ່ຂັນພຸ້ນ, ຂຶ້ນມາ! ຂຶ້ນມາ! ສູບໍ່ມີທາງທີ່ຈະເຮັດຫຍັງໃຫ້ພວກກູໄດ້ດອກ ນອກຈາກຈະປະລາໄຊອີກ !

ໝວກເຫລັກໜຶ່ງໜ່ວຍ, ສອງໜ່ວຍຫ້າຫົກໜ່ວຍ ແລ້ວນັບເປັນສິບ ສິບໜ່ວຍ ພົ້ນອອກຈາກປ່າຫຍ້າຄາ. ພວກມັນບໍ່ຄານ-ແຕ່ຈອບມາ ແບບຈອບຍິງນົກຢູ່ກາງທົ່ງ. ປະໃຫ້ພວກມັນຂຶ້ນມານຶ່ງ ແລ້ວພວກອ້າຍຈຶ່ງລັ່ນປືນເຮັດໃຫ້ພວກທີ່ຂຶ້ນມາກ່ອນລົ້ມລົງກັບທີ່ໂດຍບໍ່ທັນສັ່ງຄວາມຫາລູກເມຽພໍ່ຄວາມ. ພວກທີ່ຂຶ້ນມາຕາມຫລັງ ເຫັນແນວນັ້ນ ກໍ່ກວາດປືນໄປທົ່ວທິບ ແລ້ວປົບແລ່ນກັບຄືນ. ພວກມັນເຕົ້າໂຮມກຳລັງບຸກຂຶ້ນມາອີກເທື່ອທີສອງ ທີ່ສາມ ແລະ ຮອດເທື່ອ ທີ ຫ້າ ກໍ່ພໍດີ ຕາເວັນທ່ຽງ ແລະ ເວລານັ້ນລູກປືນຂອງພວກອ້າຍບົວຈັນໝົດ . ພວກອ້າຍຖອດກະບີ່ປືນອອກ ພ້ອມແລ້ວທີ່ຈະອຸທິດ ເລືອດສີແດງ ແລະ ຮ່າງກາຍອັນໜຸ່ມນ້ອຍຂອງຕົນເພື່ອປະເທດຊາດ ເພື່ອປະຊາຊົນ. ທຸກຄົນ **ພ້ອມລໍ**ຖ້າ ວິນາທີສຸດທ້າຍ ກໍ່ມີອ້າຍນ້ອງແລ່ນມາບອກໃຫ້ຮູ້ວ່າ "ອ້າຍນ້ອງ ກອງລຳລຽງມາຮອດຕີນຄ້າຍແລ້ວ" ພວກອ້າຍຫລຽວເບິ່ງກັນດ້ວຍຄວາມດີໃຈ, ຜູ້ບັນຊາ ກອງຮ້ອຍຟ້າວສັ່ງໃຫ້ໝວດໄປຮັບເອົາ ອ້າຍນ້ອງ; ພວກອ້າຍຮູ້ສຶກແປກປະຫລາດໃຈບໍ່ໜ້ອຍເມື່ອເຫັນອ້າຍນ້ອງກອງລຳລຽງ ແມ່ນແຕ່ພວກນ້ອງນ້ອຍເຍົາວະຊົນຜູ້ໃຫຍ່ສຸດ ຄົງຈະບໍ່ກາຍ ໑໔ ປີ ນອກຈາກຜູ້ຍ່າງຢູ່ສຸດທ້າຍ ແຖວ ອາຍຸກະຕວງວ່ານັ້ນ ຄົງຈະແມ່ນນາຍຄູຂອງພວກນ້ອງ. ເມື່ອຖາມເບິ່ງ ແລ້ວ ຈຶ່ງຮູ້ວ່າ ພວກນ້ອງແມ່ນນັກຮຽນ ມັດທະຍົມເມືອງແປກ. ພວກອ້າຍ ບົວຈັນ ຟ້າວຮັບເອົາຫີບລູກປືນ ກະເປົາອາຫານຈາກບ່າ ຈາກຫລັງພວກນ້ອງ ແລ້ວ

ພາພວກນ້ອງແລ່ນໄປຫາທີ່ກັ້ງບັງຊົ່ວຄາວ - ບັງເອີນ ມີສຽງປືນໃຫຍ່ ບິນມາເປັນຫລາຍສິບລູກ ອ້າຍຮ້ອງຂຶ້ນສຸດສຽງຄໍ :

ໝູບ! " ອ້າຍບົວຈັນ ນອງເຫັນນ້ອງນ້ອຍຄົນໜຶ່ງ ຍັງຄົງ ຢືນງົງປານໄກ່ເນົ່າຄອນ, ອ້າຍຟ້າວກະໂດດຊຸບ ນາງໝູບລົງດິນ ແລະ ກໍ່ແມ່ນເວລານັ້ນ ຂອງສຽງລະເບີດແຕກຂຶ້ນສະເທືອນຟ້າ. ອ້າຍບໍ່ຮູ້ວ່າມັນແຕກ ຫ່າງຈາກພວກອ້າຍເທົ່າໃດ ເຫັນແຕ່ແມງທົ່ງຫອຍແຕກຢ່າວໆ ແລະ ເປັນສີເຢັນໆທົ່ວຕົນຕົວ. ພໍຮູ້ຄວາມຄືນຄືນມາອ້າຍກໍ່ນອນຢູ່ເສນາຮັກການຮົບພື້ແລ້ວ, ອ້າຍບໍ່ຮູ້ວ່າ ນີ້ນັ້ນ ມີໃຜເປັນຫຍັງບໍ່ ? ແລະ ຫລານສາວນ້ອຍຄົນນັ້ນ ເຂົາຍັງມີຊີວິດຢູ່ບໍ່ ?

ອ້າຍບົວຈັນ ຖອນລົມຫາຍໃຈບາດຍາວ. ຂ້ອຍງວາກໄປຫາ ແສງຄໍາບໍ່ຮູ້ວ່າຢາດນ້ຳຕາໄດ້ໄຫລອາບແກ້ມນາງແຕ່ຍາມໃດ ນາງຍົກ ແຂນເສື້ອຂຶ້ນເຊັດ ແລ້ວເວົ້າຄ່ອຍໆ ໃນລຳຄໍ ຄືຈັ່ງວ່າເວົ້າກັບນາງເອງ :

- ນ້ອງສາວຂອງອ້າຍຄົນນັ້ນ ປອດໄພ - ເຂົາຍັງມີຊີວິດ ແລະ ມີຊີວິດຮອດທຸກວັນນີ້ ...

ອ້າຍບົວຈັນ ງວາກມາເບິ່ງແສງຄໍາ ດວງຕາຂອງອ້າຍສົດໃສຂຶ້ນເມື່ອຮູ້ວ່ານ້ອງສາວຜູ້ອ້າຍເວົ້າເຖິງນັ້ນ ບໍ່ແມ່ນໃຜອື່ນໄກ ນາງພວມຢືນຢູ່ຂ້າງອ້າຍ ແລະ ພວມຖອກເຫຍາດເຫື່ອລົງສ້າງສາພື້ນແຜ່ນດິນແຫ່ງນີ້ ພ້ອມກັບອ້າຍ.

ອ້າຍບົວຈັນ ສົ່ງແສງຕາໄປໄກໆ ແນມເບິ່ງທົ່ງນາທີ່ພວມ ຄອງຄອຍຢາດນ້ຳຈາກສາຍເໝືອງ ເຊິ່ງອ້າຍ ແລະ ນ້ອງສາວຜູ້ອ້າຍບໍ່ລືມໄດ້ ພວມຖອກເຫື່ອແຮງລົງສ້າງມັນຂຶ້ນ. ອ້າຍຍິ້ມຫົວດ້ວຍຄວາມເຊື່ອໝັ້ນໃນອະນາຄົດ.



ດວງຄຳປາ

ດວງຈຳປາ ຫລື ດາລາ ກົມລະຍາ ເປັນລູກຜູ້ຫຳອິດຂອງນີ້ລາງ ນະ
ຫາ ສີລາ ວີລະວົງ ແລະ ແມ່ ນາລີ.

ເກີດປີ ໑໙໔໐ ໃນໄວເດັກ "ດວງຈຳປາ" ນອນຢູ່ເທິງ ກອງປື້ມ ທັງເປັນພາສາລາວ ພາສາໄທ ແລະ ຝະລັ່ງ ເມື່ອເຕີບໃຫຍ່ ໄດ້ຮ່ຳຮຽນ ຄວາມມັກໃນດ້ານວັນນະຄະດີ ພາສາສາດ ຍິ່ງເພີ່ມທະວີຢ່າງບໍ່ຢຸດຢັ້ງ.

ເນື່ອງຈາກວ່າ ຕ້ອງລ້ຽງນ້ອງຊ່ອຍພໍ່ແມ່ ດວງຈຳປາ ຈຶ່ງຢຸຕິ ການຮຽນຢູ່ວິທະຍາໄລປາວີ ວຽງຈັນ ຕັ້ງແຕ່ອາຍຸ ໑໗ ປີ ຫັນມາປະກອບ ອາຊີບເປັນແມ່ພິມຂອງຊາດຢູ່ຫຼາຍປີ ແຕ່ກໍ່ບໍ່ເວັ້ນຫວ່າງຈາກການຂອກຮູ້ຮ່ຳຮຽນ ພາສາຕ່າງປະເທດ ດ້ວຍຕົນເອງຈົນສາມາດເສັງເອົາທຶນໄປຮຽນຕໍ່ວິຊາຄູ ທີ່ສະຫະລັດອາເມລິກາ (ປີ ໑໙໖໑-໖໓).

ຈາກປະສົບການ ຜ່ານຊີວິດໃນຫລາຍສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ປະກອບກັບແຮງດົນ ພາຍໃນສາຍເລືອດ ເຮັດໃຫ້ "ດວງຈຳປາ " ເລີ່ມຈັບປາກກາມາແຕ່ປີ ໑໙໕໘ ເຖິງວ່າບາງໂອກາດ ພະຍຸຊີວິດ ໄດ້ພັດ ວີນີນ້ຳສຸດແຮງກໍຕາມ ແຕ່ພົນງານເລື່ອງສັ້ນ ແລະ ນະວະນິຍາຍ ໄດ້ພິມອອກສູ່ຜູ້ອ່ານຫລາຍສິບຄວນໃນຕົ້ນຊຸມປີ ໖໐ ແລະ ໗໐ .

ນອກຈາກຂຽນ ແລະ ແຕ່ງເອງແລ້ວ ດວງຈຳປາ ຍັງມີຜົນງານດ້ານ ການແປວັນນະກຳເອກ ທີ່ສຳຄັນຂອງໂລກຫລາຍເລື່ອງເຊັ່ນ: "ແມ່" ຂອງ ມັກຊິມ ກອກກີ, ເລື່ອງສັ້ນໃນຊຸດ "ພວກເຂົາຊາວໂຊວຽດ" ຂອງ ບໍຣິດ ໂປເລວອຍ ...

ດວງຈຳປາ ເປັນສະມາຊິກຂອງກອງບັນນາທິການ ວັນນະສິນ ມາແຕ່ແຮກເລີ່ມ ແລະ ປະຈຸບັນ ເປັນຫົວໜ້າ ບັນນາທິການ ໄດ້ມີໂອກາດພົວພັນໃກ້ຊິດ ກັບເພື່ອນນັກຂຽນ ທັງເກົ່າ ແລະ ໃໝ່ ຜູ້ໜຸ່ມນ້ອຍ ຢາກລິເລີ່ມ ການຂຽນ.

ດວງຈຳປາມີພົນງານ ພິມອອກໃໝ່ໆ ຮ່ວມກັບນັກຂຽນອື່ນເຊັ່ນ: ໂຮມເລື່ອງສັ້ນ ນັກຂຽນຍິງປີ ໑໙໘໔ "ຮັກໃໝ່" "ແປວໄຟແຫ່ງໄວໜຸ່ມ", ໂຮມເລື່ອງສັ້ນ ສະໂມສອນ ນັກຂຽນໜຸ່ມ ໑໙໘໘ ແລະ ມີພົນງານ ເປັນເຫລັ້ມຂອງຕົນເອງຄື: "ກ່ອນຈະເຖິງວັນນີ້" ປີ ໑໙໘໘.



# ນາງຄົນນັ້ນ

◉ ດວງຄຳປາ

24 / VII

ສອງ ຈົດໝາຍນັ້ນ ເກົ່າຍ້ອນຮອຍເກີບປຽບເກືອກຝຸ່ນມາບໍ່ຈັກທີ່ໃດນີ້ ແຕ່ເນື້ອຈີກອອກ ເຈ້ຍທາງໃນຍັງໃໝ່ ເປັນແຜ່ນບາງ ສີຟ້າອ່ອນ ຂຽນດ້ວຍນ້ຳໝຶກດຳ ລາຍມືເປັນລະບຽບຂຶ້ນຕົ້ນວ່າ :

...

ເອື້ອຍທີ່ຮັກ ແລະ ຄິດເຖິງ,

ເປັນເວລາຫລາຍເດືອນ ທີ່ນ້ອງບໍ່ໄດ້ຕອບຈົດໝາຍເອື້ອຍ ນັ້ນກໍຍ້ອນວ່ານ້ອງເອງພວມຂຸ້ນຂຽວ ປະກອບເອກະສານເຂົ້າຮຽນ.

...

ຈົດໝາຍ ຂຽນສົ່ງຂ່າວຄາວທາງຄອບຄົວແບບທຳມະດາ ສະແດງໃຫ້ຮູ້ວ່າ ຜູ້ຈະຮັບແມ່ນຢູ່ຕ່າງປະເທດ ກວງໄກ.

ນ້ອງມີຂ່າວດີໃຈຈະບອກ. ນ້ອງສຸດແສນພາກພູມໃຈ ທີ່ມີຊື່ເຂົ້າຮຽນມະຫາວິທະຍາໄລແພດສາດປີນີ້ ສົມກັບທີ່ນ້ອງໄຝ່ຝັນຄອງຄອຍມາດົນ. ເອື້ອຍຄົງຈື່ຈຳໃນຄອບຄົວເຮົາ ນັບແຕ່ເອື້ອຍແກ້ວ ເອື້ອຍກອງ ແລະ ເອື້ອຍຂອງຕ່າງກໍເຄີຍປາຖະໜາຢາກຮຽນແພດດີກັນ ແຕ່ເປັນເລື່ອງທີ່ຍາກຊາ ຕະຫຼອດມາ. ນ້ອງຈື່ວ່າ ເມື່ອເອື້ອຍແກ້ວໄດ້ທຶນໄປຮຽນຢູ່ຕ່າງປະເທດໃນປີກ່ອນ ນັ້ນລາວພັດຮຽນວິຊາເຄມີ ແລະຊີວະອ່ອນຫຼາຍ. ເພິ່ນວ່າ ຢູ່ພຸ້ນ ຜູ້ຈະເຂົ້າຮຽນແພດສາດໄດ້ຕ້ອງແມ່ນນັກຮຽນເກັ່ງອີ່ຫລີ - ຈາກເປັນເອື້ອຍແກ້ວຈຶ່ງຮຽນວິຊາອື່ນ ຕໍ່ມາເອື້ອຍກອງ ເສັງຊຸດົນໄດ້ຄະແນນດີ ມີຊື່ເຂົ້າຮຽນແພດສາດ ຢູ່ວຽງຈັນຊຸດທີ ໔ ແຕ່ພັດລົ້ມເຈັບລົງພໍດີ ກ່ອນນີ້ຈະເຂົ້າຮຽນ ແລະ ກໍປ່ວຍຢູ່ດົນຈົນຕ້ອງສະຫລະສິດປະການຮຽນໄປເຂົ້າເຮັດການຂະແໜງອື່ນ ຮອດເທົ່າທຸກວັນນີ້. ນ້ອງຈື່ວ່າ ເອື້ອຍຂອງກໍປາຖະໜາຢາກຮຽນແພດມາແຕ່ນ້ອຍໆ. ພໍ່ແມ່ເອື້ອຍນ້ອງກໍສຸດທີ່ສະໜັບສະໜູນ ແລະ ຝາກຄວາມຫວັງໄວ້ນຳເອື້ອຍ. ແຕ່ແລ້ວເອື້ອຍກໍຈາກພວກເຮົາມາ. ເອື້ອຍຍັງຂຽນຈົດໝາຍໄປບອກວ່າ ໜີຈາກບ້ານມາຢູ່ຕ່າງແດນ ກໍຍ້ອນຢາກຮຽນວິຊານີ້. ແຕ່ຈົນປານນີ້...ຫຼາຍປີແລ້ວ ເອື້ອຍກໍຍັງຈົ່ມແຕ່ວ່າ "ຫາເງິນຄ່າຮຽນບໍ່ທັນພໍ... ຢ້ານເສັງເຂົ້າບໍ່ໄດ້..." ດັ່ງນີ້ເອງ ນ້ອງຈຶ່ງສົມຫວັງ ເມື່ອຕົນເອງມີໂອກາດໄດ້ຮັບນະໂຍບາຍເຂົ້າຮຽນ. ເອື້ອຍເອີຍ ອີກ ໖-໗ ປີທາງໜ້ານີ້ ຄອບຄົວພໍ່ແມ່ເຮົາ ຈະມີທ່ານໝໍຢູ່ໝໍ່ໃກ້ລະ !

ນ້ອງເຊື່ອໝັ້ນແທ້ໆ ວ່ານ້ອງຕ້ອງຮຽນສຳເລັດ. ນ້ອງໃຈຈົດຈໍ່ຢູ່ກັບວິຊາການຂະແໜງນີ້ - ອາຊີບທີ່ສູງສົ່ງນີ້ມາແຕ່ຕອນນ້ອງຮຽນຢູ່ມັດທະຍົມ. ຕອນນັ້ນ ເອື້ອຍຈາກມາແລ້ວ ຄອບຄົວພວກເຮົາຫ່ວງໄຍເອື້ອຍຫຼາຍ ເອື້ອຍເຊື່ອໝູ່ ແລະ ນາບຳໝູ່ ໂດຍບໍ່ບອກກ່າວເອື້ອຍນ້ອງພໍ່ແມ່ ເວລານັ້ນ ຖ້ານ້ອງຮູ້ລ່ວງໜ້າ ນ້ອງຈະບໍ່ຍອມໃຫ້ເອື້ອຍມາດັດຂາດ. ນ້ອງແນ່ໃຈວ່າຈະສາມາດ

ເວົ້າປຸກລະດົມ ຊີ້ແຈງ ໃຫ້ເອື້ອຍເຂົ້າໃຈ ຈຶ່ງໄດ້. ແຕ່... ມັນກໍຊ້າເກີນໄປເສຍແລ້ວ. ຢ່າລະນາເວົ້າເລື່ອງການຮຽນຂອງນ້ອງເນາະ ?

ນ້ອງຈື່ວ່າ ຕອນອາຍຸໄດ້ ໑໑ ປີ ນ້າບ່າວເພັດເຄີຍຖາມນ້ອງວ່າຢາກຮຽນຫຍັງ- ເມື່ອໃຫຍ່ມາຈະເຮັດອາຊີບຫຍັງ? ນ້ອງໄດ້ຖາມລາວຄືນທັນທີວ່າ " ອາຊີບຫຍັງລະ ທີ່ມັນເປັນປະໂຫຍດແກ່ຄົນທັງຫລາຍ ? " ນ້າບ່າວຫົວຢ່າງພໍໃຈ ແລ້ວຕອບວ່າ: "ຫລານເອີຍອາຊີບຫຍັງກໍເປັນປະໂຫຍດຖະແມ່ນມັນເປັນອາຊີບທີ່ສຸດຈະລິດ, ບໍ່ກິດຂີ່ຂູດຮີດເອົາປຽບຄົນອື່ນໆ. ແຕ່ນ້ອງຍັງ ບໍ່ພໍໃຈ ນ້ອງໄດ້ຖາມບ່າວເພັດຕື່ມວ່າ " ແຕ່ມັນກໍຕ້ອງມີອາຊີບໃດໜຶ່ງ ທີ່ ເປັນປະໂຫຍດຫລາຍກວ່າໝູ່ຕ່ວາ ! ! ! " ນ້າບ່າວຊຸມນ້ອງຂຶ້ນດ້ວຍຄວາມຈົບເຊີຍ ແລະ ວ່າ :

" ແມ່ນແລ້ວຫລານສາວຜູ້ໃຈບຸນຂອງບ່າວເພັດເອີຍ ! ເອົາຈັ່ງຊີ້ ສາຕານບ່າວເພັດວ່າເນີ້... ເປັນໝໍກໍດີໄດ້ ຊ່ອຍຊີວິດຄົນອາດຈະແມ່ນອາຊີບທີ່ເປັນປະໂຫຍດຫຼາຍຄືຫຼານຢາກໝາຍເຖິງນັ້ນກໍໄດ້-ເປັນໝໍສາ- ເປັນໝໍກໍດີລືກັນ "

ນ້ອງເກືອບລືມ ລາຍລະອຽດຂອງການສົນທະນາຄັ້ງນັ້ນໄປແລ້ວ ຖ້າບ່າວເພັດບໍ່ມາທາວຄືນໃຫ້ຟັງຫວ່າງນີ້ກ່ອນນັ້ນ ເມື່ອລາວໄດ້ຍິນຂ່າວດີ ຂອງນ້ອງ. ລາວເລົ່າວ່າ ນ້ອງຍັງບໍ່ພໍໃຈກັບຄຳຕອບຂອງລາວ ເວລານັ້ນຍັງຖາມຕໍ່ໄປວ່າ :

"ໃນການເປັນໝໍ ຄວນຈະເປັນໝໍຝ່າຍໃດຈຶ່ງສຳຄັນທີ່ສຸດ ແນວຮຽນຍາກງ ເຮັດຍາກງ ທັ້ນນ່າ ນ້າບ່າວ? "

ນ້າບ່າວເພັດຄຶດຢູ່ດາວໜຶ່ງຈຶ່ງຕອບວ່າ :

- ໝໍຜ່າຕັດຕີ້! ຮຽນຍາກເຮັດກໍຍາກແຕ່ມັນແກ້ໄຂຊີວິດ ເປັນຕາຍຂອງຄົນເຈັບໃນບາງກໍລະນີ! ອັນນີ້ເວົ້າຕາມຄວາມເຫັນຂອງນ້າບ່າວເພັດເນີ້

ບໍ່ແມ່ນຫລັກການດອກໄດ໋. ບໍ່ມີຫລັກການຍິ່ງໄວ້ດອກວ່າ ຂະແໜງໃດສຳຄັນກວ່າກັນ. ທຸກຂະແໜງການຂອງແພດສາດກໍລ້ວນແລ້ວແຕ່ສຳຄັນໝົດ!"

- ເອີ-ທ່ານຊິຮຽນໝໍຜ່າຕັດ ! " ນ້ອງໄດ້ລົ່ນວາຈາອອກໄປ ຕາມພາສາເດັກ. ມາຮອດບາດນີ້ ຂະນະທີ່ຂຽນຈົດໝາຍເຖິງເອື້ອຍ ຢູ່ດຽວນີ້ ນ້ອງຍັງຕື່ນເຕັ້ນ ແລະ ຮູ້ສຶກສຳຜັດຢູ່ກັບຄວາມຄິດເກົ່າໆ ຄວາມຕັ້ງໃຈເກົ່າໆ ຍັງບໍ່ຮູ້ວ່າມັນຈະສຳເລັດພົນເຖິງຂັ້ນນັ້ນຫຼືບໍ່. ແຕ່ຢ່າລະເອື້ອຍ, ເອົາຄ່າວ່າ ຖາໄດເປັນທ່ານໝໍກໍດີພໍແຮງແລ້ວລະນໍ ?

ມື້ທີ່ນ້ອງໄປພົວພັນ ປະກອບເອກະສານເຂົ້າຮຽນ, ເອື້ອຍພະນັກງານຢູ່ຫ້ອງການເວົ້າຢອກແບບສຽດສີພວກນ້ອງເປັນໜ້າຄິດແທ້ໄດ໋, ລາວເວົ້າວ່າ

- ເວລານີ້, ກໍມີແຕ່ຜູ້ຢາກຮຽນໝໍນັ້ນລະ. ແຕ່ບາດເສັ້ງອອກແລ້ວບາງຄົນຮອດບໍ່ຢາກສະໝັກໄປຢູ່ຕ່າງແຂວງ... ໃຜກໍຢາກຢູ່ແຕ່ສູນກາງ ! ແທ້ແລ້ວ ໄປຢູ່ແຂວງ ຫລືທ້ອງຖິ່ນຫ່າງໄກນັ້ນລະແຮງມີປະສົບການຫຼາຍໄດ ເຫັນຫລາຍພະຍາດ. ໄດ້ປິ່ນປົວຫລາຍ, ຮັບຜິດຊອບສູງກໍຊຳນານໄວ. ພາກັນຄ້າງຢູ່ແຕ່ສູນກາງນີ້... ແພດຊັ້ນສູງບາງຄົນໝົດມື້ບໍ່ໄດ້ເບິ່ງນະຕິພະຍາດ ຄົນເຈັບຈັກຄົນເລີຍ ກໍຍັງມີ ! "

...

ຈົດໝາຍຂຽນມາຮອດໜ້າ ໔ ກໍເລົ່າລົ້ມຄືນເຖິງເຫດການ ທີ່ກະຕຸ້ນໃຫ້ຜູ້ຂຽນ (ຈົດໝາຍ) ເອງຄິດຢາກຮຽນໝໍແທ້ໆ ຢ່າງມີສະຕິເປັນເຈົ້າຕົວເອງບໍ່ແມ່ນເວົ້າໄປຕາມພາສາເດັກ. ນັ້ນແມ່ນຕອນທີ່ລາວເອງນອນເຈັບປາດໄສ້ຕິ່ງອັກເສບຊະນິດຮ້າຍແຮງ ຄືໄສ້ຕິ່ງໄດ້ຂາດອອກ ນ້ຳໜອງແຜ່ເຊື້ອແພດໝໍຕ້ອງໃຊ້ເວລາປາດຕັ້ງ ໔ ຊົ່ວໂມງປາຍ. ຕະຫລອດເວລານອນຢູ່ຫ້ອງພັກຟື້ນ ໔-໔ ວັນ ແພດໝໍໄດ້ເອົາໃຈໃສ່ເບິ່ງແຍງນາງທຸກຢ່າງ ບໍ່ໃຫ້ພໍ່ແມ່

ເອື້ອຍນ້ອງຕ້ອງຫຍຸ້ງຍາກ ທັງເພື່ອໃຫ້ຖືກລະບຽບການຂອງໂຮງໝໍ. ຜູ່ຂຽນ ເວົ້າວ່າ ຄິດເຫັນບຸນຄຸນແພດໝໍຢ່າງວັດແທກບໍ່ໄດ້ ຕົນເອງຈຶ່ງຢາກ ປະກອບ ສ່ວນເຮັດວຽກທີ່ມີປະໂຫຍດແກ່ສັງຄົມນີ້ ດີກັນ - ວ່າຊັ້ນ.

...

ນ້ອງຄິດວ່າ ນ້ອງຈະບໍ່ເຮັດຄືຜູ້ອື່ນໆ ທີ່ເອື້ອຍພະນັກງານຄົນນັ້ນ ເວົ້າໃຫ້. ນ້ອງຕັ້ງໃຈວ່າ ເມື່ອຮຽນສຸດແລ້ວ ນ້ອງຈະອາສາສະໝັກ ລົງທ້ອງຖິ່ນຫ່າງໄກ ນ້ອງຈະໄປທຸກແຫ່ງທີ່ມີຄົນເຈັບຕ້ອງການແພດ...ເອື້ອຍຈົ່ງເຊື່ອເຖີດ ! ນ້ອງຈະບໍ່ເນລະຄຸນປະເທດຊາດ, ພັກ-ລັດທີ່ໃຫ້ທຶນຮອນອັນປະເສີດຄັ້ງນີ້ຢ່າງເດັດຂາດ !

ເອື້ອຍທີ່ຮັກ! ເຖິງແມ່ນວ່າ ເອື້ອຍຜິດຫວັງໃນຊີວິດ, ບໍ່ໄດ້ຮ່ຳຮຽນຄືນ້ອງຕາມທີ່ເອື້ອຍເລົ່າໄປ; ຊີວິດຊາວອົບພະຍົບຢູ່ປະເທດເຂົາພີ້ ເອື້ອຍຕ້ອງດີ້ນຮົນຕໍ່ສູ້ຫາກິນໃຫ້ພົ້ນປາກ ພົ້ນຕົວເອງ-ເອື້ອຍກໍຈຳເປັນຕ້ອງ ອົດທົນເອົາ ເພາະເອື້ອຍໄດ້ເລືອກທາງເດີນຂອງເອື້ອຍເອງ. ນ້ອງຢູ່ບ້ານເຮົາ ຈະຮຽນເພື່ອ ແລະ ຈະປະກອບສ່ວນໃຫ້ຊາດບ້ານເມືອງເພື່ອ. ນ້ອງຮູ້ວ່າ ປະຊາຊົນລາວ ບັນດາເຜົ່າ ທີ່ຢູ່ເຂດຫ່າງໄກກັນດານຍັງຕ້ອງການແພດໝໍທີ່ດີມີ ຄຸນສົມບັດ ເປັນແພດແທ້ຈິງ . ນ້ອງຈະພະຍາຍາມສຸດຄວາມສາມາດ ເຮັດທຸກຢ່າງເພື່ອເອື້ອຍຜູ້ທີ່ບໍ່ມີໂອກາດ - ໃນເມື່ອເວລານີ້ເອື້ອຍເວົ້າວ່າ ເອື້ອຍ ບໍ່ມີປະເທດຊາດອີກແລ້ວ !

...

ເອົາລະ ເທື່ອນີ້ນ້ອງຈະຂໍລາລົງກ່ອນ ເຊົ້ານີ້ນ້ອງມີຮຽນ ໔ ຊົ່ວໂມງ

ເຕັມ ຈະຕ້ອງເບິ່ງບົດຮຽນ ໃຫ້ໄດ້ຮຽນໄຫລ. ອາດຈະມີກລດກາວິຊາ ສິລະສາດຮ່າງກາຍ.

ຂໍເອື້ອຍຈົ່ງໂຊກດີ.

<u>ຈາກນ້ອງ</u>

(. ລາຍເຊັນອ່ານບໍ່ອອກ )

ເສຍດາຍແທ້ໆ ທີ່ລາຍເຊັນຂອງນາງອ່ານບໍ່ອອກ. ຂ້ອຍຢາກຮູ້ ຈັກເຈົ້າຂອງຈົດໝາຍການນີ້. ນາງແມ່ນໃຜ? ນາງຄົງຮຽນຢູ່ປີທີ _/‾_ ນີ້ລະ ເພາະຈົດໝາຍຍັງໃໝ່ໆ. ຂ້ອຍໄດ້ມັນຢູ່ແຄມທາງເຂົ້າໂຮງການໄປສະນີ. ນາງຄົງເຮັດມັນເຮ່ຽ ໂດຍບໍ່ຮູ້ເນື້ອ. ໜ້າເສຽດາຍທີ່ຈົດໝາຍການນີ້ ບໍ່ອາດໄປເຖິງມືຜູ້ເປັນເອື້ອຍໄດ ເພາະຊື່ທີ່ຢູ່ຂອງຜູ້ຮັບ· ກໍຍັງບໍ່ທັນຂຽນ.

x x

x

ນ້ອງນັກສຶກສາເບິ່ງແມ້ !

ຊາຍໄວຂອນຄົນຜູ້ນັ້ນ ມາຢືນຢູ່ໜ້າປະຕູມະຫາວິທະຍາໄລແພດສາດຂອງພວກນ້ອງເກືອບທຸກມື້ ຍາມເລີກກອນທ່ຽງ–ຍາມພວກນ້ອງພວມຈູງລົດຖີບລົດຈັກຊອນລອນໜ້າອອກປະຕູມາ. ດວງໜ້າຂອງເພິ່ນອາບອິ່ມດ້ວຍຄວາມພໍໃຈວາດໜຶ່ງ. ສາຍຕາເພິ່ນສັກແນມຄືພວນຊອກຫາ...ຄົງຊອກຫານາງ... ນາງຄົນນັ້ນ !

●●



ຊ.ວົງພູທອນ

໑. ວົງພູທອນ ຫລື ຈົງເດດ ວົງພູທອນ ເກີດເມື່ອວັນທີ ໔/໓/໔໐ ທີ່ບ້ານ ນາຂ່າ ຕາແສງແລະເມືອງບໍ່ແຕນ ແຂວງໄຊຍະບູລີ.

ຮຽນຈົບຊັ້ນມັດທະຍົມ ທີ່ໂຮງຮຽນ ມັດທະຍົມສົງ ແຂວງໄຊຍະບູລີ.

ປີ ໑໙໘໑ ເປັນຫົວໜ້າຫ້ອງການແນວລາວສ້າງຊາດ ເມືອງບໍ່ແຕນ ມາຮອດປີ ໑໙໘໕ ຍ້າຍມາເປັນຫົວໜ້າພະແນກໂຄສະນາອົບຮົມ ເມືອງດັ່ງ ກ່າວ ພ້ອມທັງເປັນນັກຂ່າວ ປະຈຳກອງບັນຊາການທະຫານແຂວງໄຊຍະບູລີ.

ຕໍ່ມາຮອດເດືອນ ໖ ປີ ໑໙໘໖ ຈຶ່ງໄດ້ມາປະຈຳຢູ່ ກອງບັນນາທິການ ໜັງສືພິມ ແລະ ພາກວິທະຍຸກະຈາຍສຽງກອງທັບ ເຊິ່ງກໍ່ແມ່ນ ໄລຍະນີ້ເອງ ເຂົາໄດ້ເລີ່ມມີຜົນງານດ້ານການຂີດຂຽນເລື່ອງສັ້ນ ແລະ ກາບກອນ ປະກົດໃນໜ້າໜັງສືພິມຕ່າງໆ.



# ຮັກເໜືອຊີວິດ

● ຈ. ວັນພູທອນ

ລູງສາກັບແຕ່ໄປທຳປາບາຣອດເຮືອນ ກໍເປັນເວລາງາຍແກ່ແລ້ວ ເມື່ອປົງຖົງດົ່ນນກ້ ເຊົາມີແຮງຫນ້ອຍຫນຶ່ງ ບໍ່ເຫັນທາວກອງຄຳຢູ່ເຮືອນລາວຈຶ່ງຖາມປ້າສີ, ພໍ່ຮູ້ວ່າກອງຄຳໄປກວດສຸຂະພາບ ແລະ ຂຶ້ນທະບຽນທະຫານພົນທະ ລູງກໍຮູ້ສຶກ ບໍ່ພໍໃຈຫລອນເວົ້າອອກຫມົດແຮງ ວ່າ:

- ຮຶ ! ມັນຢາກເປັນທະຫານຊັ້ນຫວາ, ຊິພົ້ນຖອກພົນທະອີສັງ ອ້າຍມັນກະດຽວວ່າໄປເປັນທະຫານຈົນຕາຍບໍ່ເຫັນຊິໄດ້ເງິນຄ່າຫົວ, ເສີກເສືອອີສັງກະດຽວວ່າແລ້ວຫມົດແລ້ວ.

ປ້າສີ ພວນຄົວປາຢູ່ເຮືອນຄົວໄດ້ເວົ້າຕອບລູງວ່າ:

- ເອີ ! ເຂົາໃຫ້ໄປກວດສຸຂະພາບ ແລະ ຂຶ້ນທະບຽນຊື່ງດອກ ກະບໍ່ທັນຮູ້ວ່າໃຜຊິໄດ້ໄປເທື່ອດອກ. ເພິ່ນໄປຫມົດທັງບ້ານທັງເມືອງ, ລູກເຮົາບໍ່ໄປກະຊິບໍ່ເປັນຕິ ແນວວ່າຢູ່ນຳບ້ານນຳເມືອງເພິ່ນ.

- ກວດກະກວດຂຶ້ນກະຂຶ້ນ ແນວໃດຂ້ອຍກະບໍ່ໃຫ້ມັນໄປເປັນ ທະຫານເດັດຂາດ, ເປັນທະຫານພັນທະຕັ້ງ ໓ - ໔ ປີ ກວ່າ ວ່າມັນກັບມາ ນາງຈຳປີຜູ້ຂ້ອຍໝາຍຊິເອົາເປັນລູກໃພ້ນັ້ນກະຊິບໍ່ເປັນແນວອື່ນໄປແລ້ວບໍ ?

ພໍ່ແຕ່ເວົ້າຮອດໜີ້ກໍ່ພໍດີກອງຄຳຂຶ້ນເຮືອນມາ, ລຸງສາຮີບຟ້າວນາບໄວ້ດ້ວຍໂວຫານທີ່ແຂງກາກ່ອນທີ່ກອງຄຳຈະທັນຊີ້ແຈງອະທິບາຍໃດໆ.

- ນີ້ ! ກອງຄຳ, ລູກຄິດດີແລ້ວຫວາ, ອັນເລື່ອງວ່າເປັນທະຫານນີ້ຊິແມ່ນທະຫານອິຫຍັງກໍຕາມ ພໍ່ນີ້ແມ່ນບໍ່ມັກຈັກດີ້... ທະຫານພັນທະບໍ່, ທະຫານອາສາສະໝັກບໍ່, ຫລືວ່າໄດໄປຮ່ຳໄປຮຽນນາຍທະຫານ ໄດ້ນາຍຮ້ອຍນາຍພັນມາພໍ່ກໍ່ບໍ່ດີໃຈ.

ກອງຄຳ ນັ່ງລົງເຊື່ອງໜ້າພໍ່ແລ້ວເວົ້າຕອບຢ່າງສຸພາບວ່າ:

- ພໍ່ເອີຍ ! ການທີ່ພວກເຮົາມີຊີວິດຢູ່ຢ່າງສະຫງົບສຸກ, ຢູ່ທ່າງທຳມາຫາກິນດີໃນຊຸ່ມນີ້ກໍ່ຍ້ອນບຸນຄຸນຂອງທະຫານ, ຍ້ອນມີກຳລັງທະຫານເປັນຮົ້ວປ້ອງກັນບໍ່ໃຫ້ສັດຕູໝູ່ມານ ເຂົ້າມາກໍ່ກວນທຳລາຍມ້າງເພຄວາມສະຫງົບສຸກ.

- ເອີ ! ເວົ້າແນວນີ້ກະແມ່ນຢູ່ ພໍ່ກະບໍ່ລືມບໍ່ຫລູ່ບຸນຄຸນຂອງທະຫານອັນນັ້ນມັນແມ່ນໜ້າທີ່ມັນແມ່ນວຽກຂອງທະຫານຢູ່ແລ້ວ, ລຸງສາເວົ້າຂຶ້ນ.

- ແຕ່ວ່າ ທະຫານກໍ່ໄປຈາກປະຊາຊົນໄດ໋ພໍ່ ແມ່ນປະຊາຊົນເປັນຜູ້ຊຸ້ມຊູສະໜັບສະໜູນ, ຖ້າປະຊາຊົນບໍ່ໃຫ້ການຊຸ້ມຊູທະຫານຈະຢູ່ໄດ້ແນວໃດແລະກຳລັງທະຫານນັ້ນຈະເອົາມາແຕ່ໃສ ? ກອງຄຳຕັ້ງເປັນບັນຫາໃຫ້ພໍ່ຄິດ.

ຜູ້ເປັນພໍ່ ຮູ້ສຶກໜຸດໜັດໃຈ ວາດໃດວາດໜຶ່ງ, ເພິ່ນຢືນຢັນ ຢ່າງແຂງຂັນວ່າ :

- ແນວໃດລູກກໍບໍ່ຕ້ອງໄປເປັນທະຫານ, ຖ້າວ່າລູກຖືກໄປພໍ່ກໍຈະຮ້ອງຂໍຕໍ່ອ້ານຳອຳນາດການປົກຄອງ. ພໍ່ບໍ່ຢາກໃຫ້ລູກໄປ, ພໍ່ຮັກລູກ, ຢາກໃຫ້ລູກສາວເປັນຄອບເປັນຄົວຢູ່ນຳພໍ່.

- ລູກກໍຍັງໜຸ່ມນ້ອຍຢູ່ ຖ້າສົມມຸດວ່າ ຕື່ມອີກ ໔ - ໕ ປີ ຈຶ່ງສ້າງຄອບຄົວ ກໍບໍ່ມີບັນຫາຫຍັງ ມັນບໍ່ຫລ້າບໍ່ສວາຍ ! ກອງຄຳເວົ້າຢ່າງໜັກແໜ້ນ .

ລຽງສາເຫັນວ່າລູກຊາຍມີທ່າອຽງຢາກໄປເປັນທະຫານ, ລາວຄິດຫາວິທີເພື່ອກີດກັນກອງຄຳໄວ້, ເປັນຫຍັງກອງຄຳຈຶ່ງເກີດມີແນວຄິດຢາກ ໄປເປັນທະຫານ ? ລຽງສາຄິດໄດ້ວ່າກ່ອນນີ້ ໔ - ໕ ນີ້ ມີພະນັກງານລົງມາ ເຕົ້າໂຮມປະຊາຊົນແຕ່ລຽງບໍ່ໄດ້ສົນໃຈປານໃດ ລາວເນົ້າແຕ່ຢາກໄປປ່າເພື່ອຊອກຢູ່ຫາກິນ, ອີກແນວໜຶ່ງລຽງຍັງເຫັນວ່າ ການໄປນັ່ງຟັງພະນັກງານເພິ່ນເວົ້ານັ້ນບໍ່ມີແນວມ່ວນຊື່ນຕື່ນເຕັ້ນມີແຕ່ເຫງົານອນ. ນັ່ງໄປດົນກໍເຈັບຫລັງເຈັບແອວ . ຈຶ່ງໄດ້ບອກໃຫ້ກອງຄຳໄປຟັງ ລຽງໄດ້ຍິນໝູ່ຜູ້ໄປຟັງເາໂສກັນດີຈັ່ງວ່າ ແມ່ນທິດທາງວຽກງານປ້ອງກັນຊາດທົ່ວປວງຊົນນີ້ລະ ລຽງກໍບໍ່ຈື່ຄັກເພາະບໍ່ໄດ້ສົນໃຈປານໃດ.

× ×

×

ສຽງກອງດັງມາແຕ່ວັດ, ເປັນສັນຍານບອກເຕືອນໃຫ້ຄົນໄປເຕົ້າໂຮມເພື່ອເຮັດພິທີສົງນ້ຳພະໃນໂອກາດບຸນປີໃໝ່ລາວ, ຊາວໜຸ່ມຍິງຊາຍໃຜກໍນຸ່ງເຄື່ອງຈົບງາມໄປຮ່ວມພິທີສົງນ້ຳ, ຈາກນັ້ນກໍຫລິ້ນມ່ວນຊື່ນກັນໄປຕາມຮີດຄອງ

ປະເພນີ, ຢູ່ໃນໝູ່ຊາວໜຸ່ມນັ້ນມີກອງຄຳ ແລະ ຈຳປີ ຊຶ່ງທັງສອງພວມຢູ່ໃນໄລຍະຕົ້ນຂອງເສັ້ນທາງ ຮັກອັນເປັນໄລຍະທີ່ມີຄວາມດູດດື່ມຊາບຊຶ້ງ ເປັນພິເສດ ຫລັງຈາກຫລິ້ນມ່ວນຊື່ນຕາມສົມຄວນແລ້ວ ກອງຄຳ ໄດ້ມາສົ່ງຈຳປີເຖິງເຮືອນ, ມັນເປັນໂອກາດດີ ສຳລັບຈຳປີທີ່ຈະໃຊ້ຄວາມຮັກທີ່ກຳລັງເບັ່ງບານນີ້ ເປັນເຄື່ອງຜູກມັດ ກອງຄຳ ໃຫ້ເລີກລົ້ມຄວາມຕັ້ງໃຈຂອງເຂົາ ທີ່ອາສາສະໝັກເຂົ້າເປັນທະຫານ. ຄຳຂໍຮ້ອງຂອງລຸງສາ ພໍ່ຂອງກອງຄຳ ຊຶ່ງຈະເປັນປູ່ຂອງນາງໃນອະນາຄົດດັງກ້ອງຢູ່ໃນໃຈ " ດຽວນີ້ພໍ່ບໍ່ຄິດເຫັນໃຜ ນອກຈາກລູກຈຳປີຜູ້ດຽວທີ່ຈະຈອງດຶງເອົາ ກອງຄຳໄວ້ ເພື່ອໃຫ້ຖອນຕົວ ຈາກການສະໝັກເຂົ້າເປັນທະຫານ, ທັງນີ້ກໍເພື່ອອະນາຄົດ ແລະເພື່ອຄວາມສຸກຂອງ ພວກລູກ ".

ຈຳປີເຊີນໃຫ້ ກອງຄຳ ນັ່ງລົມກັນຈັກໜ່ອຍກ່ອນ ຈຶ່ງເມືອ ເພາະມີເລື່ອງສຳຄັນທີ່ຈະເວົ້ານຳ.

ເມື່ອໄດ້ຫານ້ຳຫາທ່ານາສູ່ແຂກພິເສດແລ້ວ, ຈຳປີກໍນັ່ງລົງ ຄຽງຂ້າງ ກອງຄຳ ແລະ ເອີ່ຍຖາມຂຶ້ນວ່າ :

- ອ້າຍກອງຄຳ ! ນ້ອງໄດ້ຍິນຂ່າວວ່າອ້າຍສະໝັກໄປເປັນທະຫານຜູ້ໜຶ່ງ ທັງໆທີ່ອ້າຍບໍ່ມີລາຍຊື່ຢູ່ໃນຈຳນວນຜູ້ຖືກເປັນທະຫານພັນທະແມ່ນບໍ ?

- ແມ່ນແທ້ ອ້າຍບໍ່ຖືກ ແຕ່ວ່າອ້າຍສະໝັກໄປ " ກອງຄຳຕອບ.

- ເປັນຫຍັງອ້າຍຈຶ່ງສະໝັກໄປໃນເມື່ອອ້າຍສືບປອງ ຊຶ່ງແມ່ນ ອ້າຍຂອງອ້າຍກໍໄດ້ຮັບໃຊ້ໃນກອງທັບ ຈົນເສຽສະຫລະ ກໍຖືວ່າຄອບຄົວ ຂອງອ້າຍໄດ້ປະກອບສ່ວນໃຫ້ແກ່ ປະເທດຊາດຢ່າງສົມກຽດແລ້ວເດ !

- ນັ້ນແມ່ນກຽດຂອງລູກຜູ້ຊາຍທີ່ຊື່ສືບປອງ. ແຕ່ວ່າ ອ້າຍກໍເປັນ ຜູ້ໜຶ່ງທີ່ມີພັນທະຕໍ່ປະເທດຊາດ, ຄວນຈະໄດ້ປະກອບສ່ວນຮັບໃຊ້ເປັນຮົ້ວ ປົກ

ປ້ອງເອກະລາດ ອະທິປະໄຕຂອງຊາດເອົາໄວ້ໃນຖານະທີ່ເປັນລູກຜູ້ຊາຍ ແລະ ເປັນພົນລະເມືອງລາວຜູ້ໜຶ່ງ.

– ຊັ້ນ ອ້າຍບໍ່ຄິດເຖິງເລື່ອງຂອງເຮົາສອງຄົນແດ່ຫວາ, ຖ້າວ່າອ້າຍໄປແລ້ວນ້ອງຊິຢູ່ແນວໃດ ? ຫລືວ່າ ອ້າຍກຳລັງຄິດຈະຕີຕົວອອກຫ່າງ ! ປະໂຫຍກຫລັງນີ້ຈຳປີເວົ້າອອກ ດ້ວຍນ້ຳສຽງທີ່ບອກເຖິງຄວາມເສົ້າໂສກ ຄືກັບວ່າຕົນກຳລັງຈະຜິດຫວັງ ຊຶ່ງກໍເຮັດໃຫ້ຈິດໃຈຂອງກອງຄຳ ອ່ອນໄຫວ ໄປຕາມແຕ່ແລ້ວ ເຂົາກໍຕັ້ງໃຈໃໝ່ລວບລວມສະຕິອາລົມໃຫ້ປົກກະຕິດີ ແລ້ວຕອບ ກັບຄົນຮັກຂອງເຂົາວ່າ :

– ໄລຍະ ໔ – ໕ ປີ ມັນບໍ່ດົນເກີນໄປດອກ ຈຳປີ ! ນ້ອງກໍຢູ່ນຳພໍ່ນຳແມ່ຖ້າຈົນກວ່າອ້າຍສຳເລັດໜ້າທີ່ກັບມາ. ອ້າຍເຊື່ອວ່າ ຈຳປີ ຂອງອ້າຍຈະຕອງລໍໄດ້.

– ລໍກໍລໍຫັ້ນແຫລະ ! ແຕ່ວ່າມັນຊິບອກກ່ອນເພິ່ນລະບໍ່ຄິດ, ເລື່ອງລໍ ຫັ້ນນ້ອງລໍໄດ້ຢູ່ ແຕ່ວ່າບາດລໍແລ້ວ ຜິດຫວັງຫັ້ນດເ, ໔ – ໕ ປີ ຄົນເຮົາກໍແກ່ໄປນຳບາດຮອດຕອນນັ້ນອ້າຍຜັດຊິຕິວ່ານ້ອງ ເປັນສາວເຖົ້າ.

ກອງຄຳ ຮີບຜາວຕັດເບິດສັນທີ : " ນ້ອງຄິງ ຄິດວ່າອ້າຍເປັນຄົນໂລເລ ເວົ້າບໍ່ມີສັດຈະແນວນັ້ນລະ, ອ້າຍຮັກນ້ອງບໍ່ແມ່ນວ່າຈະຮັກແຕ່ພຽງ ຮູບຮ່າງພາຍນອກ, ອັນສຳຄັນມັນຢູ່ບ່ອນຈິດໃຈຂອງເຮົາທັງສອງ, ມີຊຸດີມການດຽວກັນ ເຊື່ອໝັ້ນຈິງໃຈຕໍ່ກັນ ນັ້ນຕ່າງຫາກ, ເລື່ອງຮູບຮ່າງໃພໆ ກໍຮູ້ມັນບໍ່ແມ່ນຂອງຈີລັງຢັ້ງຢືນຫຍັງ ນັ້ນແມ່ນກົດເກນຂອງມັນ, ການເວລາຜ່ານໄປມັນກໍແກ່ໄປໃຜຈະໄປຫ້າມມັນໄດ້ ແຕ່ສຳຄັນຢູ່ບ່ອນວ່າ ເຮົາບໍ່ໄດ້ຮັກກັນ ແຕ່ພຽງຍຶດໝັ້ນໃນດ້ານຮູບສົມບັດ "

– ແຕ່ແນວໃດນ້ອງກໍບໍ່ຢາກໃຫ້ອ້າຍໄປ ເພາະວ່າອະນາຄົດມັນສ່ອງບໍ່ເຫັນ ຈຳປີເວົ້າສຽງອ່ອນ ໆ.

- ນັ້ນນ້ອງຄຶດຫລາຍໄປເອງ. ແມ່ນວ່າອະນາຄົດນັ້ນຊິບໍ່ແນ່ນອນ,ແຕ່ ຄວາມຮັກຂອງເຮົາຕ້ອງແນ່ນອນ. ນ້ອງອາດໝາຍເຖິງວ່າ ອ້າຍເປັນທະຫານແລ້ວຖ້າມີອັນເປັນໄປ... ຊຶ່ງ ຄວາມຈິງແລ້ວຄົນເຮົາທຸກຄົນລ້ວນແຕ່ຫຼີກບໍ່ພົ້ນຄວາມຕາຍ, ຖ້າວ່າ ເຖິງຄາວມາແລ້ວແມ່ນຈະຢູ່ໃສກໍຕາຍ .

ບັນຍາກາດນີ້ນັ້ນເຕັມແຕ່ຄວາມເສົ້າ ເປັນຄັ້ງທຳອິດທີ່ ກອງຄຳໄດ້ເຫັນນ້ຳຕາຂອງຈຳປີ, ແຕ່ລູກຜູ້ຊາຍຢ່າງເຂົາກໍມີຄວາມສາມາ ພໍທີ່ຈະຍົກເຫດຜົນມາອະທິບາຍຕໍ່ຄູ່ຮັກຂອງຕົນ. ໃນໃຈຂອງກອງຄຳ ເຕັມໄປແຕ່ຄວາມສັບສົນແຕ່ບໍ່ແມ່ນ ເຂົາກຳລັງຈະປະລາໄຊໃຫ້ກັບແນວຄິດສັ້ນໆ ຕື້ນໆ, ເຂົາຄິດຫາວິທີທີ່ຈະຊີ້ແຈງອະທິບາຍໃຫ້ຈຳປີເຂົ້າໃຈຄວາມຈິງ ເຂົ້າໃຈ ຕົວເຂົາ ແລະ ເຂົ້າໃຈຕໍ່ໜ້າທີ່ອັນຈຳເປັນແລະ ມີກຽດຂອງພົນລະເມືອງ.ສ່ວນຝ່າຍຈຳປີນັ້ນຍັງບໍ່ທັນເຫັນແຈ້ງຄວາມໝາຍສຳຄັນຂອງພັນທະ, ນາງມີແຕ່ຄິດເຖິງເລື່ອງສ່ວນຕົວ ແລະ ຄວາມຮັກ ເຊິ່ງນາງປາຖະໜາຢາກໃຫ້ມີ ແຫ່ງຄວາມສົມຫວັງນັ້ນຫຍັບເຂົ້າມາຢູ່ໃກ້ໆ ນີ້ .

× ×

×

ຕັ້ງແຕ່ນີ້ນັ້ນມາ, ຈຳປີຄິດຫລາຍຈົນນອນບໍ່ຫລັບ, ນາງບໍ່ຢາກໃຫ້ກອງຄຳຕ້ອງຈາກໄປເປັນທະຫານ ນາງຢາກຂໍຮ້ອງນຳເຂົາອີກຄັ້ງໜຶ່ງ ແຕ່ກໍຍັງບໍ່ມີໂອກາດ.

ເຊົ້າມື້ໜຶ່ງ, ຈຳປີກັບມາແຕ່ໄປຕັກນ້ຳ ຮອດທາງຄົບນາງເຫັນ ອ້າຍນ້ອງກອງຫລອນ ມີ ຄົນ ຍ່າງມາແຕ່ທາງບ້ານປາກຍັນ ເບິ່ງຊືງ ຄືຈັ່ງວ່າຟ້າວຟື່ງນາງຈຶ່ງຖາມດ້ວຍຄວາມຢາກຮູ້ວ່າ :

- ພວກອ້າຍມາຫຍັງແຕ່ເຊົ້າແທ້ ?

ສະຫາຍບຸນນຳຫົວໜ້າໝູ່ກອງຫລອນຕອບຄຳຖາມຂອງນາງ ຢ່າງຟ້າວຟັ່ງວ່າ :

- ມື້ຄືນນີ້ ມີກອງປຸ້ນຂອງພວກເຈົ້າຟ້າໄດ້ເຂົ້າໄປບ້ານປາກຍັນໃນຂະນະທີ່ຄົນພວມກິນເຂົ້າແລງຢູ່, ພວກມັນໄດ້ໃຊ້ປືນຍິງກວາດ ພ້ອມທັງຂວ້າງໝາກແຕກໃສ່ເຮືອນປະຊາຊົນເຮັດໃຫ້ມີຄົນຕາຍ ແລະ ບາດເຈັບຫລາຍຄົນ.

ພໍໄດ້ຍິນວ່າສັດຕູຍິງປະຊາຊົນ ຢູ່ບ້ານປາກຍັນ ຈຳປີຟ້າວຖາມຂ່າວທາປ້າ ແລະ ຄອບຄົວຂອງເພິ່ນ ໂດຍສະເພາະແມ່ນເອື້ອຍແກ້ວຊຶ່ງຮັກແພງ ກັນຫລາຍ ແລະ ເມື່ອຮູ້ວ່າເຮືອນຂອງປ້າຖືກສັດຕູຍິງກ່ອນໝູ່ ເພາະຢູ່ແຄມບ້ານບ່ອນພວກມັນເຂົ້າມາທຳອິດ. ປ້າພ້ອມທັງເອື້ອຍແກ້ວ ແລະ ເດັກນ້ອຍ ໃນເຮືອນອີກຄົນໜຶ່ງຕາຍຄາພາເຂົ້າ ໝາກໜາວຂອງຈຳປີແຕກເຍືອກ ພ້ອມບາດ, ນາງຟ້າວຫາບນ້ຳເມືອເຮືອນປົງຫາບນ້ຳແລ້ວກໍແລ່ນໄປເຮືອນ ກອງຄຳທັນທີ.

ເຫັນກອງຄຳກັບລຸງສາ ແລະປ້າສີຢູ່ເຮືອນຢ່າງຄົບໜ້າ ຈຳປີກໍຮີບຟ້າວລາຍງານເຫດຮ້າຍທີ່ເກີດຂຶ້ນ ຢູ່ບ້ານປາກຍັນຄືນນີ້ໃຫ້ຟັງ ຢ່າງລຽນໄຫລ ຕາມທີ່ໄດ້ຮັບຮູ້ຈາກອ້າຍນ້ອງກອງຫລອນຜູ້ມາສົ່ງລາຍງານ ນາງເລົ່າດ້ວຍນ້ຳສຽງທີ່ແຂງທາວ, ເຕັມໄປດ້ວຍຄວາມຄຽດແຄນ. ລຸງສາໄດ້ຍິນແລ້ວ ກໍຄິດຮອດນ້ອງຊາຍຂອງຕົນພ້ອມບາດ ຢາກຮູ້ວ່າຊະຕາກຳຂອງນ້ອງເປັນຄືແນວໃດ. ລາວຟ້າວຖາມວ່າກອງຫລອນຜູ້ມາສົ່ງລາຍງານນີ້ກັບເມືອແລ້ວຫລືຍັງ? ເມື່ອຮູ້ວ່າເຂົາເຈົ້າຍັງພັກຢູ່ເຮືອນປະທານບ້ານ, ລາວຕັ້ງໃຈວ່າ ອີກຈັກໜ່ອຍຈະ

ໄປພົບເພື່ອຖາມຂ່າວຫານ້ອງຊາຍ. ກອງຄຳເຫັນເປັນໂອກາດດີຂອງຕົນ ກໍເລີຍເວົ້າອອກຢ່າງໜັກແໜນວ່າ :

- ນັ້ນລະ ໂທດກຳຂອງສັດຕູ, ຍາມໃດພວກມັນກໍມີແຕ່ ເຂັ່ນຂ້າຣາວີປະຊາຊົນຢ່າງບໍ່ຄິດເລີຍວ່າ ປະຊາຊົນບໍ່ມີອາວຸດຫຍັງຈະຕໍ່ສູ້ກັບມັນ. ແມ່ນວ່າດຽວນີ້, ປະເທດຊາດຂອງພວກເຮົາໄດ້ປົດປ່ອຍຢ່າງສົມບູນແລ້ວ. ແຕ່ພວກປະຕິການທີ່ໂຕນໜີໄປຢູ່ ຕ່າງປະເທດກໍຍັງບໍ່ທັນປະລະກົນອຸບາຍມ້າງເພພວກເຮົາ. ໂດຍໄດ້ຮັບການຊ່ວຍເຫລືອອູ້ມຊູຈາກຕ່າງປະເທດ, ພວກເຂົາໄດ້ຈັດຕັ້ງກອງປຸ້ນເລັດລອດເຂົ້າມາເຄື່ອນໄຫວກໍ່ກວນປຸ້ນສະດົມເຂັ່ນຂ້າ ປະຊາຊົນເຮົາຢູ່ຕາມຊົນນະບົດຫ່າງໄກ. ຖ້າພວກເຮົາຫາກບໍ່ສາມັກຄີກັນແໜນນ, ຍົກສະຕິລະວັງຕົວໃຫ້ສູງຢູ່ທຸກເວລາຖືເອົາວຽກງານປ້ອງກັນຊາດປ້ອງກັນ ຄວາມສະຫງົບເປັນວຽກທີ່ສຳຄັນກວ່າໝູ່ແລ້ວປະຊາຊົນເຮົາກໍຈະບໍ່ໄດ້ດຳລົງຊີວິດ ຢູ່ຢ່າງສະຫງົບສຸກ .

ລຸງສາ ໄດ້ເຂົ້າໃຈແຈ້ງຂຶ້ນ, ບາດນີ້ລຸງເຫັນວ່າວຽກງານ ປ້ອງກັນຊາດປ້ອງກັນຄວາມສະຫງົບແມ່ນໜ້າທີ່ຂອງໝົດທົ່ວປວງຊົນ. ແມ່ນພັນທະອັນມີກຽດທີ່ທຸກຄົນຈະຕ້ອງໄດ້ປະກອບສ່ວນ... ໃນຂະນະທີ່ເຂົາເຈົ້າພວມໂອ້ລົມກັນຢູ່ນັ້ນອ້າຍແຈງຫົວໜ້າຊຸມ ກໍຂຶ້ນເຮືອນມາຢ່າງຟ້າວຟັ່ງ ແລ້ວບອກລຸງໄປເບິ່ງນ້ອງຊາຍທີ່ຖືກປືນຢູ່ບ້ານປາກຍັນມື້ຄືນນີ້ ບາດເຈັບສາຫັດ ແລະ ນຳສົ່ງໄປ ໂຮງໝໍເມືອງປາກລາຍແຕ່ເຊົ້າພຸ້ນ .

ຂ່າວນີ້ຍິ່ງເພີ່ມທະວີ ຄວາມຄຽດແຄ້ນໃຫ້ລຸງສາຕື່ມອີກ, ລາວກັດແຂ້ວແໜ້ນ ແລະ ເວົ້າວ່າ " ຖ້າກູຍັງເປັນໜຸ່ມກູນີ້ລະຈະສະໝັກໄປເປັນ ທະຫານຜູ້ໜຶ່ງ ".

ກອງຄໍາ ມີສີໜ້າແຈ່ມໃສເມື່ອໄດ້ເຫັນພໍ່ຂອງເຂົາເຂົ້າໃຈບັນຫາຢ່າງຖືກຕ້ອງ, ເຂົາອວ່າຍໜ້າໄປຫາຈໍາປີເພື່ອຢາກຖາມຄວາມເຫັນຂອງນາງແຕ່ບໍ່ທັນໄດ້ເອື້ຍປາກ ຈໍາປີກໍ່ຮີບຟ້າວເວົ້າກ່ອນວ່າ: " ນ້ອງເຂົ້າໃຈໝົດແລວ ປະເທດຊາດແມ່ນຢູ່ເໜືອສິ່ງອື່ນໃດໝົດ, ພາລະກິດປົກປັກຮັກສາປະເທດຊາດແມ່ນໜ້າທີ່ຂອງປວງຊົນທັງໝົດ, ຄວາມຮັກຊາດແມ່ນຍິ່ງໃຫຍ່ ແລະຢູ່ເໜືອຄວາມຮັກອື່ນໆ ຢູ່ເໜືອແມ່ນກະທັ້ງຊີວິດຂອງເຮົາອີກ, ນ້ອງເຫັນດີ ທີ່ອ້າຍສະໝັກໄປເປັນທະຫານ ແລະ ເຖິງແມ່ນວ່ານ້ອງຈະເປັນຜູ້ຍິງແຕ່ນ້ອງ ກໍ່ມີຄວາມຕັດສິນໃຈເດັດດ່ຽວ ແລະ ຂໍສະໝັກໄປເປັນທະຫານເຮັດໜ້າທີ່ ປ້ອງກັນຊາດຄືດຽວກັບອ້າຍ "

●●



ເນັ່ງ ໄຊຫວ່ງ

ເນັ່ງ ໄຊຫວ່າງ ເກີດເມື່ອວັນທີ ໗/໙/໑໙໔໔ ທີ່ແກ່ວແສດ ຖິ່ນພູ ດອຍສອກຫລີກ ແຫ່ງໜຶ່ງ ຂອງແຂວງຊຽງຂວາງ. ເປັນເດັກເກີດຢູ່ ໃນ ເຂດຕໍ່ຕ້ານ ເຂດທີ່ຫມັ້ນແຫ່ງໜຶ່ງ ຂອງການປະຕິວັດ ແລະເຕີບໃຫຍ່ຂື້ນ ບົນ ແປວໄຟສົງຄາມ.

ພາຍຫລັງ ຮຽນຈົບຄູຊັ້ນສູງ ໃນປີ ໑໙໖໗ ໄດ້ດຳເນີນອາຊີບຄູ ສອນ ວິຊາ ເລກ-ວັດຖຸ ພ້ອມກັນນັ້ນ ກໍ່ໄດ້ເຄື່ອນໄຫວ ດ້ານວັນນະຄະດີໄປນຳ.

ປີ ໑໙໗໘ ຫນັງສືພິມ "ຫນຸ່ມລາວ" ໄດ້ລົງພິມເລື່ອງສັ້ນ ເລື່ອງທຳອິດ ຂອງເຂົາ ມີຊື່ວ່າ " ບົນເສັ້ນທາງດຽວກັນ " ແລະຕໍ່ມາ ເລື່ອງສັ້ນ " ງູ ຫລາຍແດງ ທີ່ແກ່ວນອນ " ແລະ "ຄິດເຖິງວັນນັ້ນ" ຂອງເຂົາ ກໍ່ປາກົດໃນ ໜ້າຫນັງສືພິມ "ຫນຸ່ມລາວ...

ວັນນະສິນກໍ່ໄດ້ລົງພິມ ເລື່ອງສັ້ນກອດສອບ ຮາງວັນປະເພດສອງ ຂອງ ເນັ່ງ ໄຊຫວ່າງ ຄື "ລະດູບານໃຫມ່ ຢູ່ຖິ່ນພູພຽງ" ແລະ ບົດຄວາມ ຈຳນວນ ຫນຶ່ງ.

ເນັ່ງ ໄຊຫວ່າງ ຍັງຂຽນບົດລະຄອນວິທະຍຸອີກ ຄື "ຟັ່ງເຊກອງ" ປີ ໑໙໗໔ , ລະຄອນເວທີເລື່ອງ "ສຽງເພງຮັກ ທີ່ພູພຽງ " ເຊິ່ງໄດ້ນຳອອກ ສະແດງ ຮັບໃຊ້ຜູ້ຊົມ ແລະລົງພິມໃນ ຫນັງສືພິມ "ແຮງງານ" .



# ກຸຫຼາບແດງ ທີ່ແກ່ວພອນ

● ເພົ່າ ໄຊທ່ອງ

**ລົດ** ແລ່ນຕາມສາຍທາງຂຶ້ນພູ ແລະ ຢຸດຢູ່ຕໍ່ໜ້າປາກທາງແວ່ເຂົ້າຄຸ້ມເຮືອນ ມຸ່ງຫຍ້າຄາ, ທາງເປືອ (ທາດິນ). ແສງທອງເຕັ້ນລົງຈາກຫ້ອງຂັບພ້ອມຈັບຫໍ່ເຄື່ອງນ້ອຍໆ ໃນມື.

- ແສນ ! ບອກອ້າຍເດດເດີ້! ໃຫ້ພວກເພິ່ນກາຍເມືອກ່ອນ! ກັນແວ່ເທິງນີ້ (ຊຸ້ມໄປໃສ່ຄຸ້ມເຮືອນ), ຈັກບຶດ, ກັນລົງມາເດີ້! ແສງທອງອ່ວາຍໜ້າເວົ້າກັບຜູ້ໜຶ່ງທີ່ນັ່ງເທິງລົດ.

- ຫ້ວາຍ! ທອງ! ໂຕກ້ະໄວໆແດ່ໄດ ແດດຮ້ອນຫລາຍເກາະ !

- ເອີ ! ພົບນາງຫ່າແລ້ວກັນກໍ່ກັບໂລດດອກ !

ແສງທອງຍ່າງຂຶ້ນຕາມທາງຂັ້ນໄດ, ລອດຜ່ານປະຕູຮົ້ວທີ່ມີປ້າຍ ຂຽນວ່າ: " ເບິ່ງຫວຽນກົງເຍີນເກົ່າເດືອງໂຮ່ຣາຍ"(ໂຮງໜໍກ້ານະກອນ ຮົວທາງນ້ຳເບີສອງ )

- ຈ່າວດົງຈີ! (ສະບາຍດີສະຫາຍ!) ແສງທອງຖາມ.

- ຈາວ ! !(ສະບາຍດີ!) ນາງແພດຫວຽດນາມໃນຊຸດເຄື່ອງ ຂາວປະຈຳການເກົ່າ ຖາມແສງທອງເຫມືອນກັນຢູ່ຕໍ່ຫນ້າທາງເຂົ້າເຮືອນ.

- ສະຫາຍມີວຽກຫຍັງ ?

- ຢາກພົບນາງຫວຽນຖິທ່າຈັກຫນ້ອຍ.

- ນາງຫວຽນຖິທ່າເບາະ ! ນາງຫວຽນຖິທ່າ! ນາງແພດ ຄົນນັ້ນເວົ້າຊື່ຫວຽນຖິທ່າຊ້ຳຄືນເທື່ອຫນຶ່ງ .

- ລາວຢູ່ບໍ ? ! ແສງທອງຖາມສິຍິ້ມ ອາຍໆ ຈັກຫນ້ອຍ.

- ເຊີນສະຫາຍ ເຂົ້ານັ່ງຢູ່ຫ້ອງຮັບແຂກພໍລໍຖ້າຈັກຫນ້ອຍ.

ແສງທ່ອງຍ່າງເຂົ້າຫ້ອງຮັບແຂກ ເຊິ່ງກ່ອນນີ້ກໍ່ໄດ້ມີໂອກາດ ມານັ່ງເປັນຫລາຍເທື່ອ. ນາງແພດໄຂຕູ້, ຈັບຟີກນ້ຳ, ເອົາກາດິນມາຕັ້ງໄວ້ ເທິງໂຕະ, ໄຂ ແລະ ຖອກແຈຫອມເຕົາຕຶງລົງກາດິນ; ຖອກນ້ຳຮ້ອນລົງໃສ່ກາ.

- ອ້າຍມາແຕ່ໃສ ? ນາງແພດສັກຕາເບິ່ງ ແລະຖາມ.

- ອ້າຍມາແຕ່ວຽງຈັນ, ຂະບວນລົດຍົນສົ່ງຂອງພວກອ້າຍ ກາຍເມືອຊຳເຫນືອພຸ້ນ .

- ໂອ ! ຊັ້ນຫວາ ? ອ້າຍເຄີຍມາແວ່ບ່ອນນີ້ຫລາຍເທື່ອແລ້ວຫນາ? ເຮັດຈັ່ງໃດ ຈຶ່ງຮູ້ກັບນາງຫວຽນຖິທ່າ ?

- ເດືອນກັນຍາປີກ່ອນພຸ້ນ, ຕອນເສັ້ນທາງນີ້ພວມບຸກເບີກ, ອ້າຍກໍ່ໄດ້ຂັບລົດຜ່ານກາຍແຖວນີ້ ແລະ ຄັ້ງນັ້ນໂຊກດີມີໂຮງຫມໍຫລັງນີ້ ສະນັ້ນ ອ້າຍຈຶ່ງປອດໄພເກາະ .

- ເປັນຫຍັງລະ ?

- ອ້າຍເຈັບໄສ້ເຫລືອມາແຕ່ລຸ່ມພຸ້ນ ພໍດີມາຮອດນີ້, ອ້າຍກະເລີຍເຂົ້າໂຮງຫມໍນີ້ ແລະ ຜ່າຕັດຢູ່ນີ້ເລີຍ.

- ໂອ ! ຊັ້ນເດ ! ອ້າຍກໍລະວ່າ ຮູ້ແຖບນີ້, ເຄີຍແຖບນີ້ດີ, ເອົາ ເຊີນດື່ມນ້ຳແຈ ແລະ ນັ່ງຖ້າເດີ້! ແສງທອງນັ່ງຢູ່ຄົນດຽວ ແລະ ຄິດຫຼັງກໍ.

ແນນບໍ່ເຫັນຜູ້ແກ່ວ່ນເຄີຍໃດໆ, ແພດຢູ່ນີ້ກໍມີຄົນໃຫມ່ຫຼາຍຄົນ ຜູ້ເກົ່າ ຄືຊິແນ່ນເອົາເນື້ອຢາມບ້ານຕາມກຳນົດຮອບວຽນ ແລະ ບຸກເບີກທີ່ນູທາງເສັ້ນນີ້ສຳເລັດ ພວກເພື່ອນບ້ານຫວຽດນາມກໍ່ຈະມອບຫມາຍເສັ້ນທາງໃຫ້ ແລະ ໂຮງຫມໍຮັບໃຊ້ກຳມະກອນຍົວທາງແຫ່ງນີ້ກໍ່ຈະຍົກຍ້າຍເມືອປະເທດ ເພາະ ເຈັ້ນສັນຍາຊ່ວຍເຫລືອກໍ່ສ້າງເສັ້ນທາງຄົມມະນາຄົມນີ້ກໍມີກຳນົດບໍ່ດົນ ພຽງໃດ ວເລານັ້ນຫວຽນຖິຫ່າກໍ່ຈະພັດພາກແຫ່ງນີ້ກັບເມືອບ້ານເກີດທາງສາຍແດນຟາກນັ້ນ. ໂອຍ! ແສນຄິດຮອດ ຄິດຮັກອີ່ຫລີ.

- ສະບາຍດີ ! ສະຫາຍ ! ທ່ານຫມໍ ຍ່າງເຂົ້າມາ ພ້ອມກັບສຽງຖາມທຳສະເດີດຕໍ່ຄວາມນຶກໆ ເຫິງນັ້ນຂອງແສງທອງ.

- ຈ້າວ! ສະບາຍດີ! ທ່ານຫມໍ ກະສະບາຍດີຕະວ່າ !

- ຫວ່າງນີ້ກະບໍ່ມີການເຈັບເປັນຢ່າງໃດດອກ! ແຂງແຮງດີຢູ່.

ນາງແພດໃສ່ຊຸດເສື້ອງຂາວ. ກັບມານັ່ງຕັ່ງເບື້ອງຂ້າງ ແລະ ຢາຍຈອກນ້ຳຊາໃຫ້ທ່ານຫມໍ ໃຫ້ແສງທອງທີ່ເປັນແຂກ.

- ນາງຫວຽນຖິຫ່າລາວກໍ່ຢູ່ບໍ່ ? ແສງທອງກະຖາມດ້ວຍສີຫນ້າອາຍໆ ຕໍ່ກັບທ່ານຫມໍ.

- ນາງຫວຽນຖິຫ່າ! ອາ ລາວກໍ່... ທ່ານຫມໍບໍ່ເວົ້າແຈ້ງ

- ເອີ ! ອັນນີ້ກະເລື່ອງສ່ວນຕົວກັນດອກ. ແສງທອງ ເລີ່ມຕົ້ນເລົ່າເລື່ອງຕົນ ແລະ ນາງຫວຽນຖິຫ່າ ສູ່ທ່ານຫມໍຟັງ.

ເດືອນກັນຍາປີກ່ອນນັ້ນຫມູ່ເພື່ອນໄດ້ຟາກເຂົ້າໄວ້ນີ້, ເພື່ອຜ່າຕັດໄສ້ເຫລືອຢູ່ໂຮງຫມໍແຫ່ງນີ້. ເພາະອາການກະທັນຫັນ ຖ້າບໍ່ຜ່າຕັດໄສ້ເຫລືອ ຢູ່ໂຮງຫມໍແຫ່ງນີ້ຈັກວ່າຈະເອົາຊີວິດຂອງຂ້ອຍຄືນຄືແນວໃດ.

ຕອນນັ້ນລະດູໜາວ ແລະ ຢູ່ແຖບນີ້ກະໜາວຫລາຍ ຂ້ອຍຮູ້ສຶກ ເຈັບປວດບາດແຜ, ຫວງຽນຖີຕ່າມາປົວລະບັດຂ້ອຍ ແລະ ມັກຊວນຂ້ອຍຊື່ນອົກ ຊື່ນໃຈສະເໝີ. ຂ້ອຍກະບໍ່ເຄີຍພົບພໍ້ນາງສາວຄົນໃດທີ່ຊ່າງເວົ້າຊ່າງລົມ, ນິລະດູບຄ່ຽນຄືນ, ນິລະດັບສະໜິດສະໜົມຕໍ່ກັບຂ້ອຍຄືຫວງຽນຖີຕ່າ. ເອີ ຕອນຂ້ອຍປະຕິເສດບໍ່ກິນນ້ຳນົມງົວ ( ຂ້ອຍບໍ່ມັກປານໃດ ) ນັ້ນລາວວ່າ :

- ອ້າຍບໍ່ກິນນ້ຳນົມງົວ (ນົມປ່ອງ) ແມ່ນວ່າ ອ້າຍຈະນານ ແຂງແຮງ ! ອ້າຍບໍ່ງາມທີ່ສາວຫວຽດນາມບໍ່ມັກໄດ໋! ສາວຫວຽດນາມຢູ່ນີ້ ມີຫຼາຍຄົນກໍ່ງາມໆໄດ໋ ! ບາງຄັ້ງຂ້ອຍກະອົດຫົວຢູ່ບໍ່ໄດ້. ລາວພັດເວົ້າວ່າ: ຫົວຫລາຍໄສ້ຂາດຖີ້ບໍ່ໄດ້ ເນີຍໄດ໋! ສາວຫວຽດນາມບໍ່ເອົາໄດ໋! ນີ້ຄັ້ງລາວກໍ່ມາປ້ອນນ້ຳນົມງົວໃຫ້ຂ້ອຍ ຂ້ອຍຄຶດຮອດໜູ່ຄູ່ຂອງຂ້ອຍ, ຂ້ອຍງ່ວນເຫງົາ ລາວພັດເວົ້າວ່າ: ນີ້ແມ່ນໃຜ - ລາວຖາມຊື່ງ. ຂ້ອຍບໍ່ຮູ້ຈັກວ່າລາວ ຈະຖາມເລື່ອງຫຍັງ. ລາວພັດຟ້າວຕອບພ້ອມແກ້ມຍິ້ມຫົວ: ນີ້ແມ່ນສາວຫວຽດນາມໄດ໋ ... ເມື່ອ ເຂົ້າໄປທີ່ນອນປິ່ນປົວຂອງແມ່ເຖົ້າຄົນໜຶ່ງຫວງຽນຖີຕ່າພັດຍິ້ມ ສະເໝີ ແລະ ເວົ້າວ່າ: ລູກສາວຂອງແມ່ໄດ໋! ລູກສາວຫວຽດນາມ! ລູກສາວເອົາເຂົ້າມາ, ແມ່ຕ້ອງກິນຫລາຍໆ ໃຫ້ແມ່ດີໄວໆ ຈຶ່ງໄດ້ເມືອບ້ານ!

ຄືນໜຶ່ງຢູ່ຫ້ອງການ, ພາຍຫລັງທ່ານໝໍເວົ້າໝົດຫວງຽນຖີຕ່າໄດ້ເວົ້າເຖິງໜ້າທີ່ຂອງສະມາຊິກຊາວໜຸ່ມໂຫ່ຈີ່ມິນ, ບັນດາສະມາຊິກຊາວໜຸ່ມຕ້ອງອອກແຮງສຸດຂີດໃນໜ້າທີ່ວຽກງານຢູ່ບົນປະເທດລາວອ້າຍນ້ອງ. ຈະຕ້ອງອອກແຮງທຳວຽກງານວິຊາສະເພາະພ້ອມຮັກສາທັງຍົກສູງຄັນທຸງສາມັກຄີ ມິດຕະພາບ. ຕົວຈິງແລ້ວກໍ່ຄືນ້ຳໃຈປິ່ນປົວຄົນເຈັບບໍ່ສະເພາະແຕ່ ກຳມະກອນຫວຽດນາມພວກເຮົາເອງ ນັບທັງພະນັກງານລາວ ແລະ ພໍ່ແມ່ປະຊາຊົນລາວ

ຜູ້ໄດ້ເຂົ້າມາອາໄສໂຮງໝໍພວກເຮົາອີກດ້ວຍ. ບົນປະເທດລ້ານຊ້າງ, ພວກເຮົາກະພົບຜູ້ຄົນທຸກຈົນທີ່ຫາກໍ່ພົ້ນອອກຈາກໄພສົງຄາມຣຸກຣານຫລາຍຂອງຈັກກະພັດດີກັບຢູ່ປະເທດຫວຽດນາມພວກເຮົາ. ທີ່ນີ້ເອງ, ພວກເຮົາກໍ່ກຳເນີດສຽງກອນຮັກເຖິງຜູ້ຄົນທຸກຈົນຄືດັ່ງຢູ່ປະເທດຊາດຫວຽດນາມພວກເຮົາ...

ຕໍ່ມາຂ້ອຍຮູ້ວ່າຫງວຽນຖິທ່າເປັນເລຂາຫລືກໍ່ອາດແມ່ນຮອງເລຂາໜ່ວຍຊາວໜຸ່ມໂຫ່ຈີມິນຢູ່ໃນໂຮງໝໍແຫ່ງນີ້.

- ເອົາເຊີນກິນນ້ຳ! ແລວທ່ານໝໍເວົ້າຕໍ່-ປີກ່ອນນັ້ນຂ້ອຍບໍ່ທັນມາຮັບໜ້າທີ່ຢູ່ນີ້! ຕອນນັ້ນ (ເວລານັ້ນ) ແມ່ນສະຫາຍແທງເປັນຫົວໜ້າໂຮງໝໍ. ສົນພໍ້ຂ້ອຍຈຶ່ງບໍ່ເຄີຍກັບສະຫາຍ.

- ແມ່ນແທ້! ອ້າຍນ້ອງຢູ່ນີ້, ຂ້ອຍກໍ່ເຫັນວ່າສ່ວນຫລາຍແມ່ນ ຜູ້ໃໝ່ ເອີ! ນາງແພດ! ນາງແພດເອີ້ນຊື່ແນວໃດ ?

- ລີນສະເຫມີຕົວ: ນ້ອງເອີ້ນຊື່ບົກເວີນ. ສ່ວນທ່ານໝໍເອີ້ນຊື່ ຖິງ, ເຂົາໂອລົມກັນດ້ວຍບັນຍາກາດງຽບເຫງົາ. ແສງທອງເລົ່າຕໍ່ ຕອນຂ້ອຍໄດແຄນ ແລະ ມື່ຈະອອກໂຮງໝໍນັ້ນຫງວຽນຖິທ່າມີໂອກາດມາໂອລົມກັບຂ້ອຍຫຼາຍ ແຕ່ລະມື້ຂ້ອຍຕ້ອງໄດ້ເຫັນໜ້ານາງ, ໄດ້ເຫັນນາງຍິ້ມເຫັນນາງຫົວ ແລະ ມື້ໃດລາວໄປເຮັດວຽກທາງໄກ, ຂ້ອຍຄອງຄອຍແລະ ເປັນຫ່ວງ ຂ້ອຍກະບໍ່ເຂົ້າໃຈເຖິງຂ້ອຍເອງ. ຈັກວ່າເປັນຫຍັງໄປບູລະ ເລີຍກາຍເປັນຈິດແບບນັ້ນ ຕໍ່ມາມື້ໜຶ່ງຫງວຽນຖິທ່າ ຖາມຂ້ອຍ :

- ບ້ານອ້າຍແສງທອງຢູ່ໃສ ?

- ບ້ານອ້າຍຢູ່ສະຫວັນນະເຂດ, ຢູ່ມິ່ງທາງເລກ ໙.

- ຊັ້ນ ອ້າຍເຄີຍເຫັນກອງທັບຫວຽດນາມເດີນຜ່ານເຂດນັ້ນບໍ່ ?

- ໂອ! ໃນປາງສົງຄາມໂດຍສະເພາະກະດີປັ້ນຮົບລານເຊີນ ເຈັດຮ້ອຍສິບເກົ້ານັ້ນມາ! ບ້ານອ້າຍກໍ່ເປັນທີ່ພັກພາອາໄສຂອງກອງທັບຫວຽດນາມ

ຕະວ່າ. ພໍດີມີອາວຄະນະກອງຮ້ອຍຜູ້ໜຶ່ງເອີ້ນຊື່ວ່າ ວັນໜູງນາພັກເຊົາ ຢູ່ເຮືອນຂອງອ້າຍ, ເອີແລ້ວຈະເລົ່າເລື່ອງອາວໜູງສູ່ນ້ອງຟັງ. ອາວໜູງນັ້ນໃຈດີ, ເພິ່ນຊ່ວຍພໍ່ຂອຍພາປະຊາຊົນຫຼົບຫລີກການບຸກໂຈມຕີຂອງສັດຕູ. ຄ່ຳຄືນພວກເພິ່ນອອກໄປສະໜາມຮົບ, ຫລາຍວັນກໍ່ກັບຕາວນາ, ອ້າຍຈັກວ່າ ແນວໃດລະ, ເມື່ອອາວໜູງນາລູບຫົວອ້າຍ ( ຕອນນັ້ນອ້າຍກະບໍ່ທັນໃຫຍ່ຄືແນວນີ້ ) ແລະ ເພິ່ນອອກໄປສູ່ສະໜາມ, ອ້າຍຄິດຮອດ ແລະຄອງຄອຍເພິ່ນຈົນເຫັນເພິ່ນກັບມາຈຶ່ງດີໃຈ. ຕອນຕີກັນແຮງທີ່ນລະບໍ່ຈັກວ່າ ເພິ່ນຄິດແນວໃດລະ ເພິ່ນເລີຍເອົາຮູບແຜ່ນໜຶ່ງຂອງເພິ່ນທີ່ຖ່າຍຮ່ວມກັບຄອບຄົວຂອງເພິ່ນ ໄວ້ໃຫ້ອີ່ພໍ່ ແລະ ຄອບຄົວ.

- ຮູບງາມບໍ່ ! ຫງຽນຖີຕ່າຖາມ.

- ໂອ! ຮູບນັ້ນຫວາ ງາມແທ້! ອາວໜູງມີລູກຫົກຄົນ. ໃນນັ້ນ ມີຜູ້ຍິງຜູ້ໜຶ່ງເປັນລູກທີສາມ; ອ້າຍເຫັນນາງນ້ອຍໃນຮູບງາມໆ, ອ້າຍມັກງອາວໜູງເຫັນອ້າຍມັກເບິ່ງຮູບແຜ່ນນັ້ນຫລາຍ, ເພິ່ນເລີຍວ່າໃຫຍ່ມາໃຫ້ອ້າຍ ເປັນລູກເຂີຍເພິ່ນ, ລູກສາວເພິ່ນຜູ້ນີ້ ( ເພິ່ນຊີ້ມືໃສ່ຮູບລູກສາວຜູ້ທີສາມ) ເອີ້ນຊື່ວ່າ ນາງຫ່າ (ນາມສະກຸນຫງຽນຄືດຽວກັນ) ບ້ານເພິ່ນຢູ່ອຽນແທ່ງ. ແຂວງເຫງຕິງ.

- ເພິ່ນຢູ່ອຽນແທ່ງ, ແຂວງເຫງຕິງ! ນາງຫ່າເວົ້າຊ້ຳ.

- ເອີ ! ຕາມເພິ່ນວ່າກະຢູ່ຫັ້ນແຫ.

ບັ້ນຮົບລານເຊີນເຈັດຮ້ອຍສິບເກົ້າ ພວມຢູ່ໄລຍະດຸເດືອດ. ແລງມື້ນັ້ນເຫັນພໍ່ອ້າຍໄຫ້ ແລະ ແມ່ອ້າຍໄຫ້. ອ້າຍຖາມ, ພໍ່ບອກວ່າ ອາວໜູງ ບໍ່ກັບມາອີກແລ້ວ. ເພິ່ນເສຍສະລະຊີວິດ. ມື້ນັ້ນອ້າຍກະຫລັ່ງນ້ຳຕາ. ຟ້າເອີຍ ! ອາວໜູງນາ! ເສຍດາຍເພິ່ນອີຫລີ, ເພິ່ນຈາກຄອບຄົວໄດ້ຫົກປີແລ້ວບາດນີ້..

- ເອົາເຊີນດື່ມນ້ຳ! ທ່ານໜໍ່ຊວນຍົກຈອກນ້ຳແຈ.

- ແລ້ວເປັນຈັ່ງໃດຕໍ່ໄປ! ຫງຽນຖີຫານີ້ກະຮູ້ອາວໜູງຂອງອ້າຍບໍ່ !

ນາງແພດນາງຢູ່ເບື້ອງຂ້າງຖ້ານຈອມ.

- ຈັກແລວ! ເວລາຂ້ອຍເລົ່າເລື່ອງອາວທຸງສູ່ເພິ່ນຟັງນັ້ນ ເພິ່ນກະຫລັງຮູ້ວມູນພີ້, ກົ້ນຫນ້າຫາກບໍ່ຫົວໄດລະ. ເວົ້າແລວຂ້ອຍກໍລະອາຍຫລາຍຄົນຢູ່ແຕ່ຂ້ອຍກະເວົ້າຊື່ຕາມຈິງນັ້ນລະ! ຕັ້ງມາຂ້ອຍເປັນຫ່ວງນຳລາວຫລາຍ ຂ້ອຍນອນຢູ່ຫ້ອງຄົນເຈັບ, ເມື່ອໄດ້ຫງິນສຽງປາກຂອງລາວຢູ່ຫ້ອງຈ່າຍຢາ ກະອຸ່ນໃຈຫລືເມື່ອສຽງບາດຕີນລາວຍ່າງມາ, ຂ້ອຍໂອ! ຊື່ນໃຈ. ແຕ່ຂ້ອຍ ບໍ່ກາເວົ້າສູ່ລາວຟັງວ່າຂ້ອຍຮັກລາວ ອື່ຫລື ຂ້ອຍບໍ່ຮູ້ວ່າຮັກກັນນັ້ນຈະໄດເອົາກັນຫລືບໍ່ ແຕ່ບັນຫນາທີ່ວຽກງານ ຂ້ອຍມາພົບລາວ ແລະ ເກີດຄວາມຮັກ !

ຟ້າເອີຍ ! ລູກຕາຫວານຊື່ນ, ໃບຫນ້າສົມຮັກ, ຮ່າງຄີງສວຍງາມ , ຈິດໃຈ ຜ່ອງໃສ, ແຫນນຫນຽວໃນວຽກງານ, ຊື່ຕົງ ຮັກຊີວິດ, ຍາມນີ້ນອງຢູ່ໃສ ລືມແລວຫລື ຍາມນັ້ນຢູ່ນີ້ ນອງຍັງຮອງສຽງເພງ " ອາຍເຈົ້າເອີຍຢ່າສູເນືອ " ແບບຂັບຮອງຂອງກວານທັບັກນຶ່ງ, ຍາມນັ້ນນອງຍັງຮອງເພງດວງຈຳປາ, ນອງຍັງຮອງເພງເຂົ້າຢ່ຽມຍາມທັປັ້ງສິບລຽງໂຫ່, ດຽວນີ້ນອງຢູ່ໃສ: ເປັນຫຍັງຈຶ່ງບໍ່ມາປະກົດຕົວພໍໄດເຫັນຫນ້າໃຫ້ອຸ່ນໃຈກ່ອນທີ່ອາຍຈະອອກ ເດີນທາງໃນມື້ນີ້ ແສງທອງຄອງພົບທາງຽນຖີຫາໄດຊົ່ວເວລາຫນຶ່ງ ແລະ ກໍ ລະເບີທານາງ.

ແສງທອງພັດເລົ່າຕໍ່: ນີ້ຂ້ອຍຈະອອກເດີນທາງກັບເມືອງວຽງຈັນ, ເມືອຫາກົມກອງນັ້ນທາງຽນຖີຫາສັ່ງວ່າແນວໃດ ກໍໃຫ້ຂ້ອຍພະຍາຍາມຖືເອົາ ຮູບໃບນັ້ນມາໃຫ້ລາວເບິ່ງ. ຂ້ອຍເລີຍວ່າ :

- ຈັ້ນອາວທຸງຂອງຂ້ອຍນັ້ນກໍແມ່ນພີ່ນ້ອງຂອງຫ່າຫວ່າ? ຫລືວ່າ ນາງນັ້ນ ?

- ເອີ ! ກະບໍ່ແມ່ນແຕ່ຖາອາວທຸງ ຂອງເຈົ້າແມ່ນຄົນທາງຕິງ ແລະຢູ່ອຽນແທງນັ້ນບາງທີກໍອາດແມ່ນໄທເມືອງດຽວ ຫລືໄທຕາແສງດຽວກໍເປັນໄດ

- ເອີ ! ອາຍກໍຈະພະຍາຍາມເອົາມາຕາມຄວາມຕອງການ ຂອງ

ນ້ອງ. ດຽວນີ້ແທ້, ອາວທຸງແມ່ນໄດ້ປົງສົບໄວ້ແຄມບ້ານອ້າຍພູມລະ ແລະ ສົບນ້ອງຮູ້ກະຊ່ວຍຝາກຮູບນັ້ນ ແລະ ອ້າຍກໍ່ຈະຝາກຄວາມຢຽມຢາມເຖິງຄອບຄົວຂອງເພິ່ນ.

ຂ້ອຍຄ່ອຍປີນຂຶ້ນລົດ, ຫວຽນຖີທ່າຍື່ນເຄື່ອງໃຫ້ຂ້ອຍ; ລົມເຢັນພັດຜ່ານໃບກ້ວຍປ່າແກວ່ງໄກວຢູ່ຕາມຫ້ວຍ. ໄກໆ ຝູງສາລິກາຮ້ອງ, ຫວຽນຖີທ່າຟ້າວເດີນສຳພັດອຳລາຂ້ອຍອີກຄັ້ງໜຶ່ງຢູ່ຈຸມພູມ! ບ່ອນທາງລົງໄປປ່ອງ ກັບທາງລົດພູມ ແສງທອງເວົ້າ ແລະ ຊີ້ມືໃສ່ປາກທາງແອ່.

ຂະບວນລົດຂອງພວກຂ້ອຍແລ່ນລຸດໄປ, ຟ້າເອີຍ! ຂ້ອຍປານວ່າ ໄດ້ຖອດໝາກຫົວໃຈໄວ້ຢູ່ທີ່ນີ້! ແລະ ແຕ່ນັ້ນມາຮອດມື້ນີ້ ນັບວ່າ ເປັນເວລາເກືອບສອງປີແລ້ວ, ຂ້ອຍຈຶ່ງມີໂອກາດມາຮອດນີ້. ດັ່ງນັ້ນຂ້ອຍຖືເອົາຮູບ ແຜ່ນນັ້ນມາໃຫ້ຫວຽນຖີທ່າພ້ອມກັບຂອງຝາກຈາກແມ່ຂ້ອຍ! ແມ່ຂ້ອຍຝາກ ສິ້ນຜືນໜຶ່ງວ່າຖ້າລາວໄດ້ເມືອເຫງຕິງ, ໃຫ້ລາວຊອກຫາເຮືອນຂອງອາວທຸງ ແລະ ຝາກສິ້ນທີ່ແມ່ຂ້ອຍຕ່ຳນີ້ເປັນຄວາມຮັກຕາງຄວາມແພງເຖິງແມ່ຂອງນາງທ່າ , ທັງພໍ່ ແລະ ແມ່ຂ້ອຍສັ່ງແນວນັ້ນ.

- ຄືແນວນັ້ນຫວາ ? ດຽວນີ້ຈະບອກຄວາມຈິງແກ່ສະຫາຍ! ຫວຽນຖີທ່າຂອງພວກເຮົາເສຍຊີວິດແລ້ວ - ທ່ານໝໍ ເວົ້າດ້ວຍຄວາມໂສກເສົ້າ.

- ແທ້ຫວາ ? ແສງທອງຕົກສະເງີ ຖາມ ແລະ ງຽບໄປ.

- ຫວຽນຖີທ່າໄດ້ເສຍຊີວິດຍ້ອນບົມລູກຫວ່ານລູກໜຶ່ງທີ່ເສດເຫຼືອຈາກສົງຄາມຫວ່າງແລ້ວບົມລູກຫວ່ານໜ່ວຍນີ້ຄາງຢູ່ພື້ນດິນທີ່ແຄມທາງ. ວາລະທີ່ພວມໄປເບິ່ງອ້າຍນ້ອງບຸກເບີກເສັ້ນທາງພໍດີ, ລູກລະເບີດແຕກ ແລະ ຫວຽນຖີທ່ານາງແພດຜູ້ຫາວຫັນ, ສະມາຊິກຊາວໜຸ່ມໂຫ່ຈີ່ມິນຜູ້ດີເລີດໄດ້ສິ້ນຊີວິດໄປ

- ຟ້າເອີຍ! ຫວຽນຖີທ່າ, ທ່າເອີຍ ນ້ອງເອີຍ! ບໍ່ຈັກວ່າ ເທົ່າໃດຄຳລູຫານດວນດາງພົ້ນຂຶ້ນມາຢູ່ໃນຫົວໃຈຂອງແສງທອງ. ແສງທອງຫຼຽວເບິ່ງແຜ່ນຮູບ ແລະ ທີ່ເຄື່ອງຂອງຝາກດ້ວຍຄວາມໂສກຊ້ຳເສຍໃຈ.

- ພວກເຂົາຫາກໍ່ຝັງສົບນາງໄດ້ກວ່າອາທິດມານີ້. ທ່ານຫມໍເວົ້າອອກດ້ວຍນ້ຳສຽງຊຸ້ໂສກໃນລຳຄໍ ນາງແພດຍົກແພັນມາເຊັດສີຫນ້າຕາ. ແສງທອງລຸກຈາກບ່ອນນັ່ງຍ່າງໄປມາບາດຊາງ ຢູ່ໃນຫ້ອງຮັບແຂກ.

- ຂ້ອຍຂໍໄປເບິ່ງບ່ອນຝັງສົບຂອງນ້ອງຫວງຣູນຖິທ່າ! ແສງທອງຊວນທ່ານຫມໍ ແລະ ນາງແພດຄ່ອຍຍ່າງອອກຜ່ານປະຕູຫ້ອງຮັບແຂກ.

ຫ້ອງນອນຂອງນາງແພດຫວງຣູນຖິທ່າຍັງຮັກສາໄວ້ດັ່ງເດີມ. ປຶ້ມເອກະສານວິຊາສະເພາະຍັງຕັ້ງໄວ້ເທິງໂຕະຂຽນຄືເກົ່າ. ບ່ອນນັ່ງບ່ອນນອນຍັງຈັດວາງຕາມປົກກະຕິ. ຫາກພຽງແຕ່ເທິງໂຕະນີ້ຊໍ່ດອກກຸຫລາບແດງເປັນສີ ແທນໃຫ້ຄວາມເປົ່າປ່ຽວຂອງຫ້ອງນອນທີ່ນາງບໍ່ຢູ່ອີກ. ນາງແພດ ໄຂແກັດຂອງຫວງຣູນຖິທ່າ ແລະ ຈົກປຶ້ມນ້ອຍຫົວຫນຶ່ງອອກມາ.

- ນີ້ກໍ່ມີຮູບແຜ່ນຫນຶ່ງ. ນາງເວົ້າ ແລະ ຍື່ນປຶ້ມໃຫ້ແສງທອງ.

- ຟ້າເອີຍ! ອາວຫຼວງ! ນາງທ່າ ! ແສງທອງຮ້ອງຄ່ອຍໆ. ຮູບທັງສອງແຜ່ນແມ່ນຮູບລ້າງຈາກຟິມໂປດຣູວ.

- ຟ້າເອີຍ! ເປັນຫຍັງທ່າຈຶ່ງບໍ່ໃຫ້ຂ້ອຍຮູ້... ບາດນີ້ໃຜຈະມາເວົ້າຄຳວ່າຮັກໃຫ້ຂ້ອຍເພື່ອ ຂ້ອຍຕື່ນພະລັງຊີວິດ! ຮູ້ບໍ່ໄດ້ອາຄວາມຮັກ ຂອງຂ້ອຍແລະ ທ່າຄົງໄດ້ຮ່ວມກັນຫລືບໍ່! ແຕ່ຄວາມຮັກທີ່ມີມານັ້ນສົດສວຍສະເຫມີ.ຫາກໂຊກເອີຍໂຊກຮ້າຍ! ສິ່ງເສດຂອງສົງຄາມໄດ້ມາຕັດແຍກຄວາມຮັກຂອງພວກຂ້ອຍເສຍໄປ.

ເຂົາທັງສາມຍ່າງອອກຈາກຫ້ອງເຮືອນ, ເລາະຂັ້ນເນີນເຫນືອຄຸ້ມ , ຢູ່ໃນມຸມຫຍ້າຄາເທິງນັ້ນ, ຊຸມຝັງສົບສ້າງໃຫມ່ໆ ຢູ່ເທິງຊຸມນີ້ປ້າຍຄວັດຂຽນໄວ້ໃສ່ລານຫີນແຜ່ນຫນຶ່ງເປັນຊື່ຫວງຣູນຖິທ່າ...

ເນື່ງ ໄຊຫວ່າງ

ແສງທອງຍ່າງກ້າວຫາຊຸມຟັງສົບ ລາວກົ້ມລົງວາງຊໍ່ດອກກຸຫລາບແດງທີ່ແສງທອງເດັດເອົາຢູ່ໜ້າເຮືອນຂອງທາຣຸນຖີທ່າ (ຕົ້ນດອກກຸຫລາບຊຶ່ງຕອນແສງທອງມາປິ່ນປົວນັ້ນທາຣຸນຖີທູ່ງເອົາມາປູກ ແລະ ເວົ້າກັບແສງທອງ ວ່າ ກຸຫລາບທີ່ລະນຶກ...) ນັ້ນລົງໄວ້ເທິງຊຸມຟັງສົບ.

ແນມເບິ່ງຊໍ່ມາລາກຸຫລາບແດງ ຜ່ານມ່ານນ້ຳຕາໃສໆ, ກີບ ກຸຫລາບແດງຈ່າຍລ່າຍໃຫຍ່ປານຜືນທຸງແດງ. ສາຍລົມວີພັດກ້ານກີບກຸຫລາບເຫນັງຕີງເບິ່ງຄືເປັນຜືນທຸງແດງປິວສະບັດ. ເຊັດນ້ຳຕາເບິ່ງ, ກັບເຫັນຊໍ່ມາລາກຸຫລາບແດງເທິງຊຸມຟັງສົບນ້ຳຕາຄ່ອຍຊຶມ, ກຸຫລາບແດງພັດແດງລວາຄືຜືນທຸງ...

24/VII
ຫ້າມຈຳໜ່າຍ



ໄຊສຸວັນ ແພງພົງ

ໄຊສຸວັນ ແສງພິງ ພັກໃຊ້ນາມປາກກາໜຶ່ງອີກຄື: ແສງໄປ້ ເຂົາເກີດເມື່ອວັນທີ ໑໗/໑໐/໑໙໔໐ ທີ່ບ້ານທ່າງ່ອນ ແຂວງກຳແພງນະຄອນວຽງຈັນ ພໍ່ມີອາຊີບຄູ ແມ່ເປັນຊາວສວນ.

ຮຽນຈົບ ມັດທະຍົມພາກປາຍ ສາຍວິທະຍາສາດ ທຳມະຊາດ ປີ ໑໙໗໐ ທີ່ວິທະຍາໄລວຽງຈັນ, ຍ້ອນມີໂອກາດໄດ້ຮຽນນຳ ອາຈານສອນ ພາສາລາວ ຜູ້ມັກປະດິດຄິດແຕ່ງຫລາຍໆ ທ່ານ ຈຶ່ງເຮັດໃຫ້ເຂົາເລີ່ມສົນໃຈຂຽນກາບກອນ ແຕ່ອາຍຸ ໑໖ ປີ ເປັນຕົ້ນມາ.

ຜົນງານຜ່ານມາ ມີ: " ນົກສີບມົນ ( ໑໙໘໔ ) ນິຍາຍຊີວິດ ຂອງນັກບິນສອງລະບອບ, ປຶ້ມກະວີເຫລັ້ມນ້ອຍຊື່ " ດອກໄມ້ແຄນເຊ "(໑໙໖໙) ແລະ " ຊີວິດໂສດ (໑໙໗໙), ໂຮມເລື່ອງສັ້ນ "ເຫລົ້າເທວະດາ(໑໙໙໐) ແລະ ຍັງມີຜົນງານຮວມກັບໝູ່ອື່ນຄື: "ນ້ຳຂອງຍັງບໍ່ທັນເຫືອດແຫ້ງ... " (໑໙໘໔), ພົບທະຫານເລືອດຄູ່ ( ໑໙໘໕ ) "ລູກຮັກ" (໑໙໘໗ ) ; "ເພື່ອເຈົ້າ" (໑໙໘໙), ເລື່ອງສັ້ນ ແລະ ບົດກະວີຈຳນວນຫຼາຍ ລົງພິມໃນ "ວັນນະສິນ", "ວຽງຈັນໃໝ່" "ເຍົາວະຊົນ" ແລະ "ໜຸ່ມ ນະຄອນຫລວງ"... ແລະ ເນື້ອຮ້ອງຂອງເພງ "ສາວບ້ານເຮົາ" ຊຸດທີໜຶ່ງ ກໍ່ແມ່ນຜົນງານຂອງເຂົາເຊັ່ນກັນ.



# ສຽງປືນງຽບ

● ໄຊສຸວັນ ແພງພົງ

ບຸນມີ ຖືກປືນ!" ສຽງຊຸບຊິບຈາກປາກຜູ້ນີ້ເຂົ້າຫູຜູ້ນັ້ນ ຈາກຫ້ອງການນັ້ນມາຮອດຫ້ອງການນີ້ຈົນມາຮອດຫູຂ້ອຍ. ຂ້ອຍອັດປາກປາກາ ແລະເກັບເອກະສານໄວ້ລິ້ນຊັກໂຕະຫລັບຕາຊຶງຢູ່ຫລາຍວິນາທີ ກ່ອນຈະມືນຂຶ້ນມາ ແລ້ວຊຶດຫົວສອງສາມບາດ ເພື່ອຢັ້ງຢືນກັບຕົນເອງວ່າ ບໍ່ໄດ້ຫລັບ ຝັນໄປ.

" ຈື ບຸນມີ ຫັ້ນແຫລະ! ສ່ຽວຂອງຫົວໜ້າພະແນກເຮົານີ້ລະບໍ! ສາຫັດ ດຽວນີ້..." ສຽງຊຸບຊິບແວ່ວມາອີກ.

ຂ້ອຍຍ່າງອອກໄປຖາມ ແຕ່ກໍບໍ່ໄດ້ເລື່ອງລາວລາຍລະອຽດຫຍັງເລີຍ. ອ້າຍນ້ອງໄປໄດ້ຍິນຂ່າວນີ້ມາແຕ່ໃສ? ເພາະວ່າໃນພະແນກຂອງຂ້ອຍນີ້ ມີຜູ້ໜຶ່ງມັກເວົ້າຫົວຫີບ ວ່າແຕ່ໄດ້ຍິນໃຜເວົ້າຫຍັງຢູ່ໃສກໍຕາມ ແມ່ນນຳມາ ເພີຍ

ແຜ່ສູ່ໝູ່ຄູ່ຟັງໂລດ. ບາງເທື່ອກໍນຳເອົາຂ່າວຊຶ່ງພວກສັດຕູປ່າວຂຶ້ນມາເວົ້າໃຫ້ໝູ່ຟັງຈົນວ່າງຽງຄ້ອຍໄປນຳຍ້ອນ. ດີແຕ່ພວກເຮົາສ່ວນຫລາຍຈັບຈຸດອ່ອນໃນນິໄສເຮົາໄດ້ດີ ແລະ ຂ້ອຍເອງ ກໍເຄີຍຕັກເຕືອນເຂົາວ່າ: "ຈົ່ງເວົ້າ ແຕ່ຄວາມຈິງ ເວົ້າແຕ່ສິ່ງທີ່ເປັນປະໂຫຍດຕໍ່ຜູ້ຟັງໃນສະຖານທີ່ຽງ ຕົນເອງ ເວົ້າທີ່ນັ້ນ " ເຂົາກໍຍອມຮັບຈຸດບົກພ່ອງໂດຍດີ ແລະ ນຳໄປແກ້ໄຂໄດ້ລະຍະໜຶ່ງບໍ່ດົນນິໄສກັກເປັນໂຕສິກນອກວົງທີ່ກໍກັບຟື້ນຄືນມາອີກ.

" ສ່ຽວຮັກຂ້ອຍຖືກປືນ! " ຂ່າວນີ້ກໍຢ່າງນອ່າແມ່ນທ້າວໂຕສິກນອກວົງທີ່ຜູ້ນີ້ນຳມາອີກ ແຕ່ເຖິງຢ່າງໃດກໍດີເບື່ອເລື່ອງປີ້ວມາຮອດຫູແລ້ວ ຂ້ອຍກໍອົດທີ່ຈະບໍ່ຄິດບໍ່ໄດ້ທີ່ນັ້ນແຫລະ ແລະ ສ່ຽວຂອງຂ້ອຍຜູ້ນີ້ ບຸນມີ ລະຍະຫລັງໆ ມານີ້ກໍຄືວ່າບໍ່ຄ່ອຍໄດ້ພົບໜ້າພໍ້ຕາກັນ ປະກົດວ່າເຫີນຫ່າງກັນຫລາຍເຕີບ.

ຂ້ອຍໂຢ້ອອກຈາກໂຕະວ່າຈະອອກຈາກຫ້ອງການໄປ ສື້ຖາມຫາ ຄວາມຈິງນຳໝູ່ຄູ່ອາຍນ້ອງ. ກຳລັງຈະໄຂປະຕູພໍດີ ໂທລະສັບດັງຂຶ້ນ ຂ້ອຍຍ່າງກັບຄືນມາຮັບ. ສຽງຂອງຫົວໜ້າກົມເວົ້າມາຢ່າງເປືອກເປັນແຕ່ໜັກແໜ້ນ.

" ຖ້າຮອດໂມງແລ້ວ ໃຫ້ອາຍນ້ອງເລີກເບື່ອກ່ອນໂລດເດີ ສ່ວນນ້ອງນັ້ນໃຫ້ລໍຖ້າຢູ່ຫ້ອງການກ່ອນ ອ້າຍມີວຽກສ່ວນຕົວເລັກນ້ອຍ ແລະ ຊິລົມເລື່ອງບຸນມີ ສ່ຽວຂອງນ້ອງສູ່ຟັງ ! "

" ມັນອາດເປັນຄວາມຈິງກໍເປັນໄດ້! ໜໍ່ບຸນມີຖືກປືນແທ້ໆ ແລ້ວ! "

ຂ້ອຍໄຂລີ້ນຊັກໂຕະເພື່ອຈະເອົາເອກະສານທີ່ຫາກໍນັ້ນຽນກັບຄືນມາ ຄິດໄລ່ຕໍ່ຊຳຊາລໍຖ້າຫົວໜ້າຈະລົງມາຈາກຊັ້ນທີສາມຂອງກະຊວງ. ແຕ່ພໍດຶງ ລີ້ນຊັກອອກຂ້ອຍກໍຕ້ອງຊຶ່ງຢູ່ກັບຮູບແຜ່ນໜຶ່ງຊຶ່ງເກົ່າຫລາຍແລ້ວ ທີ່ຍັງຫລົງເຫລືອຢູ່ໃນລີ້ນຊັກນັ້ນ ຕັ້ງແຕ່ດົນປານໃດກໍບໍ່ຮູ້. ຂ້ອຍຄ່ອຍໆ ຈັບມັນຂຶ້ນມາເບິ່ງ. ບຸນມີ ກັບຂ້ອຍກອດຄໍກັນຖ່າຍຮູບຢູ່ຕໍ່ໜ້າອະນຸສາວະລີ ທີ່ຫາກໍສ້າງໄດ້ຮອດຊັ້ນທີສີ່ສະໄໝນັ້ນພວກເຮົາຍັງເປັນນັກຮຽນຢູ່. ເບິ່ງພວກເຮົາກອດຄໍກັນຄືວ່າຈະຕິດ

ສົນໃຈພ້ອມເພາກັນກ້າວເດີນໄປສູ່ຈຸດມຸ່ງໝາຍດຽວກັນ ໂດຍບໍ່ຫວາດຫວັ່ນຢ້ານກົວຕໍ່ອຸປະສັກໃດໆ ທັງສິ້ນ.

" ເປັນຫຍັງເຂົາຈຶ່ງຍິງໂຕ? ບຸນມີເອີຍ" ຂ້ອຍຈົ່ມນ້ອຍຢູ່ໃນໃຈແລ້ວກໍຄິດເຫັນອະດີດ ຊີວິດຂອງພວກຂ້ອຍທັງສອງ. ສະໄໝຍັງເປັນນັກຮຽນຢູ່ ອຸດົມນັ້ນ ພວກຂ້ອຍມັກທ່ຽວໄປຫ້ອງອ່ານປຶ້ມຂອງສູນກາງວັດທະນະທຳໂຊວຽດທີ່ວຽງຈັນ ແລະ ໄປລັກອ່ານປຶ້ມພິມງານຂອງທ່ານ ເລນິນ. ຕອນນັ້ນ ພວກຂ້ອຍກໍອ່ານຕາມເລື່ອງຕາມລາວຊື່ງນີ້ແຫລະ ບໍ່ທັນຮູ້ເນື້ອໃນຈິດໃຈ ແກ່ນຫຍັງຊ້ຳດອກ. ເຄີຍໄດ້ຍິນແຕ່ນາຍຄູເວົ້າວ່າ ທ່ານເລນິນແມ່ນຜູ້ນຳຂອງຊັ້ນຄົນ ທີ່ທຸກຍາກຂອງຊົນຊັ້ນກຳມະກອນເຮັດການປະຕິວັດສັງຄົມນິຍົມ ພວກຂ້ອຍກໍເລີຍຄິດສົນໃຈຢາກອ່ານ. ເຫັນວ່າຕອນນັ້ນ ບຸນມີຕິດຕາມຊອກອ່ານໄດ້ຫຼາຍ ກົ່ວກ່ອນຂ້ອຍ, ພວກຂ້ອຍທ່ຽວໄປຢູ່ໃນຫ້ອງອ່ານປຶ້ມນັ້ນໃນຍາມທີ່ມີຢຸດໂຮງຮຽນ ຫຼື ວ່າໃນວັນພັກຢູ່ເປັນປະຈຳ. ເຮັດຈັ່ງຊັ້ນໄດ້ປີປາຍ ຢູ່ມາມື້ໜຶ່ງຮ້ອຍເອກສາລະວັດທະຫານ ກໍມີໝາຍເກາະເອົາພວກຂ້ອຍທັງສອງໄປເຂົ້າພົບ. ມັນດຶງປືນສັ້ນອອກຈາກແອວຂຶ້ນມາຟາດໃສ່ໜ້າໂຕະໜັກແຮງແລ້ວຂູ່ວ່າ:

" ໃຫ້ພວກສູຢຸດເຊົາທ່ຽວໄປຫ້ອງອ່ານປຶ້ມອີກເດີ! ກູຮູ້ສູອ່ານປຶ້ມເລື່ອງຫຍັງ? ສູເປັນນັກຮຽນກໍຄວນຕັ້ງໃຈຮຽນໃຫ້ໄດ້ເປັນເຈົ້າເປັນນາຍ ພຸ້ນລະບໍ່ ອັນນີ້ຫຍັງມາຊອກຮຽນເລື່ອງການບ້ານການເມືອງນຳຜູ້ໃຫຍ່. ພວກສູຮຽນເປັນຄອມມູນິດບໍ່ ?"

ພວກຂ້ອຍບໍ່ຕອບຖ້ອຍຖຽງຄວາມພໍໜ້ອຍ ທັງໆທີ່ຮູ້ຄຳຕອບຢ່າງດີ ແຕ່ກໍຄິດຢູ່ວ່າບໍ່ມີຜົນປະໂຫຍດຫຍັງ ທີ່ຈະໄປເປົ່າຄຸຍໃຫ້ຄວາຍຟັງ... ທັງສອງສູ້ງວຍຍ່າງກົ້ມໜ້າເສົ້າໆ ອອກມາຈາກປິດຄ່າຍ ພໍຫຼຸດປາກປະຕູ ບຸນມີງວາກຊ້າຍງວາກຂວາຄັກໆແລ້ວກໍຈົ່ມອອກປາກວ່າ :

" ສ່ຽວເອີຍ! ອ່ານປຶ້ມຊື່ໆ ມັນກໍຫາວ່າເຮົາຢາກຮຽນເປັນຄອມມູນິດ

ສິດເສລີພາບໃນການອ່ານ, ການຟັງ, ການເວົ້າ, ການເຊື່ອຖື ແມ່ນຖືກຈຳກັດແທ້ໆ ໃນສັງຄົມຂອງພວກເຂົາ ຊຶ່ງເຈົ້ານາຍອວດອ້າງວ່າເປັນດິນແດນເສລີພາບ. ຄັນວ່າພິບບັງຄັບຫົວໃຈກັນແນວນີ້ພວກເຂົາພາກັນໜີໄປຫາບ່ອນ ທີ່ມີສິດເສລີພາບອັນແທ້ຈິງຊ່າເທາະ?"

" ຊິໄປທາງໃດ ກໍຄວນລໍຖ້າໃຫ້ຮຽນຈົບກ່ອນເປັນຫຍັງ?" ຂ້ອຍສະເໜີຂຶ້ນ.

" ກໍໄດ້! ອົດກັ້ນໄວ້ກ່ອນເນາະ ມື້ໜຶ່ງດອກຈະຕ້ອງ ກັບມາເບິ່ງໜ້າບັກຄວາຍບັກນີ້."

ຍ້ອນຄວາມຄຽດແຄ້ນພວກເຂົາກັດແຂ້ວສູ້ຈົນຈົບວ່າຜ່ານການສອບເສັງໃນປີສຸດທ້າຍໄດ້ຢ່າງສຳເລັດຜົນ. ພຽງແຕ່ໄດ້ຮັບໃບປະກາດສະນີຍະບັດ ຊົ່ວຄາວທີ່ນັ້ນ ພວກຂ້ອຍກໍພາກັນໜີຈາກບ້ານເກີດເມືອງນອນໄປຮຽນວິຊາຊີບ ຢູ່ຕ່າງປະເທດ.

ພວກຂ້ອຍທັງສຶກສາຮ່ຳຮຽນທັງເຄື່ອນໄຫວຢູ່ໃນວົງການ ນັກສຶກສາ-ດ້ວຍກັນ ແລະ ຈາກການແລກປ່ຽນຄວາມຄິດຄວາມເຫັນແລກປ່ຽນຄວາມຮູ້ລະຫວ່າງໝູ່ເພື່ອນນັກສຶກສາ ຕ່າງປະເທດ ເປັນເວລາຫລາຍປີ ພວກຂ້ອຍກໍຮັບຮູ້ແຈ້ງ ແລະ ເຫັນພ້ອມກັບການຕໍ່ສູ້ອັນຖືກຕ້ອງເປັນທຳຂອງພັກເຂົາ ຊຶ່ງຕອນນັ້ນ ເຈົ້ານາຍຝ່າຍ ລັດຖະບານວຽງຈັນ ປ່າວວ່າເປັນພັກຄອມມູນິດແລວ ສ້າງຮູບພາບອັນໜ້າຢ້ານກົວໃສ່ຄືຮູ້ກັນແຫລະ.

ພວກຂ້ອຍຝັງຄວາມເຈັບຮູ້ນີ້ໄວ້ໃນໃຈແລ້ວກັບຄືນມາຫາປະເທດຊາດອີກເທື່ອໜຶ່ງ. ມາເທື່ອນີ້ສາລະວັດທະຫານບໍ່ມາວົນວາຍນຳອີກຍ້ອນວ່າພວກຂ້ອຍບໍ່ຈຳເປັນຕ້ອງຫຽວໄປຫ້ອງອ່ານປຶ້ມເຄີເກົ່າອີກແລ້ວ. ເຊົາມາກັນໄປຫ້ອງອ່ານປຶ້ມເບິ່ງໝາຍຄວາມເອົາກົງຮຽນ ຫາກວ່າຢູ່ໃນຈຳນວນຜູ້ທີ່ຮັກຊາດ ທີ່ຢູ່ໃນ ນະ

ໄຊສູວັນ ແພງພິງ

ຕອນຫລວງວຽງຈັນສະໄໝນັ້ນ ສະໄໝລັດຖະບານຝ່າຍຂວາປົກຄອງ ຫລືວ່າ ສະໄໝລັດຖະບານປະສົມນັ້ນ ພວກຂ້ອຍກໍ່ມີບົດບາດ ແລະ ໄດ້ອອກແຮງ ເຄື່ອນໄຫວຫລາຍສົມຄວນ...

ພາຍ ຫລັງທີ່ປະເທດຊາດໄດ້ຮັບການປົດປ່ອຍ. ໝໍ ບຸນມີ ກໍ່ໄດ້ຖືກມອບໝາຍໃຫ້ ເຮັດວຽກງານ ຕາມວິຊາເກົ່າ ຢູ່ກະຊວງເກົ່າ.

ຂ້ອຍຍັງບໍ່ລືມ ທີ່ທີ່ບຸນມີໜ້າດຳຕາແດງສູ້ຢືນແນວຄິດກັບໝູ່ເພື່ອນ ພະນັກງານຂັ້ນດຽວກັນໃນບັນຫາແນວທາງການຕ່າງປະເທດຂອງພັກເຮົາ ແລະ ບັນຫາຄວາມຮັກຊາດອັນດູດດື່ມເສີມໃສ່ກັບຈິດໃຈສາກົນອັນຜ່ອງໃສຂອງຄົນລາວ ຍຸກໃໝ່ກໍ່ຖືກນຳມາເປັນປະເດັນໜຶ່ງອີກ. ການຖົກຖຽງກັນລາມໄປຮອດ ບັນຫາການປ່ຽນທາດຂາດຄຸນຂອງພັກຄອມມູນິດບາງພັກ ການນຳໃຊ້ທິດສະດີມາກເລນິນຢ່າງຜິດພາດ ຢູ່ໃນບາງປະເທດ ຊຶ່ງເປັນສາຍເຫດໃຫ້ ການຂະຫຍາຍຕົວຂອງການປະຕິວັດຊັກຊ້າກວ່າບາດກ້າວທີ່ມັນຄວນຈະເປັນໄປ. ໃນຕອນນັ້ນ ຂ້ອຍເຫັນວ່າ ບຸນມີ ກໍ່ມີເຫດຜົນດີ ໜ້າຮັບຮູ້ ແລະ ໄດ້ອະທິບາຍຢ່າງ ແນບນຽນກ່ຽວກັບເລື່ອງ "ໃຜເປັນມິດ - ໃຜເປັນສັດຕູ" ຂອງການປະຕິວັດລາວ.

ຂ້ອຍຍັງຈົດຈຳຄຳລົງທ້າຍຂອງໝໍບຸນມີ ກ່ອນຈະເລີກລາອອກຈາກສະພາກາເຟແຫ່ງນັ້ນວ່າ:

" ປັນຍາຊົນຂັ້ນໄທເຂົາເຈົ້າຂ້ອຍ ຄົນແມ່ນຍັງສັບສົນຢູ່ກັບບັນຫາ ນິດ-ສັດຕູນີ້ແລ້ວ ກໍແມ່ນບໍ່ເຂົ້າໃຈບັນຫາຫຍັງທັງໝົດ! ບໍ່ຮູ້ຮອດວ່າຕົນເອງ ກຳລັງເຮັດຫຍັງຢູ່ໃນສູ້ຮົບນີ້ ! "

ພາຍຫລັງການສູ້ປັນແນວຄິດກັນນີ້ນັ້ນ, ໜ່ຳໜຶ່ງຊຶ່ງມີຄວາມເຫັນບໍ່ສອດຄ່ອງກັນກັບພວກຂ້ອຍກໍ່ຂ້າມຟາກໄປຫາສັດຕູ. ໄປໃຫ້ນັກຂ່າວວິທະຍຸ ສຳພາດອອກອາກາດຕ່າງໆນາໆ ພົກປັ້ນຄວາມເປັນຈິງຂອງສັງຄົມລາວໃໝ່, ໃສ່ຮ້າຍປ້າຍສີແນວທາງຂອງພັກ, ແຜນການຂອງລັດເຮົາ ໂດຍ ຍົກເອົາແຕ່ຂໍ້ຂາດຕົກບົກພ່ອງ ຂອງສ່ວນບຸກຄົນຂຶ້ນມາວິຈານທັບຖົມໄຊຊະນະລວມຂອງໝົດທັງຊາດ ເພື່ອປັ່ນສະໝອງຜູ້ຟັງ ໃຫ້ເກີດມີແນວຄິດສັບປົນຄົນເລລະຫວ່າງ " ບຸກຄົນກັບລະບອບ ".

ບຸນມີ ເຊົ້າມາພົບເຮົາຮອດຫ້ອງການແລ້ວກ່າວວ່າ.

" ໂຢ່ວ! ໜີໄປຢູ່ນຳສັດຕູແລ້ວຍັງບໍ່ພໍ ຍັງອວ່າຍໜ້າຮ້ອງກັບຄືນມາເວົ້າທົ່ວທີບບໍ່ມີເຫດມີຜົນຫຍັງ. ຊິແມ່ນຖືກສັດຕູຊື້ຈ້າງຄັກ! ໂຕໄດ້ຟັງຂ່າວວິທະຍຸຂອງພວກເຂົາບໍ່ມື້ວານນີ້ ? "

" ຟັງແຫ! ນັນເວົ້າ ແລະ ເຮັດແນວນີ້ ສຳກັບວ່າຕີລາຄາ ຂາຍຕົວເອງໃຫ້ສັດຕູຕ່ຳກວ່ານົກແກ້ວ, ສຳກັບຝັງໂຕເອງທັງເປັນຫັ້ນແລ້ວ ".

ພວກຂ້ອຍລົມກັນຈົນເລີກການແລ້ວ ບຸນມີກໍ່ຊວນຂ້ອຍໄປແວ່ຮ້ານອາຫານເອກະຊົນແຫ່ງໜຶ່ງ ຊຶ່ງບຸນມີຮູ້ຈັກກັບເຈົ້າຂອງຮ້ານດີເປັນພິເສດ.

ຂ້ອຍຄິດມາຮອດຕອນນີ້ ກໍຍິ່ງຄິດສົງສານສ່ຽວຮັກ ຖ້າວ່າ ມັນຖືກປືນອາການສາຫັດກໍ່ຢ້ານວ່າຕ້ອງຕາຍແທ້ໆ. ໂອກາດຈະມານັ່ງກິນເຄື່ອງກັບແກ້ມແຊບໆ ແລະ ເຫລົ້າລາຄາແພງໆ ແພງກວ່າເງິນເດືອນພວກຂ້ອຍອີກ ກໍແມ່ນຕ້ອງລົ້ມເລີກຕະຫລອດໄປ. ແລວກໍຈະບໍ່ເຫັນເຖົ້າແກ່ ທ່າທີ່ສະໜິດ ສະໜົມກັບບຸນມີ ມາຈ່າຍເງິນແດງເງິນຂຽວໃຊ້ຄ່າອາຫານ ແລະ ເຄື່ອງດື່ມ ຢູ່ຮ້ານ

ນັ້ນອີກ... ເຊິ່ງເທື່ອນັ້ນກໍພອຍເຮັດໃຫ້ຂ້ອຍຂົນໜາວແຕກນ້ອຍຍ້ອນ.

ຍ້ອນຄວາມຮັກສ່ຽວຂ້ອຍຈຶ່ງຄິດເປັນຫ່ວງຄອບຄົວຂອງມັນນຳອີກ" ໂທ້! ຖ້າຖືກປືນແຕກ ແລະ ເປັນໜັງໄປລູກເມຍໂຕຊິຢູ່ແນວໃດ ? ເຮືອນ ປຸກໃໝ່ ຫາກໍຊິແລ້ວຍັງບໍ່ທັນໄດ້ສູ່ຂວັນຂຶ້ນເຮືອນຊໍ້າ ກີ້ຂຶ້ນເຮືອນໃໝ່ໂຕຍັງວ່າຊິລ້າເງົວ ຈັກສອງໂຕພຸ້ນດ໋າ. ແລະ ລົດຄັນຊື້ໃໝ່ເຊິ່ງເມຍຂັບໄປຄາດປະຕູຮົ້ວ ກໍຍັງຢູ່ ຮ້ານພົ່ນສີພຸ້ນຊໍ້າ. ໂທ້ສ່ຽວບຸນມາ!

ນັ່ງຢູ່ຜູ້ດຽວໃນຫ້ອງການ ໄດ້ຍິນສຽງບາດຕີນຄົນຍ່າງລົງຂັ້ນໄດ ດັງ ເກິກໆ ເຮັດໃຫ້ຂ້ອຍຕື່ນຢຸບ.

ສຽງບາດຕີນໜັບເຂົ້າມາໃກ້ປະຕູຫ້ອງການ ບັດແລ້ວກໍມີສຽງ ເຄາະ ປະຕູພ້ອມກັບເອີ້ນຖາມ .

" ເມືອແລ້ວຫວາ ? "

ແມ່ນສຽງຂອງຫົວໜ້າກົມຂອງຂ້ອຍເອງ.

" ຍັງເທື່ອອ້າຍ " ຂ້ອຍຕອບແລ້ວຟ້າວລຸກຈາກຕັ່ງເພື່ອຊິໄປໄຂ ປະຕູໃຫ້ ແຕ່ຫົວໜ້າເພິ່ນໄຂເຂົ້າມາເອງກ່ອນ ແລ້ວພວກເຮົາກໍພາກັນນັ່ງຢູ່ຕັ່ງ ນວມຮັບແຂກ.

" ຂໍໂທດເດີ ທີ່ໃຫ້ນ້ອງລໍຖ້າດົນ ຄືວ່າຄາຊຽວຊານເພື່ອນບິດ ມາ ເຮັດວຽກນຳ ຈຶ່ງໄດ້ເວົ້າໄດ້ລົມກັນເລື່ອງວຽກງານແດ່ ເລື່ອງຄອບຄົວແດ່. ຈຶ່ງຮູ້ວ່າສະຫາຍຜູ້ມາໃໝ່ນີ້ຫາກໍ່ສ້າງຄອບຄົວໃໝ່ໆ ແລ້ວກໍຖືກສົ່ງມາ ຊ່ວຍ ພວກເຮົາ. ເຖິງປານນັ້ນສະຫາຍຍັງເວົ້າວ່າ " ຄອບຄົວນ້ອຍຂອງສ່ວນຕົວ ເຮົາບໍ່ສຳຄັນທໍ່ຄອບຄົວໃຫຍ່ສັງຄົມນິຍົມ " ວ່າຊັ້ນກໍໜ້າຊົມເຊີຍ ສະຫາຍຜູ້ ມາໃໝ່ນີ້ຢູ່ດອກ... ເອີ ນ້ອງຄືຊິຫິວຫລາຍເນາະທີ່ໃຫ້ລໍຖ້າດົນ ຂໍໂທດເດີ ນ້ອງເດີ ".

" ບໍ່ເປັນຫຍັງດອກອ້າຍ... ແຕ່ວ່າເລື່ອງຂອງບຸນມີ ເປັນແນວໃດແດ່? " ຂ້ອຍຮ້ອນໃຈຖາມຂຶ້ນ.

" ເອີ... ອ້າຍກໍຕັ້ງໃຈຊິມາເວົ້າສູ່ນ້ອງຟັງພໍດີ ຫລືວ່າ ນ້ອງອາດຈະຮູ້ເລື່ອງນີ້ກ່ອນແລ້ວບໍ່ຈັກດໍ? " ເວົ້າສຸດຫົວໜ້າກໍຍື່ນກອກຢາ ໃນຖົງຢາງນ້ອຍໃຫ້ຂ້ອຍ. ຫລັງຈາກຕໍ່ໄຟແລ້ວ ເພິ່ນກໍແນມເບິ່ງໜ້າຂ້ອຍ ແລ້ວຖາມຂຶ້ນຄ່ອຍໆ ວ່າ:

" ເປັນແນວໃດແດ່ ນ້ອງຜູ້ເປັນໝູ່ທີ່ສະໜິດສະໜົມກັບ ບຸນມີ ບໍ່ມີຫຍັງຜິດສັງເກດແດ່ລະຍະຫລັງໆ ມານີ້ ? "

ຂ້ອຍໜີບຢາເຂົ້າປາກແລ້ວຄ່ອຍໆ ປ່ອຍຄວັນອອກມາພ້ອມກັບຄຶດຄົ້ນຫາອາການຜິດສັງເກດຂອງບຸນມີ ເພື່ອຈະນຳມາຕອບຄຳຖາມຂອງຫົວໜ້າ.

ມັນຊິມີຫຍັງນໍ? ບຸນມີ ກັບຂ້ອຍສ່ວນຫລາຍພາຍຫລັງເລີກການ ຕອນແລງກໍແມ່ນໝໍ່ເປັນຜູ້ຊວນແວ່ຮ້ານອາຫານແຫ່ງເກົ່າ ລະຍະຫລັງໆມານີ້ ຖ້າວ່າຂ້ອຍຟ້າວກັບເມືອເຮືອນເພື່ອເບິ່ງເປັດເບິ່ງໄກ່ໝໍ່ກໍແວ່ຜູ້ດຽວ. ຈັ່ງຊັ້ນຂ້ອຍກໍບໍ່ຮູ້ວ່າມັນຊິກິນເຫລົ້າຮ່ວມໃຜ? ຂ້ອຍບໍ່ອາດຮູ້ໄດ້ ຄັນຊິເວົ້າທາງ ຄອບຄົວ ເທົ່າທີ່ຂ້ອຍຮູ້ກໍມີເຮືອນໃໝ່ທີ່ຍັງບໍ່ທັນໄດ້ຂຶ້ນຕາມປະເພນີ ລົດໃໝ່ສີໂປກ ແລະ ເອີ ... ອີກອັນໜຶ່ງຫວ່າງ 4 - 5 ມື້ຫລັງ ເມຍຂ້ອຍ ຄືເວົ້າວ່າ ແມ່ສູ່ຽວດຽວນີ້ໃສ່ສາຍຄໍມີກໍ່ເພັດ ອັນບັກໃຫຍ່ວ່າຊັ້ນ !... ນອກຈາກບັນຫານີ້ແລ້ວກໍຊິມີຫຍັງອີກ? ຫລື ວ່າເລື່ອງຂອງສາວອັນນັ້ນທັ້ນບໍ? ບໍ່ມາ! ໝໍ່ກໍເຄີຍບອກກັບຂ້ອຍວ່າ ຮັກແພງກັບທຳມະດາຊື່ງບາ. ເລື່ອງການ ດຳລົງຊີວິດຟຸມເຟືອຍແບບນີ້ ຂ້ອຍກໍເຄີຍໄດ້ເຕືອນໝໍ່ຫລາຍຄັ້ງຫລືວ່າຮອດດຽວນີ້ ເລື່ອງນີ້ຊິກາຍເປັນເລື່ອງໃຫຍ່ ແລ້ວລະເບີດບາດດຽວໂລດຈົນເຖິງຂັ້ນຊີວິດ ຂອງບຸນມີບໍ່ ?

ເຫັນຂ້ອຍມິດໃຊ້ຄວາມຄິດ ຫົວໜ້າເລີຍຖາມຂຶ້ນຕື່ມ.

" ຄັນຊັ້ນ ນ້ອງຮູ້ຈັກກັບເຖົ້າແກ່ໝໍທີ່ມາກິນເຂົ້າຮ່ວມກັບ ພວກ ນ້ອງ ເລື້ອຍໆ ຢູ່ຮ້ານອາຫານນັ້ນບໍ່ ? "

" ຮູ້ແທ້! ບຸນມີ ເປັນຜູ້ແນະນຳ ໃຫ້ຮູ້ຊື່ ແລະ ບໍລິສັດຂອງລາວ "

ຂ້ອຍຕອບໄປແລ້ວກໍຄິດຕໍ່ໄປອີກວ່າ :

ຫລື ວ່າມັນມີການຂັດຜົນປະໂຫຍດດ້ານໃດດ້ານໜຶ່ງບໍ່? ແລ້ວເຖົ້າແກ່ຜູ້ນັ້ນຈຶ່ງວາງແຜນກຳຈັດໝໍບຸນມີ ສ່ຽວຂ້ອຍ. ຂ້ອຍກຳລັງຄິດວ່າ " ຈັ່ງໃດກໍຕ້ອງມີອັນຂັດຄໍກັນຈຶ່ງເກີດມີເລື່ອງ..." ແຕ່ຫົວໜ້າຂ້ອຍຊໍ້າເວົ້າລັດກ່ອນ.

" ຫັ້ນແຫລະ ບຸນມີ ແລະ ເຖົ້າແກ່ຜູ້ນັ້ນ ມີຜົນປະໂຫຍດຮ່ວມກັນ ໃນດ້ານທີ່ຜິດຕໍ່ກົດໝາຍບ້ານເມືອງ, ຝືນຕໍ່ແນວທາງຂອງພັກຂອງລັດ ບໍ່ສົມກັບຄວາມໄວ້ເນື້ອເຊື່ອໃຈຂອງພໍ່ແມ່ປະຊາຊົນ ຫລົງລືມຄຸນສົມບັດ ຂອງພະນັກງານລະບອບໃໝ່ ຊົ່ວຍາມໃດເພິ່ນກໍຈຳນຳຢາກໃຫ້ຮ່ຳຮຽນເຝິກຝົນ ຕົນເອງ ໃຫ້ມີຄຸນສົມບັດທາດແທ້ຂອງຊົນຊັ້ນກຳມະກອນ ຮູ້ມິດໃກ້ ມິດໄກ ຮູ້ໃຈແຍກສັດຕູໂຕພື້ນຖານ ໂຕເປັນອັນຕະລາຍສະເພາະໜ້າ ແລະ ຍາວນານ ໂຕທີ່ ວົນວຽນອ້ອມຂ້າງອ້ອມແອ້ມຂອງພວກເຮົາ ສະເພາະແລ້ວແມ່ນໂຕທີ່ ສູ້ກັບເຮົາດ້ວຍສົງຄາມຈິດຕະສາດ ຍິງເຮົາດ້ວຍປືນລູກຈ້ຽ ! "

ຂ້ອຍຕົບເອິກປະ! ແຮງຕົບ ແລະ ເຂົ້າໃຈບັນຫາພ້ອມບາດ.

" ໂທ! ສ່ຽວເອີຍ... ວ່າໃດແໜັບໂລດແມ່ນຖືກປືນທີ່ບໍ່ມີສຽງ ນີ້ເນາະ ! ບໍ່ໜ້າຊິລືມໂຕປານນີ້... ຊິໃຫ້ປະເທດຊາດກາງຕໍ່ຜູ້ຈັ່ງໃດ ຊັ້ນນໍ້າ ?

ຂ້ອຍຄິດໃນໃຈແລ້ວກໍເວົ້າອອກມາເພື່ອໃຫ້ຫົວໜ້າໄດ້ຍິນນຳ.

" ບຸນມີ ໝໍເຄີຍມີປະຫວັດເຄື່ອນໄຫວການເມືອງດີ ຕັ້ງແຕ່ ລາວຍັງຮຽນຢູ່ນຳກັນພຸ້ນແຫລະ ພໍໄດ້ຮັບໜ້າທີ່ການກໍເອົາໃຈໃສ່ວຽກງານຈົນໄດ້ ຮັບຄວາມເຊື່ອຖືຈາກການຈັດຕັ້ງຂັ້ນເທິງ ແລະ ຮັບຄວາມນິຍົມຊົມເຊີຍຈາກອ້າຍ

ນ້ອງໃນພະແນກຂອງກັນ ວຽກງານສຳຄັນໆ ຫລາຍແນວກໍແມ່ນເຮັດຫລອນ ປີກາຍນີ້ຖ້ານ້ອງຈື່ບໍ່ຜິດກໍແມ່ນໄດ້ຮັບການຍ້ອງຍໍພຸ້ນໄດ໋! ນ້ອງເອງກໍວ່າໝໍ່ນີ້ ມີແນວຄິດເດັດດ່ຽວ ເຊື່ອໝັ້ນຕໍ່ອະນາຄົດເຊື່ອໝັ້ນຕໍ່ການນຳຮູ້ແຈ້ງສັດຕູ ຂອງການປະຕິວັດແທ້ໆ ໄດ໋! ແຕ່...ສຸດທ້າຍສັດຕູທີ່ວົນວຽນຢູ່ອ້ອມໂຕເອງ ໃນຊີວິດປະຈຳວັນ ບຸນມີ ໂລດບໍ່ທັນເຖິງຫາຕໍ່ສູ້. ປ່ອຍໃຫ້ມອດເຈາະຂາງເຮືອນຈົນເຮືອນຫຍຸບລົງແລ້ວຈຶ່ງຮູ້ເມື່ອເນາະ ! "

ຂ້ອຍສະແດງຄວາມເຫລືອໃຈ ຮູ້ສຶກວ່າມີສ່ວນຜິດພາດ ແລະ ຂາດສະຕິທີ່ບໍ່ໄດ້ເຖິງເປັນບັນຫາເພື່ອຊ່ວຍ ບຸນມີເຖິງແຕ່ຫົວທີ. ສ່ວນຫົວໜ້າເອງ ກໍຕິສີໜ້າຄືດັ່ງວ່າຮູ້ສຶກເສັຽດາຍຄວາມຮູ້ຄວາມສາມາດຂອງຄົນໄວກາງ ຜູ້ດີໝໍ່ບຸນມີນີ້ຢູ່ຈຶ່ງເວົ້າຂຶ້ນໃນວາດຊົງຢາກສັ່ງສອນຂ້ອຍນຳ. " ເລື່ອງນີ້ຖືວ່າ ເປັນບົດຮຽນອັນເຈັບແສບສຳລັບປັນຍາຊົນພວກເຮົາ ຊຶ່ງເພີ່ງໃຫ້ສັດຕູຍິງຈົນໄດ້ບໍ່ສົມກັບວ່າ " ປັນຍາຊົນກໍຄືຄົນຜູ້ພຽບພ້ອມດ້ວຍປັນຍາຄວາມຄິດ " ຊຶ່ງບໍ່ໄດ້ໝາຍຄວາມວ່າ. " ເປັນຄົນມີປັນຍາເພື່ອສວຍໂອກາດກອບໂກຍ " ໃນຂະນະຂັ້ນຜ່ານ ຖ້າເປັນແບບນີ້ກໍແມ່ນຜິດພາດໃຫຍ່ຫັ້ນແລ້ວ...

" ຈັ່ງຊັ້ນ ພະນັກງານ ພາລະກອນພວກເຮົາຈະຕ້ອງໄດ້ເພີ່ມສະຕິລະວັງຕົວດ້ານນີ້ຂຶ້ນຕື່ມອີກໄດ້ ນ້ອງເອີຍ! ຄວາມຈິງກໍແມ່ນແທ້ທີ່ວ່າ: ຕ້ອງມີຄົນທີ່ມີລະດັບເຕັກນິກວິທະຍາສາດສູງ ຈຶ່ງຊິສ້າງສັງຄົມນິຍົມໄດ້ ແຕ່ຖ້າ ຫາກວ່າຄົນຜູ້ພຽບພ້ອມດ້ວຍປັນຍາ ຫລືວ່າປັນຍາຊົນຫາກເຮັດແບບນີ້ກໍສ່ຳກັບ ວ່າເປັນໂງນຫີນ ຫລືໜ່ວຍພູມາຕັນເສັ້ນທາງກ້າວເດີນຂອງຊົນຊັ້ນກຳມະກອນຕື່ມຊ້ຳ "

ຫົວໜ້າເວົ້າສຸດກໍແກວ່ງຫົວແບບປະຕິເສດຊ້າໆ ແລ້ວຢ້ຳຕື່ມອີກວ່າ.

" ອັນນີ້ແຫລະ ທີ່ສ່ອງແສງໃຫ້ເຫັນຄວາມເປັນທຳຢ່າງແທ້ຈິງຂອງ

ລະບອບໃໝ່, ຢັ້ງຢືນໃຫ້ເຫັນສິດສະເໝີພາບຂອງທຸກຄົນພາຍໃນ ອຳນາດການປົກຄອງຂອງປະຊາຊົນ. ຜູ້ເຮັດຖືກເຮັດດີກໍແມ່ນໄດ້ຮັບການຍ້ອງຍໍ ຊົມເຊີຍ ບຸນມາເອງກໍໄດ້ຮັບຄວາມໄວ້ເນື້ອເຊື່ອໃຈ ແລະ ໄດ້ຮັບການຍ້ອງຍໍ ມາແລວ ເວລາມີພົນງານ. ສ່ວນຜູ້ເຮັດຜິດນັ້ນທັງບຸນມາເອງ ກໍແມ່ນຕ້ອງໄດ້ປະຕິບັດວິໄນຕາມຄວາມຜິດຂອງຕົນໂດຍບໍ່ໄດ້ຍົກເວັ້ນວ່າເປັນເຈົ້າໃຫຍ່ນາຍໂຕ ດີດັ່ງເຂົາເຮັດກັນຢູ່ໃນເມື່ອກ່ອນ, ເຮັດຜິດພໍຕາຍ ຖ້າວ່າມີເງິນ ແລະ ມີ ທະນາຍດີ ກໍບໍ່ໄດ້ຮັບໂທດຈັກເທື່ອ "

ເລື່ອງ " ສ່ຽວຮັກ " ຂອງຂ້ອຍຖືກປືນ... ອາການສາຫັດ ...ແມ່ນຈະແຈ້ງລົງແນວນີ້. ແນວທີ່ຂ້ອຍເອງກໍບໍ່ເຄີຍຄິດຮູ້ເມື່ອວ່າກັນມີປືນ ທີ່ບໍ່ເປັ່ງສຽງແຕ່ເປັ່ງພິດທີ່ຮ້າຍແຮງ ຊຶ່ງເວລາໃດກັນປືນປາຍຍິງໃສ່ຜູ້ໃດ ຜູ້ໜຶ່ງແລວຫາກວ່າຜູ້ນັ້ນບໍ່ມີສະຕິລະວັງຕົວ ຫລືມຸ່ງເສື້ອປະຕິວັດທີ່ຈອມປອມແລ້ວ ຈັ່ງໃດເສື້ອຕົວນັ້ນກໍບໍ່ສາມາດຊ່ວຍເປັນເສື້ອເກາະກັນປືນຊະນິດນີ້ໄດ້ເລີຍ.

●●



ທ.ທະນູເພັດ

ຄຳມ້າວ ນະນິພັດ ເກີດວັນທີ່ ໖/໔/໑໙໔໙ ຢູ່ບ້ານວັງຊຽງ ເມືອງ ປາກແຊງ ແຂວງຫລວງພະບາງ.

ປີ ໑໙໗໐ ເຂົາໄດ້ອອກຈາກຄອບຄົວ ເຂົ້າມາເປັນກຳມະກອນ ໂຮງພິມສູນກາງແນວລາວຮັກຊາດ, ປີ ໑໙໗໓ ໄດ້ຍ້າຍໄປຢູ່ໂຮງພິມ ມິດຕະພາບລາວ-ຈີນ ຂອງສູນກາງ ທີ່ແຂວງອຸດົມໄຊ, ປີ ໑໙໗໔ ປ່ຽນຈາກອາຊີບ ກຳມະກອນ ມາເປັນຕຳຫລວດ ຢູ່ແຂວງຫລວງພະບາງ ປີ ໑໙໘໐ ໄດ້ຍ້າຍຈາກຕຳຫລວດໄປເປັນທະຫານປ້ອງກັນອາກາດໃນກອງທັບກອງໜຶ່ງ ທີ່ພາກເໜືອລາວ.

ຄຳມ້າວໄດ້ດຳລົງຊີວິດຜ່ານອາຊີບກຳມະກອນ ພັບປັ້ນ ເຄີຍເປັນທະຫານ ເຊິ່ງກາຍເປັນທຶນຮອນແຫ່ງຊີວິດສ່ວນໜຶ່ງຂອງເຂົາຢູ່ໃນ ການເຄື່ອນໄຫວວັນນະຄະດີ. ເລື່ອງສັ້ນຂອງເຂົາທີ່ລົງພິມໃນວັນນະສິນ ໃນນາມ ປາກກາ ທ. ທະນູເພັດ ມີ: ມຸ່ງໜ້າສູ່ຊາຍແດນ, ບໍ່ມີກເລີຍ, ຮອຍແປວສັນຍາລັກ.

ຕໍ່ມາ ຄຳມ້າວ ໄດ້ປ່ຽນຈາກອາຊີບທະຫານມາເປັນນັກສະແດງ ລະຄອນເວທີ, ເຖິງວ່າເປັນນັກສະແດງແຕ່ເຂົາຍັງໄດ້ຂຽນລະຄອນເວທີເລື່ອງ " ຮັກບ້ານເກີດ" ແລະ ລະຄອນວິທະຍຸເລື່ອງ "ຝົນສົ່ງຟ້າ" "ວົງວຽນຊີວິດ" ປຶ້ມເລື່ອງສັ້ນ ແລະ ບົດລະຄອນຂອງຄຳມ້າວ ສ່ວນຫລາຍແມ່ນເວົ້າ ເຖິງການປ້ອງກັນຊາດ ປ້ອງກັນຄວາມສະຫງົບຂອງປະຊາຊົນ.



# ຮອຍແປ້ວ ສັນຍາລັກ

◉ ທ. ທະນູເພັດ

ຂ້ອຍໝົດສະຕິໄປດົນປານໃດ ຂ້ອຍກໍຍັງບໍ່ຮູ້, ບາດຮູ້ເນື້ອຂຶ້ນມາຂ້ອຍກໍເຫັນແຕ່ນາງແພດ ສາມຄົນຢືນອ້ອມພຽງນອນຂອງຂ້ອຍຢູ່. ແລ້ວຂ້ອຍກໍຍັງບໍ່ທັນຮູ້ວ່າ ບ່ອນນັ້ນແມ່ນບ່ອນໃດກັນແທ້. ແຕ່ເມື່ອສັງເກດເບິ່ງ ໃຫ້ດີກໍຈຶ່ງຮູ້ວ່າ ບ່ອນນັ້ນຄືໂຮງໝໍ, ແຕ່ຂ້ອຍກໍຍັງບໍ່ທັນຮູ້ຈັກເທື່ອວ່າ ແມ່ນ ໂຮງໝໍບ່ອນໃດກັນແທ້. ຂ້ອຍຮູ້ສຶກວ່າ ອິດເມື່ອຍແຮງ ແລະ ຢາກດື່ມນ້ຳຫລາຍ. ຂ້ອຍຈຶ່ງພະຍາຍາມຢາກຈະພິກຕົວໄປມາແລ້ວຂໍດື່ມນ້ຳນຳຊຸມນາງແພດນັ້ນ ແຕ່ປະກົດວ່າ ທົ່ວຮ່າງກາຍຂອງຂ້ອຍໄດ້ມີວັດຖຸສິ່ງໃດສິ່ງໜຶ່ງທີ່ໜັກຕັ້ງເປັນໂຕນ ຜູ້ມລະ ເຕັ້ງຮ່າງກາຍຂອງຂ້ອຍໄວ້ ຂ້ອຍຈຶ່ງບໍ່ສາມາດເໜັງຕິງໄດ້ດັ່ງໃຈນຶກ ຂ້ອຍໄດ້ແຕ່ຕົງພຽງແຕ່ຄໍຂຶ້ນໄປຫາຫົວດ້ວຍຄວາມຝືດເຄືອງ.

- ເພິ່ນຟື້ນສະຕິ ແລ້ວເດ. ໜຶ່ງໃນຈຳນວນສາມນາງນັ້ນ ເວົ້າຂຶ້ນກ່ອນ.

- ໂອຍ! ໆ...ຂໍ...ດື່ມ...ນ້ຳ...ແດ່...ໂອຍ!..ໆ ຂ້ອຍ ເອີ່ຍຂຶ້ນດ້ວຍສຽງອັນແຫບໆ.

- ອ້າຍຍັງດື່ມນ້ຳບໍ່ໄດ້ ອົດເອົາກ່ອນ. ນາງຜູ້ຢືນຢູ່ໃກ້ຂ້ອຍຕອບຢ່າງ ສຸພາບ.

ຂ້ອຍມືນຕາຂຶ້ນເຕັມຫນ່ວຍ ແນມເຫັນແກ້ວນ້ຳທະເລ ທີ່ແຂວນຢູ່ເທິງຫົວຕຽງນອນຂອງຂ້ອຍ, ຂ້ອຍກໍ່ຍິ່ງຮູ້ສຶກວ່າຢາກດື່ມນ້ຳແຮງຂຶ້ນກວ່າເກົ່າ. ໃນໃຈນຶກພໍ່ຢາກຈະລຸກຂຶ້ນດຶງເອົາແກ້ວນ້ຳທະເລນັ້ນລົງມາດື່ມໃຫ້ເຕັມໃຈ ພູມລະຜັນ. ແຕ່ເຮັດແນວໃດຈຶ່ງຈະເຮັດແບບນັ້ນໄດ້. ໃນເມື່ອວ່າ ທົ່ວຮ່າງກາຍຂອງຂ້ອຍມັນໄດ້ຈົມເລິກຢູ່ໃນຄວາມເຈັບປວດ ແລະ ອິດອ່ອນໂຮຍແຮງ ສະນັ້ນ ຂ້ອຍຈຶ່ງໄດ້ແຕ່ຄິດ ແລະ ຮ້ອງຄາງດ້ວຍຄວາມເຈັບປວດ ແລະ ຫິວໂຫຍ.

ໃນຂະນະທີ່ຂ້ອຍພວມຮ້ອງຄາງ ດ້ວຍຄວາມເຈັບປວດ ແລະ ຫິວໂຫຍຢູ່ນັ້ນ ກໍພໍດີເຫັນທ່ານຫມໍໃນຊຸດສີຂາວ ໃສ່ແວ່ນຕາຂາວຍ່າງເຂົ້າໃນຫ້ອງນອນຂອງຂ້ອຍ ພ້ອມທັງຖາມຊຸມນາງແພດນັ້ນວ່າ :

- ເປັນແນວໃດ ຮູ້ເນື້ອຄິງແລ້ວບໍ ?

- ເຈົ້າ ! ເພິ່ນຂໍດື່ມນ້ຳ ໃຫ້ດື່ມໄດ້ແລ້ວບໍ? ນາງຜູ້ຢືນຢູ່ໃກ້ໆຂ້ອຍ ຕອບ ພ້ອມທັງຖາມທ່ານຫມໍຄືນ.

- ໄດ້! ຈະເປັນຫຍັງ ນ້ອງໄປເອົານ້ຳນົມຕີໃສ່ນ້ຳຮ້ອນ ມາໃຫ້ລາວ ດື່ມກ່ອນໄປ.

ທ່ານຫມໍຕອບນາງແພດພ້ອມທັງອ່າຍຫນ້າໄປບອກນາງຜູ້ຢືນຢູ່ແປະປາກປະຕູທາງເຂົ້າ ນາງແພດຜູ້ນັ້ນບໍ່ຕອບມິແຕ່ຍ່າງອອກຈາກທີ່ນັ້ນໄປ ຊົ່ວໄລຍະຫນຶ່ງ ຈຶ່ງເຫັນນາງກັບເຂົ້າມາ ພ້ອມກັບຈອກນົມຮ້ອນໆ ຈອກຫນຶ່ງ, ນາງເອົາວິງແລ້ວເອົາບ່ວງຕັກຂຶ້ນຊີມເບິ່ງ ເມື່ອເຫັນວ່າມັນຫວານ ແລະ ເຢັນ ພໍດື່ມໄດ້ແລ້ວ ນາງຈຶ່ງເອົາບ່ວງຕັກໃສ່ປາກໃຫ້ຂ້ອຍ. ຂ້ອຍດື່ມນົມຮ້ອນ ນຳ

ທ. ທະນູເພັດ

ນາງແພດຄົນນັ້ນດ້ວຍຄວາມຂອບໃຈ ເມື່ອນົມຮ້ອນໃນຈອກນັ້ນເຂົ້າໄປ ເຖິງກະເພາະອາຫານຂອງຂ້ອຍຫມົດແລ້ວ ຂ້ອຍຈຶ່ງຮູ້ສຶກວ່າ ມີແຮງແດ່ເລັກນ້ອຍ ຂ້ອຍຫລຽວເບິ່ງຫນ້ານາງແພດຄົນນັ້ນແລ້ວກໍຖາມນາງດ້ວຍຄວາມສົນໃຈວ່າ :

- ບ່ອນນີ້ແມ່ນບ່ອນໃດກັນນໍ້ ?
- ນີ້ແມ່ນໂຮງຫມໍເສນາຮັກ.
- ແລ້ວຂ້ອຍມາຮອດພີ້ ດົນປານໃດແລ້ວ ?
- ເພິ່ນສົ່ງອ້າຍມາຮອດຄືນນີ້.

ພໍຕອບຄຳຖາມຂອງຂ້ອຍສຸດ ນາງກໍຈັບເອົາແພຂາວໆ ຂຶ້ນມາ ເຊັດປາກໃຫ້ຂ້ອຍແລ້ວກໍຍ່າງເອົາຈອກແກ້ວໄປຕັ້ງໄວ້ເທິງໂຕະໃກ້ໆກັບ ຕີນຕຽງຂອງຂ້ອຍ. ທ່ານຫມໍຍ່າງເຂົ້າມາແປງແກ້ວນ້ຳທະເລ ແລ້ວຍົກໂມງ ໃນແຂນຂຶ້ນມາເບິ່ງ ພ້ອມທັງເວົ້າກັບຂ້ອຍວ່າ :

- ພະຍາຍາມພັກຜ່ອນໃຫ້ຫລາຍໆ ເດີ ຈັກຫນ່ອຍກໍຈະຫາຍດອກ.

ຂ້ອຍຕອດຫົວເບົາໆ ສະແດງວ່າຂອບໃຈນຳທ່ານຫມໍທີ່ໄດ້ກູ້ເອົາ ຊີວິດຂອງຂ້ອຍໄວ້ ທ່ານຫມໍຍ່າງອອກຈາກຫ້ອງນັ້ນໄປ. ນາງແພດສາມຄົນນັ້ນ ດຶງຜ້າຫົ່ມຂຶ້ນປົກຫນ້າເອິກໃຫ້ຂ້ອຍ ພ້ອມທັງແປງຫມອນແລ້ວຈຶ່ງພາກັນຍ່າງໄປນັ່ງລົມກັນຢູ່ແປ້ນມ້າຂ້າງຕຽງນອນຂ້ອຍ. ດົນໆ ຈຶ່ງປ່ຽນກັນລຸກມາສ່ອງເບິ່ງແກ້ວນ້ຳທະເລ ແລ້ວກໍແປງແຂນໃຫ້ຂ້ອຍແລ້ວຈຶ່ງກັບໄປນັ່ງບ່ອນເກົ່າ. ພວກເພິ່ນເອົາໃຈໃສ່ເບິ່ງແຍງຂ້ອຍເປັນພິເສດ, ຄ້າຍກັບວ່າ ຂ້ອຍເປັນ ຍາດຕິພີ່ນ້ອງຂອງພວກເພິ່ນນີ້ລະ. ພວກເພິ່ນຊ່າງເປັນຄົນດີສາແທ້ໆ ຊູເມດຕາອາລີຄົນເຈັບ ທຸກທົ່ວຫນ້າໂດຍບໍ່ໄດ້ຈຳແນກຊົນຊັ້ນຊົນຊາດ ແລະ ເພດໄວແຕ່ປະການໃດ. ສົມແລ້ວທີ່ເປັນນາງແພດປະຕິວັດ ແພດປະຊາຊົນ ຊຶ່ງຢູ່ໃຕ້ການ ນຳພາຂອງພັກປະຊາຊົນປະຕິວັດລາວ ຜູ້ສະຫລາດສ່ອງໃສ.

ຂ້ອຍໄດ້ຍ້າຍຈາກຕຶກຜ່າຕັດອອກມານອນຢູ່ຕຶກພາຍນອກ ໄດ້ສອງອາທິດກວ່າແລ້ວ. ເປັນອັນວ່າ ອາການເຈັບຂອງຂ້ອຍກໍຄ່ອຍໆ ຫາຍໄປເທື່ອລະນ້ອຍ. ຈົນຂ້ອຍສາມາດຍ່າງໄດ້ໄປມາໃນຂອບເຂດນ້ອຍໆນັ້ນໄດ້.

ມື້ນັ້ນ, ກໍຄືທຸກໆ ມື້ຜ່ານມາ, ພາຍຫລັງຕື່ນຈາກນອນ ຂ້ອຍມັກຈະນັ່ງເຮັດວຽກຢູ່ເທິງຕຽງນອນ ເພື່ອສັງເກດເບິ່ງບາດແຜຂອງຂ້ອຍ ຂ້ອຍເອົາມືລູບຂຶ້ນລູບລົງ. ໃຈນຶກຢາກຈະໃຫ້ມັນດີໄວໆ ເພື່ອຈະໄດ້ກັບຄືນກົມກອງ ແລ້ວຈັບປືນອອກຍິງຂ້າພວກປະຕິການ [redacted] ເຂົ້າມາບຸກຍຶດເອົາສານບ້ານລາວ ຢ່າງປ່ວງບາ ພວກມັນຫວັງຈະກືນກິນປະເທດລາວ ທີ່ແສນສັກກະລະບູຊາຂອງຂ້ອຍ. ນຶກຮອດບ່ອນນີ້ຂ້ອຍພໍຢາກເປັ່ງສຽງຮ້ອງອອກມາໃຫ້ມັນດັງໆ ເພື່ອໃຫ້ພວກບ້າເລືອດກະຫາຍສົງຄາມພວກນັ້ນຮູ້ວ່າ: ຕາບໃດນັກຮົບປະຕິວັດຂອງລາວຍັງມີຊີວິດຢູ່, ພວກສູບໍ່ຕ້ອງຝັນຫວານແບບນັ້ນດອກ ແລະ ກໍບໍ່ມີວັນອີກສາແລ້ວ ທີ່ຈະໄດ້ກືນກິນປະເທດສາທາ•ຂອງລາວໄດ້ຢ່າງງ່າຍດາຍ.

ຂ້ອຍນຶກຮອດບ່ອນນີ້ຕ້ອງໄດ້ຢຸດ, ເພາະມີສຽງບາດຕີນຂອງຄົນຍ່າງເຂົ້າມາໃນຫ້ອງຂ້ອຍ ພາດແສງຕາໄປເບິ່ງທີ່ມີສຽງບາດຕີນ.ເຫັນ ນາງແພດຄົນໜຶ່ງໃນມືຖືສະແລ່ງສີດຢາຂ້ອຍກົ້ງແສງຕາເບິ່ງນາງແຕ່ຫົວສຸດຕີນຢ່າງເຕັມຕາ ດ້ວຍຄວາມສົນໃຈ ເພາະກ່ອນໜ້ານີ້ຂ້ອຍບໍ່ເຄີຍເຫັນນາງມາປະກົດຕົວຢູ່ສະຖານທີ່ແຫ່ງນີ້. ນາງເປັນຄົນສູງຂາວ, ໜ້າມົນ, ດວງຕາທັງຄູ່ມີແວວປະກາຍອັນສົດໃສນາງປ່ອຍຮອຍຍິ້ມມາແຕ່ໄກໆ. ເຮັດໃຫ້ຈິດໃຈຂອງໜຸ່ມນັກຮົບຊາຍແດນຄືຂ້ອຍ ຕ້ອງອ່ອນໃຈລົງກັບຮອຍຍິ້ມຂອງນາງ. ນາງຍ່າງກາຍຂ້ອຍໄປສີດຢາໃຫ້ສະຫາຍຜູ້ນອນຕຽງທີສອງແລ້ວ ຈຶ່ງຍ່າງມາຫາຂ້ອຍ ພ້ອມທັງເວົ້າອອກດ້ວຍນ້ຳສຽງອັນອ່ອນຫວານວ່າ :

- ອ້າຍແກ້ເສື້ອອອກດູ ນ້ອງຈະສີດຢາໃຫ້.

ຂ້ອຍຮີບແກ້ເສື້ອອອກເບື້ອງຊ້າຍ ແລ້ວເອົານິ້ວຄ້ຳແອວ ເພື່ອລໍຖ້າຮັບເອົານ້ຳຢາຈາກນາງ ແຕ່ກໍ່ນຶກເສີຍ ແມ່ນນາງຍັງເຮັດຫຍັງ ນາງຈຶ່ງບໍ່ສີດຢາໃຫ້ຂ້ອຍ. ຂ້ອຍນຶກແລ້ວກໍ່ຫລຽວເບິ່ງໜ້ານາງ ແລ້ວນາງຈຶ່ງບອກຂ້ອຍ ຕໍ່ໄປວ່າ :

- ແກ້ອອກໃຫ້ໝົດເບິ່ງດູເສື້ອຂອງອ້າຍ.

ຂ້ອຍບໍ່ໄດ້ສົນໃຈນຳນາງວ່າ ດ້ວຍເຫດໃດນາງຈຶ່ງ ບອກໃຫ້ຂ້ອຍແກ້ເສື້ອອອກຈົນໝົດ. ຂ້ອຍຮີບແກ້ອອກ ນາງສັງເກດເບິ່ງຮອຍແປວ ຢູ່ຂ້າງເບື້ອງຂວາຂອງຂ້ອຍ ແລະ ກົກແຂນເບື້ອງຊ້າຍ ໜ່ອຍໜຶ່ງ ຈຶ່ງສີດຢາໃຫ້ຂ້ອຍ ເມື່ອຖອດເຂັມອອກຈາກແຂນຂອງຂ້ອຍແລ້ວ ນາງກໍ່ຍ່າງໄປເບິ່ງຊື່ຂອງຂ້ອຍຢູ່ໃນບົ່ງມະຕິພະຍາດທີ່ຕິດໄວ້ຕີນຕຽງ ເມື່ອຮູ້ວ່າ ຂ້ອຍຊື່ມີໄຊ ນາງຈຶ່ງຍ່າງມາຖາມຂ້ອຍວ່າ :

- ແຕ່ກ່ອນອ້າຍກໍ່ໄດ້ໄປເຮັດວຽກຢູ່ທາງເມືອງຕົ້ນເຜີ້ງແຂວງຫຼວງນ້ຳທາບໍ່ ?

- ແຕ່ກ່ອນຕອນໃດ ? ຂ້ອຍຮີບຖາມຄືນ.

- ພາຍຫລັງຍຶດອຳນາດແລ້ວ.

- ໄດ້ໄປແທ້, ແລ້ວນ້ອງເຄີຍເຫັນອ້າຍຊັ້ນບໍ ?

- ຖ້າແມ່ນນ້ອງຫາກຈື່ບໍ່ຜິດບໍ່ພຽງແຕ່ວ່າເຄີຍເຫັນ, ນ້ອງຍັງເຄີຍໄດ້ກິນເຂົ້າຮ່ວມພານນຳອ້າຍຫລາຍຄາບເຕີບ.

- ແລ້ວນ້ອງເປັນໃຜ ?

- ອ້າຍລອງຄິດຄືນເບິ່ງແມ່ນໃຜປົວບາດແຜນັ້ນໃຫ້ອ້າຍ? ນາງທັງເວົ້າທັງຊີ້ໃສ່ຮອຍແປວທີ່ກົກແຂນເບື້ອງຊ້າຍຂອງຂ້ອຍ.

-ຕາຍ ! ຊັ້ນນ້ອງກໍ່ແມ່ນບົວພັນຕິ ແມ່ນບໍ ?

- ເຈົ້າ! ນາງຕອບສັ້ນ ໆ.

ຂ້ອຍຕັ້ງໃຈວ່າຈະຖາມຂ່າວຄາວນາງອີກຫລາຍຢ່າງຫລາຍແນວ ແຕ່ຂ້ອຍຕ້ອງໄດ້ຢຸດເພາະມີນາງແພດຄົນຫນຶ່ງຍ່າງເຂົ້າມາຫານາງ ພອມທັງບອກນາງວ່າ :

- ພົນ! ທ່ານຫມໍບອກໃຫ້ໂຕໄປຫາຢູ່ຫ້ອງການດ່ວນ.

- ເຈົ້າ! ນາງຕອບຢ່າງສຸພາບ ພອມທັງອວາຍຫນ້າມາ ຄອບຂ້ອຍວ່າ:

- ນ້ອງຂໍຕົວກ່ອນເດີ, ຈັກຫນ່ອຍນ້ອງຈຶ່ງຈະມາຫາ.

- ຈາວ! ຂ້ອຍຕອບສັ້ນໆ ພ້ອມທັງຕອດຫົວເບົາໆ ແລ້ວນາງກໍລຸກອອກຈາກທີ່ນັ້ນໄປ ຂ້ອຍຕັ້ງໃຈວ່າ ຈະຍ່າງລົມນາງໄປຕາມທາງ ແຕ່ກໍຕ້ອງໄດ້ຢຸດຊົ່ວຄາວ ເພາະວ່າພໍແຕ່ຂ້ອຍໂຍບກົ້ນລຸກຂຶ້ນຈາກຕຽງ ສະຫາຍ ຜູ້ນອນຢູ່ຕຽງທີສອງກໍເວົ້າລອດອອກມາໃສ່ຂ້ອຍແບບລັກສະນະຢອກໄຍວ່າ :

- ເອີຍໆ ! ບໍ່ແມ່ນສົນໃຈເອື້ອຍແພດໃຈດີເຮົາແລ້ວບໍທັ້ນນາ ?

- ບໍ່ດອກ ! ເຮົາກັບນາງເຄີຍຮູ້ຈັກກັນມາກ່ອນແລ້ວ. ຂ້ອຍຕອບສຸດກໍຍ່າງອອກຈາກທີ່ນັ້ນໄປ ແຕ່ມັນກໍຊ້າເກີນໄປສາແລ້ວ. ເພາະວ່າ ພໍແຕ່ຂ້ອຍຍ່າງອອກຫວິດປາກປະຕູກໍທັນເຫັນແຕ່ຫລັງເສື້ອຂອງນາງລັບເຂົ້າໃນຫ້ອງການຂອງທ່ານຫມໍ ຂ້ອຍຈຶ່ງກັບຄືນເຂົ້າຫ້ອງດ້ວຍຄວາມເສັຽຫວັງ. ຂ້ອຍປົດເກີບແລ້ວກໍລົ້ມຫົວລົງນອນເທິງຕຽງ ແສງຕາຈັບທີ່ພັດລົມທີ່ພວມປິ່ນອ້ອນໄປວຽນມາຢູ່ເທິງເພດານ. ເບິ່ງແລ້ວມັນຊ່າງຄ້າຍກັບຊີວິດຂອງພວກຂ້ອຍທັງສອງ ທີ່ຫມູນວຽນໄປມາແລ້ວໄດ້ມາພົບພໍ້ກັນອີກ ໂດຍບໍ່ໄດ້ຄາດຝັນມາກ່ອນ. ຂ້ອຍຍົກແຂນຂຶ້ນກ່າຍຫນ້າຜາກເລີ່ມຄິດ. ພາບອະດີດເບື້ອງຫລັງລະຫວ່າງ ຂ້ອຍກັບນາງ ກໍໄດ້ເລື່ອນເລື່ອນລອຍເຂົ້າມາສູ່ມັນສະຫມອງຂອງຂ້ອຍອີກຄັ້ງຫນຶ່ງ ຄືກັບຮູບເງົາຟິມເລື່ອງທີ່ຫນ້າຈົ່ມ.

ໃນລະຫວ່າງປີ ໑໙໗໕-໑໙໗໖ ພາຍຫລັງຍຶດອຳນາດແລ້ວ ຂ້ອຍໄດ້ຖືກຂັ້ນເທິງແຕ່ງໃຫ້ລົງປຸກລະດົມຂົນຂວາຍພື້ນຖານ ເຂດເມືອງຕົ້ນເຜິ້ງແຂວງ

ຫລວງນ້ຳທາ. ຂ້ອຍໄດ້ໄປພັກອາໄສຢູ່ເຮືອນຫລັງໜຶ່ງ ຊຶ່ງມີພຽງສາມຄົນ ພໍ່ແມ່ ແລະ ລູກສາວນ້ອຍຄົນໜຶ່ງໃນໄວ ໑໐ ຂວບນີ້ລະ.

ໃນເບື້ອງຕົ້ນ ປະຊາຊົນເຂດນັ້ນ ກໍບໍ່ນິຍົມຊົມຊອບຄົນປະຕິວັດປານໃດ ເວົ້າລວມ, ເວົ້າສະເພາະ ເຮືອນທີ່ຂ້ອຍພັກນັ້ນກໍຄືກັນບໍ່ສູ້ມັກໂອ້ລົມ ແລະທັກຖາມຂ້ອຍ ແມ່ນກະທັ້ງຍາມກິນເຂົ້າກໍແບ່ງໃຫ້ຂ້ອຍກິນຕ່າງຫາກຂ້ອຍເຮັດຫຍັງລົງໄປກໍເປັນອັນວ່າບໍ່ເໝາະສຳລັບຂະເຈົ້າ. ແຕ່ດ້ວຍວ່າປະຕິບັດຕາມຄຳສັ່ງຂອງຂັ້ນເທິງ ເພື່ອໃຫ້ສຳເລັດຜົນຂ້ອຍຈຶ່ງໃຊ້ຄວາມພະຍາຍາມເອົາຄວາມດີສູ້ ແລະ ເຮັດທຸກສິ່ງທຸກຢ່າງຕາມຄຳແນະນຳຂອງຂັ້ນເທິງ ໃນທີ່ສຸດ ຂະເຈົ້າກໍຮູ້ແຈ້ງເຫັນຈິງ ແນວທາງນະໂຍບາຍຂອງພັກ ແລະ ຮູ້ຮັກລະບອບໃໝ່ ຮັກການປະຕິວັດ ເວົ້າລວມ, ເວົ້າສະເພາະ ຂ້ອຍເອງກໍໄດ້ຮັບການຊຸ້ມຊູຢູ້ໜູນ ຊ່ວຍເຫລືອຮັກແພງຈາກຂະເຈົ້າເປັນຢ່າງດີ ເປັນຕົ້ນກໍແມ່ນເຮືອນທີ່ຂ້ອຍພັກ, ພໍ່ແມ່ໃນເຮືອນຮັກແພງຂ້ອຍຄືກັບລູກຄີງໆຂອງເພິ່ນ ສ່ວນອື່ນາງລູກສາວ ຂອງເພິ່ນກໍຍິ່ງສະໜິດສະໜົມກັບຂ້ອຍ.ແຕ່ລະມື້ພາຍຫລັງກິນເຂົ້າແລງແລ້ວ ນາງກໍເອົາປຶ້ມບົດຮຽນອອກມາໃຫ້ຂ້ອຍສອນໃຫ້ນາງເປັນພິເສດ.

ມື້ໜຶ່ງ ຂ້ອຍໄປເຮັດວຽກຢູ່ສຳນັກເມືອງ. ຂາກັບຄືນດວງຕາເວັນໄດ້ຕົກດິນແລ້ວ ເຮັດໃຫ້ເສັ້ນທາງກັບຄືນບ້ານຂອງຂ້ອຍ ຕ້ອງມືດປານກຳຕາ. ພໍແຕ່ຂ້ອຍຍ່າງໃກ້ໆຈະຮອດບ້ານ ຍັງປະມານ ໔໐໐ ແມັດ ນີ້ລະ ບັງເອີນຍິນສຽງປືນດັງຂຶ້ນຕິດໆ ກັນສາມນັດ.

- ປັງ ! ປັງ ! ປັງ !

ຂ້ອຍເຕັ້ນລົງຕະຄອງແຄມທາງ ຈົກປືນສັ້ນໃນແອວອອກມາຫ້າງນົກ ສັກສາຍຕາໄປໃສ່ທີ່ມີສຽງປືນຢ່າງບໍ່ພັບ. ຄາວໜຶ່ງຮ່າງດຳໆ ຮ່າງໜຶ່ງຄ່ອຍຄ່ອຍຍ່ອງແຍ່ງອອກຈາກເງົາມືດເບັດໜ້າມາຫາຂ້ອຍ. ໜຶ່ງກາວ, ສອງ

ກ້າວ ຂ້ອຍປ່ອຍໃຫ້ຮ່າງນັ້ນຫຍັບເຂົ້າມາໃກ້ຂ້ອຍອີກສາມກ້າວ.

- ປັງ ! ປັງ ! ຂ້ອຍເກາະໄກປືນສອງນັດຊ້ອນ. ເຫັນແຕ່ ມັນຫົວສັກລົງດິນໄດ້ຍິນແຕ່ສຽງເອີບາດໜຶ່ງ ຈາກນັ້ນ ຂ້ອຍກໍກົ້ງໄປກ້າຂວາ ໜ່ອຍໜຶ່ງ ເພື່ອສັງເກດເບິ່ງສະພາບຕໍ່ໄປ.

ໃນຂະນະນັ້ນ ຂ້ອຍປະກົດວ່າເປັນສີເຢັນໆ ກົກແຂນເບື້ອງຊ້າຍ ແລະເປັນສີແສບໆ ເຟື້ອງຂ້າງເບື້ອງຂວາ. ຂ້ອຍເອົາມືລູບເບິ່ງເປັນສີປຽກໆ . ຕາຍ ! ຂ້ອຍຖືກລູກປືນ ຂ້ອຍນຶກຕົກໃຈຄືນດຽວ ຈາກນັ້ນກໍ່ຮູ້ສຶກເຈັບປວດຂຶ້ນຜິດປົກກະຕິ ຂ້ອຍກັດແຂ້ວທົນຕໍ່ຄວາມເຈັບປວດ ພະຍາຍາມທອນໂຮມ ກຳລັງແຮງເພື່ອຈະລຸກຂຶ້ນ ແລ້ວຍ່າງເມືອລາຍງານກອງຫລອນ ກໍພໍດີ ໄດ້ຍິນສຽງຂອງຄົນແລ່ນມາທີ່ນັ້ນ ປະມານ ໑໐ ກວ່າຄົນ. ຂ້ອຍສະຫງັດຟັງ ແລະສັງເກດເບິ່ງຕໍ່ໄປ. ເມື່ອສັງເກດເບິ່ງຄັກໆ ຈຶ່ງຮູ້ວ່າ ຄົນທີ່ແລ່ນມານັ້ນ ແມ່ນກອງຫລອນໃນບ້ານນັ້ນເອງ.

- ເຫັນບໍ່ ? ໜຶ່ງໃນຈຳນວນ ໑໐ ກວ່າສະຫາຍນັ້ນຖາມ.

- ບໍ່ມາ ຄືບໍ່ ມີປະກົດການຫຍັງ. ອີກຜູ້ໜຶ່ງທີ່ຍ່າງກ່ອນຕອບ.

- ຊ່ວຍແດ່ ! ຂ້ອຍຮ້ອງໄປໃສ່ກອງຫລອນ.

- ຮື ! ນ້ອງມີໄຊເອງດອກຫວາ ? ສຽງຂອງອ້າຍສົມຊາຍ ຫົວໜ້າກອງຫລອນຖາມຄືນ ພ້ອມທັງແລ່ນເຂົ້າມາຫາຂ້ອຍ.

- ເຈົ້າ! ຂ້ອຍຕອບສັ້ນໆ ອ້າຍສົມຊາຍກໍແລ່ນມາອູ້ມຂ້ອຍ. ຈາກນັ້ນ ອ້າຍນ້ອງກອງຫລອນຕ່າງກໍພາກັນແລ່ນເຂົ້າມາ ຫຸ້ມທີ່ຂ້ອຍ ແລ້ວກໍຖາມ ເຖິງເລື່ອງລາວ.

- ເອົາລາວໄປໂຮງໝໍໄວແດ່ຕີ. ສຽງໜຶ່ງຢູ່ຂ້າງນອກ ເວົ້າລອດເຂົ້າມາ.

- ບໍ່ຈຳເປັນດູອກລູກປືນຍັງໄກຫົວໃຈຢູ່. ພວກອ້າຍຣີບໄປກວດ ເບິ່ງ ຂ້າງຕົ້ນໂພນັ້ນເບິ່ງ ນ້ອງຍິງຕອບນີ້ມັນສອງນັດຈັກຈະເປັນແນວໃດ.

ພໍຂ້ອຍເວົ້າສຸດ ອ້າຍສິນຊາຍກໍ່ສັ່ງໃຫ້ອ້າຍນ້ອງຂະຫຍາຍແຖວອ້ອມກົກ ໂພກົກນັ້ນແລ້ວແຕ່ງຈຳນວນໜຶ່ງເຂົ້າໄປກວດເບິ່ງ. ສ່ວນເພິ່ນກໍ່ ຈີກຜ້າອາບ ນ້ຳທີ່ມັດຢູ່ແອວ ເພິ່ນອອກມາພັນບາດໃຫ້ຂ້ອຍ ພໍແຕ່ເພິ່ນພັນບາດໃຫ້ຂ້ອຍ ສຳ ເລັດກໍ່ມີສຽງໜຶ່ງຮ້ອງອອກມາຈາກເງົາມືດວ່າ :

- ໂອຍ ! ມັນມັບໜາແລ້ວລະຣີບເອົາໄຟມາ ເຢືອງເບິ່ງໜ້າມັນ ເບິ່ງ ແມ່ນບັກໃດກັນແທ.

ຈາກນັ້ນໄຟສາຍເປັນຈຳນວນຫລາຍບັ້ງກໍ່ສຸມໄປໃສ່ຊາກສົບ ຂອງຄົນ ຮ້າຍ. ອ້າຍສິນຊາຍໂຊນຂ້ອຍຍ່າງໄປເບິ່ງຊາກສົບ. ບໍ່ດົນຕໍ່ມາກໍ່ມີສຽງໜຶ່ງ ຫວງຂຶ້ນວ່າ :

- ໂອຍ ! ແມ່ນບັກດຳບ້ານໃຕ້ນີ້ເອງ. ສົມນ້ຳໜ້າມັນແດ່ເທາະໃຫ້ ມັນຕາຍຫຸງສາກໍ່ດີແລ້ວ ກ່ອນນີ້ກໍ່ແມ່ນມັນນີ້ລະ ເປັນໂຕການ ລັກເອົາຄວາຍ ຂ້າມຟາກ ຈາກນັ້ນ ລະບອບໃໝ່ເຂົ້າມາ ມັນກໍ່ມີແຕ່ຂັດຂວາງຢູ່ພໍສຳນັ້ນເມື່ອ ເຫັນວ່າ ຕົນຢູ່ໃນທ່າທີ່ບໍ່ຊະນະໝູ່ແລ້ວ ມັນຈຶ່ງໂຕນເຂົ້າປ່າໄປຮວມມື ກັບໝໍ່ ກະໂລແນນຈັນສຸກ ລັດຍິງຄົນປະຕິວັດພວກເຮົາຢູ່ບ່ອນນັ້ນບ່ອນນີ້ ແລ້ວປະກາດ ວ່າ ຕົນເອງເປັນຄົນເກັ່ງກາຈັ່ງຊັ້ນຈັ່ງຊີ້.

- ແລ້ວຊາກສົບມັນເດຈະເຮັດແນວໃດ ? ມີສຽງໜຶ່ງຖາມຂຶ້ນ.

- ປະໄວບ່ອນນີ້ກ່ອນ ມື້ອື່ນຈຶ່ງແຕ່ງກັນມາຝັງ. ຂ້ອຍມີຄວາມເຫັນ.

- ໂອຍ ! ຈະຝັງໄປຝັງມາ ໃຫ້ເມື່ອຍເຮັດຫຍັງ ມັດຄໍມັນຕິດກວຽນ ງົວແກ່ ໄປຖິ້ມຢູ່ນ້ຳຂອງພຸ້ນ ຈະບໍ່ດີກວ່າບໍ ? ອີກສຽງໜຶ່ງເວົ້າຂຶ້ນແບບບໍ່ອາ ໄລໄຍດີ.

- ຖິ້ມໃສ່ນ້ຳໃຫ້ເປື້ອນແມ່ນ້ຳຂອງເຮັດຫຍັງ ອິດຝັງເອົານັ້ນລະ. ອ້າຍ ສິນຊາຍເວົ້າຂຶ້ນແບບຕັດສິນ ແລ້ວກ່າວຕໍ່ໄປວ່າ : ກວດເບິ່ງມັນດູມີຫຍັງແດ່.

ພໍເພິ່ນເວົ້າສຸດ ກໍມີສະຫາຍຫນຶ່ງ ກວດເບິ່ງຮ່າງກາຍ ທີ່ໄຮ້ວິນຍານຮ່າງນັ້ນ ເມື່ອກວດກາຫມົດແລ້ວ ພວກຂ້ອຍຈຶ່ງພາກັນກັບບ້ານ ກອງຫລອນສອງຄົນໂຊມເອົາຂ້ອຍຄ່ອຍຍ່າງອອກຫນ້າກ່ອນຫມູ່ ຈາກນັ້ນ ບັນດາອ້າຍນ້ອງກອງຫລອນກໍໂສເລກັນຍ່າງຕາມຫລັງພວກຂ້ອຍກັບຄືນ ພໍແຕ່ກອງຫລອນ ໂຊມຂ້ອຍຂຶ້ນຮອດເຮືອນ ພໍ່ແມ່ກໍຫວງຂຶ້ນເປັນສຽງດຽວດ້ວຍຄວາມຕົກໃຈວ່າ :

- ຕາຍ ! ລູກເປັນຫຍັງໄປ ?

- ຖືກສັດຕູລັດຍິງ ແຕ່ກໍບໍ່ຫນັກຫນ່ວງປານໃດດອກ. ຂ້ອຍຮີບຕອບ .

- ອີ່ນາງເອີຍ ! ລູກຮີບໄປບອກແພດປະຈຳບ້ານມາດຽວນີ້ເດີ. ຜູ້ເປັນແມ່ອ້າຍຫນາໄປເວົ້າກັບນາງ.

- ເຈົ້າ ! ນາງຕອບສັ້ນໆ ພ້ອມທັງແລ່ນລົງເຮືອນໄປຊົ່ວໄລຍະຫນຶ່ງ ຈຶ່ງເຫັນນາງກັບມາພ້ອມກັບນາງແພດປະຈຳບ້ານ.

- ເປັນແນວໃດເລືອດຢຸດແລ້ວບໍ່ອ້າຍ ? ນາງແພດຖາມຂ້ອຍ.

- ຍັງໄດ້ນ້ອງເອີຍ. ກອງຫລອນຜູ້ຫນຶ່ງຕອບແທນຂ້ອຍ.

ຈາກນັ້ນ ນາງແພດຄົນນັ້ນກໍເລີ່ມປະຕິບັດຫນ້າທີ່ຂອງນາງ. ພາຍຫລັງນາງສີດຢາ ແລະ ພັນບາດແຜໃຫ້ຂ້ອຍສຳເລັດແລ້ວນາງຈຶ່ງບອກໃຫ້ອ້າຍນ້ອງກອງຫລອນໂຊມຂ້ອຍຂຶ້ນໄປຫາບ່ອນນອນ. ແຕ່ຂ້ອຍປະຕິເສດ ເພາະຍ່າງຂຶ້ນໄປເອງກໍໄດ້. ບໍ່ດົນຕໍ່ມາ ປະຊາຊົນພາຍໃນບ້ານ ຕ່າງກໍພາກັນ ທະຍອຍຂຶ້ນມາຖາມຂ່າວຄາວ ແລະ ໃຫ້ຄວາມອົບອຸ່ນແກ່ຂ້ອຍຕະຫລອດຄືນນັ້ນ.

ຕະຫລອດເວລາທີ່ຂ້ອຍນອນເຈັບຢູ່ເຮືອນຫລັງນັ້ນ ສ່ວນຫລາຍກໍມີແຕ່ນາງບົວພັນຄົນດຽວເທົ່ານັ້ນ ທີ່ເອົາໃຈໃສ່ຂ້ອຍເປັນພິເສດ. ນາງເປັນຜູ້ເອົາເຂົ້າເອົານ້ຳໃຫ້ຂ້ອຍກິນ ແລະ ປິ່ນປົວບາດແຜໃຫ້ຂ້ອຍ, ຄ້າຍກັບວ່າ ນາງແມ່ນແພດຜູ້ຊຳນານຜູ້ຫນຶ່ງທີ່ສາມາດກູ້ເອົາຊີວິດຂອງຂ້ອຍໃນຄັ້ງນັ້ນ. ຂ້ອຍບໍ່

ຈັກວ່າ ຈະຕອບບຸນແທນຄຸນນາງແນວໃດດີ ນອກຈາກວ່າ ມີແຕ່ກ່າວ ຄຳຂອບໃຈ ແລະ ຈາລຶກບຸນຄຸນນາງໄວ້ໃນສ່ວນເລິກຫົວໃຈຂອງຂ້ອຍຢ່າງບໍ່ມີວັນລືມ.

ຂ້ອຍໄດ້ດຳລົງຊີວິດ, ຮ່ວມສຸກຮ່ວມທຸກຢູ່ກັບປະຊາຊົນເຂດນັ້ນ ໄດ້ເກືອບປີກວ່າ ຂັ້ນເທິງຈຶ່ງເອີ້ນຂ້ອຍກັບຄືນກົມກອງ ເພື່ອໄປຮັບໜ້າທີ່ໃໝ່. ກ່ອນມື້ຂ້ອຍຈະຈາກເຂດນັ້ນໄປ ການຈັດຕັ້ງ ແລະ ອຳນາດການປົກຄອງພາຍໃນບ້ານ ກໍໄດ້ຈັດພິທີບາສີ ໃຫ້ຂ້ອຍຕາມຮີດຄອງປະເພນີອັນຈົບງາມຂອງລາວ ມີຫລາຍໆຄົນ ກໍຈົ່ມບໍ່ຢາກໃຫ້ຂ້ອຍກັບຄືນພໍ່ນ້ອຍ ພຸ້ນລະໂດຍສະເພາະຄອບຄົວຂອງນາງບົວພັນ ທີ່ຂ້ອຍອາໄສພັກເຊົາຢູ່ນັ້ນ. ແຕ່ຍ້ອນວ່າ ວຽກງານຂອງຊາດຮຽກຮ້ອງຕ້ອງການ ສະນັ້ນ ຈຶ່ງບໍ່ມີໃຜຂັດຂືນໄດ້.

ມື້ທີ່ຂ້ອຍຈາກຂະເຈົ້າໄປນັ້ນ ແມ່ ແລະ ນາງບົວພັນ ຕື່ນແຕ່ເດິກໜຶ້ງເຂົ້າແຕ່ງກິນກະກຽມເຄື່ອງຢູ່ຂອງກິນໃຫ້ຂ້ອຍໄປກິນຕາມທາງ. ພວກເພິ່ນສັ່ງຂ້ອຍສັ່ງແລ້ວສັ່ງອີກບອກຂ້ອຍວ່າ ຖ້າໄດ້ໄປຢູ່ໃສໃຫ້ຂຽນ ຈ.ມ. ໄປຢາມເພິ່ນ, ຖ້າໄດ້ຢູ່ໃກ້ກໍໃຫ້ໝັ່ນໄປຢາມເພິ່ນເລື້ອຍໆ. ມື້ນັ້ນ ນາງບົວພັນຍ່າງໄປສົ່ງຂ້ອຍຢູ່ຂ້າງບ້ານ. ພວກຂ້ອຍທັງສອງຍ່າງຜ່ານກາງບ້ານໄປ ໃນທ່າມກາງສຽງຮ້ອງສົ່ງລາ ແລະ ອວຍໄຊໃຫ້ພອນຂອງພວກສາວໆ ແລະ ເຖົ້າແກ່ ຍິງຊາຍພາຍໃນບ້ານ. ນາງບົວພັນຍ່າງອອກສົ່ງຂ້ອຍຮອດແຄມບ້ານ ນາງຈຶ່ງຍື່ນຖົງພາຍໃຫ້ຂ້ອຍ. ຂ້ອຍຮັບເອົາຖົງພາຍຈາກນາງ ພ້ອມທັງ ຫລຽວເບິ່ງໜ້ານາງດ້ວຍຄວາມຄິດຮອດ ແລະ ຄິດເຖິງ ຂ້ອຍຫລຽວເຫັນຢາດນ້ຳໃສ ໆ ຊຶມອອກຈາກເບົ້າຕາຂອງນາງໄຫລຜ່ານພວງແກ້ມອັນຂາວນວນຂອງນາງ ຕົກລົງດິນ ດ້ວຍຄວາມໂສກເສົ້າ. ຈາກນັ້ນ ສຽງສະອື້ນກໍ ຄ່ອຍໆ ລະເບີດຂຶ້ນເທື່ອລະນ້ອຍ ຂ້ອຍເດີນໄປເຊັດນ້ຳຕາໃຫ້ນາງ ພ້ອມທັງເວົ້າຂຶ້ນປອບໃຈນາງ

ໃຫ້ນາງອົດເອົາ ຂ້ອຍຈະໄປບໍ່ດົນແລ້ວຈະກັບມາຮັບເອົານາງໄປຮຽນແພດນຳຂ້ອຍ. ນາງບໍ່ຕອບ ມີແຕ່ຍົກແຂນເສື້ອຂຶ້ນເຊັດນ້ຳຕາ ແລ້ວພວກຂ້ອຍກໍ່ຈາກກັນໄປດ້ວຍຄວາມຄິດຮອດຄິດເຖິງ ແລະ ອາໄລອາວອນ.

ຈາກນັ້ນ, ມາເຖິງວັນນີ້ ... ຂ້ອຍກໍ່ບໍ່ໄດ້ມີໂອກາດຈະໄດ້ໄປເຮັດວຽກ ຢູ່ເຂດນັ້ນອີກ ແລະ ກໍ່ບໍ່ໄດ້ຮັບຂ່າວຄາວ ລະອຽດຈາກຂະເຈົ້າ ທັງນັ້ນກໍເນື່ອງຈາກວ່າ ວຽກງານຂອງຂ້ອຍ ມັນຫຍຸ້ງຍາກສັບສົນຫລາຍ ແມ້ກະທັ້ງຈະຈັບປາກກາຂຽນ ຈ.ມ. ສົ່ງຂ່າວໄປຢາມຂະເຈົ້າກໍທັງຍາກ.

- ກ໋ອກໆ... ສຽງເຄາະປະຕູສັນຍານໃນຂະນະທີ່ ຂ້ອຍພວມເພີດເພີນໄປກັບກະແສແນວຄິດ.

ຂ້ອຍສະດຸ້ງຕົວຫລຽວໄປເບິ່ງ. ສຽງນັ້ນບໍ່ແມ່ນສຽງຂອງໃຜ ອື່ນໄກໂລດແມ່ນສຽງຂອງນາງເອງ. ຂ້ອຍເປີດຜ້າຫົ່ມອອກລຸກຂຶ້ນນັ່ງ ນາງຍ່າງເຂົ້າມານັ່ງລົງຂ້າງຂ້ອຍ. ພວກຂ້ອຍທັງສອງ ບໍ່ຈັກຈະຖາມກັນຫຍັງກ່ອນດີ ເພາະຄວາມຕື່ນເຕັ້ນດີໃຈ ມັນໄດ້ແລ່ນຂຶ້ນມາຕັນຮູຄໍຂອງພວກຂ້ອຍ. ພວກ

ຂ້ອຍໄດ້ແຕ່ແນມເບິ່ງໜ້າກັນ ແລ້ວກໍຍິ້ມຫົວຕໍ່ກັນດ້ວຍຄວາມຊື່ນຊົມ ນິດໄປຊົ່ວໄລຍະໜຶ່ງນາງຈຶ່ງຖາມຂ້ອຍກ່ອນວ່າ :

- ອ້າຍມາປົວຢູ່ນີ້ດົນແລ້ວບໍ່ ?

- ໄດ້ສອງອາທິດແລ້ວເດ.

- ເອີ ! ເລື່ອງອ້າຍຖືກຈັບເທື່ອນີ້ເປັນແນວໃດເກາະ?

- ເລື່ອງມັນກໍບໍ່ລະອຽດປານໃດ ແຕ່ອ້າຍກໍຈະເລົ່າສູ່ນ້ອງຟັງ ບາງອັນ ທີ່ອ້າຍຈຳໄດ້.

ມື້ນັ້ນ ເປັນມື້ວັນເສົາ ອ້າຍນ້ອງພາຍໃນກອງຮ້ອຍຂອງອ້າຍ ພາກັນໄປຊ່ວຍປະຊາຊົນອອກແຮງງານຂຸດເໝືອງຢູ່ບ້ານປະຊາຊົນພູນໝົດ ຍັງແຕ່ອ້າຍນ້ອງໜວດດຽວຢູ່ປະຈຳການເທົ່ານັ້ນ. ພໍດີກິນເຂົ້າຄາບສວາຍແລ້ວອ້າຍນ້ອງບາງສະຫາຍຣອດບໍ່ທັນກິນຮອດນ້ຳເທື່ອກໍມີ ບັງເອີນລູກປືນໃຫຍ່ຂອງພວກປະຕິການຂອງສັດຕູ ໄດ້ຖະຫລົ່ມ ໃສ່ຄ້າຍຂອງພວກອ້າຍຢ່າງປ່ວງບ້າ. ບັນດາອ້າຍນ້ອງນັກຣົບເຮົາຕ່າງກໍພາກັນແລ່ນເຂົ້າມາຂໍຄຳສັ່ງຈາກອ້າຍ ເພື່ອຈະຕີໂຕ້ຕອບຄືນ ແຕ່ອ້າຍກໍສັ່ງເດັດຂາດວ່າບໍ່ໃຫ້ເຮັດແບບນັ້ນ ເພາະພວກເຮົາບໍ່ຕ້ອງການໃຫ້ເກີດມີສົງຄາມ ພວກເຮົາມັກສັນຕິ.ສະນັ້ນ ອ້າຍຈຶ່ງໄດ້ແຕ່ສັ່ງໃຫ້ອ້າຍນ້ອງລົງຂຸມຫຼົບໄພ ແລ້ວອ້າຍກໍແລ່ນໄປຫາໂທລະສັບຕັ້ງໃຈວ່າ ຈະໂທໄປຫາກອງພັນ ເພື່ອຈະຂໍຄຳສັ່ງຈາກຂັ້ນເທິງ ພໍດີອ້າຍແລ່ນອອກຫວິດຂຸມຄອງປະມານແມັດດຽວເທົ່ານັ້ນ ລູກປືນໃຫຍ່ລູກໜຶ່ງກໍໄດ້ຕົກໃສ່ຕໍ່ໜ້າອ້າຍ ປະມານຫ້າແມັດນີ້ລະ. ອ້າຍທັນໄດ້ຍິນແຕ່ຕຶງບາດໜຶ່ງ ແລ້ວປະກົດເຫັນແສງແມງທັ້ງຫ້ອຍແດກຍ່າວຂຶ້ນ ແລ້ວອ້າຍກໍໝົດສະຕິໄປ ບາດຮູ້ເມື່ອຂຶ້ນມາອ້າຍກໍຮອດໂຮງໝໍນີ້ແລ້ວເດ ແລະ ອ້າຍກໍບໍ່ຮູ້ວ່າ ເຫດການເປັນແນວໃດອີກຕໍ່ໄປ.

- ພວກພີ່ຮ້ານີ້ ມັນຕັ້ງເປັນບ້າແທ້ງ ຈັກວ່າປານໃດມັນຈຶ່ງຈະຕາຍຄັບຕາຍວາຍໃຫ້ໝົດສາ ນາງເວົ້າອອກດ້ວຍນ້ຳສຽງອັນຄຽດແຄນ.

- ບໍ່ຮູ້ຈະເວົ້ານຳພວກມັນແນວໃດອີກແລ້ວພວກນີ້ ແນວວ່າ ເຮັດຫູຫນວກ, ຕາບອດບໍ່ຟັງຄວາມເພິ່ນເວົ້າ ແມ້ກະທັ້ງວ່າມີຂອດຫລັກຫມາຍ ເຂດແດນເປີ້ເຈີ້ຢູ່ ມັນກໍຍັງວ່າສາມບ້ານເປັນດິນໄທຢູ່. ຖ້າພວກມັນຍັງດື້ດຶງແບບນີ້ແລ້ວ ກໍບໍ່ດີນດອກ ພວກມັນຈະຕ້ອງຖືກກອງທັບ ແລະ ປະຊາຊົນລາວເຮົາລົງໂທດພວກມັນຢ່າງສະສົມໂລດລະ.

- ຫນ້າເສັຽດາຍ ທີ່ນ້ອງໄດ້ເຮັດວຽກຢູ່ແນວຫລັງເດນາະ, ຖ້າບໍ່ດັ່ງນັ້ນ ນ້ອງຄົງຈະຈັບປືນອອກສຽງບ່າຄຽງໄຫລ່ກັບພວກອ້າຍ ລົງໂທດພວກມັນໃຫ້ສົມກັບຄວາມແຄ້ນ ແລະ ໂທດກຳທີ່ພວກມັນໄດ້ສ້າງໄວ້ກັບປະຊາຊົນ ລາວເຮົາເຂດສາມບ້ານນັ້ນເບິ່ງ.

- ອ້າຍຂໍຊົມເຊີຍ ທີ່ນ້ອງມີນ້ຳໃຈເສັຽສະຫລະ ເພື່ອປະເທດ ອັນສູງສົ່ງຄືແນວນີ້ ແຕ່ອ້າຍຄິດວ່າ ນ້ອງຢູ່ແນວຫລັງ ກໍບໍ່ຕ່າງຫຍັງກັບພວກອ້າຍ ຢູ່ແນວຫນ້ານັ້ນລະ ເພາະວ່າເຮັດຫຍັງຢູ່ໃສ ທີ່ເປັນການປະກອບສ່ວນ ໃຫ້ພັກ-ລັດແລ້ວມັນກໍລ້ວນແລ້ວແຕ່ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມທັງນັ້ນ.

ພໍຂ້ອຍເວົ້າສຸດປະໂຫຍກ ນາງກໍຫລຽວເບິ່ງຫນ້າຂ້ອຍດ້ວຍສາຍຕາອັນງາມ ຊຶ່ງສາຍຕາຄູ່ນີ້ ມັນໄດ້ບົ່ງບອກໃຫ້ຂ້ອຍຮູ້ວ່າຄຳເວົ້າຂອງຂ້ອຍໃນຂໍ້ນີ້ນັ້ນແມ່ນຢຳ ແລະ ເຜັດຄັນທີ່ສຸດ.ຂ້ອຍລັກສັງເກດເບິ່ງນາງ ອີກເທື່ອຫນຶ່ງ.ໃນຂະນະນັ້ນ ແສງຕາພວກຂ້ອຍເຈີກັນ ນາງຫລົບແສງຕາລົງຕ່ຳໆ ກົ້ມຫນ້າ ລົງດິນ ເອົາປາຍຕີນເຂ່ຍພື້ນຊີມັງຢ່າງມີຄວາມຫມາຍ ແລ້ວປ່ອຍໃຫ້ ບັນຍາກາດອັນມິດຫງຽບ ຄ່ອຍໆ ຄືບຄານເຂົ້າມາແທນເທື່ອລະນ້ອຍ. ເພື່ອຢາກປ່ຽນບັນຍາກາດໄປທາງອື່ນ ຂ້ອຍຈຶ່ງອ່ວາຍຫານາງ ແລ້ວຖາມແບບກັນເອງວ່າ :

- ນ້ອງມາເຮັດວຽກຢູ່ໂຮງຫມໍພີ້ດົນແລ້ວບໍ ?

- ພາຍຫລັງນ້ອງຮຽນຈົບໂຮງຮຽນແພດຊັ້ນກາງປີ ໑໙໘໔ ນ້ອງກໍ

ຂຶ້ນມາຢູ່ພື້ໂລດ.

- ຫວ່າງກ່ອນອ້າຍຄືບໍ່ເຫັນນ້ອງ ?

- ນ້ອງໄປເຮັດວຽກຢູ່ກະຊວງຫາກໍໄດ້ກັບມາວານນີ້.

- ນ້ອງຈະບໍ່ຢາກຮຽນຕໍ່ອີກບໍ ?

- ຖ້າຫາກມີເງື່ອນໄຂ ນ້ອງພ້ອມແລ້ວສະເຫມີທີ່ຈະຮຽນຕໍ່ ຮຽນຈົນກ່ວານັ້ນຈະຈົບຫລັກສູດຂອງການແພດພູມລະນ້ອງມັກ.

- ດີແລ້ວທີ່ນ້ອງມີອຸດົມຄະຕິກ້າວໄປຫນ້າເລື້ອຍໆ ແບບນີ້, ອ້າຍພູມໃຈທີ່ສຸດທີ່ໄດ້ເຫັນນ້ອງພ້ອມຢືນຢູ່ໃນກຽດຂອງກອງທັບປະຕິວັດ ຊຶ່ງຢູ່ພາຍໃຕ້ການນຳພາຂອງພັກ ຂໍໃຫ້ນ້ອງຈົ່ງກ້າວຂຶ້ນເຮັດສຳເລັດທຸກຫນ້າທີ່ ວຽກງານທີ່ພັກ ແລະ ລັດເຮົາໄດ້ມອບຫມາຍໃຫ້. ອະນາຄົດຂ້າງຫນ້າອ້າຍເຊື່ອວ່ານ້ອງຕ້ອງໄດ້ກາຍເປັນທ່ານຫມໍຜູ້ຊຳນານຜູ້ຫນຶ່ງຢ່າງບໍ່ຕ້ອງສົງໄສ.

- ນ້ອງຂໍຂອບໃຈນຳອ້າຍຫລາຍໆ ທີ່ອ້າຍຍັງກະລຸນາຊ່ວຍຊີ້ສ່ອງທາງ ແລະ ກໍ່ສ້າງນ້ອງໃນທາງທີ່ດີ ນ້ອງຈະພະຍາຍາມເຮັດທຸກຢ່າງ ຕາມຄຳສັ່ງສອນຂອງອ້າຍ. ຂໍໃຫ້ອ້າຍຈົ່ງເຊື່ອຫມັ້ນເທາະວ່າ ນ້ອງຕ້ອງເປັນນ້ອງ ຜູ້ທີ່ດີຂອງອ້າຍໂດຍຕະຫລອດ.

- ນ້ອງໄດ້ຮັບຂ່າວພໍ່ແມ່ຢູ່ທາງບ້ານແດ່ບໍ ?

- ໄດ້ຮັບຢູ່ຫວ່າງກ່ອນໆ ນ້ອງກໍຂໍລາພັກເມືອຢາມເພິ່ນ, ເພິ່ນກໍຖາມຫາອ້າຍຢູ່ໄດ໋ !

- ເພິ່ນຄືຈະເຖົ້າຫລາຍແລ້ວເນາະ ?

- ກໍບໍ່ທັນເຖົ້າປານໃດ, ເພິ່ນແຂງແຮງດີ ດຽວນີ້ ເພິ່ນໄດ້ເປັນຫົວຫນ້າສະຫະກອນຢູ່ບ້ານ.

- ໂອ ! ... ອ້າຍກໍຢາກມີເວລາເມືອຢາມເພິ່ນເດ ຢາກເມືອ

ເບິ່ງຊາວສະຫະກອນເຂດນັ້ນຄືຈະນ່ອນ ເພາະວ່ານາທົ່ງກວ້າງ.

- ໂອ ! ... ນ່ອນແທ້ໄດ້ອ້າຍ, ຄືຫວ່າງນ້ອງເນືອ ພໍດີຖືກລະດູເກັບກ່ຽວ ນ້ອງກໍລົງກ່ຽວເຂົ້າຊ່ວຍຂະເຈົ້າ ບໍ່ຈັກສຽງຂັບສຽງລຳ ນ່ອນສ່ຳປາງບຸນພູມລະ.

ພໍນາງຕອບຂ້ອຍສຸດ ນາງກໍຍົກໂມງທີ່ແຂນຂຶ້ນມາເບິ່ງ ແລ້ວກ່າວຕໍ່ໄປວ່າ:

- ເອີ ! ນ້ອງໄປວຽກກ່ອນເດີ.

- ເຈົ້າ ! ຂ້ອຍຕອບສັ້ນໆ ຢ່າງສຸພາບ.

- ມີເວລານ້ອງຈະມາຢາມອ້າຍເລື້ອຍໆ ມື້ໃດອ້າຍຈະອອກໂຮງຫມໍ ນ້ອງຈະເຊີນໄປກິນເຂົ້າຢາມ.

- ເຈົ້າ ! ຂ້ອຍຕອບຄືເກົ່າ.

ຈາກນັ້ນ ນາງກໍລຸກຂຶ້ນຍ່າງອອກຈາກຫ້ອງນອນຂອງຂ້ອຍ ຂ້ອຍຍ່າງອອກສົ່ງນາງຫວິດປາກປະຕູ ແລ້ວຢືນແນມນຳຫລັງນາງ ຍ່າງຜ່ານເດີ່ນຫຍ້າໄປໃນທ່າມກາງ ດວງພະອາທິດ ຫາກໍ່ພົ້ນຈາກຂອບຟ້າ ພູເຂົາ ໄດ້ສົ່ງແສງປະກາຍເປັນສີເຫລືອງອ່ອນລົງສູ່ພື້ນພິພົບໃຫ້ເຫັນທົ່ວ. ຕົ້ນໄມ້, ຕົ້ນຫຍ້າ ຈຶ່ງແຍ້ມບານຊື່ນຕື່ນ. ນ້ຳໝອກຄ້າງໃນຍາມເຊົ້າ ຕ້ອງກັບແສງແດດອ່ອນເຫລື້ອມຍິບຍັບຍິບຍັບຢ່າງງາມຕາ. ເບິ່ງແລ້ວຄ້າຍກັບວ່າ ສິ່ງແວດລ້ອມເຫລົ່ານັ້ນ ຄືແກ້ວມະນີເພັດ ທີ່ປະດັບເອ້ເອົາດິນແດນແຫ່ງນັ້ນ ໃຫ້ເພີ່ມສີສັນຄວາມງາມຊື່ນຕື່ນ.

●●



ບິດາຈັນ

ທິດາຈັນ ມີຊື່ຈິງວ່າ ພິວລາວັນ ເກີດເມື່ອວັນທີ ໑ ທັນວາ ໑໙໕໕ ທີ່ບ້ານເພຍວັດ ຕາແສງຊຽງ ເມືອງຄູນ ແຂວງຊຽງຂວາງ ຍ້ອນເກີດ ຢູ່ໃນຄອບຄົວ ພະນັກງານປະຕິວັດທີ່ສະຫງວນມັກວັນນະຄະດີ ມີພໍ່ທີ່ສົນໃຈ ການປະດິດແຕ່ງກາບກອນ ມັກເລົ່ານິທານ, ນາງສ້າງຄອບຄົວ ກັບຄູສອນວັນນະຄະດີ ທັງນາງເອງກໍ່ຮຽນຈົບຊັ້ນສູງວິຊາວັນນະຄະດີ ພາສາສາດບວກໃສ່ກັບພອນສະຫວັນຂອງຕົນເອງ ຈຶ່ງມີຄວາມສາມາດຂຽນບົດເລື່ອງສັ້ນ ທີ່ມີຄວາມເລິກເຊິ່ງ ທາງດ້ານຂໍ້ຄິດ ແລະ ມີສິລະປະດີ ສົມຄວນ.

ຜົນງານຂອງທິດາຈັນ ສ່ວນຫລາຍແມ່ນເກີດຈາກການຄົ້ນຄິດ ແລະ ເລືອກເຟັ້ນຫົວບົດເປັນຢ່າງດີ ຕະຫລອດທັງບຸກຄະລິກ ລັກສະນະຂອງ ຕົວລະຄອນກໍ່ມີ ຮູບພາບຈະແຈງຄາຍຄືຊີວິດແທ້ທີ່ເຫັນປະຈຳວັນ.

ເລື່ອງສັ້ນຂອງນາງໄດ້ເປັນທີ່ຮັບຮູ້ ຈາກຜູ້ອ່ານເປັນຢ່າງດີ ແລະ ໃນ ບັ້ນກວດສອບເລື່ອງສັ້ນ ແລະ ກາບກອນຂອງພາກສ່ວນຕ່າງໆ ນາງກໍໄດ້ ປະກອບສ່ວນໂດຍສາມາດຍາດເອົາຣາງວັນດີເດັ່ນຫລາຍຣາງວັນ.

ປະຈຸບັນ ທິດາຈັນ ເປັນອາຈານສອນ ວິຊາວັນນະຄະດີຢູ່ທີ່ມະຫາວິທະຍາໄລສ້າງຄູວຽງຈັນ



# ຊາຕາກຳ ຂອງ ຜູ້ກ້າຫານ

● ທິດເຈັນ

ຜູໄຊກ້າວຂຶ້ນຂັ້ນໄດໄມ້ໄຜ່ສາມຂັ້ນ ອັນເກົ່າແກ່ ເຫລື້ອມລຸ່ຍຍ້ອນຝາຕີນ ດ້ວຍທ່າທາງເຊື່ອຍຊາ, ສີໜ້າຄຶດຊຶ້ງ ຜິດປົກກະຕິ ບໍ່ມີໃຜຢູ່ເຮືອນ. ແມ່ຄົງຢູ່ສວນ, ເຂົາໂກ້ຍລົງນັ່ງອີງຝາພະນັກ ໄມ້ເຮັຽສານ, ແຕ່ຈັກຈັ່ງໃດ ພັດເບື່ອນຕົວຂຶ້ນໄປອີງຝາບ່ອນນີ້ "ປ່ອງຢ້ຽມ" ທີ່ບໍ່ເຈາະກໍ່ເປັນເອງ ຫລືຫາກຈະວ່າແດດ, ຝົນ ຮ່ວມຫົວກັບວັນເວລາ ເຈາະໃຫ້ກໍ່ໄດ້ ບໍ່ມີຂອບ, ແຕ່ເຂົາກໍ່ຍັງໂຄ້ງສອງແຂນພາດໃສ່ "ຂອບ" ເພື່ອໜູນຄາງແຫລມທີ່ຊູກຊຸ້ມຢູ່ໃນໝວດຍາວສີດຳເຂັ້ມ.

ດວງຕາຄົມວອງ ແລະ ມັນໆ ບົນໃບໜ້າຖືກສ່ວນແບບສະບັບ ຜູ້ຊາຍຂອງຜູໄຊ ແຕ່ກ່ອນ ມາດຽວນີ້ ກໍ່ຍັງຮັກສາໄດ້ກວ່າທຸກໆສ່ວນໃນຕົວ ຂອງເຂົາ, ຖ້າຫາກຢາກເວົ້າໄປອີກວ່າ ໃນສອງຂຸມຕານັ້ນ ເພີ່ມຄວາມ ຄົມແຂງ

ຂຶ້ນອີກກໍ່ແຮງຖືກ, ເວລານີ້ມັນຖືກປ່ອຍເລື່ອນລອຍຢູ່ເທິງກາງຫາວ ຄືບໍ່ແມ່ນມັນເກີດມາເປັນຕາສຳລັບຮັບໃຊ້ເບິ່ງໃຫ້ພູໄຊນີ້ແຫລະ.

ພູໄຊບໍ່ໄດ້ເບິ່ງຫຍັງ, ແຕ່ເວລານີ້ ເຂົາຊ້ຳພັດເຫັນທຸກສິ່ງຢ່າງ, ເຫັນຮອດພາບທີ່ຢູ່ໄກເຂົານັບເປັນເວລາຫລາຍປີ, ໄລຍະທາງເປັນຮ້ອຍໆ ກິໂລແມັດ.

" ຄວາມເວົ້າ, ການປະພຶດທັງໝົດນັ້ນບໍ່ມີຜິດແປກກັບທ່ານເກົ່າ ແຕ່ຢ່າງໃດ ຄົນພວກນີ້ ມັນຄືມາຫລາຍແທ້, ໄປບ່ອນໃດກໍ່ພໍ້, ຫລີກລ້ອນພັດພໍ້ໄຊ ການຫລີກນີ້ມັນບໍ່ແມ່ນຈະດີດອກ...ເຮົາຕ້ອງເຮັດອັນໃດອັນໜຶ່ງໄປ ເພື່ອເຮັດໃຫ້ພວກສອຍໂອກາດຮູ້ເອົາໄວ້ວ່າ : ການທີ່ເຮົາຍົກເອົາອັນບໍ່ດີເຂົາຂຶ້ນມາເວົ້ານັ້ນ ບໍ່ແມ່ນເພື່ອຫວັງປົກປ້ຳ ແກ້ແຄ້ນໃຜ ບໍ່ແມ່ນເພື່ອເປີດເສື້ອໃຫ້ສັດຕູເຫັນຫລັງ. ເປີດບໍ່ເປີດເຂົາກໍ່ຮູ້ພໍແຮງແລ້ວວ່າ ຢູ່ເບື້ອງໃນຂອງເສື້ອ ແມ່ນຫຍັງ. ເວົ້າດີກວ່າບໍ່ເວົ້າ, ຕໍ່ສູ້ດີກວ່າຍອມຈຳນົນ. ຕ້ອງເຮັດໃຫ້ ພວກເຂົາຮູ້ວ່າຄຳເວົ້າຂອງເຂົາ : "ຜູ້ມັກເວົ້າໃສ່ໜູຕ້ອງເປັນຄືມັນເປັນຜ່ານມາ " ແມ່ນຜິດພາດ...! "

- ອ້າຍໄຊ, ຕາຍ ກະດຽວວ່າອ້າຍອອກໄປສວນຫາລູກແລ້ວ, ປານນີ້ຍັງຊິວຢູ່. ໄປ ອີ່ແມ່ຊິຂອງກິນເຂົ້າ ບຸບຜາ ຫ້ວງພາຍຫລັງເລີກຈາກ ສອນ 12 ໂມງກົງ.

- ອ້າຍບໍ່ຢາກຮອດເຂົ້າ ໃຈບໍ່ດີນ່າ.

ບຸບຜາແນມເບິ່ງວ່ອນຜົວແລ້ວລັກຫົວຂວັນ ຄັນເພິ່ນຄຶດຫຍັງແລ້ວຫາກສິດອກ. ນາງຮູ້ດີວ່າຜົວກຳລັງຄຶດຫຍັງ. ແຕ່ນາງກໍ່ອຸກໃຈຄືກັນ ອຸກຍອມ ຜົວຕ່າງເພິ່ນ, ໃຜເຮັດແນວບໍ່ຖືກ ກໍເວົ້າທັງເວົ້າດັນໂລດ. ແຕ່ສະພາບຄົນດຽວນີ້ຕ, ມັນໂລດບໍ່ທັນເຫັນຄວາມຫວັງດີຂອງຜູ້ຫວັງດີແທບນັ້ນ...ຜ່ານການ ປະ

ທະຄາລົມກັນມື້ນີ້ແລ້ວ ບໍ່ຮູ້ວ່າຊາຕາຊີວິດຂອງຄອບຄົວນີ້ຈະເປັນໄປ ແນວໃດອີກ ! ແນວໂຕບໍ່ມີອັນໃດອັນໜຶ່ງຢູ່ໃນມື, ພຽງແຕ່ເປັນບັກ ກໍ ບັກຂໍ ພັດໄປເວົ້າເອົາເຣັດຖືກກໍ່ເປັນຜິດ ເຣັດດີກໍ່ເປັນຮ້າຍ ຊຶ່ງແມ່ນແນວນັ້ນແດ່ບໍ່ຈັກ.

- ເປັນແນວໃດ, ບໍ່ແມ່ນອ້າຍດົນເຂົາຢ່າງແຮງຫວະ ? ພິປານເທື່ອນັ້ນບໍ ? ບຸບຜາຍປາກໝາຍເຖິງເທື່ອພູໄຊອອກຄຳຄິດຄຳເຫັນຢູ່ກອງປະຊຸມພະແນກການກະສິກຳປ່າໄມ້ ເມືອງໜຶ່ງ ຫ່າງຈາກນີ້ 5 ປີແລ້ວ.

... ນີ້ນັ້ນ, ທີ່ຫ້ອງປະຊຸມຄັບແຄບເຕັມແໜ້ນໄປດ້ວຍຜູ້ຄົນທົ່ວສຳນັກ ມີຜູ້ແທນກະສິກຳປ່າໄມ້ຂັ້ນແຂວງລົງມາປ້ຽມຢາມ, ກວດກາວຽກງານຂອງສຳນັກ.

ຫົວໜ້າພະແນກກະສິກຳປ່າໄມ້ເມືອງຂຶ້ນເວທີ ພາຍຫລັງ ການເຊື້ອເຊີນຈາກຜູ້ຈັດຕັ້ງ ແລະ ສຽງຕົບມືດັງສະເທືອນຫ້ອງ. ເພິ່ນກ່າວຮຽມ ຕາມພິທີການຈົນຄົບຖ້ວນດ້ວຍຄວາມສຸພາບ ແຕ່ເຂັ້ມຂຸ້ນ ແລ້ວກໍ່ເລີ່ມອ່ານບົດສະຫຼຸບສະພາບການເຄື່ອນໄຫວວຽກງານ, ຈຸດດີ, ຈຸດອ່ອນລວມໆ ໄລຍະ ຜ່ານມາຂອງຫົວໜ້າພະນັກງານໃນພະແນກ ແລະ ຂັ້ນເທິງຂອງຕົນຢ່າງລຶ້ງລຽມ ແລະ ສະຫງ່າຜ່າເຜີຍຂອງຜູ້ເພິ່ງພໍໃຈຕໍ່ຜົນສຳເລັດຂອງຕົນ, ອ່ານສຸດແລ້ວແຕ່ເພິ່ນກໍ່ບໍ່ນັ່ງລົງໂລດ ຄືທຸກເທື່ອ ເພາະທ່ານຖືວ່າເວລານີ້ ບໍ່ແມ່ນເພີ່ນສູງສຸດ.

ເພິ່ນວາງເຈ້ຍລົງໜ້າໂຕະພ້ອມກັບຄຳເນັ້ນທ້າຍ ເວົ້າເອົາຈຳນວນໜຶ່ງ ແລ້ວກວາດສາຍຕາໄປທົ່ວຫ້ອງປະຊຸມ ພ້ອມທັງໄຂຮອຍຍິ້ມຂອງ ຜູ້ໃຈໃຫຍ່ອອກມາກ່ອນຊິເວົ້າວ່າ :

- ເປັນແນວໃດ, ຜ່ານການຟັງບົດສະຫລຸບປະຈຳປີຂອງເຮົາ ພວກສະຫາຍຍັງເຫັນບ່ອນໃດບໍ່ທັນຄົບຖ້ວນ ຫລື ບໍ່ຖືກຕົວຈິງກໍ່ເຊີນປະກອບຄຳເຫັນໂລດເດີ, ເອົາເຊີນ ໆ.

ທິດາຈັນ

ມິດ.

- ມີຫຍັງກໍ່ຈິງໃຈປະກອບຄຳເຫັນນຳກັນລະບໍ, ຫລາຍຫູ ຫລາຍຕາ ເບິ່ງຊ່ວຍປະກອບຊ່ວຍ ຈຶ່ງຈະເຮັດໃຫ້ບົດສະຫລຸບຂອງເຮົາຄົບຖ້ວນສົມບູນໄດ້ ເຊີນໆ ປະກອບຄຳເຫັນ, ຂ້າພະເຈົ້າກຽມພ້ອມຈົດໃສ່ເພີ່ມໃສ່ທ້າຍບົດນີ້ ໃຫ້ພ້ອມ.

ມິດອີກ.

- ຫລືວ່າເຮົາອ່ານມານີ້ຖືກຕ້ອງຈິງ, ຄົບຖ້ວນດີແລ້ວ ? ຄັນຊັ້ນ ກໍ່ໝາຍຄວາມວ່າ ໝົດທຸກຄົນເຫັນດີເຫັນພ້ອມແລ້ວແມ່ນບໍ່ ?

ມິດຕາມເຄີຍ.

- ຖ້າເຫັນດີແລ້ວກໍ່ເຊີນພ້ອມກັນຕົບມືຮັບເອົາ, ຖ້າຍັງບໍ່ທັນເຫັນດີ ກໍ່ເຊີນລຸກຂຶ້ນປະກອບໄວໆ.

ມີສຽງໜັ່ງຍາວໆ, ສຽງຖູດຕັ່ງຄ່ອຍໆສຽງຊື່ມກັນຊາບຊິບໆ ຢູ່ບາງແຖວ ມີທັງສຽງເວົ້າພຶມພຳຮື່ນສົບດ້ວງມະລອດຊອດແຊດ " ບໍ່ມີຫຍັງແລ້ວ, ເຫັນດີແລ້ວ..."

ຖ້າຄືທຸກເທື່ອ, ເມື່ອຄຳຖາມ, ຄຳເຊີນຊວນທີ່ຊິນເຄີຍໄດ້ເວົ້າ ອອກມາເປັນລຳດັບຮອດນີ້, ທ່ານກໍ່ພາທຸກຄົນຕົບມືມ່ວນທ້າຍສາ ແລ້ວກໍ່ປ່ຽນ ລາຍການໄດ້ແລ້ວ, ແຕ່ເທື່ອນີ້ ເພິ່ນຍັງທົ່ມທານຕໍ່ການຊູຊີເອົາຄຳເຫັນຂອງມະຫາຊົນຢູ່ ເພື່ອສະແດງຄວາມເປັນຜູ້ເຫັນແກ່ປະຊາທິປະໄຕຢ່າງຈິງຈັງ. ແຕ່ທາງນີ້ເພິ່ນກໍ່ພັບຈ້ຽ, ພັບປື້ມເຊົ້າທີ່ບເອກະສານສີດຳຫລື້ອມເປັນລ່ຽມໆ ງາມໆ ຂອງເພິ່ນ ຊຶ່ງເປັນສັນຍານວ່າໄດ້ຢຸດຕິການຮັບຄຳເຫັນລົງແລ້ວ.

ເຫລືອດຕາໄປຫາແຂກຢູ່ດ້ານຫລັງ "ອີ! ຢ່າງໃດກໍ່ຄວນປຸກບັນຍາກາດໃຫ້ຄຶກຄັກກວ່າປົກກະຕິ, ແມ່ນແລ້ວ ສົມຄວນໃຫ້ໃຜຜູ້ໜຶ່ງ ເວົ້າອັນໃດ ອັນໜຶ່ງອອກມາ, ເຊື່ອແນ່ວ່າຄຳເຫັນນັ້ນຄົງຈະບໍ່ນອກເໜືອຈາກຈຳແນກວຸດດີ,

ເພິ່ນເຕີມສິ່ງທີ່ເຮັດໄດ້ຕາມເຄີຍ, ດີແລ້ວ, ຢ່າງໜ້ອຍມັນກໍ່ຈະຊ່ວຍ ປະດັບຍ້ອມບົດສະຫລຸບກໍ່ຄືກອງປະຊຸມມື້ນີ້ ມີສີສັນຂຶ້ນກວ່າເກົ່າ, ໂອກາດດີແລ້ວເດ..." ເພິ່ນຕັດສິນໃຈໃຊ້ລຽນ "ຈື້" ຈຶ່ງເອີ່ຍຂຶ້ນທັນໃດ.

- ໂອກາດດີມີໜ້ອຍ ທີ່ທາງຂັ້ນເທິງເພິ່ນໄດ້ຍາດໂອກາດເວລາ ອັນມີຄ່າຂອງເພິ່ນລົງມາຈົນຮອດຈົນເຖິງພວກເຮົາແນວນີ້. ດັ່ງນັ້ນ ໃຜມີຫຍັງຢາກເວົ້າກໍ່ເຊີນເປີດໃຈຊ້ອງໜ້າເພິ່ນນຳກໍ່ແຮ່ງເປັນການດີ. ເພິ່ນຍັງ ເສີມທ່າໃຫ້ອີກ ແນ່ນອນວ່າບົດຂຽນຂອງເຮົາ ບໍ່ອາດຄົບຖ້ວນ, ເຊື່ອວ່າ ພົນງານຈຸດດີຂອງພວກອ້າຍເອື້ອຍນ້ອງເຮັດໄດ້ຕ້ອງຫລາຍກວ່ານີ້.

- ເຫັນດີແລ້ວ, ຄົບຖ້ວນແລ້ວ...ສອງສາມສຽງດັງຂຶ້ນ.

ທ່ານຫົວໜ້າເຫລືອດໄປທາງຜູ້ແທນແວັບໜຶ່ງອີກ ກ່ອນຈະປ່ຽນ ມາເນັ້ນໜັກຄວາມ "ຈິງໃຈ" ນັບຖືປະຊາທິປະໄຕຂອງຕົນ.

- ຍັງຕໍ່ເຮົາເດ, ເຮົາກໍ່ອາດຈະຍັງມີບາງຈຸດຄ້າງໆ ຄາໆ, ບໍ່ທັນຄັກທັນແນ່, ໃນການນຳພາວຽກງານ. ພວກສະຫາຍເຫັນຫຍັງກໍ່ຈິງໃຈ ຕຳນິສົ່ງຂ່າວເພື່ອຊ່ວຍເຫລືອກໍ່ສ້າງເຮົາ, ເຮົາພ້ອມແລ້ວຈະຮັບໄປປ່ຽນແປງ, ບໍ່ໃຫ້ຈີ່ງຈຽມອ່ຳອຽງຫຍັງ, ເຮົານີ້ມັກຄວາມຈິງ, ຄົນບໍ່ແຍງແວ່ນ ກໍ່ບໍ່ເຫັນໜອງຢູ່ດັງໄດ໋ເນາະ, ເຊີນໆ ຕາມສະບາຍໂລດດີ.

ສຽງຊວ່າແຊວຄ່ອຍໆລາມໄປທົ່ວຫ້ອງ. ທ່ານເກົ່ງກວາດສາຍຕາ ລໍຄອຍ ແລະ ເຫັນວ່າບໍ່ມີທ່າຈະເປັນໄປ. ສຸດທ້າຍ ຈັກແນວໃດເພິ່ນຈຶ່ງຈ້ອງຕາໃສ່ໃບໜ້າພູໄຊ, ພະນັກງານອ່າວໜຸ່ມ ແລະ ໃໝ່ຂອງຫ້ອງການ.

- ເອີ່, ເບິ່ງສະຫາຍພູໄຊຄືຈັ່ງສິບຕິງໆຊິງຊິຢາກເວົ້າແທ້. ເອົ້າເຊີນສະຫາຍລຸກຂຶ້ນປະກອບຄຳເຫັນໃຫ້ເຮົາເບິ່ງດູ ທ່ານ ເກົ່ງ ເຊື່ອວ່າພູໄຊມາໃໝ່ຈຶ່ງຊິບໍ່ມີຫຍັງເວົ້າຫລາຍຍືດຍາວ.

ເມື່ອຖືກບັກຊື່ຍ່າງກະທັນຫັນ, ຜູໄຊຕົກຂະນ່າ, ງຸນງົງໄປໜ້ອຍໜຶ່ງ ປານນັກຮຽນພວມເຫງົານອນຖືກຄູເອີ້ນຂຶ້ນຕອບຄຳຖາມ. ເຂົາຄ່ອຍລຸກຂຶ້ນ , ຕາງສວຍໂອກາດຄຶດແນວ ຈະເອົາມາເວົ້າ, ຈະເວົ້າຈຸດດີຈຸດອ່ອນຂອງທ່ານ ຫົວໜ້າຫວະ ? ຄືບໍ່ເຄີຍຍິນໃຜເວົ້າໃຫ້ເພິ່ນຈັກເທື່ອ, ວວທີ່ສຳຄັນແນວນີ້ ຊິເວົ້າໄດ້ບໍ ? ແຕ່ເຂົາກໍ່ຍັງພະຍາຍາມຊອກຫາຈຸດດີຈຸດອ່ອນຂອງຫົວໜ້າເຂົາ ຢ່າງໄວວາ ເພື່ອຟ້າວກອບກູ້ເອົາຕົນເອງອອກຈາກພາວະເກີ້ເຂີນໃຫ້ໄວຫຼາຍ ກວ່າ ເພື່ອຄວາມຢາກສວຍໃຊ້ໂອກາດດີ ເພື່ອລະບາຍຄວາມຄຶດຄວາມຮູ້ສຶກທີ່ ເຂົາມີຕໍ່ຜູ້ປົກຄອງຕົນ.

ທັນໃດຜູໄຊ ກໍ່ຮີບໂຮມຈຸດອ່ອນຂອງຫົວໜ້າຕາມທີ່ຕົນຮູ້ ແລະເຄີຍຍິນ ໝູ່ຄູ່ລົກໂສເລກັນໄດ້ຈຳນວນໜຶ່ງ. ເມື່ອເວົ້າບາງຈຸດດີຂອງເພິ່ນແລ້ວ, ຄຶດ ຈັ່ງໃດໜ້າເຂົາກໍ່ແດງອຶດຂຶ້ນ ແລະ ຈະນັ່ງລົງ ພ້ອມກັບຄຳຕອບ "ນ້ອງເຫັນ ທີ່ນັ້ນແລ້ວ" ແຕ່ນີ້ໄສ້ນັກສະແດງຕົວຂອງຜູ້ໜຸ່ມນ້ອຍພາໃຫ້ເຂົາຍັງຢືນແຂງ ຢູ່ ຄືເກົ່າ "ບໍ່ເປັນບໍ, ຊິຍອມນັ່ງລົງລ້າງ ຄືນັກຮຽນອ່ອນນີ້ " ຜູໄຊບັນຊາຕົວ ອີກເທື່ອໜຶ່ງ, ເລີ່ມສະໝາດສຽງຄໍເພື່ອຂັບໄລ່ຄວາມອ່ອນໄຫວ.

- ກ່ອນອື່ນຂໍໂທດ...ເຮົາຂໍປະກອບຄຳເຫັນອີກ ກ່ຽວກັບຈຸດດີ ຂອງ ເພິ່ນ...ຈຸດດີຂອງເພິ່ນນັ້ນກໍ່ຫລາຍຈົນບໍ່ອາດຈະ...ຜູໄຊຈະເວົ້າ: "ບໍ່ອາດ ພັນລະນາໃຫ້ຄົບຖ້ວນໄດ້" ຈັກຈັ່ງໃດເຂົາພັດປ່ຽນໄປທັນວ່າ ມີຫລາຍທີ່ສຸດ ຄື ດັ່ງກ່າວ ແຕ່ເພິ່ນກໍ່ຍັງມີແນວຄິດເຫັນແກ່ໜຸ່ມກ່ອນ, ພັກພວກຢູ່.ຕົວຢ່າງເລື່ອງ ເຊັນແກ້ໄຂໄມ້ປູກສ້າງໃຫ້ພະນັກງານຈຳນວນໜຶ່ງ ບໍ່ທັນຍຸດຕິທຳປານໃດ. ຄື ລຸງແພງຢູ່ຫ້ອງການຕາແສງ, ເປັນພະນັກງານເສຽອົງຄະນາແຕ່ສະໄໝສອງ ແຂວງເຕົ້າໂຮມພຸ້ນ ທຽວມາຫາວງຄຳຮ້ອງຂໍໄມ້, ເພິ່ນພົ້ວງ ປານຄົນຂໍທານ, ໜັງສືຜ່ານຫລາຍຂັ້ນ, ດົນຕໍ່ນານຈົນຊິແຫລກແຫລວຄານີ, ເຮົາຜູ້ຢູ່ ຂາເຂົ້າ ຂາອອກນີ້ ຈົນເມື່ອຍຕົວະນັ້ນ, ແກ້ນີ້, ປອບໃຈເພິ່ນ. ຄວາມຈິງ ໃຜກໍ່ຮູ້ວ່າ

ເພິ່ນພາລູກພາເມຍຮຸ້ນຢູ່ເຮືອນນ້ອຍ ຮ້າງໆ ແຄມທາງແບ່ງຫັ້ນແນວໃດ. ຄົນ
ບໍ່ແກ້ໄຂໃຫ້ໄດ້ກໍ່ບໍ່ແກ້ໝົດ ກໍ່ບໍ່ອາຫຍັງດອກ. ແຕ່ອ້າຍຜູ້ຢູ່ພະແນກການຄ້າຫັ້ນ
ລາວມີເຮືອນຕັ້ງອີ່ຕີ່ເກືອບປານພາລະຊະວັງເຊັ່ນນັ້ນ, ລາວຍື່ນຄຳຮ້ອງ ຮອດ
ສາມເທື່ອກໍ່ຍັງແກ້ໄຂໃຫ້ລາວຕັດໄມ້ມາເຮັດເຮືອນແລ້ວ, ເຫລືອກໍ່ຂາຍ ໄປ
ແລ້ວສອງເທື່ອ. ລຸງແພງຍັງເຄີຍຈົ່ມສູ່ເຊົ້າຟັງວ່າ: ໄຫໃຫຍ່ລົ້ນໄຫນ້ອຍເປົ່າ
ດາຍ, ລຸງກໍ່ຮູ້ຈັກສາຍເຕັ້ມັນຢູ່. ກໍ່ເພາະທ້າວຄຳພົງຂອງເປັນຜູ້ບອກວ່າ :
"ລຸງຂໍ້ດ້ອຍສົບນົບດ້ອຍມືຊື່ໆ ກໍ່ຍາກຢູ່, ເພາະເຈົ້າຂອງລາຍເຊັນ ເຂົາກໍ່ມີ
ປາກມີທອງ, ຊົ່ນບໍ່ໄປປ່າບໍ່ຕ້ອນມາງາຍໆ ຫລານນີ້ເປີດສະພາບປອງ( ເຫຼົ້າ
ບອງຢາ) ຢູ່ເຮືອນເພິ່ນທັງຢູ່ເຮືອນໂຕເກືອບນັບເທື່ອບໍ່ໄດ້ຈຶ່ງໄດ້ສ່ຳນັ້ນ".

ຫ້ອງປະຊຸມຍັງຄົງຕົກຢູ່ໃນຄວາມມິດຊື່ຈຸ່ມຈົມ.

ພູ່ໄຊຢຸດຢ່ອນໜ້ອຍໜຶ່ງ, ບໍ່ຈັກວ່າອັນຈະເວົ້າຕໍ່ໄປນີ້ ສົມພໍເປັນເວົ້າ
ບໍ, ຕົກກະເທີນໄດ້ເວົ້າສ່ຳນີ້ແລ້ວ, ອັນອື່ນແຮ່ງເປັນຕາເວົ້າ.

- ຂໍໂທດນໍ, ຄືແນວນີ້ແລ້ວ ພະນັກງານຢູ່ນີ້ສ່ວນຫລາຍກໍ່ແມ່ນລູກຫລານ
ວຸ້ນເຈົ້າຂອງລຸງເກົ່າ. ການດຶງເອົາຄົນເຂົ້າມາເຮັດການໃຫ້ລົດກໍ່ດີແລ້ວ, ແຕ່
ຄົນບໍ່ເລືອກກໍ່ຄືຊູ່ນີ້ແລ້ວ ບາງຄົນບໍ່ມີວິຊາການຫຍັງ ໜາກໍ່ບໍ່ພໍຍັງອ່ານ ບໍ່ໄດ້
ຂຽນບໍ່ເປັນ, ເຮັດໃຫ້ຄົນເຫລືອບໍ່ພໍ, ຜູ້ຮູ້ເຮັດວຽກແດ່ ພັດເຮັດໜັກໂພດ ,
ບາງຄົນກໍ່ເຮັດພໍແປະໆ ບາງໆ... ເລື່ອງນີ້ຫລາຍຄົນນັ່ງຢູ່ນີ້ກໍ່ເຄີຍຈົ່ມ ເວົ້າ
ແມ່ນບໍ່ ?

ເວົ້າຮອດນີ້ ພູ່ໄຊປະກົດວ່າແຮ່ງອຶ້ນໃຈ, ໄດ້ເວົ້າແລ້ວກໍ່ຈົກມັນ ອອກ
ມາໝົດສາ, ເລື່ອງທີ່ເຄີຍເຈັບໃຈຕາງໝູ່, ເຄີຍລັກຄິດລັກຈົ່ມກັນຢູ່ກໍ່ຍັງມີຢູ່.

...ເລື່ອງປະຕິບັດນະໂຍບາຍ, ເອົາຂໍ້ຍົກຕົວຢ່າງສະຫາຍ ຄຳເພັດ
ກັບ ສະຫາຍ ບຸນມີ ເຂົາຢູ່ໃນເປົ້າໝາຍໄປຮຽນຕໍ່ວິຊາສະເພາະຢູ່ຕ່າງ ປະ
ເທດ, ຍ້ອນມີເງື່ອນໄຂພຽງພໍຄືອາຍຸການສາມປີ, ລະດັບຈົບອຸດົມສົມບູນ ,

ທິດາຈັນ

ຫ້າວຫັນຕ້ອງການເປັນພິເສດ ເມື່ອຮອດນີ້ໄປຕົວຈິງ ພັດມີຊື່ຫາວພອງ ແລະ ສີພອນ, ທັງສອງຫາກໍ່ມາເຮັດການບໍ່ຮອດປີ. ຕາມເຮົາຮູ້ຂ່າວມໍ່ໆນີ້, ພາຍຫລັງສີພອນຖືກສົ່ງກັບມາແຕ່ຕ່າງປະເທດຍ້ອນຮຽນບໍ່ໄດ້, ເຂົາເຈົ້າວ່າ ບໍ່ທັນເສັງຈົບຊຸດົນ, ຜູ້ໜຶ່ງເສັງຕົກ, ແຕ່ຍາດໄປພັດມີໃບຢັ້ງຢືນການສຶກສາ ຄົບຖ້ວນ. ເຂົ້າໃຈຍາກຢູ່, ທັງສອງແມ່ນຫຍັງ ກັບລຸງເກົ່ງ ໃຜກໍ່ບໍ່ແປກປະຫຼາດແລ້ວນໍ່ ?

ພູໄຊເວົ້າລຸດໆອອກມາລວາດດຽວ, ຄືຈິ່ງຢ້ານວ່າເມື່ອຢຸດເວົ້າໜ້ອຍໜຶ່ງແລ້ວແມ່ນເຂົາຈະບໍ່ມີຄວາມສາມາດເວົ້າຕໍ່ໄປ... ແຕ່ປານນັ້ນເຫື່ອເລື່ອມຊຶມຕາມຮູດັງ, ສັນຫລັງ, ຫົວຄິດເລື້ມສົມລະວົນ.

ສາຍຕາທຸກຄູ່ຍັງຄົງສຸມໃສ່ພູໄຊປານເຂົາແມ່ນຄົນປ່າ ທີ່ຫາກໍ່ຖືກຈັບມາໄວ້ສວນສັດ, ແສງຕາແຫ່ງຄວາມຕື່ນເຕັ້ນຕົກໃຈ, ງຶດງໍ້, ຕິຕຽນ...ແຕ່ລະຄົນໜ້ອຍເທື່ອ ຊິກາແມນເບິ່ງໜ້າຜູ້ເປັນປະທານກອງປະຊຸມ ຊຶ່ງພວມ ປ່ຽນແຕ່ສີແດງມາເປັນສີມ້ານ, ແຕ່ສີຈືດມາເປັນສີຊີດໄປຕາມ ເລື່ອງຂອງເລື່ອງຊຶ່ງຕະຫລອດເວລານັ້ນ ເພິ່ນບໍ່ແລ້ວໄປທາງຜູ້ແທນຈັກບາດ, ມີແຕ່ພະນັກງານອາວຸໂສແດ່ ຈຳນວນໜຶ່ງ, ບາງຄົງຄາວກໍ່ຫລົບສາຍຕາລົງຕ່ຳໆ ຫລື ປ່ອຍອອກນອກຫ້ອງ.

ສ່ວນທ່ານປະທານ ຍັງຄົງກົດຢູ່ໃນຄວາມເຄັ່ງຂຶມຕາມເຄີຍ ແລະ ຮັກສາທ່າທາງຂອງຜູ້ພວມສົນໃຈຕໍ່ບັນຫາສຳຄັນ, ເຮັດໃຫ້ຄວາມຕົກຕະລຶງ ຂອງເພິ່ນຖືກເກັບມ້ຽນຢ່າງເລິກລັບ.

ເຫັນພູໄຊ ສີ້ຄາງງຶງເຄີງ ແດ່ແລ້ວ ເພິ່ນກໍ່ຟ້າວເວົ້າແຫຍມໃສ່ :

– ກ້າເວົ້າຈິ່ງຊື່ແມ່ນດີແລ້ວ, ຊົມເຊີຍ, ເອົາເດີ, ສະຫາຍ ຍັງມີຫຍັງເຊີນເວົ້າອອກມາໝົດໂລດ, ບໍ່ໃຫ້ຄັ່ງຈ້ຽນໄດ໋.

ພູໄຊສັກຕາໄປທາງຜູ້ແທນທີ່ກໍກຳລັງຢູ່ໃນທ່າງຸນງົງ, ແລ້ວກໍ່ ສັງເກດເບິ່ງຜູ້ຟັງທັງໝົດກ່ອນຊິເວົ້າບາງຕົວຢ່າງ : " ເລື່ອງຂັ້ນເງິນເດືອນຂອງພະນັກງານໃນສຳນັກ ກໍ່ຈັດບໍ່ສົມຂັ້ນ ເລື່ອງລົດສ່ວນລວມ, ເລື່ອງນ້ຳມັນ ສ່ວນລວມຮັບໃຊ້ແຕ່ສ່ວນຕົວ ຫົວໜ້າ ແລະ ຄະນະ ຫລາຍກວ່າຮັບໃຊ້ວຽກລວມ, ເລື່ອງບັນຊີອຸປະກອນກະສິກຳຢູ່ສາງບໍ່ຈະແຈ້ງ, ເລື່ອງລາຍເຊັນຂອງຫົວໜ້າຢູ່ເຈ້ຍທີ່ຫົວໜ້າບໍ່ໄດ້ອ່ານ ເຮັດໃຫ້ຕົວເລກປຸຍເຄມີ, ເຂົ້າແລະອື່ນໆ ຂອງບາງຕາແສງຜິດພາດ...

ຄວາມກ້າຫານຂອງເຂົາກໍ່ມີຂອບເຂດ, ໃກ້ຈະຮອດຕອນສຸດທ້າຍເຂົາຮູ້ສຶກວ່າ ຕົນເອງເວົ້າຫລາຍໂພດ, ແປນໂພດ ຈຶ່ງອ່ວາຍຄຳຕິຕຽນ ໄປທາງຜູ້ອື່ນ.

- ອັນບໍ່ດີກໍ່ບໍ່ແມ່ນທັງໝົດນັ້ນ ມັນບໍ່ແມ່ນຍ້ອນແຕ່ຜູ້ຮັບຜິດຊອບ ມັນເປັນນຳ ພວກເຮົາໝົດທຸກຄົນນັ່ງຢູ່ນີ້ອີກ. ເຫັນເພິ່ນຍັງເຮັດບໍ່ດີ, ມີຄວາມ ຂັດຂ້ອງໝອງໃຈກໍ່ອຳໄວ້, ຈື່ມເວົ້າແຕ່ລັບຫລັງ...

" ບັກຫລ້າໂງ່ງ່າວເອີຍ, ເວົ້າອອກມາຫາປະໂຫຍດຫຍັງໄດ້, ມີແຕ່ເສຍໃຈກັນລ້າໆນັ້ນຕິ໊, ເພິ່ນລອງເວົ້າກ່ອນໂຕແລ້ວລະ, ສົ່ງຂ່າວຂັ້ນຮອດຂັ້ນເທິງພຸ້ນຕ່ວາ ແລ້ວມີຫຍັງຕ່າງເກົ່າແດ່, ເຂົາບອກຕຳນິແມ່ນເຂົາເວົ້າໃຫ້ ຄືຊິ່ງ ທາວໂງ່..." ສຽງລົມກັນຄອຍໆຢູ່ແຈໜຶ່ງ.

ແຕ່ແລ້ວພູໄຊກໍ່ບໍ່ລືມລະວັງຕົວຕາມເຄີຍ.

- ເວົ້າແນວນີ້ກໍ່ບໍ່ແມ່ນໂຈມຕີດອກ, ຜູ້ດີຫລືຈຸດດີກໍ່ຫາກມີ, ເປັນຕາຍ້ອງກໍ່ຍ້ອງຢູ່ແລ້ວ ແນວທາງຂອງພັກອັນລວມແມ່ນຖືກແທ້ ແຕ່ຜູ້ປະຕິບັດຜິດນັ້ນຕິ໊ອັນເຮົາຢາກເວົ້າ. ເຂົາຢຸດ ແລະ ຊຶ່ງຄຶດ, ຈະເວົ້າແຖມວ່າ: " ເຮົາ ກໍ່ມີຈຸດອ່ອນຫລາຍ, ຂໍໃຫ້ຜູ້ອື່ນສົ່ງຂ່າວຕຳນິ " ຈັກຈັ່ງໃດເຂົາພັດເຫັນໂຕຫລອນນັ່ງປຸບລົງ ພ້ອມຄຳວ່າ: "ຂໍໝົດຄຳເທົ່ານີ້".

ພາຍຫຼັງຮັບຟັງຄຳໂອວາດສັ່ງສອນຫຍໍ້ໆ ກ່າວປິດກະຕິຂອງຜູ້ແທນຂັ້ນແຂວງແລ້ວກອງປະຊຸມກໍເລີກລາ ທ່າມກາງສຽງຊົບຊົ່ມ, ຕື່ນເຕັ້ນ.

ທ່ານປະທານກ້າວລົງຈາກເວທີ, ເລັ່ງມາຫາພູໄຊ ຂໍຈັບມືທັງສະແດງຄວາມຍ້ອງຍໍ ຄວາມກ້າຫານຂອງເຂົາ ແລ້ວກ່າວຄຳຂອບອົກຂອບໃຈ ດ້ວຍທ່າທາງສະໜິດສະໜົມຕໍ່ໜ້າຄົນທັງຫຼາຍ ນັບທັງແຂກຜູ້ມີກຽດ.

ແຕ່, ຕະຫຼອດເວລາປະຊຸມນັ້ນ ບໍ່ມີໃຜຮູ້ດອກວ່າມີໃຜຜູ້ໜຶ່ງ ມີອາການຮູດຮ້ອນ, ຮູດໜາວ, ເກືອບຄຸມຕົວບໍ່ລອດ. ໂອ້ຍ, ຄັນແມ່ນແນວ ພໍເຮັດໄດ້ ເພິ່ນຜູ້ນັ້ນພໍຢາກໂດດທະຍານຂຶ້ນໄປດຶງກະຊາກແຂນພູໄຊໃຫ້ນັ່ງ ປົກລົງກັບບ່ອນ ແລະ ປິດປາກໄວ້.

ເມື່ອພູໄຊເມືອຮອດເຮືອນ, ພໍແຕ່ກິນແລງແລ້ວ, ເຂົາກໍຖືກ ນ້າບ່າວເອີ້ນອອກໄປລະບຽງເພື່ອຟັງ "ເທດ" ໂລດ.

...ມັນຫຼານຄຶດຈັ່ງໃດຈຶ່ງອອກຄຳເຫັນແບບນັ້ນ ! ຫຼານຮູ້ບໍ່ ວ່າຫຼານກຳລັງຫາເຄາະເຂົ້າເຮືອນໂຕ. ນີ້ແຫຼະ ເຂົາວ່າເຮັດນາໝົດປີແລ້ວຕອຍຫຼັກໄຟຈູດເລົ້າເຂົ້າຕົນເອງຫັ້ນນ່າ – ເພິ່ນຖອນໃຈຍາວ, ທຳສີໜ້າຂອງຜູ້ເຫັນເຫດຮ້າຍກ່ອນໝູ່–ແມ່ນຫຼານຢາກໄດ້ດັບໄດ້ດີຫຍັງຈຶ່ງຕຳນິເພິ່ນ. ເວົ້າໄດ້ກໍບໍ່ມີໃຜຍ້ອງດອກ, ບໍ່ໄດ້ຫຍັງໆທັງສິ້ນ ມີແຕ່ຊິຫຼົ້ມຈົມຊ້ຳ, ເພິ່ນວ່າ ກົບຕາຍຍ້ອນປາກແມ່ນອັນນີ້ແລ້ວ.

– ອ້າວ ເພິ່ນບົ່ງຊີ້ໃຫ້ເວົ້າ, ບອກໃຫ້ເວົ້າ, ຄັນເພິ່ນບໍ່ບອກ ມັນກໍເປັນເວົ້າຢູ່ແລ້ວ ມັນໂພດເກີນໄປ – ພູໄຊເວົ້າຢ່າງບໍ່ເບິ່ງໜ້ານ້າບ່າວ, ທັງຕົກສະເງີ້ຕໍ່ການຢ້ານກົວຂອງນ້າບ່າວ.

– ເພິ່ນຜິດ, ເພິ່ນບົກພ່ອງ ມັນແມ່ນເລື່ອງຂອງເພິ່ນ, ມັນບໍ່ ແຕະຕ້ອງເຖິງເຮົາແລ້ວກະເປັນພໍ, ຮື ! ນ້າບ່າວຫຼິ່ງແສງຕາໄປໄກ ດ້ວຍຄວາມໝົດຫວັງ ເພິ່ນດີນຳເຮົາມາແຕ່ໃດໆ, ຄັນບໍ່ທໍ່ບຸນຄຸນເພິ່ນນີ້, ປານນີ້ ເຈົ້າກໍ

ໄປ່ເພັບໆກັບເດັກນ້ອຍຢູ່ບ້ານພູເມືອງຜາພຸ້ມລະຕີ້, ຊິໄດ້ພາແມ່ມາຢູ່ນຳ ນ້າບ່າວໃນເມືອງພີ້ຫວະ ?

ເຫັນພູໄຊບໍ່ປາກເພິ່ນກໍຢ້ຳຕໍ່ໄປ :

– ເລື່ອງເຮັດນຳພູ້ໃຫຍ່ໄມ້ສູງ ຕ້ອງມີລ່ຽມ, ມາຖາມນ້າບ່າວນີ້ກ່ອນເນ້, ຄົນຊ່າງເຮັດນຳເພິ່ນບໍ່ຮ້ອງກໍມີ, ມີພໍ່ໃຫ້ລູກຫລານໄດ້ເພິ່ງຄືນ້າບ່າວ ນີ້ແຫລະ, ນ້າບ່າວນີ້ມີບົດຮຽນມາແຕ່ໃດໆ ພຸ້ນ, ຍາມເຮົາຍ້ອງກິນກໍແມ່ນໄດ້, ຍາມເພິ່ນຍ້ອງໃຊ້ກໍຕ້ອງເຮັດ ຢ່າໄປຄົ້ນຄວາມເກົ່າ, ຢ່າໄປເອົາ ຄວາມຜິດເພິ່ນ ແມ່ນຢູ່ເຢັນເປັນສຸກ...

ນ້າບ່າວຢຸດເວົ້າ ເພື່ອລໍຟັງການກະທົບຄືນຂອງຫລານ. ສ່ວນພູໄຊຍັງຄຶງມິດ ແຕ່ໃນໃຈແຮງເຫັນແຈ້ງຄວາມເປັນຕາບໍ່ນັບຖືຂອງນ້າບ່າວ, ຄຳເວົ້າຂອງເພິ່ນແຮງເຮັດໃຫ້ພູໄຊເຫັນວ່າການບັງອິນເວົ້ານັ້ນ ຄວນຈະແມ່ນ ການຕັ້ງໃຈເວົ້າ ອາດຈະເວົ້າໄດ້ດີກວ່ານັ້ນ.

ນ້າບ່າວໄດ້ໂອກາດດີອີກ. ເພິ່ນເລືອກໄດ້ຄຳເວົ້າ ກະວ່າໜັກແໜ້ນສຽບແທງກວ່າເກົ່າ ຊຶ່ງເຊື່ອວ່າຄົງພາໃຫ້ພູໄຊເພີ່ມຄວາມກິນແໜງຕໍ່ການປະພຶດຂອງຕົນ.

– ກິນກົກໃດບໍ່ຄວນຂີ້ໃສ່ກົກນັ້ນ. ນ້າບ່າວອື່ດູຫລານ, ອື່ດູເອື້ອຍ , ຫລານຄິດເບິ່ງພໍ່ຫລານກໍ່ຕາຍຍ້ອນກູ້ຊາດ, ຍັງລູກຊາຍດຽວ, ແມ່ກໍເຖົ້າແນວນີ້ແລ້ວ. ໄປຕີສັດຕູນຳເພິ່ນ ເຈົ້າກໍໄປຕີມາແລ້ວ, ມາດຽວນີ້ ພັດຍົກໃຕ້ຍ້າຍເໜືອ. ມູນມັງພໍ່ແມ່ ກໍມີແຕ່ສອງຜາມີເປົ່າ. ໂອ ຄົນບໍ່ທໍ່ເພິ່ນນີ້, ເວົ້າແລ້ວເວົ້າອີກ ປານນີ້ເຈົ້າກໍຊິສອນເດັກນ້ອຍອື່ນູກຄາດັ່ງແປດແປດຢູ່ບ້ານປ່າຂາດອນພຸ້ນແລ້ວ, ນ້ຳໜ້າເງິນເດືອນດ້ານສີ່ໜ້ານ້ຳຮ້ອຍ, ເຂົ້າສານດ້ານສິບ ຊາວໂລ, ຫາ–ຫົກເດືອນ ກໍບໍ່ເຫັນສົ້ນເຫັນເງື່ອນເທື່ອໜຶ່ງ, ແລ້ວແມ່ນເຈົ້າ ຊິຄອງເອົາຫຍັງອີກ, ຄອງເອົາໃບຍ້ອງຍໍຢູ່ຊຸ້ມບໍ ? ນັ້ນແລ້ວເຂົາວ່າ ອາຊີບເໝງຈັກຈົ່ມນ່າ, ເຮັດຊິຕາຍບໍ່ເຫັນໄດ້ໃບຫຍັງ ພໍເທົ່າເກັດຫອຍຊ້ຳ. ແມ່ກໍ

ຈະປະໃຫ້ເຂ່ຽດິນກິນແຮງຊ້ຳເຖົ້າຢູ່ຜູ້ດຽວ...

– ເຮົາມັນເປັນຄົນຊື່ໄດ໋ນ້າບາວ ຜູ້ໄຊຕັດສິນໃຈຕາມຄືນດັກແນ່ ໃຜຖືກກໍ່ວ່າຖືກ ໃຜຜິດກໍ່ວ່າຜິດ, ເຮົາຊັງຄົນໜ້າໄຫວ້ຫລັງຫລອກ ຫາດີແຕ່ໂຕທໍ່ນັ້ນ.

ຜູ້ໄຊຮັດໜ້າເສີຍໆ, ເພາະຢ່າງໜ້ອຍເຂົາກໍ່ເຄີຍນັບຖືນ້າບ່າວ.

– ໂອ້ຍຄົນໂງ່ເອີຍ. ໂຕຫາກໍ່ເກີດວານນີ້ ມື້ອື່ນມື້ກໍ່ເປັນຊຸ້ນແລ້ວ, ໂຕຮູ້ບໍ່ວ່າເພິ່ນມີວິທີຫາກິນຂອງເພິ່ນ, ຄັນເພິ່ນຫາໄດ້ເຮົາກໍ່ມີ, ເພິ່ນດີ ເຮົາກໍ່ໄດ້. ເພິ່ນຕັດສິນໃຈເຈາະເຂົ້າຍອມທີ່ພາໃຫ້ຫລານຊາຍເຈັບປວດ, ຈຶ່ງ ດັດສຽງລົງອຶກ : ຄັນເຈົ້າຫັນຮູ້ວ່າ ນ້າບ່າວໄດ້ລົມກັບຫົວໜ້າໃຫຍ່ ໃຫ້ເພິ່ນພະຍາຍາມຊອຍເອົາຫລານເຂົ້າເປັນສະມາຊິກພັກ ແລະ ຮູ້ວ່າເພິ່ນໄດ້ເອົາຫຼານເຂົ້າຢູ່ໃນເປົ້າໝາຍ ກຽມໄປຮຽນຕ່າງປະເທດຊຸດໜ້ານີ້ ເຈົ້າຄືຊິຮູ້ບຸນຄຸນເພິ່ນກວ່ານີ້, ຄືຊິບໍ່ເວົ້າແນວເສຽຫາຍຄືນນີ້...ດີບໍ່ດີບາດກັບມາແຕ່ ຕ່າງປະເທດ ເພິ່ນຍັງຄິດຢາກແຕ່ງເອົາອີ່ທອງຂັນຂອງເພິ່ນໃຫ້ເຈົ້າພຸ້ນໄດ້ຫັ້ນ. ປານນັ້ນແລ້ວ ເຈົ້າຍັງຊິຮຽກຮ້ອງຫຍັງຫລາຍກວ່ານີ້ອີກ...ເອີ້, ຄັນບໍ່ຫັ້ນນ້າບ່າວນີ້ເພິ່ນລູບໆເອິກ ຈ້າງຈົນຫົວແຕກກໍ່ຈ້າງເທາະ.

ເພິ່ນປ່ຽນສຽງມາເວົ້າສີລອຍໆ, ເພາະເຊື່ອໝັ້ນໃນ ການຊ່າງປັບຕົວຂອງຕົນ.

– ນ້າບ່າວນີ້ບໍ່ພຽງແຕ່ບໍ່ເຄີຍເວົ້າແຕະຕ້ອງເພິ່ນຈັກເທື່ອ, ແຕ່ ຍັງໄດ້ມອບຮອດດິນສວນເບື້ອງທ່າໜີກດອນນັ້ນ ໃຫ້ເພິ່ນລ້າງ ຍັງເອົາຄວາຍໄປຊ່າວນາໃຫ້ເພິ່ນເປັນພູດ ຢ່າງບໍ່ຄິດຄ່າຈັກກີບ. ເອີ່ບໍ່ແມ່ນລ້າງໄດ້ ເພິ່ນເວົ້າຄືສຽງຫົວຄ່ອຍໆ ເພິ່ນກໍ່ເຫັນໃຈເຮົາເດີ ໄມ້ເຮືອນທ້າງປຸກຢູ່ນີ້ ບໍ່ໄດ້ ລົງທຶນຈັກກີບ, ມັນແມ່ນຍ້ອນໃຜ ? !

– ເອີ້, ນ້າບ່າວແນມເບິ່ງໜ້າຫລານຊາຍ ວ່າມັນຈະມີໂຊງກິນແໜງບໍ່ ? ແລະ ບັນຫາຈະເວົ້າຕໍ່ໄປນີ້, ມັນສົມພໍຟັງນຳບໍ່ ? ເພິ່ນຍັງລັກເວົ້າ ສູ

ຟັງວ່າ ຕໍ່ໜ້ານີ້ ເພິ່ນອາດໄດ້ຍ້າຍຂຶ້ນໄປເຮັດວຽກສຳຄັນ ແລະ ສູງກວ່ານີ້, ເພິ່ນພວມຈະສະເໜີໃຫ້ນ້າບ່າວນີ້ຂຶ້ນເປັນຄະນະຢູ່ນີ້, ເພາະຜູ້ຮອງເພິ່ນຊິໄປເປັນຫົວໜ້າແທນເພິ່ນ ເວົ້າຮອດນີ້ ສຽງເພິ່ນເສົ້າລົງ ບາດນີ້ຫລານໂຕ ພັດມາພານມາເພແນວນີ້, ຊາຕາຊິເປັນໄປແນວໃດ, ຢ້ານຫົວໜ້າຈັດຕັ້ງຄືຊູ່ມື້ນີ້ ກໍ່ຊິບໍ່ຮັກສາໄດ້ຊ້ຳ, ເຮືອນນີ້ກໍ່ຊິໄດ້ຫໍ່ໄດ້ນີ້ແລ້ວ. ໂສ້ຊູ້ຮ້າຍກໍ່ຫົນປຸກ ຫົນແປງກ່ອນແມ ຄວາມເຫລົ່ານີ້ເພິ່ນເວົ້າກັບຕົນເອງຫລາຍກວ່າ.

ຜູ້ເປັນນ້າບ່າວເວົ້າຢ່າງລ່ຽມໄຫລ, ຍືດຍາວ, ໜັກໃຈ. ແຕ່ຕອນທ້າຍນີ້ມັນເຂົ້າຫູຜູ້ໄຊຮອດແຕ່ບ່ອນຈະແຕ່ງທອງອັນໃຫ້ຕົນ. ນີ້ເປັນ ຄວາມຮູ້ໃໝ່ໆ ສຳລັບເຂົາແທ້ "ກະສົມພໍດອກ, ຫວ່າງນີ້ຫາທີ່ຂອງທອງອັນຈຶ່ງກຽວວອງກັບເຮົາຜິດປົກກະຕິ" ເຂົາຄິດ "ທີ່ແທ້ແມ່ນເພິ່ນຮູ້ເລື່ອງກ່ອນເຮົາ... ອື່ ຄົນຈຳເປັນແທ້ໆ ກໍ່ພໍໃຈໄດ້ຢູ່ດອກ. ເຈົ້າແມ່ແຫ່ງການເສີມສວຍ. ເຖິງວ່າບໍ່ມີສະເໜຄືບຸບຜາກໍ່ຊິງເອົາໃຈເກັ່ງຢູ່, ເກັ່ງກວ່າບຸບຜານາງງອນ ຂອງເຮົາຫລາຍ... ຂໍແຕ່ຢ່າໃຫ້ບຸບຜາຮູ້ເລື່ອງນີ້ກໍພໍ, ຄັນຮູ້ເລື່ອງກໍ່ເປັນເລື່ອງໃຫຍ່ໂລດລະ ໂທ້ ສາວທອງອັນຟັງເຮົາເວົ້າໃຫ້ລຸງເພິ່ນນັ້ນ ເພິ່ນຊິຄິດແນວໃດເດນໍ. ຊ່າງມັນເທາະ ເລື່ອງສຳຄັນຢາກຮູ້ແຕ່ວ່າ ບຸບຜາຄິດຫຍັງຕໍ່ຄຳຄິດ ຄຳເຫັນຂອງເຮົານັ້ນ ? ຕິຫລືພອມ ?

- ຖ້າຫລານມາເປັນຫາບໜັກຢ່າໜັກຄີ້ນ້າບ່າວເຮີນໄປ, ຫລານກໍ່ຢາກໃຫ້ນ້າບ່າວຍ້າຍຫລານໄປບ່ອນອື່ນ, ຫລານຂໍຂອບຄຸນຕໍ່ຄວາມຮັກແພງ , ເປັນຫ່ວງຄວາມຫວັງດີ ແລະ ການຊ່ວຍຊູຂອງນ້າບ່າວທີ່ຜ່ານມາ, ຖ້າຈະທຳຕົວເປັນຄົນໄດ້ຄົນດີຄືນ້າບ່າວວ່ານັ້ນ ຫລານຄືຊິບໍ່ເຮັດໄດ້ແລ້ວ ຜູ້ໄຊລຸກຂຶ້ນ , ຈະໜີອອກໄປ.

ນ້າບ່າວໄຫວຄິດ "ໝົດໄມ້ແລ້ວຫວະນີ້, ຈົບລົງໜີ້ບໍ່ເປັນບໍ ? ເຮົາຊິໂສ້ຖົ້ມໝົດເລີຍຫວະນີ້ ! ໂອ້ ກະດຽວວ່າມັນຊິຮູ້ກິນແໜງແຄງໃຈມາເປັນ

ຈັ່ງຊີ້ຊ້ຳນີ້ ທັນທີ ນ້າບ່າວໄຫວກໍ່ຄິດໃສ່ຄຳໂກ້, ລູກຊາຍສ່ຽວທີ່ເອົາມາ ຝາກເຮັດການນຳ, ມັນຮູ້ເຮັດເອົາໃຈຜູ້ໃຫຍ່ ຈົນເພິ່ນໃຫ້ກຳສາງເຄື່ອງ, ກຳບັນຊີເງິນ. ໄດ້ລົດເປັນຄັນ, ໄດ້ເຮືອນເປັນຫລັງຍ້ອນ. ນ້າບ່າວໄຫວແຮງເຫຼືອໃຈໃຫ້ຫລານຊາຍຄຶງ ຈຶ່ງຟ້າວເວົ້າໜ່ວງພູໄຊນັ່ງລົງອີກ.

- ຟ້າວກ່ອນ, ໃຫ້ຫລານຄິດຄັກໆກ່ອນ, ນ້າບ່າວບໍ່ຢາກຖິ້ມລູກ ຖິ້ມຫລານ – ເພິ່ນຢຶດສຽງໃຫ້ຍາວຍ້ອຍກວ່າ – ໂຕເປັນຄົນຊື່ສັດ, ນ້າບ່າວກໍ່ບໍ່ວ່າດອກ, ແຕ່ສະໄໝນີ້, ບ້ານເມືອງອັນນີ້ມັນຕ່າງເມື່ອຫລານຢູ່ເຂດປົດປ່ອຍໄດ້. ຕ້ອງຮູ້ຄິດຫາບ່ອນຈັ້ງບ່ອນຈອດ, ທຸກກໍ່ທຸກມາພໍແລ້ວເດ. ເປັນທະຫານສອງປີ, ເປັນຄູໜຶ່ງປີ, ມາຢູ່ນີ້ກໍ່ໄດ້ປີແລ້ວ. ຄົນບໍ່ທໍ່ລູກຊາຍດຽວ ບໍ່ຮູ້ວ່າຍັງຊິກຳປືນກຳພ້າຢູ່ຊາຍແດນຊິໄດ້ພູມບຸແລ້ວ, ປົດປ່ອຍຊາດແລ້ວກະດາຍ ຫລືວ່າຫລານຊິຄິດໄປຕັ້ງໂຕບ່ອນອື່ນກໍ່ຍາກໄດ້ ຊິຖືກຍ້ອນມີເງື່ອນໄຂແນວນີ້.

- ບໍ່ດອກ, ຫລານຕໍ່ສູ້ມາ, ຫລານພາແນວລົງມາຢູ່ນຳນ້າບ່າວ ບໍ່ແມ່ນເພື່ອມາເຮັດແນວນີ້.

- ເຮັດແນວໃດ ? ເຮົາເພິ່ງກັນ, ລ້ຽງກັນບໍ່ແມ່ນຫວະ ? ນ້າບ່າວອອກສຽງດັງ, ແຕ່ທັນໃດເພິ່ນປ່ຽນສຽງປຸບປັບ.

- ຫລືເຈົ້າຄຶດວ່າ ແນວໃດກໍ່ໄດ້ຫລິ້ນສົບຫລິ້ນປາກໄປແລ້ວ, ຮູ້ວ່າຕົນຜິດແລ້ວ ກໍເລີຍຕາມລວງເລີຍຊັ້ນບໍ ? ບໍ່ດອກ, ມັນບໍ່ດີ ຖົ່ມນ້ຳລາຍຖົ້ມດອກຫລານ, ຄັນເປັນແນວນັ້ນ, ຖ້າຫລານຄິດຖືກ, ຄຶດຢາກກັບເມືອກັບໂຕເຄີນກໍ່ບໍ່ທັນສວາຍເກີນໄປດອກ, ນ້າບ່າວກໍ່ຍັງນັ່ງໂຈໂກ້ຢູ່ນີ້ທັງຄົນເດ.

ພູໄຊມິດຄືຄົນບໍ່ໄດ້ກ່ຽວຂ້ອງກັບເລື່ອງນ້າບ່າວລົມ.

- ຄັນເປັນແນວນັ້ນ ນ້າບ່າວວ່າໃຫ້ຫລານໄປພົບສ່ວນຕົວກັບເພິ່ນ ຢູ່ເຮືອນເພິ່ນໃນມື້ອື່ນນີ້ສາ, ຄວາມດີຂອງຄົນມັກຢູ່ນຳສົບນຳປາກເຮົາ ນີ້ແລ້ວ ເພິ່ນຕ້ອຍຮັບສົບຕົນເອງ ດີແທ້ໃຫ້ຂໍໂທດຂໍອະໄພນຳເພິ່ນທັ້ນແຫລວ. ວ່າຂໍໃຫ້

ຈຶ່ງໂຍະຍານອະໄພໃຫ້ຄວາມເວົ້າຄວາມວ່າອັນຫລົມສົບຫລົມປາກຜິດໄປນັ້ນ.. ນາບ່າວກໍ່ຊິມີວິທີທຳຄວາມເຂົ້າໃຈກັບເພິ່ນໃຫ້ອີກດອກ, ຢ່າຢ້ານ.

- ຄືຊິເຮັດບໍ່ໄດ້ດອກນ້າບ່າວ, ຂໍໂທດເທາະ !

- ເປັນຫຍັງ ?

- ເພາະເຮົາບໍ່ໄດ້ຫລົງຜິດອັນໃດ ແລະ ກໍ່ບໍ່ມີໂທດກຳຫຍັງຫມົດນີ້ນ່າ. -

- ໄຊ ! ເຈົ້າຊິໂສກຸ້ມທັງຄົວເຮືອນນີ້ແທ້ງຫວະນີ້ນາ ? ຄົ້ວເພິ່ນສົມ ເຂົ້າ ມືນົບເອິກ, ແກວ່ງຫົວຫມົດຫວັງ.

ແຕ່ທັນໃດເພິ່ນກໍ່ຫາລຸ່ມໃຫມ່ໄດ້ອີກ.

- ເອີ້, ຫລືມີຜູ້ຍຸຜູ້ແຫຍ່ໃຫ້ຫລານເວົ້າບໍ ? ນ້າບ່າວກໍ່ຫາກຄຶດສົງໄສ ຢູ່ໄດ໋.

- ບໍ່.

- ຄັນໃຜບອກເວົ້າ ໃຫ້ບອກຊື່ໃຫ້ນ້າບ່າວຮູ້, ມີໄດ້ຜູ້ຫວັງປົກປ້ຳເຮົາ ເຫັນເຮົາໄດ້ເຮົາດີ ແລ້ວຢ້ານເຮົາລື່ນຫນ້າກໍ. ຄັນຮູ້ຜູ້ຍຸຍົງໃຫ້ເວົ້າແລ້ວ, ນ້າບ່າວຈະເຮັດໃຫ້ເລື່ອງຂອງຫລານຈຸລ່ວງໄປໂດຍດີໂລດ ລໍຄອຍຄຳຕອບ.

- ໃຈຫລານນີ້ແຫລະ ບອກໃຫ້ຫລານເວົ້າ

ພູໄຊຮີບສວຍໂອກາດລຸກຫນີ ເມື່ອເຫັນແມ່ຍ່າງມາຫາສອງນ້າຫລານ, ເພາະເຂົາຮູ້ວ່າແມ່ເປັນພະຍາດຫົວໃຈອອນ.

ບໍ່ພໍຄາວ ພູໄຊກໍ່ໄດ້ນັ່ງຢູ່ຄຽງຂ້າງບຸບຜາ. ນາງນັ່ງຕັ່ງຫວາຍ ເອື່ອຍ ພະນັກລຸ້ນຽງ

- ອ້າຍຮູ້ແລ້ວວ່ານ້ອງຕ້ອງນັ່ງຄອຍອ້າຍຢູ່ນີ້. ພູໄຊຫົວຢິ່ງຢາກ.

- ອ້າຍຮູ້ຜິດຕີ້, ນ້ອງບໍ່ໄດ້ຄອຍໃຜ, ໂດຍສະເພາະແມ່ນຄົນມັກສ່ຽວ ຄື້ອາຍ.

ພູໄຊຫຍັບເຂົ້າອີກຕູດຫນຶ່ງ.

- ອ້າຍກໍ່ຮູ້ກ່ອນແລ້ວວ່າ ນ້ອງຕ້ອງເວົ້າຄວາມນີ້ອອກມາກ່ອນອື່ນ .

ເຂົາຈ້ອງເບິ່ງຄົນຮັກຈົນໜ້າຜາກເກືອບຈູບຟອງຜົມດົກ ນ້ອງໄຫ້ຫວະ ບຸບຜາ? ແກວ່ງຫົວ.

- ຄັນຊັ້ນເປັນຫຍັງຕານ້ອງແດງ,..ນ້ອງບໍ່ພໍໃຈໃຫ້ອ້າຍ....?

- ເລື່ອງໃດຊິພາໃຫ້ເສຍນ້ຳຕາຍ້ອນ, ຣື, ມີແຕ່ຊິເປືອງ ຄວາມດ່າຍ້ອນຫັ້ນລະຕີ້. ນາງເວົ້າທັງສັກຕາລົງຕ່ຳແລ້ວເຈືອດຍິ້ມພ້ອມກັບບາດ ແວວໜີ.

- ໝາຍຄວາມວ່າ ນ້ອງຕ້ອງຕີອ້າຍ ເລື່ອງຕອນສວາຍນີ້ ? ອ້າຍຫລົງຄົນຮັກຂອງຕົນແລ້ວຄັນຊັ້ນ.

- ເອີ້, ດີ! ນາງວາງທ່າຍ່າງກະທັນຫັນ -ເປັນຫຍັງຈຶ່ງບໍ່ຮູ້ວ່າຕົນຫລົງແຕ່ຄົນງຸ່ມ ? ເພາະມັນຈະບໍ່ຊັກຊ້າໃນການປ່ຽນຄົນເດ.

- ຂໍຢ່າເຂົ້າໃຈແນວອື່ນເທາະຜາ-ເຂົາຍິ້ມທັງນິບປອກເລື່ອງນີ້ສວາຍນີ້ ນ້ອງບໍ່ສະໜັບສະໜູນອ້າຍແມ່ນບໍ່ ?

ນາງແກວ່ງຫົວ.

- ອ້າຍຫາກຄິດແລ້ວວ່າ ໂລກເກືອບທັງໂລກນີ້ ຍັງຢາກປິ້ລະປັກ ກັບຄວາມຈິງ ແລະ ນ້ອງກໍ່ບໍ່ນອກເໜືອຈາກໂລກນີ້ໄປໃສ ເພາະຫຍັງນໍ ?

ບຸບຜາແກວ່ງຫົວຢ່າງແຮງອີກ.

- ອ້າຍຫລົງ ໆ, ຄືທຸກມື້ນີ້, ເວົ້າຄືອ້າຍເວົ້າຫັ້ນ, ໄປຖາມຮ້ອຍຄົນກໍ່ວ່າຮ້ອຍເທື່ອຜິດ ຖາມພັນຄົນກໍ່ວ່າພັນເທື່ອຜິດ, ນ້ອງເກີດໃໝ່ໃຫຍ່ລຸ້ນກໍ່ຈິງ, ແຕ່ເລື່ອງສຳນີ້ນ້ອງກໍ່ພໍເດົາໄດ້ວ່າ ອັນໃດສົມຄວນເວົ້າກັບໃຜ, ເວົ້າ ເວລາໃດ.

- ນ້ອງຢາກເວົ້າວ່າ ສິ່ງທີ່ອ້າຍເວົ້າອອກມັ້ນມັນຜິດຄວາມຈິງ ?

- ສຳເດັກນ້ອຍຫາກໍ່ຮຽນປາກ ເມື່ອມັນຖ່າຍໃສ່ບ່ອນແລ້ວ ມັນກໍ່ຍັງຮູ້ວ່າໃຜເປັນຜູ້ເຮັດເປື້ອນໃສ່ບ່ອນ. ຊິມີໃຜເດແປກປະຫລາດຕໍ່ຄວາມຈິງນັ້ນ . ມັນບໍ່ແມ່ນອ້າຍຜູ້ດຽວຫລືແມ່ນຜູ້ທຳອິດທີ່ຮູ້ເຫັນຄວາມຈິງນັ້ນ! ບາງຄົນເຂົາຍັງ

ຮູ້ກ່ວາອ້າຍຫລາຍໆທົບ, ຄັນເສັງຄວາມຮູ້ນີ້ ອ້າຍຍັງອາຍເຂົາ ! ແຕ່ ເຂົາບໍ່ເວົ້າ-ນາງເບະສົບບໍ່ຮູ້ວ່າດູຖູກໃຜ ເພາະເຂົາຖືຄວາມພິດນັ້ນເປັນຂອງ ທຳມະດາຂອງຄົນປະເພດນັ້ນ, ສິ່ງສຳຄັນ ເຂົາຖືແມ່ນປາກກັບທ້ອງຂອງໃຜ ຂອງມັນ, ດຽວນີ້ອ້າຍຮູ້ບໍ, ຍາມຢູ່ຫ້ອງການ ເຂົາເປັນຄົນຜູ້ໜຶ່ງ, ຍາມຢູ່ ເຮືອນເຂົາເປັນຄົນອີກຜູ້ໜຶ່ງ. ລະບອບໃໝ່ນີ້ເພິ່ນກໍ່ວ່າບໍ່ໃຫ້ມີການສໍ້ລາດບັງຫລວງຄື ລະບອບເກົ່ານັ້ນແລ້ວ, ແຕ່ຄົນຜູ້ເຮັດມັນກໍ່ຍັງແມ່ນຄົນຜູ້ດຽວນັ້ນ. ອີ ! ການເຫັນແກ່ປາກແກ່ທ້ອງ ມັນແມ່ນສັນຊາດຍານໜຶ່ງຂອງຄົນ ແລະ ສັດ ເມື່ອມັນໄດ້ເປັນພະຍາດສັງຄົມແລ້ວ ມັນກໍ່ຊ້ຳເຮື້ອ, ປາກຍາກຢູ່ອາຊີບປິ່ນປົວ ນີ້ໜຶ່ງຍາມດຽວຄືອ້າຍຄິດ, ອ້າຍຊິໄປທົບຜູ້ດຽວແຜ່ນດິນນີ້ກໍ່ບໍ່ໄຫວດອກ... ຜູ້ອື່ນເຂົາຮູ້, ເຂົາມີດປານບໍ່ມີຮູປາກ, ອ້າຍລະຫາວ່າເຂົາບໍ່ຮູ້ ຫລືເຂົາບໍ່ກ້າເວົ້າຊັ້ນບໍ ? ຂໍບອກແຕ່ນັ້ນແລ້ວ ເພື່ອຊີວິດສ່ວນຕົວເຂົາໄດ້ຢູ່ເຢັນນາ.

ບຸບຜາຕູດອອກເພື່ອຫາໄລຍະຫ່າງຈາກພູໄຊ.

ພູໄຊແນມເບິ່ງຈຸດດຽວຢູ່ຊື່ໆໜ້າ, ແຮງຟັງເຂົາກໍ່ແຮ່ງ ລັກນັບຖືຄວາມງອນຂອງຊູ, ຊຶ່ງເຂົາເຄີຍຄິດວ່າເປັນສາວນ້ອຍຂີ້ງອນ, ມັກອ້ອນອົນ, ອ່ອນໄຫວ, ເກີດເປັນນີ້ມາມີແຕ່ຕີພິມດີດຂອງຫ້ອງການ, ທີ່ແທ້ນາງກໍ່ລັກຮູ້ສັງເກດ ຕີບັນຫາໄດ້ຫລາຍແງ່ຢູ່. ແຕ່ພູໄຊບໍ່ສະໜັບສະໜູນຄຳເຫັນຂອງ ນາງຈັກດີ້.

- ທຸກມື້ນີ້ຍັງມີຜູ້ເຮັດແບບຫລັກໄດ້ໃບເສັຽ, ຝາມືໃຜກ້າງຫົວມັນ ການກໍ້ສ້າງຊ່ວຍເຫລືອຜູ້ອື່ນມັນບໍ່ແມ່ນ ເພື່ອຜູ້ອື່ນດີຄືພັກລັດເພິ່ນສອນດອກ, ອັນຄຳວ່າຈິງໃຈຕຳນິກໍ່ສ້າງກັນເອີຍ, ສາມັກຄີຮັກແພງກັນ ດ້ວຍປາກເປົ່າເອີຍ , ເພື່ອຊາດ ເພື່ອສ່ວນລວມ ເອີຍ, ໂອຍນ້ອງຄິດວ່າມັນຄືຊິມີຄວາມໝາຍແທ້ຈິງຢູ່ແຕ່ສະໄໝທ້າຍປີນຍັງລາກຂານ່ອງອ້າຍໄປຕີຈັກກະພັດອາເມລິກາຄືອ້າຍເຄີຍເອກອ້າງພຸ້ນບຸ ! ເຂົາບໍ່ຍອມຮູ້ດອກວ່າ ເຮົາເວົ້າຈຸດອ່ອນເຂົາ ກໍ້ຍອມເຮົາ

ຫວັງດີຕໍ່ເຂົາ, ຄັນເຮົາເວົ້າຈຸດອ່ອນຂອງຜູ້ອື່ນ ໂດຍສະເພາະຂອງຕໍ່ໜ້າເຮົາ, ເຂົາກໍ່ຖືວ່າ ເຮົາຢາກຊອກຈຸດອ່ອນຂອງລະບອບໃໝ່ມາວິຈານ, ມາໃສ່ຮ້າຍ, ສຽດສີ ດຽວນີ້ເວົ້າໄດ້ກໍ່ປານຫາໂທດໃສ່ໂຕລາງ, ຄັນບໍ່ວ່າຕັ້ງໄປພຸ້ນມຸ.

- ນ້ອງຍັງຄຶດວ່າໄດ້ໂທດຫວະບຸບຜາ ? ອ້າຍບໍ່ຍອມນ້ອງ, ບໍ່ຍ້ອມໃຜໝົດ, ຕົກກະເທີນໄດ້ຕໍ່ສູ້ແລ້ວ ອ້າຍຈະບໍ່ຖອຍ. ອ້າຍຍ້ອງວ່ານ້ອງ ສັງເກດບັນຫາໄດ້. ແຕ່ຕີລາຄາຜິດແລ້ວ. ອ້າຍບໍ່ຍອມໃຫ້ເຂົາເອົາສິນທຳ ໄປແລກເຂົ້າກິນຄຳແນວນັ້ນ. ຄັນເຮົາບໍ່ເລີ່ມຕົ້ນແຕ່ລະບຸກຄົນໄປ, ມັນບໍ່ມີ ດອກວ່າ ຢູ່ບໍ່ຢູ່ ຄົນໝົດແຜ່ນດິນຊິເປັນໃຈກັນ ທີບແຜ່ນດິນແຫ່ງຄວາມຊົ່ວນັ້ນ ບາດດຽວ. ມັນຕ້ອງມີ ຜູ້ໃຫ້ສັນຍານຕົວຈິງກ່ອນ...ຄົນຜູ້ນັ້ນ ແມ່ນອ້າຍເດແລ້ວ?

- ເຂົ້າໃຈບໍ່ໄດ້. ນາງບຸບຜາເວົ້າ

- ຄັນຊັ້ນ ນ້ອງ ຢາກລອງຕາມແນວເພື່ອຄວາມຄົງຢູ່, ເພື່ອຄວາມກ້າວໜ້າຂອງອ້າຍ ແລະ ນ້ອງ. ຖ້າດັ່ງນັ້ນ ກໍ່ໝາຍຄວາມວ່າ ນ້ອງເອງກໍ່ຫວັງເພື່ອແຕ່ "ກູ" ແລະ "ພວກເຮົາ" ຄືກັນ.

- ກໍ່ແມ່ນ ! ນາງກົ້ງຕາຖຽງຄືນ ກໍ່ເພາະນ້ອງບໍ່ໂງ່ເອົາຫົວໄປຕອກຕະປູຕາງຄ້ອນຄືອ້າຍ, ຢາກຫລີ້ບໍ່ ມັນກໍ່ບໍ່ພົ້ນຈາກຄວາມເຈັບ ແລະເສັຽຫາຍແລ້ວມີດີຫຍັງ ນ້ອງໃຈຮ້າຍໃຫ້ອ້າຍຄືຊິຕາຍນີ້, ຕອນອ້າຍຢືນເວົ້າໂປ້ງ ໆ ຢູ່ຫັ້ນ, ຮື ! ເວົ້າຫາວິມານຫຍັງ ? ແລ້ວໃຜຊິປ່ຽນແປງໃຫ້ອ້າຍ, ຖ້າເບິ່ງໂລດ ຜົນຕອບແທນຂອງມັນ ! ນາງທົ່ງລົມອອກຮູດັງທັງແຮງ ແລະ ອວາຍຫລັງໃສ່ພູໄຊ.

- ເປັນຫຍັງກໍ່ໃຫ້ມັນເປັນໄປໂລດ, ຖ້າເປັນຍ້ອນການຕໍ່ສູ້ ເພື່ອສ່ວນລວມ, ບໍ່ແໜງໃຈຫຍັງໝົດ ! ພູໄຊ ກໍ່ທົ່ງສຽງບໍ່ຢອກ.

ຄືນມື້ນັ້ນ, ກັບມາຮອດເຮືອນ ໃນຫ້ອງນອນ ພູໄຊປະກົດວ່າ ຕົນຫລົງ

ເຂົ້າໄປງົງງ້ວວຢູ່ ຄົງເລີກພູດຮອ ບໍ່ພໍທໍ່ໃດຊົ່ວໂມງ ເຂົາກໍຍິນສຽງນ້າໃພ້ລູກ ໜຶ້ງເຂົ້າ.

ພູໄຊລຸກມາປິດເດີ່ນບ້ານ, ຫົດພັກ ກໍໄປລ້າງໜ້າແລ້ວຟ້າກໍ່ຮຸ່ງແຈ້ງ, ເຂົາແນມຂຶ້ນໄປເທິງເຮືອນ, ແປກແທ້, ໜໍ່ໂກ້ມາປະກົດໂຕແຕ່ເຊົ້າແທ້,ມັນ. ອຸ່ມໆ ອິ່ມໆ ຫຍັງກັບນ້າບ່າວ. ແມ່ນແລ້ວ ! ຄົງຈະແມ່ນເລື່ອງວານນີ້.

ພູໄຊຫິ້ວຄຸນ້ຳຂຶ້ນຂັ້ນໄດ, ບໍ່ທັນພົ້ນຄັກ, ກໍ່ຖືກນ້າບ່າວກວັກເອົາມາຫາ.

- ໄຊ, ເຮົາເປັນຫ່ວງໂຕອີຫລີໄດ໋. ຄຳໂກ້ກ່າວຂຶ້ນເຮັດຊົງເປັນຫ່ວງ.

- ມີຫຍັງພໍເປັນຕາຫ່ວງ ? ພູໄຊປ່າຍກົ້ນລົງຕັ່ງທຳທ່າບໍ່ສົນໃຈ.

- ຄືວ່າ ນ້າບ່າວກັບຄຳໂກ້ນີ້ ປຶກສາກັນ. ນ້າບ່າວໄຫວກ່າວດ້ວຍສີໜ້າຂອງຜູ້ກຳລັງປຶກສາເລື່ອງເປັນເລື່ອງຕາຍຂອງຊີວິດ ວ່າຄັນເຈົ້າ ຕົກລົງເຮັດດີນຳເພິ່ນຄືນ ລະໃຫ້ເຈົ້າວ່າຄັກສາ, ທ້າວໂກ້ກັບນ້າບ່າວຊິຊ່ວຍ, ທ້າວນີ້ເພິ່ນຮັກໝັ້ນຄືຫລານຄີງໆຂອງເພິ່ນ, ເພິ່ນເຊື່ອມັ່ນຢູ່ດອກ.

ໂດຍບໍ່ສົນໃຈວ່າພູໄຊຈະຕອບແນວໃດ, ຄຳໂກ້ໄດ້ທ່າກໍ່ເອີ້ຍສຽງຂອງຜູ້ໃຫຍ່ກວ່າຂຶ້ນ :

- ເອົາຈັ່ງຊີ້ສາ, ຫລືວ່າໂຕໄປນຳເຮົາເທາະສຽວ, ມື້ນີ້ອັນທິດເຮົາຊິໄປຊຸດສະປາໃຫ້ເພິ່ນ, ໄປເນາະ, ເຮົາຊິຊິເຫລົ້າໄປນຳ ບາດເລີກມາກິນງາຍ, ຄື່ນສີຊຶມໆແດ່ແລ້ວ ບາດນັ້ນມີຫຍັງພວກເຮົາກໍ້ພອມກັນຄ່ອຍໆໄຂອອກ, ແນ່ນອນໂຕກໍ່ຕ້ອງເຮັດປະຈົບປະແຈງແດ່ຈັກໜ້ອຍ, ມັນບໍ່ເສຍຫຍັງພໍ່ທໍ່ໃດ,ມີແຕ່ຊິເຮັດໃຫ້ເພິ່ນເຫັນໃຈເຮົາ ແລະ ຕ້ອງເຂົ້າໃຈເຮົາ, ໄດ້ຫລືບໍ່ ?

" ນ້າບ່າວຈະເຂົ້າໃຈວ່າເຮົາຍອມແຕ່ຄືນນີ້ບໍ່, ຈຶ່ງບອກໃຫ້ໜໍ່ ກ້າຊວນກົງໆແບບນີ້, ຮ່າໂກ້ເອີຍ, ມຶງຫລົງແລ້ວ ! "

- ກໍດີຄືກັນ. ເອົາຈັ່ງຊີ້ສານ້າບ່າວວ່າ ຫລື ເຈົ້າຊິວ່າແນວໃດອີກ , ຢ່າຖືປຽບຫລາຍ, ຄັນໄປນ້າບ່າວກໍ່ຊິໄປນຳ, ວ່າຊ່ວຍກັນ ເພິ່ນຜູ້ ນ້າບ່າວ

ອ່າຍໄປ "ເນາະ" ກັບຄຳໂກ້ ແທນທີ່ຈະຖາມພູໄຊ.

ພູໄຊແນມເບິ່ງໜ້າຄົນທັງສອງ ຊຶ່ງເຂົາເຫັນແຕ່ທີ່ສອງນີ້ ເຂົາຄຶດ: ບໍ່ນຶກເລີຍວ່າ ຈະມີຄົນຜູ້ໜ້າ...ຄືແນວນີ້. ກ່ອນປະເທດຊາດບໍ່ທັນໄດ້ ປົດປ່ອຍໃໝ່ໆ ເຮົາເຄີຍສຳນຶກລ່ວງໜ້າເຫັນຄົນລາວຜູ້ມີອິດສະລະ, ເປັນເຈົ້າປະເທດຊາດ, ຜູ້ໃດກໍ່ຄືວ່າຊື່ສັດ, ສົມທຳ, ມີຄວາມຮູ້ສູງ...ເປັນຕາ ໜ້າຮັກ, ໜ້ານັບຖື, ຄົນເຫລົ່ານັ້ນຈຶ່ງກາຍເປັນອຸດົມຄະຕິ, ເປັນກຳລັງໃຈ ພາໃຫ້ເຮົາກໍ່ຄືມີດສະຫາຍ, ຮຸ່ນອ້າຍ,ຮຸ່ນພໍ່ ກຳປືນຕໍ່ສູ້ກູ້ຊາດ ຈົນລືມເສຽດາຍເລືອດເນື້ອ, ພວກເພິ່ນບໍ່ຈັກທີ່ໃດພັນທີ່ໃດໝື່ນຄົນລົ້ມລົງ ກໍ່ເພື່ອ ຫວັງແລກເອົາຜູ້ຄົນ ແລະ ສັງຄົມນີ້ມາ. ມາບາດນີ້ ຖ້າພວກເພິ່ນຮູ້ວ່າ ຜູ້ຄົນທີ່ເພິ່ນໄຝ່ຝັນຫາ ແລະ ອຸທິດເພື່ອນັ້ນ ຍັງມີຮອດພວກຄົນແບບນີ້ ! ພວກພາກ ຮູ້ແຕ່ອາໄສກິນ, ບໍ່ຮູ້ທະນຸຖະໜອມກໍ່ສ້າງລະບອບສັງຄົມທີ່ໄດ້ມາດ້ວຍເລືອດເນື້ອຂອງພວກເພິ່ນນັ້ນ ບໍ່ຮູ້ວ່າພວກເພິ່ນຈະໃຫ້ອະໄພພວກຄົນນີ້ຫລືບໍ່ ?

- ພໍແລ້ວໆ ! ເຮົາບໍ່ແມ່ນເດັກນ້ອຍ, ເຮັດແນວນັ້ນແທນງສູ້ຈົນຕາຍດີກວ່າ. ພູໄຊເປັ່ງສຽງແຮງຢ່າງໂມໂຫ-ຖືກເຂົາດູຖູກມາພໍແຮງແລ້ວ ຍັງຊິໄປກົ້ມໃຫ້ເຂົາດູຖູກໄປເຖິງໃສອີກ ? ! ໂກ້ ! ຫົວໂຕກໍ່ນັບວ່າບໍ່ໄຮ້ລຽມແຕ່ມັນບໍ່ດີ !

- ພູໄຊ, ເຮັດໃຈເຢັນໆ ໄວ້ກ່ອນແມ ມັນບໍ່ແມ່ນເລື່ອງກົ້ມຂາບໝ່າ. ມັນພຽງແຕ່ແມ່ນແຜນຂອງພວກເຮົາ. ເຮົາຄຶດແນວນັ້ນກໍ່ເພື່ອໂຕທັ້ນແລ້ວແລະເຮົາເວົ້ານຳໂຕກໍ່ເພາະເຫັນແກ່ນ້ຳບ່າວໄຫວຜູ້ເພິ່ນມີຄຸນຕໍ່ເຮົານີ້ອີກ.

- ຂອບໃຈ! ພູໄຊພູດລຸກຂຶ້ນຍ່າງໄປທາງເຮືອນຄົວ ທັງອວ່າຍ ໜ້າມາເວົ້າອີກ :

- ຖ້າໃຜຢານ ຢ່າມາກ່ຽວຂ້ອງເທາະ, ເລື່ອງຂອງເຮົາ, ປະ ໃຫ້ເຮົາກ່ຽວຂ້ອງຜູ້ດຽວ. ໃຜມັກກົ້ມແບບນັ້ນກໍ່ເຊີນໂລດ. ສ່ວນເຮົາ ໃຫ້ມັນຊື່ວສາ, ຖ້າຊ່ວຍອມແນວນັ້ນ.

- ເອີ້, ຖ້າເບິ່ງຜູ້ກົ້ນ, ຜູ້ເວີຍ ໃຜຊິແນ່ກ່ວາກັນ ຄຳໂກ້ ຟ້າວໂຍນຄຳທ້າທາຍນີ້ຕາມຫລັງໝູ່ ຍອມຖືກແຕະຕ້ອງປຽບຢ່າງແຮງ.

- ພົງ. ນ້າບ່າວໄທວຍົກມືຫ້າມຄຳໂກ້-ເອົາມັນບໍ່ໄດ້ດອກແນວຄົນທົວດຽວ.

- ພັງທະລາຍໝົດແລ້ວ !

**ເດືອນ** ປາຍຕໍ່ມາ, ພູໄຊຖືກແຕ່ງຕັ້ງລົງພື້ນຖານ, ຜູ້ກ່ຽວເຂົ້າໃຈຄວາມໝາຍ "ແຕ່ງຕັ້ງ " ໄດ້ດີ. ເພາະບ່ອນ "ພື້ນຖານ" ນັ້ນບໍ່ຢູ່ໃນຂອບເຂດປົກຄອງຂອງເມືອງນີ້ ເອົາແຕ່ມັນຈະເປັນໄປ້ເຫາະ.

ຮອດເດືອນທີເກົ້າ, ພູໄຊ ກໍ່ໄດ້ຮັບເອກະສານຍົກຍ້າຍຂອງຕົນ, ໃຫ້ມາຂຶ້ນກັບເມືອງນີ້ເລີຍ. ແຕ່ເມື່ອໄປສະເໜີກັບພະແນກກະສິກຳເມືອງ, ເຂົາເຈົ້າກໍ່ບໍ່ທັນຮັບ, ເພາະຄົນມີພຽງພໍໜ້າທີ່ຢູ່, ໃຫ້ລໍຖ້າ. ການຍົກຍ້າຍແບບບໍ່ແຈ້ງນີ້ ຄັນເອົາຊິກັບຄືນຕໍ່ວ່າທາງເມືອງເກົ່າຄືນກໍ່ບໍ່ຍາກ ແຕ່ບໍ່ຮູ້ແນວໃດເຂົາບໍ່ຢາກກັບເມືອຫັ້ນອີກ.

ໃນຈົດໝາຍຂອງບຸບຜາທຸກໆສະບັບ ລ້ວນແຕ່ສົ່ງຂ່າວ: ຢູ່ເມືອງ ຢູ່ຫ້ອງການເອົາຊ່າກັນ, ຖາມກັນວ່າພູໄຊໂຕນປະໜ້າທີ່ຍອມຢາກເຣັດມື , ຮ່ວມມືກັບຄົນບໍ່ດີ ຕ່າງໆນາໆ.

ຕໍ່ຂ່າວນັ້ນ ພູໄຊບໍ່ແປກປະຫລາດຫຍັງ. ການຖືກຕັດຫາງປ່ອຍແນວນີ້ກໍ່ເຂົ້າໃຈງ່າຍ. ດັ່ງນັ້ນ ເຂົາຈຶ່ງຫອບໃບຍົກຍ້າຍເຂົ້າໄປຫ້ອງການ ສຶກສາເມືອງ ແລະ ຂຽນຄຳຮ້ອງຂໍສອນໂຮງຮຽນປະຖົມຢູ່ບ້ານລາວກາງ ບ່ອນຊຶ່ງໝົດໂຮງຮຽນມີຄູສອນພຽງສອງຄົນ.

ພູໄຊຕັດສິນໃຈຂຽນຈົດໝາຍ ຊວນບຸບຜາມາຢາມ, ພາຍຫລັງ ເຂົາສອນຢູ່ບ້ານແຫ່ງນັ້ນມາໄດ້ສາມເດືອນ ແຕ່ຄອບຄົວ ແລະ ການຈັດຕັ້ງ ບໍ່ອະນຸຍາດໃຫ້ນາງມາ. ການແຕ່ງດອງເປັນຜົວເປັນເມຍກັນ ລະຫວ່າງເຂົາ ທັງສອງໃນປີຕໍ່ມາ ກໍ່ເປັນໄປຢ່າງຫຍຸ້ງຍາກ. ເພາະບຸບຜາຕ້ອງຍອມ ອອກເປັນປະຊາຊົນກ່ອນ ຈຶ່ງສາມາດແຕ່ງດອງໄດ້.

× ×

×

ນີ້ມາຕ້ອນເອົາແມ່ໄປຢູ່ນຳ, ພູໄຊ ເດີນທາງສອງມື້ຢ່າງອິດເມື່ອຍ.

ພູໄຊ ກ້າວເຂົ້າປະຕູເຮືອນຫລັງໃຫຍ່, ສອງຊັ້ນຍັງໃຫມ່ໆ "ກະລຸນາປິດເກີບ" ປ້າຍງາມຕິດເປີ້ເຈີ້ຢູ່ຂ້າງປະຕູ. ເຖິງວ່າປິດເກີບທີ່ໂອບດ້ວຍຂີ້ຝຸ່ນສີແດງອອກ, ຕີນພູໄຊ ກໍ່ຍັງພິມລາຍຮູບຕີນຢູ່ພື້ນເຮືອນ ທີ່ປູດ້ວຍສາດ ຢາງດອກ ແລະ ແພພົມສີ.

ນ້າໃພ້ຖືກທັກທາຍເປັນຜູ້ທຳອິດ. ພູໄຊປະຕິເສດຕໍ່ຄຳເຊີນນັ່ງຕັ່ງ ຊາລົງ ດ້ວຍວິທີຟ້າວຖາມຫາແມ່ ແລະ ຂໍລວງໄປຫາແມ່ຢູ່ສວນຫລັງບ້ານ.

ໃນເຮືອນ, ໂທລະທັດສີ, ຕູ້ເຢັນ, ພັດລົມຫລາຍຊະນິດ, ເທັບ ປະກອບລຳໂພງໃຫຍ່ ຕູ້ສະແດງເຄື່ອງເອເຮືອນ...ຍິ່ງຜ່ານເຂົ້າໄປໃນເຮືອນ, ຍິ່ງເຫັນອັນໃໝ່ ອັນໃດກໍ່ເຫລື້ອມໆ ງາມໆ ຢູ່ຖືກບ່ອນ, ລົມທີ່ດີ່ງສາ ມັນ

ເກີດມາສຳລັບມາຢູ່ແຕ່ບ່ອນດຽວນັ້ນ. ແສງສີ, ຄວາມງົດງາມຂອງ ວັດຖຸເຫລົ່ານັ້ນ ຄືຈິ່ງແມ່ນແສງຕາພວມສັກໃສ່ໂສ້ງເສື້ອ, ຖົງພາຍອັນເກົ່າໆ, ຕົກສີ້ດ້ວຍຄວາມແປກປະຫລາດ ແລະ ຕິຕຽນ, ຈົມພູໄຊຊຸ່ມໃຈ, ບໍ່ຮູ້ຈະ ປິດຖົງພາຍຂອງຕົນວາງໃສ່, ເກາະໃສ່ ຈິ່ງຊິເໝາະ.

" ນ້າຍ່າວຂອງອ້າຍໄດ້ເປັນຄະນະພະແນກແລ້ວ" ເຂົານຶກເຫັນແຖວຈິດໝາຍຂອງບຸບຜາແໜ້ໃດງ ຜູ້ນ. ພູໄຊບໍ່ຍອມແນມເບິ່ງອັນໃດດົນ ເພາະເຫັນສາຍຕາຂອງນ້າໃພ້ກຳລັງຕິດຕາມເຂົາດ້ວຍຄວາມໝາຍ : " ເຫັນບໍ່, ຕ່າງເກົ່າຫລາຍໄດ໋ ! ຄືໂຕຫັນຝັນເອົາຊິໄດ້ບໍ່."

× ×

×

- ຮ້າຍແຮງກວ່າເທື່ອນັ້ນສິບເທື່ອ ແລະ ກໍ່ບໍ່ໄຮ້ດຽງສາແນວນັ້ນອີກ. ພູໄຊຕອບເນຍ-ເວລາແລະ ວຽກງານຕົວຈິງມັນໄດ້ສອນໃຫ້ອ້າຍກ້າວໜ້າກວ່ານັ້ນຫລາຍແລ້ວ.

- ກໍ່ຍັງແມ່ນເລື່ອງໂຮງຮຽນນີ້ບໍ່ ? ນ້ອງຍິນອ້າຍເສນໄປເວົ້າ ສູ່ຟັງແຕ່ຕອນນ້ອງຫາກໍ່ລົງທ້ອງສອນມາພຸ້ນແລ້ວ.

- ຊິເລື່ອງໃດອີກ. ບໍ່ຢາກໃຫ້ອ້າຍຮ້າຍຫວະ. ສະເໜີ ເມື່ອຍສະເໜີ, ຂັ້ນນັ້ນ ຖິ້ມໃສ່ຂັ້ນນີ້, ບາດສຸດທ້າຍວ່າແກ້ບໍ່ໄດ້. ບາດຜູ້ອື່ນ, ອົງການໃດຕໍ່ພະແນກການໃດ, ມີຮອດບຸກຄົນພຸ້ນຕົ໊ວ ອັນມາຂົນເອົາໄມ້ທ່ອນ ຢູ່ເຂດຕາແສງນີ້ໄປເຮັດເຮືອນເຮັດຊານ, ໄປຂາຍກິນສ່ວນຕົວກໍ່ມີຊ້ຳ່ຍາ. ແນວໃດກໍ່ແນວເທາະ ຂໍແຕ່ວ່າໂຮງຮຽນຫລັງຊົ້ນຢູ່ປ່າໄມ້ທ່ອນນີ້ ພໍໄດ້ປ່ຽນແຕ່ ຝາ

ໄມ້ຮ້ຽ, ເສົາໄມ້ພາງນີ້ເທາະ, ອໍແຕ່ລາຍເຊັນທໍ່ນັ້ນ,ປຸກແປງ ພໍ່ແມ່ປະຊາ ຊົນເພິ່ນກໍ່ບໍ່ໃຫ້ຮ້ອນນຳດອກ.

- ເຂົາວ່າແນວໃດຊັ້ນນ່າ ເນຽຖາມສິ້.

- ກະວ່າ "ຕາມຫລັກການ ເພິ່ນບໍ່ໃຫ້ຕັດໄມ້ຊະຊາຍແລ້ວ. ປຸກໂຮງ ຮຽນກໍ່ບໍ່ໄດ້, ເພິ່ນແກ້ແຕ່ກໍລະນີຈຳເປັນ " ຫົວໜ້າປ່າໄມ້ຫັ້ນແລ້ວວ່າຫັ້ນນ່າ ໂອ້ຍອັ້ນເຂົາຕັດທີ່ດຽງ ເຕັມປ່າ ອ້ອນຂ້າງອ້ອນແອວຢູ່ທຸກມື້ນີ້ເດ, ບໍ່ແມ່ນ ຄືນ ບໍ່, ເຂົາເອົາຫລັກການມາແຕ່ໃສ, ກໍລະນີຈຳເປັນກວ່າໂຮງຮຽນນີ້ປານໃດ, "ຂ້ອຍຮູ້ແລ້ວລະວ່າ ລາຄາຂອງໃບອະນຸມັດຂອງພວກເຈົ້າມັນແພງທໍ່ໃດ" ອັນ ເວົ້າແນວນີ້ ໃສ່ແຫ້ໄດ້. ເບື່ອເດ ຫວິດເມືອງໜຶ່ງລະຍັງມີຢູ່ເມືອງໜຶ່ງ ອັນ ຄືນປະເພດນີ້ !

- ນ້ອງພ້ອມອ້າຍແລ້ວບາດນີ້, ເຮັດແນວໃດມີຜົນທາລະເຮັດ ເກີນ ວ່າເຂົາເຈົ້າບໍ່ຮູ້ຄວາມສຳຄັນຂອງການສຶກສາ, ເກີນວ່າໂພດ, ປານລູກຫຼານ ເຂົາເຈົ້າບໍ່ມີ...ພັກລັດເພິ່ນຄຶດແນວໃດເລື່ອງນີ້ ?...

- ຢ່າເວົ້າໄປຫລາຍ ມັນບໍ່ຮອດເພິ່ນພຸ້ນດອກ, ແນວທາງລວມ ຂ້ອຍ ກໍ່ຮູ້, ມັນຖືກແລ້ວ, ແຕ່ຂັ້ນພາປະຕິບັດເຄິ່ງກາງນີ້ນ່າ, ຫລັກກໍ່ຫລັກ ການກໍ່ ການ, ແນວຄືນເຮັດເອົາ, ບໍ່ຕ່າງຫຍັງກັບເລື່ອງເກົ່າຂອງຂ້ອຍຫັ້ນແລ້ວເພິ່ນ ເອີ້ນຂ້ອຍໄປເທື່ອນີ້ ທີ່ແທ້ແມ່ນເອີ້ນໄປສຳຫລວດ ! ເຂົາວ່າຂ້ອຍນີ້ ພາປະ ຊາຊົນຮ້ອງຟ້ອງ, ຂັດຂືນຄຳສັ່ງຂອງຂັ້ນເທິງ ເຈົ້າຮູ້ບໍ່ວ່າເຂົາຍົກເອົາ ຮອດ ຄຳວ່າລູກພຸ້ນຕົ໋ວ ມາຊູອາຍ, ຫລືບໍ່ຊື່ ໆ ປຸ !

ຜູ້ໄຊຖອນໃຈຍາວໆ ແລະ ຄຶດຫາ ຊອງທາງກໍ່ບໍ່ທັນເຫັນວ່າ ແມ່ນໃຈ ເທື່ອ...

●●

ທ່ານຜູ້ອ່ານທີ່ຮັກແພງ !

ເພື່ອໃຫ້ການຈັດພິມປື້ມເຫຼັ້ມຕໍ່ໆໄປ ຂອງພວກເຮົາ ມີຂໍ້ຂາດຕົກບົກພ່ອງໜ້ອຍທີ່ສຸດ ເທົ່າທີ່ຈະໜ້ອຍໄດ້ ທາງສຳນັກພິມ ວັນນະສິນ ຍິນດີ ຮັບເອົາຄຳຕິຊົມທຸກຢ່າງ ບໍ່ວ່າທາງດ້ານຄຸນນະພາບຂອງບົດ ກໍຄື ຮູບແບບການຈັດເຫຼັ້ມ.

ສົ່ງຄຳຄິດຄຳເຫັນຂອງທ່ານໄດ້ທີ່ສຳນັກງານ ວາລະສານ " ວັນນະສິນ " ຕູ້ ປ.ນ. ໑໒໓໑ ວຽງຈັນ, ສ.ປ.ປ.ລ.

ຂໍຂອບໃຈລ່ວງໜ້າ

ຮັກທີ່ຕ້ອງສົ່ງມາຫາວັງ ຮຸ່ງອະລຸນ ແດນວິໄລ.

ຈົດໝາຍນີ້ຂໍຝາກເຖິງອ້າຍ ດອກເກດ

ໄຟເຜົາຫົວໃຈ ຍອດໜຶ່ງ

ຂອງຂວັນຈາກໃຈ ດວງໃຈ ຫຼວງພະບາງ

ລ້ວງພະຍາຍາມເຂົ້າໃຈ ທິວາກອນ

ປະກອບສວນ ອຸທິນ ບຸນຍາວົງ

ຄວັນໜີ້ ແລະ ຢາດເຫື່ອໄທບ້ານ ເມືອງພວນ

ນາງກິນບັ້ນ ດວງຈຳປາ

ຮັກເບື້ອງຊີວິດ ຈຸ ວົງພູທອນ

ກຸຫຼາບແດງທີ່ແກ່ວມອນ ເມັ່ງ ໄຊຫວ່າງ

ສຽງປີ່ນວງນ ໄຊຊຸວັນ ແພງພັນ

ຮອຍເປົ້າຮັບຍາລັກ ທ. ທ. ມູເພັດ

ຊາຕາກຳຜູ້ກ້າຫານ ທິດາຈັນ